ຮ້ານ ມ: ບຸນເຖິງ

ປ.1

ປ 2

ສ. ສິລະປະບຸນ ປີ 2

ວັນນະຄະດີ

ພື້ນເມືອງ

1

ນ. ບຸນສົ່ງ ແກ້ວບົວສາຍ

ສົ່ງອອກໂດຍ ສ
ວຽງຈັນ 2011

ພາກວິຊາພາສາລາວ-ສິ້ນຫນວນຊົນ ຄະນະອັກສອນ ມະຫາວິທະຍາໄລແຫ່ງຊາດລາວ

ວັນນະຄະດີພື້ນເມືອງ

๑

580 37 194

ຮຽບຮຽງໂດຍ:

ກຽງແກ້ວ ນວນນະວົງ

ຄຳຜຽ ພົນລືຊາ

ກວດແກ້ໂດຍ:

ຈຸວິຊາ ວັນນະຄະດີພື້ນເມືອງ

ຈັດພິມໂດຍ:

ໄຊຊະນະ ຈັນທະວຸດົມ

ໄຊສະຫວັນ ນວນນະວົງ

ພາກວິຊາພາສາລາວ-ສິ່ສານມວນຊົນ

ຄະນະອັກສອນສາດ

ມະຫາວິທະຍາໄລແຫ່ງຊາດ

2011

irang

ບົດນຳ

ປີ້ຫ໊ວນີ້ ໄດ້ຮຽບຮຽງມາຈາກປຶ້ມວັນນະຄະດີລາວຂອງສະຖາບັນຄົ້ນຄວ້າວິທະຍາສາດສັງຄົມ ແລ້ວມາຕັດແຕ່ງໂດຍຕື່ມຂໍ້ມູນໃໝ່, ຕື່ມບົດເລື່ອງປະກອບ ເພື່ອໃຫ້ແທດເໝາະກັບຫລັກສູດການຮຽນ-ການສອນພາສາລາວ-ວັນນະຄະດີ ໃນພາກວິຊາພາສາລາວ-ສີ່ສານມອນຊົນ.

ປຶ້ມຫ໊ວນີ້ປະກອບມີ 2 ພາກຄື ພາກທີ I ມີ 2 ບົດ, ບົດທີ 1 ສະເໜີລວມບັນດາເຜົ່າທີ່ປະກອບເປັນຊາດລາວ, ບົດທີ 2 ຄວາມໝາຍຂອງວັນນະຄະດີພື້ນເມືອງປະເພດຄຳຮ້ອຍແກ້ວ ແລະການຈັດແບ່ງປະເພດວັນນະຄະດີພື້ນເມືອງ. ພາກທີ II ລົງເລິກແຕ່ລະປະເພດເຊິ່ງລວມ ມີ 5 ບົດຄື ບົດທີ 1 ເທບນິຍາຍ, ບົດທີ 2 ພື້ນສິບ, ບົດທີ 3 ນິທານອັດສະຈັນ (ນິທານບູຮານ) ບົດທີ 4 ນິທານຕະຫລົ່ກ ແລະບົດທີ 5 ນິທານສັດ ເຊິ່ງແຕ່ລະບົດມີບົດເລື່ອງປະກອບ ແລະຄຳຖາມຄົ້ນຄວ້າ.

ການຮຽບຮຽງປຶ້ມຫ໊ວນີ້ ແນ່ນອນອາດຈະມີຂໍ້ຂາດຕົກບົກພ່ອງຫລາຍຢ່າງ ເຊິ່ງຂໍຄວາມກະລຸນາຈາກທ່ານຜູ້ອ່ານ ຫລື ຜູ້ສົນໃຈສຶກສາວັນນະຄະດີປະເພດນີ້ຊ່ວຍປະກອບຂໍ້ຄິດເຫັນຕ່າງໆ ທາງຄະນະຮຽບຮຽງພວກເຮົາຍິນດີຮັບເອົາຄຳຕຳນິຕິຊົມເພື່ອມາປັບປຸງປຶ້ມຫ໊ວນີ້ໃຫ້ມັນແທດເໝາະ ແລະຮັບໃຊ້ການຮຽນ-ການສອນໃຫ້ດີຍິ່ງຂຶ້ນ.

ຄະນະຮຽບຮຽງ

ສາລະບານ

ໜ້າ

ພາກທີ I:ພາກສະເໜີ.....1

ບົດທີ 1:ບັນດາເຜົ່າທີ່ປະກອບເປັນຊາດລາວ.....1

1. ໝວດພາສາລາວ -ໄຕ.....2

2. ໝວດພາສາມອນ - ຂະແມ.....3

3. ໝວດພາສາມົ້ງ - ອີ້ວມຽນ.....5

4. ໝວດພາສາຈີນ - ຕິເບດ.....5

ບົດທີ 2: ວັນນະຄະດີພື້ນເມືອງໂດຍສັງເຂບ.....6

1. ຄວາມໝາຍຂອງວັນນະຄະດີພື້ນເມືອງລາວ.....6

2. ການກຳເນີດ ແລະ ຂະຫຍາຍຕົວຂອງວັນນະຄະດີພື້ນເມືອງ.....7

3. ວັນນະຄະດີພື້ນເມືອງໄດ້ຕິດພັນກັບຮີດຄອງປະເພນີ ແລະຄວາມເຊື່ອຖື ຂອງຄົນລາວ.....8

4. ການຈັດແບ່ງປະເພດຂອງວັນນະຄະດີພື້ນເມືອງ.....9

ພາກທີ II: ວັນນະຄະດີພື້ນເມືອງປະເພດຄຳຮ້ອຍແກ້ວ.....10

1. ຄວາມຫມາຍຂອງວັນນະຄະດີປະເພດຄຳຮ້ອຍແກ້ວ.....10

2. ການປະດິດແຕ່ງວັນນະຄະດີພື້ນເມືອງປະເພດຄຳຮ້ອຍແກ້ວ.....10

3. ການກຳເນີດ ແລະເນື້ອໃນສ່ອງແສງ.....11

ບົດທີ 1: ເທບນິຍາຍ.....13

1. ຄວາມໝາຍ, ລັກສະນະພິເສດ ແລະ ລັກສະນະທົ່ວໄປ ຂອງເທບນິຍາຍ.....13

2 . ການກຳເນີດ ແລະ ຂະຫຍາຍຕົວຂອງເທບນິຍາຍ.....13

3. ເນື້ອໃນຂອງເທບນິຍາຍ.....16

3.1. ເນື້ອໃນທີ່ເວົ້າເຖິງການກຳເນີດໂລກ ແລະສັດ.....16

3.2 . ເນື້ອໃນທີ່ເວົ້າເຖິງການກຳເນີດມະນຸດ ແລະ ຊາດຕົນ.....18

3.3. ເນື້ອໃນທີ່ເວົ້າເຖິງປາກົດການ ແລະ ການຕໍ່ສູ້ຕ້ານກັບໄພທຳມະຊາດ.....19

4. ສິລະປະຂອງເທບນິຍາຍ21

ບົດທີ 2: ພື້ນສິບ.....26

1. ຄວາມໝາຍ ແລະ ລັກສະນະພິເສດຂອງພື້ນສິບ.....26

2. ການກຳເນີດ ແລະ ຂະຫຍາຍຕົວຂອງພື້ນສິບ.....28

2.1 ໄລຍະກ່ອນສະຕະວັດທີ XIV.....28

2.2 ໄລຍະຫຼັງສະຕະວັດທີ XIV ມານີ້.....29

3. ເນື້ອໃນຂອງພື້ນສິບລາວ.....31

ບົດທີ 3: ນິທານອັດສ່ະຈັນ (ນິທານບູຮານ)..... 43
1. ຄວາມໝາຍ ແລະລັກສະນະພິເສດຂອງນິທານອັດສະຈັນ.....43
2. ເນື້ອໃນນິທານອັດສະຈັນ.....46
3. ສິລະປະນິທານອັດສະຈັນ.....52
ບົດທີ 4: ນິທານຊອນຫ໋ອ (ນິທານຕະຫຼົກ).....59
1. ຄວາມໝາຍ ແລ ະ ລັກສະນະພິເສດຂອງນິທານຊອນຫ໋ອ.....59
2. ເນື້ອໃນ ແລ ະ ການແບ່ງປ ະ ເພດນິທານຊອນຫ໋ອ.....61
2.1 ນິທານຊອນຫ໋ອມີລັກສະນ ະ ຕັກເຕ ືອນ.....61
2.2 ນິທານຊອນຫ໋ອປ ະ ເພດສ ງ ດສ ີ.....62
ບົດທີ 5: ນິທານສັດ.....70
1. ຄວາມໝາຍ ແລ ະ ລັກສະນ ະ ພິເສດຂ ອ ງ ນິທານສັດ.....70
2. ເນື້ອໃນນິທານສັດ.....73
3. ສິລ ະ ປ ະ ຂ ອ ງ ນິທານສັດ.....78

ພາກທີ I

ພາກສະເໜີ

ບົດທີ 1

ບັນດາເຜົ່າທີ່ປະກອບເປັນຊາດລາວ

ປະເທດລາວເປັນປະເທດທີ່ມີດິນບໍ່ກວ້າງ, ມີພົນລະເມືອງບໍ່ຫຼາຍແຕ່ຊາດລາວພັດປະກອບມີຫຼາຍຊົນເຜົ່າຕ່າງກັນ. ບັນດາຊົນເຜົ່າເຫຼົ່ານີ້ເຖິງວ່າມີພາສາຄວາມເວົ້າ, ຮີດຄອ້ງປະເພນີ ແລະລະດັບເສດຖະກິດ, ວັດທະນະທຳແຕກຕ່າງກັນກໍຕາມແຕ່ເຂົາເຈົ້າກໍລ້ວນແຕ່ມີມູນເຊື້ອດຸໝັ່ນອອກແຮງງານ, ມີນ້ຳໃຈຕໍ່ສູ້ພິລະອາດຫານ ແລະບໍ່ເຄີຍກົ້ມຫົວຍອມຈຳນົນຕໍ່ສັດຕູຕົວໃດ, ເຂົາເຈົ້າມີມູນເຊື້ອຮັກແພງກັນ, ນັບຖືກັນຄືອ້າຍນ້ອງໃນຄອບຄົວດຽວມູນເຊື້ອເຫຼົ່ານີ້ມີມາແຕ່ບູຮານນະການຄືດັ່ງປູ່ຍ່າຕາຍາຍເຮົາໄດ້ແຕ່ງເລື່ອງເປັນເທບນິຍາຍກ່ຽວກັບກຳເນີດຊາດລາວວ່າ "ທຸກຊົນຊາດຊົນເຜົ່າລ້ວນແຕ່ກຳເນີດມາຈາກນ້ຳເຕົ້າປຸງໝໍ່ຍດຽວ" ໝາຍຄວາມວ່າປະຊາຊົນລາວບັນດາເຜົ່າມີກຳເນີດດຽວກັນ ແລະໄດ້ປົກປັກຮັກສາ, ສ້າງສາປະເທດຊາດອັນເປັນທີ່ສັກກະລະບູຊາ ແລະຫວງແຫນຂອງຕົນໄວ້ຢ່າງໝັ້ນຄົງຕະຫຼອດມາ.

ເຖິງວ່າປະຊາຊົນລາວຜູ້ອອກແຮງງານບັນດາເຜົ່າເຄີຍມີມູນເຊື້ອອັນດຽວກັນຄືໄດ້ກ່າວມາຂ້າງເທິງນັ້ນກໍຕາມ, ແຕ່ຫາກວ່າຢູ່ໃຕ້ລະບອບສັກດິນາ, ເມືອງຂຶ້ນຂອງຈັກກະພັດໃນເມື່ອກ່ອນປະຊາຊົນລາວທັງມວນໄດ້ມີຊາຕາກຳອັນດຽວກັນ ຄືເຂົາເຈົ້າລ້ວນແຕ່ຖືກຊົນຊັ້ນປົກຄອງກົດຂີ່ຂູດຮີດຢ່າງແສນສາຫັດຊີວິດການເປັນຢູ່ຕົກທຸກໄດ້ຍາກ, ໄດ້ຮັບແຕ່ຄວາມໂງ່ຈ້າຫຼ້າຫຼັງ ແລະມືດມົນອົນທະການທີ່ສຸດ. ສະພາບດັ່ງກ່າວນັ້ນບວກກັບນະໂຍບາຍຈຳແນກເຊື້ອຊາດພົ້ງພັນທີ່ພວກອຳນາດການປົກຄອງວາງອອກ ເຮັດໃຫ້ປະຊາຊົນທຸກຊົນເຜົ່າເກີດຄວາມລະແວງສົ່ງໄສກັນ, ອາຄາດບາດໜາງ ແລະດູໜິ່ນປະໜາດເຊິ່ງກັນແລະກັນ.

ມາຮອດສະໄໝມີພັກນຳພາເຮັດການປະຕິວັດຊາດປະຊາທິປະໄຕ ເພື່ອລົບລ້າງຮ່ອງຮອຍຖ້ອຍທຳນອງແບບດູໜິ່ນປະໜາດ ແລະນະໂຍບາຍຈຳແນກເຊື້ອຊາດຂອງຊົນຊັ້ນປົກຄອງ, ເພື່ອເຕົ້າໂຮມກຳລັງ ແລະປັບປຸງເສີມຂະຫຍາຍຄວາມສາມັກຄີລະຫວ່າງປະຊາຊົນບັນດາເຜົ່າ, ສູນກາງພັກຂອງພວກເຮົາຈຶ່ງໄດ້ຈັດແບ່ງປະຊາຊົນບັນດາເຜົ່າອອກເປັນສາມກຸ່ມໃຫຍ່ຄື ລາວເທິງ, ລາວສູງ ແລະລາວລຸ່ມໂດຍອີງຕາມລັກສະນະພິເສດດ້ານພາສາ, ວັດ ທະນະທຳການຕັ້ງພູມລຳເນົາ ແລະຮູບແບບການຜະລິດແຕ່ຖ້າອີງຕາມຈຸດພິເສດດ້ານ ພາ ສາ, ວັດທະນະທຳເທົ່ານັ້ນອາດຈະແບ່ງເຜົ່າລາວອອກເປັນຫົກໜວດພາສາດ້ວຍກັນ

ຊຶ່ງໃນ ນັ້ນມີສາມໝວດພາສາຄືໝວດພາສາໄທລາວ (ໄຕ), ໝວດພາສາມອນ-ຂະແມ ແລະໝວດ ພາສາມົ້ງ-ຢ້າວ.

ຈົນມາຮອດວັນທີ 24 ເດືອນພະຈິກ ປີ2008 ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດຊຸດທີ IV ໄດ້ຕົກລົງຮັບຮອງເອົາຊື່ເອີ້ນ ແລະຈຳນວນຊົນເຜົ່າເບື້ອງ ຕົ້ນໃນສາທາລະນະລັດປະຊາທິປະໄຕປະຊາຊົນລາວມີ: 49 ຊົນເຜົ່າເຊິ່ງຈັດຕາມ 4ໝວດ ພາສາ ແລະໄດ້ລົບລ້າງຊື່ເອີ້ນວ່າ 3 ຊົນຊາດ ຫຼື 3 ຊົນເຜົ່າຄື ລາວລຸ່ມ, ລາວເທິງ, ລາວສູງ; ສຳລັບ 4 ໝວດພາສາມີດັ່ງນີ້:

1. ໝວດພາສາລາວ-ໄຕ

ຄຳວ່າ "ໄຕ" ກໍໝາຍເຖິງ “ຕະກຸນໄຕ”, ເຜົ່າລາວກໍແມ່ນໜຶ່ງໃນຕະກຸນໄຕເຊິ່ງລວມ ມີຫຼາຍຈຸ້ມເຈື້ອ ແລະແຍກຍ້າຍກັນໄປຢູ່ໃນຫຼາຍຂົງເຂດເຊັ່ນ ພວກທີ່ຍ້າຍໄປຢູ່ເຂດອັດສຳ ຂອງອິນເດຍເອີ້ນວ່າ "ໄຕອາຫົມ", ພວກທີ່ໄປຢູ່ເຂດລັດຊານພາກເໜືອຂອງພະມ້າເອີ້ນວ່າ "ໄຕໃຫຍ່", ພວກທີ່ຍັງຕັ້ງຖິ່ນຖານຢູ່ພາກໃຕ້ຂອງຈີນມົນທົນຢູນານ ແລະຈຳນວນໜຶ່ງຢູ່ ພາກເໜືອຂອງລາວພວກນີ້ເອີ້ນວ່າ "ໄຕລື້", ພວກທີ່ຍ້າຍມາຕັ້ງຖິ່ນຖານຢູ່ລ້ອງແມ່ນ້ຳເຈົ້າ ພະຍາເອີ້ນວ່າ "ໄຕສະຫຍາມ", ພວກທີ່ຖອຍລົງມາຕາມລ້ອງແມ່ນ້ຳຂອງເອີ້ນວ່າ "ໄຕລາວ ຫຼື ລາວ-ໄຕ"

ເຜົ່າລາວ-ໄຕ ແມ່ນພາກສ່ວນໜຶ່ງໃນເຊື້ອຊາດຄົນອາຊີໃຕ້ບັນດາເຜົ່າລາວ-ໄຕນີ້ ໄດ້ ເຂົ້າມາຢູ່ດິນແດນລາວນີ້ແຕ່ເທິງນານແລ້ວ. ມາຮອດສະຕະວັດທີ VIII ບັນດາຊົນເຜົ່າ ລາວ-ໄຕນີ້ກ້າວຂຶ້ນສູ່ຖານະເປັນເຈົ້າປົກຄອງດິນແດນແຫ່ງນີ້ຢ່າງສົມເຊິງ, ໂດຍແມ່ນຂຸນລໍ ເປັນເຈົ້າຊີວິດອົງທຳອິດຂອງລາວຢູ່ເມືອງຊວາ (ຫຼວງພະບາງ), ອັນເປັນໃຈກາງດູດດຶງເຕົ້າ ໂຮມເອົາບັນດາເມືອງບູຮານຂອງລາວທັງໜົດທີ່ຕັ້ງແຈກຢາຍຕາມສອງຝັ່ງແມ່ນ້ຳຂອງແລະ ແຫ່ງອື່ນໆອີກໃນດິນແດນຂອງລາວສະໄໝນັ້ນ. ມາຮອດກາງສະຕະວັດທີ XIV ເຈົ້າຟ້າ ງຸ່ມບັນພະບູລຸດຜູ້ປົກຊາສາມາດຂອງຊາດລາວເຮົາໄດ້ທຳການທ້ອນໂຮມບັນດາເມືອງບູຮານ ຂອງລາວເຂົ້າມາເປັນອັນໜຶ່ງອັນດຽວກັນໂດຍໃສ່ຊື່ວ່າ "ອານາຈັກລາວລ້ານຊ້າງ" ເປັນ ເອກະພາບ. ເຫດການນີ້ເປັນຫຼັກໝາຍປະຫວັດສາດທີ່ສຳຄັນຢັ້ງຢືນເຖິງຖານະບົດບາດເປັນ ເຈົ້າການຂອງບັນດາຊົນເຜົ່າລາວ-ໄຕ ບໍ່ສະເພາະແຕ່ພາຍໃນຂອບເຂດເມືອງຊວາເທົ່ານັ້ນ, ຫາກຍັງກວມຮອດເມືອງອື່ນໆໃນທົ່ວຂົງເຂດອານາຈັກລາວລ້ານຊ້າງເອກະພາບອີກດ້ວຍ.

ໃນໝວດພາສາລາວ-ໄຕ ລວມມີ 8 ຊົນເຜົ່າຄື ລາວ, ໄຕ, ຜູ້ໄທ, ລື້, ຍວນ, ຢັ້ງ, ໄທເໜືອ, ແຊກ.

ນັບແຕ່ມື້ມາເຂົ້າຢູ່ດິນລາວ, ບັນດາຊົນເຜົ່າເຫຼົ່ານີ້ໄດ້ຮູ້ຊອກຫາສະຖານທີ່ຕັ້ງພູມລຳເນົາ ແລະຢຶດໝັ້ນບັນດາເຂດແຄວ້ນສຳຄັນຕ່າງໆຄືຢູ່ຕາມເຂດທົ່ງພຽງລຸ່ມຕາມສອງຝັ່ງແມ່ນ້ຳ

ຂອງ ແລະສາຂາແມ່ນ້ຳລຳເຊໃຫຍ່, ຢູ່ຕາມຫວ່າງພູເຊິ່ງເປັນເຂດດິນທີ່ອຸດົມຮັ່ງມີ, ເໝາະສົມໃນການເຮັດນາ ແລະສະດວກໃນການໄປມາ,ຄ້າຂາຍແລກປ່ຽນສິນຄ້າເຊິ່ງກັນແລະກັນ.

ຄວາມສະຫງົບ ແລະຄົງທີ່ທາງດ້ານທີ່ຕັ້ງພູມລຳເນົາຄືໄດ້ກ່າວມານັ້ນ, ເປັນເງື່ອນໄຂສະດວກເພື່ອໃຫ້ບັນດາເຜົ່າໄຕ-ລາວປັບປຸງ ແລະເສີມຂະຫຍາຍມູນເຊື້ອໃນການອອກແຮງງານຜະລິດຜົນ, ຍົກລະດັບເຕັກນິກໃນການປູກເຂົ້ານາຕື່ມອີກອັນພາໃຫ້ການດຳລົງຊີວິດທາງດ້ານວັດຖຸມີການຮັບປະກັນໃນຂັ້ນພື້ນຖານ.

ການຈັດຕັ້ງທາງດ້ານສັງຄົມກໍມີລັກສະນະໜັກແໜ້ນ, ທັງສະຕິຊາດສະຕິເປັນເຈົ້າຂອງປະເທດຊາດ ແລະນ້ຳໃຈປຸ້ມລຸມສາມັກຄີຮັກແພງກັນກັບບັນດາເຜົ່າອື່ນໆກໍໄດ້ຮັບການປັບປຸງ, ເຊີດຊູ ແລະເສີມຂະຫຍາຍຂຶ້ນເລື້ອຍໆ, ມູນເຊື້ອວັດທະນະທຳອັນເກົ່າແກ່ເຫິງນານ ແລະມີເອກະລັກຂອງບັນດາເຜົ່າລາວກໍຂະຫຍາຍຕົວຢ່າງຮອບດ້ານ ແລະສູງສົມຄວນ. ພາຍຫຼັງມາໄດ້ກາຍເປັນປັດໄຈຕົ້ນຕໍໃນພື້ນຖານວັດທະນະທຳຂອງຊາດລາວພວກເຮົາ ສະນັ້ນ, ເມື່ອຕີລາຄາທີ່ຕັ້ງອັນສຳຄັນຂອງພື້ນຖານວັດທະນະທຳບັນດາເຜົ່າໄທລາວ ທ່ານພູມີ ວົງວິຈິດ ໄດ້ຂຽນວ່າ"... ວັດທະນະທຳຂອງຊົນເຜົ່າໄທລາວນີ້ອາດຖືເປັນຕົວຢ່າງໃຫ້ແກ່ພື້ນຖານວັດທະນະທຳຂອງໜົດທຸກຊົນຊາດທີ່ຢູ່ໃນດິນແດນລາວ, ມັນເປັນພື້ນຖານວັດທະນະທຳອັນເກົ່າແກ່ເຫິງນານ, ມັ່ງຄັ່ງ ແລະຈະເລີນເຖິງລະດັບສູງກວ່າໝູ່ໃນປະເທດລາວ, ມີອິດທິພົນອັນສາມາດຕັດສິນການຂະຫຍາຍຕົວ ຂອງພື້ນຖານວັດທະນະທຳຂອງລາວເມື່ອກ່ອນນີ້ກໍຄືຕັ້ງແຕ່ນີ້ຕໍ່ໄປ... ".

2. ໜອດພາສາມອນ - ຂະແມ

ໃນສະໄໜສ້າງຕັ້ງຄອບຄົວໃຫຍ່ແຫ່ງອານາຈັກລາວລ້ານຊ້າງເອກະພາບ, ບັນດາເຜົ່າໃນໜອດພາສາມອນ-ຂະແມເປັນພາກສ່ວນໜຶ່ງທີ່ສຳຄັນໃນພົນລະເມືອງຂອງລາວເຮົາ. ເຂົາເຈົ້າເປັນຄົນເດີມໄດ້ທຳມາຫາກິນໃນແຜ່ນດິນຂອງລາວ ແລະຫຼາຍແຫ່ງໃນຂົງເຂດອາຊີຕາເວັນອອກສ່ຽງໃຕ້ນີ້ມາແຕ່ດຶກດຳບັນ.

ບັນດາເຜົ່າໃນໜອດພາສາມອນ-ຂະແມນີ້ໄດ້ຕັ້ງພູມລຳເນົາ ແລະທຳມາຫາກິນຕາມແຕ່ລະຈຸ້ມເຈື້ອເຊື້ອສາຍແຈກຢາຍກັນໄປຢູ່ທົ່ວປະເທດລາວ. ສ່ວນຫຼາຍເຂົາເຈົ້າຢູ່ຕາມເຂດພູພຽງ, ພູດອຍທາງພາກເໜືອ, ພາກຕາເວັນອອກຄື ລຸງບຕາມສາຍພູຫຼວງ ແລະຈຳນວນໜຶ່ງກໍຢູ່ຊ້ອນກັບບັນດາເຜົ່າ ລາວ-ໄຕຕາມເຂດທົ່ງພຽງພາກຕາເວັນຕົກ.

ໃນຂະບວນວິວັດອັນເຫິງນານແຫ່ງການຂະຫຍາຍຕົວຂອງປະຫວັດສາດ, ບັນດາເຜົ່າໜອດພາສາມອນ-ຂະແມໄດ້ມີເງື່ອນໄຂພົວພັນໃກ້ຊິດ ແລະສົ່ງຜົນສະທ້ອນເຊິ່ງກັນແລະກັນກັບເຜົ່າອື່ນໃນຫຼາຍດ້ານຄືດ້ານພາສາຄຳເວົ້າ, ດ້ານຮີດຄອງປະເພນີ ແລະດ້ານວິ

ທີ່ທຳມາຫາກິນ. ອີງໃສ່ຈຸດພິເສດທາງດ້ານກົກເຫງົ້າຂອງການກຳເນີດເຊື້ອຊາດ ແລະເຂດ ຕັ້ງພູມລຳເນົາຢູ່ພາກເໜືອ, ພາກກາງ ແລະພາກໃຕ້.

ໃນໝວດພາສາມອນ-ຂະແມ ລວມມີ 32 ເຜົ່າຄື ກຶມມຸ, ໄປຣ, ຊິ້ງມູນ, ຜ້ອງ, ແທ່ນ, ເອີດູ, ບິດ, ລະເມດ, ສາມຕາວ, ກະຕາງ, ມະກອງ, ຕຣີ, ຢຣຸ, ຕຣຽງ, ຕະໂອ້ຍ, ແຢະ, ເບຣ໊າ(ບຣູ) ກະຕູ, ຣາຣັກ, ໂອຍ, ກຣຽງ, ເຈັ່ງ, ສະດາງ, ຊ່ວຍ, ຍະເຫີນ, ລະວີ, ປະໂກະ, ຂະແມ, ຕຸ້ມ, ງວນ, ມ້ອຍ, ກຣີ.

ອີງຕາມປະຫວັດສາດຕຳນານຕ່າງໆ ອາດເຊື່ອໄດ້ວ່າຕັ້ງແຕ່ສະຕະວັດທີ **VIII** ພຸ້ນ ເມືອງຊວາ ອາດເປັນບ່ອນເຕົ້າໂຮມບັນດາເຜົ່າພົນລາວຢ່າງຄັບຄາໜາແໜ້ນຢູ່ແລ້ວ. ຊີວິດ ການເປັນຢູ່ດ້ານວັດຖຸແລະຈິດໃຈຂອງປະຊາຊົນໃນເວລານັ້ນກໍຄົງມີການຂະຫຍາຍຕົວແລະ ຈະເລີນຮຸ່ງເຮືອງຫຼາຍສົມຄວນ.

ເຈົ້າຕັ້ງພູມລຳເນົາທຳມາຫາກິນຢູ່ເຂດພູພຽງ ແລະເຂດປ່າດົງທາງພາກຕາເວັນ ອອກສ່ຽງໃຕ້ທີ່ຕິດກັບຊາຍແດນປະເທດຫວຽດນາມ ແລະກຳປູເຈຍ. ບ່ອນເຂົາເຈົ້າເຕົ້າ ໂຮມໜາແໜ້ນກວ່າໝູ່ແມ່ນແຂວງອັດຕະປື ແລະແຂວງສາລະວັນ. ບັນດາຊົນເຜົ່າເຫຼົ່ານີ້ ຍັງມີການພົວພັນແບບເຊື້ອສາຍອ້າຍນ້ອງກັບບັນດາຊົນເຜົ່າສ່ວນນ້ອຍຢູ່ທາງພາກໃຕ້ ແລະ ພາກກາງຂອງປະເທດຫວຽດນາມ.

ບັນດາເຜົ່າໃນໝວດພາສາມອນ-ຂະແມຈະຢູ່ພາກໃຕ້, ພາກກາງ ຫຼືພາກເໜືອກໍລ້ວນ ແຕ່ມີວິທີທຳມາຫາກິນແບບດຽວກັນຄືເຮັດໄຮ່ເຮັດສວນ ແລະລ້ຽງສັດທີ່ມີລັກສະນະເພິ່ງຕົນ ເອງ, ກຸ້ມຕົນເອງ. ເຕັກນິກການຜະລິດຍັງຕ່ຳ, ຫຼ້າຫຼັງ ແລະຂຶ້ນກັບທຳມະຊາດ. ຊີວິດ ການເປັນຢູ່ຂອງເຂົາເຈົ້າຍັງພົບກັບຄວາມຫຍຸ້ງຍາກອຶດຍາກຂາດເຂີນຫຼາຍທີ່ສຸດ. ການຈັດ ຕັ້ງທາງສັງຄົມກໍຍັງມີລັກສະນະຈຸ້ມເຈື້ອເຊື້ອສາຍ ແລະໂຄດວົງຢູ່. ກ່ອນໜ້ານີ້ເປັນເວລາ ຫຼາຍພັນປີມາແລ້ວ, ບັນດາເຜົ່າເຫຼົ່ານີ້ໄດ້ສ້າງພື້ນຖານວັດທະນະທຳອັນເກົ່າແກ່, ລ້ຳຄ່ າ ແລະ ມະຫັດສະຈັນເຊັ່ນ ທາດເສົາຫິນທີ່ປາກອູ່ແຂວງຫຼວງພະບາງ, ວັດພູແຂວງຈຳປາສັກ, ຈຸ້ມ ຫຼັກຫິນເຂດເມືອງເປັນແຂວງຫົວພັນ, ໄຫຫິນທີ່ແຂວງຊຽງຂວາງ ແລະຄ້ອງລາຄ້ອງບັ້ງ ຕ່າງໆ. ພາສາຄຳເວົ້າ, ຮີດຄອງປະເພນີ ແລະວັນນະຄະດີພື້ນເມືອງຂອງບັນດາເຜົ່າເຫຼົ່ານີ້ ກໍມີສ່ວນປະກອບ ແລະມີທີ່ຕັ້ງສຳຄັນໃນພື້ນຖານວັດທະນະທຳສິລະປະວັນນະຄະດີຂອງ ຊາດລາວເຮົາ. ວັດທະນະທຳ, ສິລະປະວັນນະຄະດີອັນເກົ່າແກ່, ອຸດົມຮັ່ງມີຂອງເຂົາເຈົ້າ ໄດ້ກາເປັນປັດໄຈພື້ນຖານ

ອັນໜັກແໜ້ນໃນນການຂະຫຍາຍຕົວຂອງວັດທະນະທຳ, ສິລະປະວັນນະຄະດີຂອງ ຊາດເຮົາ. ອາດເວົ້າໄດ້ວ່າວັດທະນະທຳ ແລະວັນນະຄະດີຂອງຊາດລາວແຕ່ສະໄໝດຶກ ດຳບັນມາເຖິງສະຕະວັດທີ **XVIII** ໃນດ້ານພື້ນຖານຕົ້ນຕໍແມ່ນໜາກຜົນຂອງການປະສານ

ເຊື່ອມຊຶມເຂົ້າກັນຂອງວັດທະນະທຳ, ວັນນະຄະດີບັນດາເຜົ່າໄຕ-ລາວບັນດາເຜົ່າໃນໝວດພາສາມອນ-ຂະແມ.

3. ໝວດພາສາມົ້ງ-ອີ້ວມຽນ

ມາຮອດລະຫວ່າງສະຕະວັດທີ **XVIII-XIX** ບັນດາເຜົ່າຊົນໃນໝວດພາສາມົ້ງ-ອີ້ວມຽນ ແລະໝວດພາສາຈີນ-ຕິເບດໄດ້ເລີ່ມມີການເຄື່ອນຍ້າຍແຕ່ທາງທິດເໜືອລົງມາຢູ່ໃນລາວ. ເຂົາເຈົ້າຕັ້ງພູມລຳເນົາ ແລະທຳມາຫາກິນແຖບພູສູງທາງພາກເໜືອລົງມາຢູ່ໃນລາວ. ເຂົາເຈົ້າຕັ້ງພູມລຳເນົາ ແລະທຳມາຫາກິນຢູ່ແຖບພູສູງທາງພາກເໜືອຂອງລາວດ້ວຍລະດັບເຕັກນິກການຜະລິດຜົນສູງສົມຄວນເຊັ່ນ ເຮັດໄຮ່ປູກເຂົ້າ, ເຮັດໄຮ່ສາລີ, ລ້ຽງສັດ ແລະຜະລິດເຄື່ອງມືຮັບໃຊ້ການອອກແຮງງານຕ່າງໆ.

ປະຊາຊົນບັນດາເຜົ່າມົ້ງ-ອີ້ວມຽນນີ້ ເຖິງແມ່ນວ່າຈະຕັ້ງພູມລຳເນົາຢູ່ໃນດິນແດນລາວ ບໍ່ທັນໄດ້ເທິງນານຄືບັນດາເຜົ່າໃນໝວດພາສາໄທລາວ ແລະມອນຂະແມ ແຕ່ກໍໄດ້ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການຂະຫຍາຍຕົວຂອງສັງຄົມລາວທັງໃນດ້ານວັດຖຸ ແລະຈິດໃຈ, ວັດທະນະທຳອັນປະກອບດ້ວຍສິລະປະວັນນະຄະດີພື້ນເມືອງທີ່ອຸດົມຮັ່ງມີຂອງເຂົາເຈົ້າໄດ້ ມີບົດບາດສຳຄັນ ແລະເປັນປັດໄຈອັນໜຶ່ງທີ່ຂາດບໍ່ໄດ້ໃນການຂະຫຍາຍຕົວຂອງພື້ນຖານວັດທະນະທຳອັນເປັນເອກະພາບ ແລະຫລາຍຮູບຫລາຍສີຂອງຊາດເຮົາ.

4. ໝວດພາສາຈີນ-ຕິເບດ

ໝວດພາສາ ຈີນ - ຕິເບດ ໄດ້ເລີ່ມມີການເຄື່ອນຍ້າຍແຕ່ທາງທິດເໜືອລົງມາຢູ່ໃນລາວລະຫວ່າງສະຕະວັດທີ **XVIII-XIX** ເຂົາເຈົ້າຕັ້ງພູມລຳເນົາ ແລະທຳມາຫາກິນແຖບພູສູງທາງພາກເໜືອຂອງລາວພ້ອມກັນກັບໝວດພາສາມົ້ງ - ອີ້ວມຽນ.

ໃນໝວດພາສາຈີນ-ຕິເບດລວມມີ8ຊົນເຜົ່າຄື ອາຄາ, ຜູ້ນ້ອຍ, ລາຫູ, ສີລາ, ຮາຍ ໂລໂລ, ຫໍ້.

ເຖິງວ່າເຂົາເຈົ້າກວມຈຳນວນພົນລະເມືອງບໍ່ຫລາຍປານໃດ ແຕ່ກໍມີສ່ວນປະກອບອັນໜ້າສັນລະເສີນເຂົ້າໃນພື້ນຖານວັດທະນະທຳລວມຂອງຊາດ.

ບັນດາເຜົ່າທີ່ກ່າວມາຂ້າງເທິງນັ້ນລ້ວນແຕ່ເປັນປະຊາຊົນພົນລະເມືອງລາວໃນປັດຈຸບັນ; ເຂົາເຈົ້າເປັນເຈົ້າຂອງປະເທດຊາດ ແລະເປັນເຈົ້າຂອງສິລະປະວັດທະນະທຳອັນແທ້ຈິງຂອງລາວເຮົາ. ວັດທະນະທຳ ແລະສິລະປະວັນນະຄະດີຂອງແຕ່ລະເຜົ່າກໍມີທີ່ຕັ້ງບົດບາດສຳຄັນເຮັດໃຫ້ພື້ນຖານວັດທະນະທຳ, ສິລະປະວັນນະຄະດີໂດຍສະເພາະແມ່ນວັນນະຄະດີພື້ນເມືອງຂອງຊາດເຮົາອຸດົມຮັ່ງມີທີ່ສຸດ. ໃນວັດທະນະທຳ ແລະວັນນະຄະດີຂອງບັນດາເຜົ່າໄທລາວນັບວ່າເປັນປັດໄຈພື້ນຖານທີ່ມີລັກສະນະຕັດການຂະຫຍາຍຕົວຂອງວັດທະນະທຳ ແລະສິລະປະວັນນະຄະດີຂອງຊາດລາວເຮົາ.

ຄຳຖາມຄົ້ນຄວ້າ

1/. ເພິ່ນອີງໃສ່ຫຍັງຈຶ່ງຈັດບັນດາຊົນເຜົ່າຢູ່ໃນລາວອອກເປັນ 49 ຊົນເຜົ່າ?

2/. ເຜົ່າ "ໄທ-ລາວ" ປະກອບມີຈັກເຜົ່າຍ່ອຍ, ມີເຜົ່າໃດແດ່ໃດແດ່ ແລະເຂົາເຈົ້າ ໄດ້ທຳມາຫາກິນໃນດິນແດນແຫ່ງນີ້ດົນປານໃດແລ້ວ ?

3/. ບັນດາເຜົ່າໃນໝວດພາສາມອນ-ຂະແມໄດ້ສ້າງພື້ນຖານວັດທະນະທຳອັນເກົ່າ ແກ່, ລີຊື່ມີຫຍັງແດ່?

4/. ໝວດພາສາ ມົ້ງ-ອີ້ວມຽນ ໄດ້ມາຕັ້ງຖິ່ນຖານຢູ່ດິນແດນລາວດົນປານໃດ ແລະ ເຂົາເຈົ້າດຳລົງຊີວິດຄືແນວໃດ?

ບົດທີ 2
ວັນນະຄະດີພື້ນເມືອງໂດຍສັງເຂບ

1. ຄວາມໝາຍຂອງວັນນະຄະດີພື້ນເມືອງລາວ

ຄວາມໝາຍດ້ານຄຳສັບຄຳວ່າ "ວັນນະຄະດີ" ໝາຍເຖິງໜັງສືທີ່ໄດ້ຮັບຄວາມຍົກຍ້ອງວ່າດີ. ທາງຂອງໜັງສື. ເລື່ອງຂອງໜັງສື; ສ່ວນຄຳວ່າ "ພື້ນເມືອງ" ໝາຍເຖິງສະເພາະພື້ນເມືອງ, ສະເພາະທ້ອງທີ່ເຊັ່ນ ຂອງພື້ນເມືອງ, ຄົນພື້ນເມືອງ, ນິທານພື້ນເມືອງ. ທອງຄຳ ອ່ອນມະນີສອນ (2008. 733; 618)

ຄວາມໝາຍທົ່ວໄປ ວັນນະຄະດີພື້ນເມືອງແມ່ນພາກສ່ວນໜຶ່ງໃນການປະດິດແຕ່ງສິລະປະຂອງປະຊາຊົນຜູ້ອອກແຮງງານແລະກໍແມ່ນພາກສ່ວນໜຶ່ງຂອງຮູບຖານສະຕິສັງຄົມ.

ວັນນະຄະດີພື້ນເມືອງແມ່ນປະຊາຊົນເປັນຜູ້ແຕ່ງ ອາດເປັນເລື່ອງເລົ່າ, ຂັບ, ລຳ ,ເຊີ້ງ, ຟ້ອນມີດົນຕີ ຫຼືບໍ່ມີດົນຕີຂອງທ້ອງຖິ່ນຕາມສະຕິ, ຄວາມຮັບຮູ້ກ່ຽວກັບທຳມະຊາດ, ສັງຄົມ ແລະການດຳລົງຊີວິດຂອງປະຊາຊົນ

2. ການກຳເນີດ ແລະ ຂະຫຍາຍຕົວຂອງວັນນະຄະດີພື້ນເມືອງ.

ວັນນະຄະດີພື້ນເມືອງກຳເນີດເກີດຂຶ້ນໃນຂະບວນວິວັດແຫ່ງການຕໍ່ສູ້ຕ້ານໄພທຳມະຊາດ ແລະການຕໍ່ສູ້ທາງສັງຄົມຂອງຄົນເຮົາພ້ອມກັນນັ້ນກໍມີຄຸນປະໂຫຍດຮັບໃຊ້ຊຸກດັນຂະບວນການຕໍ່ສູ້. ວັນນະຄະດີພື້ນເມືອງສ່ອງແສງການຕໍ່ສູ້ຕ້ານໄພທຳມະຊາດ, ຕໍ່ສູ້ທາງສັງຄົມ ແລະການດຳລົງຊີວິດຂອງຄົນເຮົາຢ່າງມີຊີວິດຊີວາແລະອຸດົມສົມບູນທີ່ສຸດ. ນອກຈາກນັ້ນຍັງສະແດງເຖິງແນວຄິດຈິດໃຈ ແລະຄວາມມຸ່ງມາດປາຖະໜາອັນມີລັກສະນະປະຊາທິປະໄຕຂອງປະຊາຊົນຜູ້ອອກແຮງງານ, ສ່ອງແສງເຖິງການຕໍ່ສູ້ຂອງປະຊາຊົນຕ້ານການກົດຂີ່ຂູດຮີດຂອງຊົນຊັ້ນປົກຄອງ. ພ້ອມກັນນັ້ນວັນນະຄະດີພື້ນເມືອງກໍຍັງຮັບເອົາຜົນສະທ້ອນ

ໃນລະດັບໃດໜຶ່ງຈາກລະບົບແນວຄິດຂອງຊົນຊັ້ນປົກຄອງອີກດ້ວຍ. ເມື່ອເບິ່ງດ້ານເຄົ້າ ການກຳເນີດແລ້ວອັນນະຄະດີພື້ນເມືອງຄົງຕົວ ແລະຂະຫຍຍຕົວຢູ່ດ້ວຍສາຍກ່ຽວພັນກັບສິ ລະປະພື້ນເມືອງປະເພດອື່ນໆເຊັ່ນ ຂັບ, ລຳ, ฟ้อนปะสานดົນຕີອັນພາໃຫ້ອັນນະຄະດີ ພື້ນເມືອງ ມີລັກສະນະພິເສດອັນໜຶ່ງອີກຄື ລັກສະນະປະສົມລະຫວ່າງອັນນະຄະດີ ແລະ ສິລະປະ

ອັນນະຄະດີພື້ນເມືອງຄົງຕົວ ແລະแพ่ขะหยายในหมู่ปะชาชົນโดยผ่านรูบกาน ສະແດງຕ່າງໆທີ່ສອດຄ່ອງຄືປະເພດຄຳຮ້ອຍແກ້ວໃຊ້ຮູບການເລົ່າເລື່ອງ, ปะเพดคำร้อย ກອງໃຊ້ຮູບການຂັບ, ลำ (ອາດຈະມີດົນຕີ ຫຼືบ่มีดนตี) ແລະບາງເທື່ອອັນນະຄະດີພື້ນ ເມືອງກໍໄດ້ຮັບການສະແດງบนเอทิเຊິ່ງເຄີຍເອີ້ນກັນວ່າການສະແດງພື້ນເມືອງ, ບັນດາຮູບ ແບບການປະດິດແຕ່ງ ແລະການສະແດງເຫຼົ່ານີ້ ໄດ້ກຳນົດປະເພດຕ່າງໆຂອງອັນນະຄະດີ ພື້ນເມືອງຄື ອັນນະຄະດີພື້ນເມືອງປະເພດຄຳຮ້ອຍແກ້ວ, ອັນນະຄະດີພື້ນເມືອງປະເພດຄຳ ຮ້ອຍກອງ ແລະอันนะคะดีพื้นเมืองปะเพดกานสะแดงพื้นเมือง.

ຄວາມແຕກຕ່າງກັນແລະສົ່ງຜົນສະທ້ອນເຊິ່ງແລະກັນລະຫວ່າງอันนะคะดีพื้นเมือง ກັบอันนะคะดีขฺยน.

– ອັນນະຄະດີພື້ນເມືອງຕ່າງอันนะคะดีขฺยนเพาะว่า มันแม่นกานปะดิดแต่งแบบ ลอมໝູ່ຂອງปะชาชົนผู้ออกแรงงาน. อันนะคะดีพื้นเมืองได้รับกานปะดิดแต่ง ในกานดำลົงชีวิดแบบลอมหมู่ของสังคมคื กานออกแรงงานเพิ่มพูนผะลิดผืน, พิ ทีเชื่อถือทางสะสาหา, ริดคองปะเพนี, กานดำลົงชีวิดในครอบคัว ແລะกานเร็ด บุนกินทานต่างๆ, ดั่งนั้น, อันนะคะดีพื้นเมืองจึ่งบ่มีนามผู้แต่ง. อันนะคะดีพื้น เมืองได้รับกานปะดิดแต่ง ແລะแพ่ขะหยายในหมู่ปะชาชົนด้วยกานเล่าปากต่ปาก แต่คืนนี้ไปหาคืนอื่น, แต่ท้องถิ่นนี้ไปหาท้องถิ่นนั้น ແລะแต่เช่นคืนนี้ไปหาเช่น คืนอื่น. เมืองจากกานแพ่ขะหยายด้วยกานเล่าปากต่ปาก ดั่งก่าวนั้น, อันนะคะ ดีพื้นเมืองจึ่งมีกานปุ่นแปงเลื่อยๆตามกานจื่จำ ແລะปะดิดส้างของผู้คนที่อยู่ท้องๆ ถิ่นต่างกัน. ดั่งนั้น, บิดอันนะคะดีพื้นเมืองจึ่งอาดมีตอนปะดิดแต่งติ่ม ຫຼືตัดออก โดยผู้เล่า, ผู้สะแดงเพื่อให้มันแทดเหมาะกับสะพาบตัวจิงของแต่ละชົนเผ่าในแต่ ละท้องถิ่นต่างกัน, เร็ดให้บิดอันนะคะดีพื้นเมืองนั้นเกิดเป็นหลายบิด, หลายสะบับ ต่างกันเชิ่งพอกนักค้นคว้าเคียเอิ้นกันว่า ลักสะนะหลายสะบับของอันนะคะดีพื้น เมือง.

กานพ้อพันส่งผืนสะท้อนเชิ่งกันแลกันละหว่างอันนะคะดีพื้นเมืองกับ อันนะคะดีขฺยน

ຈຸດພິເສດອັນໜຶ່ງທີ່ສະແດງອອກຢ່າງຈະແຈ້ງໃນວັນນະຄະດີພື້ນເມືອງຂອງລາວ ເຮົາແມ່ນການພົວພັນນີ້ເຄີຍສະແດງອອກສອງດ້ານທີ່ກົງກັນຂ້າມກັນ ແລະຊ່ວຍໜູນເຊື່ອງກັນແລະກັນຄືແຕ່ຮູບການປະດິດແຕ່ງພື້ນເມືອງຄ່ອຍຫັນປ່ຽນມາເປັນວັນນະຄະດີຂຽນ ແລະກົງກັນຂ້າມວັນນະຄະດີຂຽນໄດ້ຖືກນຳໄປເຜີຍແຜ່ ແລະສະແດງດ້ວຍຮູບການຂອງວັນນະຄະ ດີພື້ນເມືອງ. ໃນບາງກໍລະນີສາຍພົວພັນ ແລະການຫັນປ່ຽນລະຫວ່າງການປະດິດແຕ່ງວັນນະຄະດີທັງສອງປະເພດນີ້ມີຄວາມແໜ້ນແຟ້ນຈົນເຖິງຂັ້ນຍາກທີ່ຈະຄົ້ນຄວ້າຊອກຫາເຂດແດນ ແລະກົກເຄົ້າຂອງມັນຢ່າງຊັດເຈນໄດ້. ສະນັ້ນຈຶ່ງອາດເວົ້າໄດ້ວ່າ, ວັນນະຄະດີພື້ນເມືອງມີຖານະບົດບາດ ແລະທີ່ຕັ້ງສຳຄັນໃນພື້ນຖານວັນນະຄະດີແຫ່ງຊາ ແລະເປັນພື້ນຖານອັນໜັກແໜ້ນໃນການກຳເນີດແລະຂະຫຍາຍຕົວຂອງວັນນະຄະດີຂຽນສະໄໝຕ່າງໆ.

ຈຸດພິເສດອີກອັນໜຶ່ງຂອງວັນນະຄະດີພື້ນເມືອງລາວຄື ມັນມີລັກສະນະສະເພາະຂອງແຕ່ລະຊົນເຜົ່າ, ແຕ່ລະທ້ອງຖິ່ນ ແຕ່ວ່າມັນກໍບໍ່ໂດດດ່ຽວແຫ້ງແລ້ງໃນຂອບເຂດທ້ອງຖິ່ນ ແລະຊົນເຜົ່າໃດໜຶ່ງເທົ່ານັ້ນ ຫາກຍັງມີການແຊກຊຶມປົນເປເຈືອຈານສົ່ງຜົນສະທ້ອນແລະສືບທອດເຊື່ອງກັນແລະກັນຢ່າງມີຊີວິດຊີວາທີ່ສຸດ. ໄປຄຽງຄູ່ກັບຈຸດພິເສດ ແລະລັກສະນະຊາດທີ່ກ່າວມານັ້ນ, ວັນນະຄະດີພື້ນເມືອງລາວ ຍັງມີລັກສະນະລວມທົ່ວໄປຂອງວັນນະຄະດີພື້ນເມືອງຂອງປະຊາຊົນຕ່າງໆໃນໂລກ ໂດຍສະເພາະໃນຂົງເຂດອາຊີຕາເວັນອອກສ່ຽງໃຕ້ ແລະພິເສດແມ່ນບັນດາປະເທດເພື່ອນບ້ານໃກ້ຄຽງຂອງພວກເຮົາ.

3. ວັນນະຄະດີພື້ນເມືອງໄດ້ຕິດພັນກັບຮີດຄອງປະເພນີ ແລະ ຄວາມ ເຊື່ອຖື ຂອງ ຄົນລາວ.

ວັນນະຄະດີພື້ນເມືອງອຸດົມຮັ່ງມີທີ່ສຸດ, ມັນກຳເນີດບົນພື້ນຖານການດຳລົງຊີວິດທາງສັງຄົມຂອງປະຊາຊົນຜູ້ອອກແຮງງານບັນດາເຜົ່າ, ດັ່ງນັ້ນ, ຈຶ່ງມີລັກສະນະຊາດ ແລະລັກສະນະທ້ອງຖິ່ນຢ່າງຈະແຈ້ງ.ວັນນະຄະດີພື້ນເມືອງຂອງບັນດາເຜົ່າລາວ-ໄຕ ສະແດງເຖິງອາດດຳລົງຊີວິດຂອງຄົນທີ່ມີລະດັບເສດຖະກິດ ແລະສັງຄົມຂະຫຍາຍຕົວ, ຕິດພັນຢ່າງສະໜິດແໜ້ນກັບການເຄື່ອນໄຫວອຸງການຂອງຊາວນາ ແລະການດຳລົງຊີວິດຢູ່ເຂດທົ່ງພຽງ, ລຸ່ມຕາມແຄມແມ່ນ້ຳລຳເຊ.

ບັນດາເຜົ່າໃນໜອດພາສາ ມອນ-ຂະແມ ທີ່ເຄີຍທຳມາຫາກິນບົນພື້ນແຜ່ນດິນແຫ່ງນີ້ແຕ່ສະໄໝດຶກດຳບັນມາດ້ວຍອາຊີບເຮັດໄຮ່, ເຮັດສວນນັ້ນ ກໍມີພື້ນຖານວັດທະນະທຳພື້ນເມືອງອັນເກົ່າແກ່ ແລະອຸດົມສົມບູນເຊິ່ງຍັງຮັກສາລັກສະນະແລະບັນຍາກາດອັນຟົດຟື້ນທີ່ຕິດພັນກັບຮ່ອງຮອຍວັດທະນະທຳສະໄໝບູຮານ. ບັນດາເຜົ່າໃນໜອດພາສາມົ້ງ-ອີ້ວມຽນ ແລະຊົນເຜົ່າອື່ນໆ ທີ່ເຂົ້າມາຢູ່ດິນລາວຕາມທີຫຼັງນັ້ນ ຕ່າງກໍໄດ້ນຳເອົາວັດທະນະທຳວັນນະ

ຄະດີພື້ນເມືອງອັນມີລັກສະນະສັງຄົມແບບຊົນເຜົ່າ, ໂຄດວົງຍັງໜາແໜ້ນສົມຄວນຂອງຕົນ ທັງປະກອບເຂົ້າໃນຄັງສາງອັນນະຄະດີພື້ນເມືສອງຂອງຊາດ, ເຮັດໃຫ້ມັນມີທັງລັກສະນະ ລວມຂອງທົ່ວຊາດ ແລະມີທັງສີສັນສະເພາະຂອງແຕ່ລະເຜົ່າ, ແຕ່ລະທ້ອງຖິ່ນຢ່າງຈະແຈ້ງ ແລະເລິກເຊິ່ງ.

ອັນນະຄະດີພື້ນເມືອງຂອງລາວເຮົາ ເຄີຍຕິດແໜ້ນກັບການດຳລົງຊີວິດຕົວຈິງຂອງ ປະຊາຊົນບັນດາເຜົ່າ, ພິເສດແມ່ນການເຮັດບຸນກິນທານ, ຮີດຄອງປະເພນີ ແລະການເຊື່ອ ຖືອື່ນໆ. ຮີດຄອງປະເພນີອັນເກົ່າແກ່ ແລະດີງາມເຫຼົ່ານັ້ນເຄີຍມີເນື້ອໃນດ້ານການອອກ ແຮງງານເພີ່ມພູນຜະລິດຜົນທັງມີຄວາມໝາຍປຸກລະດົມຈິດໃຈ ແລະເປັນເງື່ອນໄຂອັນສະ ດວກດີໃຫ້ແກ່ການກຳເນີດ, ການຂະຫຍາຍຕົວຂອງອັນນະຄະດີພື້ນເມືອງ. ໃນດ້ານຮູບ ການສະແດງອັນນະຄະດີພື້ນເມືອງຂອງລາວເຮົາເຄີຍຕິດພັນກັບສິລະປະການຟ້ອນ, ລຳ, ການເສບແບບພື້ນເມືອງທີ່ມີລັກສະນະມ່ວນຊື່ນຄື ລຳວົງ, ລຳເລື່ອງປະສານກັບສຽງຄ້ອງ, ສຽງກອງອັນຫ້າວຫັນຈັບໃຈພ້ອມກັບຈັ່ງຫວະແຄນທີ່ມີບາດຂຶ້ນ, ບາດລົງຢ່າງເສາະໃສເຂັ້ມ ແຂງ ອັນເຮັດໃຫ້ບັນຍາກາດຟົດຟື້ນຄຶກຄື້ນເປັນພິເສດເຊິ່ງເປັນເອກະລັກອີກຢ່າງໜຶ່ງຂອງ ການສະແດງພື້ນເມືອງລາວທີ່ອາດຈະແຕກຕ່າງກັບການສະແດງພື້ນເມືອງຂອງຊາດອື່ນໆ. ຈຸດພິເສດຂອງການສະແດງດັ່ງກ່າວມານັ້ນກໍມີສ່ວນກຳນົດລະດັບການກຳເນີດ ແລະຂະ ຫຍາຍຕົວຂອງອັນນະຄະດີພື້ນເມືອງແຕ່ລະປະເພດ.

4. ການຈັດແບ່ງປະເພດຂອງອັນນະຄະດີພື້ນເມືອງ

ເຖິງວ່າອັນນະຄະດີພື້ນເມືອງຂອງລາວເຮົາອຸດົມສົມບູນຫລາຍທີ່ສຸດດັ່ງທີ່ໄດ້ກ່າວມາ ແລ້ວນັ້ນກໍຕາມ, ແຕ່ປັດຈຸບັນຍັງຂາດເອກະສານຂໍ້ມູນອັນຄົບຖ້ວນ, ສະນັ້ນການຈັດແບ່ງ ປະເພດອັນນະຄະດີພື້ນເມືອງຈຶ່ງພົບກັບຄວາມຫຍຸ້ງຍາກ ແລະບໍ່ທັນຊັດເຈນເທື່ອ ແຕ່ເມື່ອ ອີງໃສ່ຈຸດພິເສດໃນການປະດິດແຕ່ງ, ຮູບແບບຄົງຕົວອາດຈັດແບ່ງອັນນະຄະດີພື້ນເມືອງ ອອກເປັນສາມປະເພດຄື

ອັນນະຄະດີພື້ນເມືອງປະເພດຄຳຮ້ອຍແກ້ວ ຫລືເອີ້ນວ່າ *ເລື່ອງເລົ່າພື້ນເມືອງ*ອັນ ເປັນເລື່ອງພັນລະນາ ຫລືເລົ່າເຖິງເຫດການ ແລະການເຄື່ອນໄຫວຂອງຕົວລະຄອນເຊິ່ງ ສ່ວນຫລາຍໄດ້ແກ່ເທບນິຍາຍ,ພື້ນສີບ, ນິທານອັດສະຈັນ, ນິທານຊວນຫົວ ແລະນິທານສັດ

ອັນນະຄະດີພື້ນເມືອງປະເພດຄຳຮ້ອຍກອງ ຫລືເອີ້ນວ່າກາບກອນພື້ນເມືອງອັນ ເປັນການສະແດງເຖິງຄວາມສະຫລາດຫລັກແຫລມ ແລະພົກໄຫວຕະຫລອດເຖິງທາງຈິດ ໃຈໄດ້ແກ່: ຄຳໂອມ, ຄຳທວາຍ, ຄຳສຸພາສິດ, ຄຳຜະຫຍາ, ຂັບ, ລຳເຊີ້ງ ແລະອື່ນໆ.

ອັນນະຄະດີພື້ນເມືອງປະເພດການສະແດງທີ່ອາດເອີ້ນລວມວ່າລະຄອນພື້ນເມືອງ ອັນແມ່ນການສະແດງອັນນະຄະດີຢູ່ເທິງເວທີສະແດງ ເຊິ່ງໃນນັ້ນເຫດການຕ່າງໆໄດ້ສະ

ແດງອອກຕໍ່ໜ້າຜູ້ຊົມທັງຫລາຍໂດຍຜ່ານການປະພຶດ ແລະພາສາຄຳເວົ້າໂດຍກົງຂອງຕົວລະຄອນ(ຜູ້ສະແດງ)ຄືລຳເລື່ອງ, ລະຄອນກອ້ມ ແລະຮູບການສະແດງພື້ນເມືອງ ອື່ນໆ.

ວັນນະຄະດີທັງສາມປະເພດນີ້ມີອັນແຕກຕ່າງກັນ ແຕ່ກໍມີອັນຄ້າຍຄືກັນຮູບແບບຄົງຕົວ ແລະການຂະຫຍາຍຕົວທັງສາມປະເພດນີ້ມີການພົວພັນໃກ້ຊິດສະໜິດແໜ້ນ ແລະສົ່ງຜົນສະທ້ອນຊຶ່ງກັນ ແລະກັນຢ່າງມີຊີວິດຊີວາທີ່ສຸດ.

ຄຳຖາມຄົ້ນຄວ້າ

1. ວັນນະຄະດີພື້ນເມືອງໝາຍເຖິງຫຍັງ?
2. ວັນນະຄະດີພື້ນເມືອງກຳເນີດ ແລະຂະຫຍາຍຕົວແນວໃດ?
3. ວັນນະຄະດີພື້ນເມືອງພົວພັນກັບວັນນະຄະດີຂຽນແນວໃດ?
4. ວັນນະຄະດີພື້ນເມືອງໄດ້ສ່ອງແສງຮີດຄອງປະເພນີແລະການດຳລົງຊີວິດຂອງຄົນລາວແນວໃດ?
5. ເພິ່ນຈັດແບ່ງວັນນະຄະດີອອກເປັນຈັກປະເພດ? ແຕ່ລະປະເພດມີຫຍັງແດ່?

ພາກທີ II

ວັນນະຄະດີພື້ນເມືອງປະເພດຄຳຮ້ອຍແກ້ວ

ວັນນະຄະດີພື້ນເມືອງປະເພດຄຳຮອ້ຍແກ້ວໂດຍສັງເຂບ

1. ຄວາມຫມາຍຂອງວັນນະຄະດີປະເພດຄຳຮ້ອຍແກ້ວ

ວັນນະຄະດີພື້ນເມືອງປະເພດນີ້ ເວົ້າລວມແລ້ວ ແມ່ນປະເພດເລື່ອງເລົ່າພື້ນເມືອງຕ່າງໆທີ່ປະຊາຊົນຜູ້ອອກແຮງງານປະດິດແຕ່ງ ແລະເລົ່າປາກຕໍ່ປາກສືບຕໍ່ກັນມາແຕ່ບູຮານນະການຈົນເຖິງທຸກວັນນີ້. ບົດເລື່ອງສ່ວນຫລາຍໄດ້ເລົ່າ ຫຼືພັນລະນາເຫດການ ແລະການເຄື່ອນໄຫວຕ່າງໆຂອງຕົວລະຄອນ, ໂດຍບໍ່ເຄີຍໄດພັນລະນາເຂົ້າເລິກທາງແນວຄິດຈິດຕະສາດຂອງຕົວລະຄອນໄດ້ສະແດງອອກຢ່າງຈະແຈ້ງ ແລະເລິກເຊິ່ງສົມຄວນ.

2. ການປະດິດແຕ່ງວັນນະຄະດີພື້ນເມືອງປະເພດຄຳຮ້ອຍແກ້ວ

ໃນການປະດິດແຕ່ງວັນນະຄະດີພື້ນເມືອງປະເພດຄຳຮ້ອຍແກ້ວນີ້ເພິ່ນເຄີຍໝູນໃຊ້ວິທີສັງເຂບ ແລະເວົ້າໂຍກ. ບົດວັນນະຄະດີພື້ນເມືອງໃດກໍລ້ວນແຕ່ເກີດມາຈາກເຫດການທີ່ມີຈິງໃນການດຳລົງຊີວິດຂອງຄົນເຮົາ ດ້ວຍຮູບການສິລະປະວັນນະຄະດີທີ່ມ່ວນ ແລະອ່ອນຊ່ອມ. ບົດເລື່ອງພື້ນເມືອງແຕ່ລະບົດແມ່ນການສັງເຂບເລືອກເຟັ້ນ ແລະເວົ້າໂຍກບັນດາເຫດການຕ່າງໆຂອງຊີວິດຂຶ້ນມາ ເປັນບົດວັນນະຄະດີອັນມີກົກມີປາຍຢ່າງຄັກແນ່ ແລະມີຊີວິດຊີວາອີກດ້ວຍ.

ການປະກອບສ້າງໂຄງຮ່າງບົດເລື່ອງມີລັກສະນະກະທັດຮັດງ່າຍດາຍ, ຕາມທາງຊື່ເພື່ອສະດວກໃນການແຜ່ຂະຫຍາຍດ້ວຍວິທີເລົ່າປາກຕໍ່ປາກ, ສຳນວນຄຳເວົ້າກໍບໍ່ສູ່ຄົງທີ່, ເຄີຍມີການເສກສັນປັນແຕ່ງ ແລະເວົ້າໂຍກຫຼາຍບົດ ແລະຫຼາຍສະບັບຕ່າງກັນ.

3. ການກຳເນີດ ແລະເນື້ອໃນສ່ອງແສງ.

ວັນນະຄະດີພື້ນເມືອງປະເພດຄຳຮ້ອຍແກ້ວ ແລະຄຳເວົ້າທຳມະດາຂອງລາວອຸດົມສົມບູນຮັ່ງມີດ້ານຈຳນວນ, ປະເພດປະດິດແຕ່ງແລະເນື້ອໃນສ່ອງແສງຄື ເທບນິຍາຍ, ພື້ນສິບ, ນິທານອັດສະຈັນ, ນິທານຊວນຫົວ ແລະນິທານສັດ, ແຕ່ລະປະເພດຍ່ອຍເລື່ອງເລົ່ານີ້ບໍ່ແມ່ນເກີດຂຶ້ນໃນຍຸກສະໄໝ ແລະລະບອບສັງຄົມດຽວກັນ. ເທບນິຍາຍເກີດກ່ອນໝູ່, ໃນລະບອບປະຖົມບູຮານເມື່ອສະຕິເປັນເຈົ້າຕົນເອງຂອງຄົນເຮົາບໍ່ທັນສູງ, ແຕ່ກໍມີຄວາມຈຳເປັນຕ້ອງໄດ້ຊອກຮູ້, ອະທິບາຍປາກົດການຕ່າງໆຂອງທຳມະຊາດແລະສັງຄົມ. ສະນັ້ນເນື້ອໃນຕົ້ນຕໍຂອງເທບນິຍາຍຈຶ່ງສ່ອງແສງແນວຄິດ, ວິທີການອະທິບາຍໂລກພະວະວິໄສຂອງຄົນສະໄໝນັ້ນ; ການດຳລົງຊີວິດ ແລະຄວາມມຸ່ງມາດປາຖະໜາຂອງຄົນບູຮານ,

ຖັດຈາກເທບນິຍາຍມາແມ່ນປະເພດພື້ນສິບ ເຊິ່ງເລີ່ມເກີດຂຶ້ນແຕ່ໄລຍະທ້າຍຂອງລະບອບປະຖົມບູຮານຕໍ່ໃສ່ລະບອບສັງຄົມທີ່ມີການຜັນແຍກຊົນຊັ້ນ. ພື້ນສິບຂອງລາວເຮົາເກີດຂຶ້ນເມື່ອບັນດາເຜົ່າເລີ່ມມີສະຕິເປັນເຈົ້າຈຸ້ມເຈື້ອເຊື້ອສາຍ ແລະຊົນເຜົ່າຂອງຕົນເຊິ່ງຕິດພັນກັບພາລະກິດກໍ່ຕັ້ງບັນດາເມືອງບູຮານຂອງລາວເຮົາເຊັ່ນ ພື້ນສີໂຄດຕະບອງ, ພື້ນຈັນທະພານິດ, ພື້ນຂຸນບູລົມ, ພື້ນຂຸນເຈືອງ ແລະຕຳນານຫຼວງພະບາງ, ຕຳນານເມືອງວຽງຈັນ, ຕຳນານພະບາງຕ່າງໆ. ເຫດການແລະຕົວລະຄອນໃນພື້ນສິບເຄີຍຕິດພັນກັນກັບເຫດການ ແລະບຸກຄົນປະຫວັດສາດ. ເນື້ອໃນຕົ້ນຕໍຂອງພື້ນສິບ ແມ່ນບັນຫາປະຫວັດສາດ ແລະຕົວຈິງຂອງສັງຄົມ. ສະນັ້ນ, ພື້ນສິບຈຶ່ງມີຄວາມສຳຄັນສຳລັບການຄົ້ນຄວ້າປະຫວັດສາດຂອງຊາດ. ພື້ນສິບຍັງຄົງສືບຕໍ່ຂະຫຍາຍຕົວມາຈົນເຖິງທຸກວັນນີ້.

ສັງຄົມມີການຂະຫຍາຍຕົວຈາກການດຳລົງຊີວິດແບບລວມໝູ່ໄປຫາການດຳລົງຊີວິດແບບເອກະເທດເປັນແຕ່ລະຄອບຄົວ; ມີຜູ້ຮັ່ງ ແລະມີຜູ້ທຸກ, ມີການກົດຂີ່ຂູດຮີດກັນ. ນີ້ແມ່ນເງື່ອນໄຂດ້ານສັງຄົມທີ່ພາໃຫ້ເກີດມີເລື່ອງເລົ່າທີ່ມີເນື້ອໃນຕໍ່ສູ້ທາງດ້ານສັງຄົມຄືນິທານອັດສະຈັນ, ນິທານຊວນຫົວ ແລະນິທານສັດ.

ການຕໍ່ສູ້ຊົນຊັ້ນໄດ້ສະແດງອອກດ້ວຍຫຼາຍຮູບຫຼາຍແບບຕ່າງກັນ, ໂດຍທາງກົງແລະທາງອ້ອມ. ບົດສິລະປະວັນນະຄະດີຕ່າງໆທີ່ປະຊາຊົນຜູ້ອອກແຮງງານປະດິດແຕ່ງຂຶ້ນໃນໄລຍະນີ້, ໄດ້ກາຍເປັນອາວຸດອັນແຫຼມຄົມຮັບໃຊ້ການຕໍ່ສູ້ຂອງເຂົາຕ້ານການກົດຂີ່ຂູດຮີດ

ຂອງຊົນຊັ້ນປົກຄອງ, ໂດຍສະເພາະແມ່ນຊົນຊັ້ນສັກດິນາ. ບົດນິທານຕ່າງໆມີເນື້ອໃນສ່ອງ ແສງຄວາມເປັນຈິງຂອງສັງຄົມ ທີ່ມີຊົນຊັ້ນຢ່າງຮອບດ້ານ ແລະເລິກເຊິ່ງ. ແຕ່ພັດແກ້ໄຂ ຄວາມຂັດແຍ່ງຕົວຈິງນັ້ນໂດຍຮູບການເຫຼືອເຊື່ອ, ເພີດຈິດແລະມະຫັດສະຈັນທີ່ສຸດ, ເອົາ ການຊະນະທາງ ຈິດໃຈເພື່ອພິສູດຢັ້ງຢືນບັນຫາ "ສິນທຳຕ້ອງເອົາຊະນະອະທຳ".

ນິທານສັດ ເຊິ່ງແມ່ນຮູບການປະດິດແຕ່ງພື້ນເມືອງແບບພິເສດປະເພດຫນຶ່ງທີ່ມີລັກ ສະນະຕໍ່ສູ້ສັງຄົມສູງ, ໂດຍຍົກເອົາເລື່ອງສັດມາເວົ້າເລື່ອງຄົນເພື່ອໂຈມຕີຊົນຊັ້ນປົກຄອງ ໂດຍທາງອ້ອມນັ້ນກໍໄດ້ກຳເນີດ ແລະຂະຫຍາຍຕົວພ້ອມໆກັບນິທານອັດສະຈັນ. ມາຮອດ ໄລຍະສຸດທ້າຍຂອງລະບອບສັງຄົມສັກດິນາເຊິ່ງເລີ່ມຕົ້ນເປື່ອຍເຍື່ອຍ, ເນົ່າເໝັນ ແລະຊຸດ ໂຊມລົງຊັກໄຊ້. ໃນສັງຄົມໄດ້ເກີດມີຂໍ້ຂັດແຍ່ງຫລາຍຢ່າງລະຫວ່າງເນື້ອໃນທາດແທ້ອັນ ຊຸດໂຊມກັບຮູບນອກທີ່ເບິ່ງຊົງຄື ຍັງເຂັ້ມແຂງຄືຄອນຢູ່ຍ້ອນຄວາມພະຍາຍາມຂອງຊົນຊັ້ນ ສັກດິນາທີ່ຢາກຕາບຈູນ, ຈ່ອງດຶງ ແລະຫນວ່ງຫນ່ຶງເອົາລະບອບສັງຄົມອັນອ່ອນເພຍເປ້ຍ ລ່ອຍຂອງພວກເຂົາໄວ້.

ປະຊາຊົນໄດ້ຈັບເອົາໂອກາດນີ້ປະດິດແຕ່ງນິທານຂວນຫົວຂຶ້ນເພື່ອເຢາະເຍີ້ຍ, ສຽດ ສີ, ກ່າວປະນາມ ແລະໂຈມຕີຊົນຊັ້ນປົກຄອງ, ໂຈມຕີລະບອບສັກດິນາທີ່ກຳລັງຄອນແຄນ ແລະກຳລັງຈະລົ້ມລະລາຍໄປແລ້ວນັ້ນ. ສະນັ້ນ, ຈຶ່ງອາດເວົ້າໄດ້ວ່ານິທານຂວນຫົວຂະ ຫຍາຍຕົວແຮງໃນທ້າຍລະບອບສັກດິນາ ແລະກາຍເປັນອາວຸດອັນແຫລມຄົມຂອງປະຊາ ຊົນຕໍ່ສູ້ຕ້ານຊົນຊັ້ນສັກດິນາເຊັ່ນລື່ອງຊ້າງຫມ້ຽງ, ເລື່ອງທ້າວໂປ້ເຫລົ່ານີ້ເປັນຕົ້ນ.

ລວມຄວາມວ່າ: ເລື່ອງເລົ່າພື້ນເມືອງປະເພດຕ່າງໆທີ່ກ່າວມານັ້ນເຄີຍມີການພົວພັນ ສົ່ງຜົນສະທ້ອນ ແລະສືບທອດຊຶ່ງກັນແລະກັນ. ນິທານສ່ວນຫລາຍໄດ້ເກີດຂຶ້ນໃນສັງຄົມທີ່ ມີຊົນຊັ້ນ ແລະມີການເຊື່ອຖືງົມງວາຍ. ດັ່ງນັ້ນ, ມັນຍອມຮັບຜົນສະທ້ອນຈາກລະບົບ ແນວຄິດຂອງຊົນຊັ້ນປົກຄອງ ແລະລະບົບແນວຄິດຂອງສາສະຫນາຕ່າງໆໂດຍສະ ເພາະ ແມ່ນສາສະຫນາພຸດ ແຕ່ເບິ່ງເລິກເຂົ້າໄປແລ້ວເນື້ອໃນຕົ້ນຕໍ ແລະພື້ນຖານຂອງບົດ ເລື່ອງ ຕ່າງໆແມ່ນການສ່ອງແສງເຖິງການດຳລົງຊີວິດ, ການຕໍ່ສູ້ລະຫວ່າງຄວາມມຸ່ງມາດ ປາຖະຫນາອັນແຮງກ້າຂອງປະຊາຊົນຜູ້ອອກແຮງງານບັນດາເຜົ່າທີ່ຢາກມີຊີວິດອັນສຸກສັນ ຢູ່ໃນສັງຄົມອັນເປັນທຳຢ່າງແທ້ຈິງ.

ຄຳຖາມຄົ້ນຄວ້າ

1/. ວັນນະຄະດີພື້ນເມືອງປະເພດຄຳຮ້ອຍແກ້ວມີຄວາມຫມາຍແນວໃດ ?

2/. ເພີ່ນປະດິດແຕ່ງ ວັນນະຄະດີພື້ນເມືອງປະເພດຄຳຮ້ອຍແກ້ວ ດວ້ຍວິທີໃດ?

ບົດທີ 1

ເທບນິຍາຍ

1. ຄວາມໝາຍ, ລັກສະນະພິເສດ ແລະ ລັກສະນະທົ່ວໄປ ຂອງເທບນິຍາຍ.

ຄຳວ່າ: "ເທພ" ມາຈາກພາສາບາລີ ມີຄວາມໝາຍວ່າ "ສະຫວັນ, ຊັ້ນຟ້າ, ເທວະດາ", ສ່ວນຄຳວ່າ "ນິຍາຍ" ມີຄວາມໝາຍວ່າ "ນິທານ", ເລື່ອງທີ່ເວົ້າສືບຕໍ່ກັນມາ, ເມື່ອໂຮມເຂົ້າກັນເປັນ "ເທບນິຍາຍ" ເຊິ່ງມີຄວາມໝາຍວ່າ "ຕຳນານ", ເລື່ອງລາວທີ່ເວົ້າກ່ຽວກັບເທບ, ເທວະດາຟ້າແຖນຕາມຄວາມເຊື່ອ.

ເທບນິຍາຍແມ່ນເລື່ອງເລົ່າພື້ນເມືອງທີ່ພັນລະນາ ຫຼືເລົ່າເຖິງການປະພຶດ, ການເຄື່ອນໄຫວຂອງຕົວລະຄອນແຖນ, ອິນ, ພົມ ແລະຜີສາງຕາມແນວຄິດຂອງຄົນບູຮານ.

ເທບນິຍາຍແມ່ນໝາກຜົນແຫ່ງການປະດິດສ້າງວັດທະນະທຳທາງຈິດໃຈຂອງຄົນຢູ່ໃນລະບອບປະຖົມມະຊີບ (ສັງຄົມບໍ່ມີຊັ້ນຊັ້ນ) ສະນັ້ນ, ຈຶ່ງອາດເວົ້າໄດ້ວ່າໃນພື້ນຖານວັດທະນະທຳຂອງແຕ່ລະຊາດ, ເທບນິຍາຍແມ່ນຮູບການປະດິດແຕ່ງພື້ນເມືອງທີ່ເກີດຂຶ້ນກ່ອນໝູ່, ມັນຕິດພັນແໜ້ນກັບການເຄື່ອນໄຫວວຽກງານຕົວຈິງ, ການດຳລົງຊີວິດ, ການເຊື່ອຖືຮີດຄອງປະເພນີ, ຄວາມມຸ່ງມາດປາຖະໜາຂອງຄົນເຮົາ.

ເທບນິຍາຍບໍ່ສະເພາະແຕ່ເປັນວິທີອະທິບາຍໂລກຂອງຊາວບູຮານເທົ່ານັ້ນ, ຫາກຍັງແມ່ນການຢືນຢັນ ແລະສັນລະເສີນໝາກຜົນຂອງການປະດິດສ້າງວັດທະນະທຳ ແລະປະກອບສ່ວນປັບປຸງສາຍສຳພັນທາງສັງຄົມ, ເພີ່ມຄວາມຮູ້, ບົດຮຽນໃນດ້ານທຳມະຊາດ, ປຸກລະດົມນ້ຳໃຈເຊື່ອໝັ້ນໃນການຕໍ່ສູ້ເອົາຊະນະໄພທຳມະຊາດ; ພ້ອມກັນນັ້ນຍັງປະກອບສ່ວນ, ທະນຸຖະໜອມມູນເຊື້ອດ້ານວັດທະນະທຳ, ຄຸນສົມບັດ ແລະຈິດສະໜາວນຄວາມງາມໃນໝູ່ປະຊາຊົນບັນດາເຜົ່າອີກດ້ວຍ.

2 . ການກຳເນີດ ແລະ ຂະຫຍາຍຕົວຂອງເທບນິຍາຍ.

ໃນການຄົ້ນຄວ້າຊອກຮູ້ເທບນິຍາຍຂອງແຕ່ລະຊາດທີ່ຜ່ານມາເຄີຍມີທັດສະນະຫຼາຍຢ່າງແຕກຕ່າງກັນກ່ຽວກັບບັນຫາການກຳເນີດ ແລະຂະຫຍາຍຕົວຂອງເທບນິຍາຍ, ກ່ຽວກັບຄວາມໝາຍ ແລະບັນຫາຕົ້ນຕໍຂອງເທບນິຍາຍ ແລະອື່ນໆ.

ຢາກອະທິບາຍກົກເຄົ້າການກຳເນີດ ແລະຄວາມໝາຍຂອງເທບນິຍາຍໄດ້ຕ້ອງເບິ່ງຂະບວນວິວັດແຫ່ງການຂະຫຍາຍຕົວຂອງສັງຄົມມະນຸດ ແລະພື້ນຖານດ້ານເສດຖະກິດສັງຄົມແລະຈິນຕະນາການທີ່ໃຫ້ກຳເນີດເທບນິຍາຍ.

ວິທະຍາສາດໄດ້ພິສູດໃຫ້ເຫັນຢ່າງຖືກຕ້ອງຄ່ອງແຄ່ວທີ່ສຸດປະຫວັດສາດແຫ່ງການຂະຫຍາຍຕົວຂອງສັງຄົມມະນຸດ ແມ່ນປະຫວັດສາດແຫ່ງການອອກແຮງງານຢ່າງມີສະຕິ

ແລະ ປະດິດສ້າງຂອງຄົນເຮົາ, ແມ່ນປະຫວັດສາດແຫ່ງການຕໍ່ສູ້ຕ້ານໄພທຳມະຊາດ ແລະ ຕໍ່ສູ້ດ້ານສັງຄົມນັບເປັນເວລາຫຼາຍພັນປີມາແລ້ວ. ໂດຍຜ່ານການຕໍ່ສູ້ອັນ ທຸກຍາກລຳບາກ ແລະຍືດເຍື້ອຍາວນານນັ້ນມະນຸດນັບແຕ່ບ່ອນດຳລົງຊີວິດແບບຕ່ຳຊ້າ ຫຼ້າຫຼັງໄດ້ກ້າວຂຶ້ນສູ່ ລະດັບສີວິໄລຄືທຸກວັນນີ້;ຄວາມຮັບຮູ້ຂອງຄົນເຮົາຕໍ່ໂລກພາວະວິໄສກໍໄດ້ຮັບການຂະຫຍາຍ ຕົວຢ່າງບໍ່ຢຸດຢັ້ງ. ພື້ນຖານວັດທະນະທຳບູຮານໄດ້ເກີດຂຶ້ນເພື່ອສ່ອງແສງເຖິງຄວາມຮັບຮູ້ ໃນໄລຍະຕົ້ນຂອງຄົນເຮົານັ້ນ, ເທບນິຍາຍເຊິ່ງແມ່ນພາກສ່ວນໜຶ່ງຂອງວັດທະນະທຳບູຮານ ກໍໄດ້ກຳເນີດເກີດຂຶ້ນບົນພື້ນຖານການອອກແຮງງານ, ການດຳລົງຊີວິດແບບລວມໝູ່ແລະ ການຕໍ່ສູ້ຂອງຄົນສະໄໝກ່ອນ.

ຊາວບູຮານຢາກອອກແຮງງານ ແລະຕໍ່ສູ້ຕ້ານໄພທຳມະຊາດໃຫ້ໄດ້ຮັບຜົນດີຈຳເປັນ ທີ່ສຸດຕ້ອງໄດ້ຊອກຮູ້, ສັງເກດ ແລະອະທິບາຍກ່ຽວກັບເຫດການ, ປາກົດການຂອງທຳມະ ຊາດເຊັ່ນ ຝົນຕົກ, ຟ້າຜ່າ, ໄພແຫ້ງແລ້ງ, ພູຜາ, ແມ່ນ້ຳລຳເຊ ແລະສັດສາວາສິ່ງຕ່າງໆ. ຊາວບູຮານຍັງໄດ້ສົນໃຈ ແລະຫາວິທີອະທິບາຍກ່ຽວກັບບັນຫາທີ່ໃຫຍ່ກວ່ານີ້ອີກຄື ກົກເຄົ້າ ການກຳເນີດຂອງໂລກຈັກກະວານ, ກົກເຄົ້າການກຳເນີດຂອງມະນຸດ, ຂອງຊາດການເກີດ ການຕາຍຂອງຄົນເຮົາ ແລະອື່ນໆ. ສິ່ງເຫຼົ່ານີ້ລ້ວນແຕ່ແມ່ນອັນເລິກລັບທີ່ສຸດສຳລັບຊາວບູ ຮານ.ຄວາມຮັບຮູ້ ແລະການອະທິບາຍຂອງຊາວບູຮານຕໍ່ກັບບັນຫາດັ່ງກ່າວມານັ້ນມີອັນຖືກ ຕ້ອງຊັດເຈນດີສົມຄວນ, ແຕ່ຄວາມຜິດພາດກໍມີຫຼາຍ, ຍ້ອນເຕັກນິກການຜະລິດຍັງຕ່ຳ ຕ້ອຍ ແລະຫຼ້າຫຼັງ, ຄວາມຮູ້ກ່ຽວກັບໂລກພະວະວິໄສຈຳກັດ, ແຕ່ຄວາມຮຽກຮ້ອງຕ້ອງການ ໃນ ການຊອກຮູ້, ອະທິບາຍກ່ຽວກັບເຫດການເຫຼົ່ານັ້ນພັດນັບມື້ນັບເພີ່ມຂຶ້ນ. ປາກົດການທຳ ມະ ຊາດທີ່ພໍຮູ້ ແລະອະທິບາຍໄດ້ແລ້ວຍັງມີໜ້ອຍ, ສ່ວນປາກົດການທຳມະຊາດທີ່ມີຜົນ ສະ ທ້ອນບໍ່ດີເຖິງການຜະລິດຜົນ ຫຼືເປັນການຂົ່ມຂູ່ຊີວິດເຊິ່ງຊາວບູຮານບໍ່ທັນອະທິ ບາຍ ໄດ້ນັ້ນ ຍັງມີຫຼາຍຢູ່, ອັນພາໃຫ້ຄົນບູຮານເກີດມີແນວຄິດຢ້ານກົວຈົນຍົນຍອມນົບໄຫ້ວ ແລະເຊື່ອຖື ມັນເປັນສິ່ງສັກສິດ.

ໃນສະໄໝບູຮານເຄີຍມີການຕໍ່ສູ້ກັນລະຫ່ວາງກຸ່ມຄົນນີ້ກັບກຸ່ມຄົນອື່ນ, ລະຫວ່າງຈຸ້ມ ຈ້ອເຊື້ອສາຍນີ້ກັບຈຸ້ມເຈ້ອເຊື້ອສາຍອື່ນ. ໃນຈຳນວນເທບນິຍາຍຂອງລາວທີ່ເລົ່າກ່ຽວກັບຊີ ວິດ ແລະຜົນງານອັນດີເດັ່ນຂອງບັນດາບັນພະບູລຸດໃນຂະບວນການຕໍ່ສູ້ນັ້ນ. ບົດເລື່ອງ ເຫຼົ່ານັ້ນ ໄດ້ຮັບການເລົ່າສືບຕໍ່ກັນມາບໍ່ສະເພາະແຕ່ຖືກກັບຄວາມເປັນຈິງເທົ່ານັ້ນ, ແຕ່ຫາກ ຍັງມີການເສກສັນປັ້ນເລື່ອງ ແລະເວົ້າໂຍກໃສ່ຕາມຄວາມເຂົ້າໃຈຂອງຜູ້ເລົ່າເຮັດໃຫ້ເລື່ອງ ທີ່ມີຈິງກາຍເປັນເລື່ອງທີ່ມີລັກສະນະເຫຼືອເຊື່ອ, ມະຫັດສະຈັນ, ບັນພະບູລຸດເຫຼົ່ານັ້ນໄດ້ຮັບ ການເຊື່ອຖືຮັກແພງ ແລະຍົກຍໍຂຶ້ນທຽບເທົ່າກັບຕົວລະຄອນແຖນຕາມຄວາມຄິດ ແລະ

ຄວາມເຊື່ອຂອງຄົນສະໄໝກ່ອນ ດັ່ງທີ່ໄດ້ສະແດງອອກໃຫ້ເຫັນໃນລະບົບເທບນິຍາຍປູ່ເຢີ ຍ່າເຢີຂອງລາວເຮົາເປັນຕົ້ນ.

ເວົ້າລວມແລ້ວເທບນິຍາຍເກີດມາຈາກການດຳລົງຊີວິດ, ການອອກແຮງງານ ແລະ ການຕໍ່ສູ້ຂອງຄົນເຮົາ, ສະນັ້ນ ເຖິງຈະມີລັກສະນະເຫຼືອເຊື່ອ ແລະມະຫັດສະຈັນແຕ່ກໍມີ ຄຸນຄ່າສົດຈະທັດຢ່າງເລິກເຊິ່ງ.

ເທບນິຍາຍຂອງຊາດຕ່າງໆມີລະດັບການຂະຫຍາຍຕົວແຕກຕ່າງກັນ. ເທບນິຍາຍ ຂອງລາວອຸດົມສົມບູນ ແລະໃນດ້ານພື້ນຖານຍັງຮັກສາລັກສະນະເດີມດ້ວເກົ່າແກ່ ແລະ ເປັນລະບົບສາຍໄຍສົມຄວນເຊັ່ນ ລະບົບເທບນິຍາຍໝາກນ້ຳເຕົ້າປຸງ, ລະບົບເທບນິຍາຍ ປູ່ເຢີ່ຍ່າເຢີ ແລະອື່ນໆ. ລະບົບເທບນິຍາຍເຫຼົ່ານີ້ໃນເບື້ອງຕົ້ນອາດເປັນບົດເລື່ອງເລົ່າສູ່ກັນ ຟັງພາຍໃນຈຸ້ມເຈື້ອເຊື້ອສາຍໃຜມັນເທົ່ານັ້ນເຊັ່ນວ່າ ບົດເທບນິຍາຍປູ່ເຢີ່ຍ່າເຢີອາດຈະແມ່ນ ບົດເລື່ອງເລົ່າກ່ຽວກັບບັນພະບູລຸດຜູ້ເກ່ັງກ້າ ແລະມີຄຸນງາມຄວາມດີຫຼາຍສຳລັບບັນດາ ເຜົ່າໃຜລາວໃນຄາວກ່ອນ. ມາຮອດສະໄໝຂຸນບູລົມ (ຕາມນິທານຂຸນບູລົມ) ໄດ້ເລີ່ມມີ ການສ່ອງແສງເຖິງຮ່ອງຮອຍໃນການກະກຽມກໍ່ຕັ້ງເມືອງບູຮານທີ່ຊຸງດົງຊຸງທອງ. ໃນການ ກໍ່ຕັ້ງເມືອງບູຮານນັ້ນແນ່ນອນຕ້ອງມີການເຕົ້າໂຮມ ແລະປະກອບສ່ວນຂອງຫຼາຍກຸ່ມຄົນ ຕ່າງກັນທີ່ດຳລົງຊີວິດຄົງຕົວໃນຂົງເຂດດຽວກັນ, ອັນພາໃຫ້ເທບນິຍາຍຂອງແຕ່ລະຈຸ້ມເຈື້ອ ເຊື້ອສາຍຄົນເຫຼົ່ານັ້ນມີການດູດດຶງເຕົ້າໂຮມກັນເຂົ້າເປັນລະບົບສາຍໃຍເພື່ອສ່ອງແສງເຖິງ ການກຳເນີດເມືອງບູຮານໃນສະໄໝຕົ້ນຂອງຊາດເຮົາ. ລະບົບເທບນິຍາຍຂອງລາວເຮົາຍັງ ມີການພົວພັນຢ່າງສະໜິດແໜ້ນກັບການປະດິດແຕ່ງພື້ນເມືອງປະເພດຄຳກອນ ສະໄໝບູ ຮານເຊັ່ນ ຄຳໂອ້ມ, ຄຳໂສກ ແລະຄຳໄຫວ້ອອນເສັ-ເຢົ້າຕ່າງໆອີກດ້ວຍ. ສາຍພົວພັນ ອັນນີ້ໄດ້ປະກອບສ່ວນເຮັດໃຫ້ເທບນິຍາຍຂະຫຍາຍຕົວດີ ແລະອຸດົມຮັ່ງມີຂຶ້ນຕື່ມອີກ.

ເຖິງແມ່ນວ່າແຕ່ກ່ອນ, ເທບນິຍາຍຂອງລາວເຮົາອຸດົມສົມບູນ, ເປັນລະບົບ ແລະຂະ ຫຍາຍຕົວດີດັ່ງໄດ້ເວົ້າມາແລ້ວກໍຕາມ, ແຕ່ຍ້ອນຂາດຄວາມເອົາໃຈໃສ່ເກັບກຳ ແລະທ້ອນ ໂຮມບັນດາບົດເທບນິຍາຍເຫຼົ່ານັ້ນໄວ້, ສະນັ້ນ ຈຶ່ງມີການຕົກເຮ່ຍເສຍຫາຍໄປຫຼາຍທີ່ສຸດ. ລະບົບເທບນິຍາຍນ້ຳເຕົ້າປຸງ, ລະບົບເທບນິຍາຍປູ່ເຢີ່ຍ່າເຢີເຊິ່ງໄດ້ຈົດກ່າຍຖ່າຍທອດໄວ້ ໃນປຶ້ມໜັງສືພິງສາວະດານລາວ, ໃນຕຳນານເມືອງຫຼວງພະບາງໃນໜັງສືນິທານຂຸນບູລົມ... ເຫຼົ່ານີ້ກໍ່ບໍ່ເປັນລະບົບຄົບຖ້ວນຄືດັ່ງສະໄໝທີ່ເທບນິຍາຍພວມຂະຫຍາຍຕົວຢູ່ນັ້ນ; ຊ້ຳບໍ່ໜ່ຳ ຍັງມີການສັບປົນຄົນເລກັນລະຫວ່າງບົດເລື່ອງຕ່າງໆທີ່ຈົດກ່າຍໄວ້ນັ້ນອີກດ້ວຍ ນອກຈາກ ນັ້ນ, ໃນສະໄໝລາວເລີ່ມຕົ້ນມີຮ່ອງຮອຍໃນ ການກະກຽມກໍ່ຕັ້ງເມືອງບູຮານ, ເທບນິຍາຍ ຂອງເຮົາພັດມີການແຊກຊ້ອນປົນເປກັນກັບພື້ນສິບທີ່ຫາກໍເກີດຂຶ້ນເພື່ອສ່ອງແສງເຖິງບັນດາ ເຫດການປະຫວັດສາດໃນເວລານັ້ນເຊັ່ນ "ພື້ນຂຸນບູລົມ" ມີທັງລັກສະນະເທບນິຍາຍ, ມີ

ທັງລັກສະນະພື້ນສືບ; ຍິ່ງໄປກວ່ານັ້ນ ນັກຄົ້ນຄວ້າບາງຄົນຍັງຖືວ່າພື້ນຂຸນບູລົມເປັນເລື່ອງ ທີ່ມີຈິງໃນປະຫວັດສາດ.

ມາຮອດສະໄໝສັງຄົມມີຊົ້ນຊັ້ນ, ໂດຍສະເພາະແມ່ນໃນລະບອບສັງຄົມສັກດິນາທີ່ ສວຍໃຊ້ສາສະໜາເປັນເຄື່ອງມືຮັບໃຊ້ສິດຜົນປະໂຫຍດກົດຂີ່ຂູດຮີດຂອງເຂົານັ້ນ, ເທບນິ ຍາຍຂອງລາວເຮົາມີການປ່ຽນແປງຫຼາຍຢ່າງ, ເນື້ອໃນຄວາມໝາຍຂອງບົດເລື່ອງບາງເທື່ອ ກໍມີການຜັນແປປຕາມທັດສະນະຂອງຊົ້ນຊັ້ນປົກຄອງ ແລະທັດສະນະສາສະໜາພຸດ. ຈຸດ ປະສົງຕົ້ນຕໍຂອງການຈົດກ່າຍຖ່າຍທອດເອົາບາງບົດເທບນິຍາຍໃນ ໄລຍະຜ່ານມານັ້ນກໍ ເພື່ອ ເປັນການອະທິບາຍປະຫວັດສາດຂອງຊາດເຮົາ ຕາມທັດສະນະຂອງຊົນຊັ້ນສັກດິນາ ຜູ້ປົກຄອງ ແລະສ້າງພື້ນຖານອັນສົມເຫດສົມຜົນໃຫ້ແກ່ການເຊື່ອຖືແບບງົມງວາຍ ແລະຮີດ ຄອງປະເພນີຕ່າງໆທີ່ສອດຄ່ອງກັບສິດຜົນປະໂຫຍດຂອງພວກສັກດິນາເອງ.

3. ເນື້ອໃນຂອງເທບນິຍາຍ

ເທບນິຍາຍຂອງຊາດລາວເຮົາກໍຄືຂອງຊາດອື່ນໆໃນໂລກໄດ້ສ່ອງແສງເຖິງຄວາມຮັບ ແລະວິທີອະທິບາຍຂອງຊາວບູຮານຕໍ່ກັບບັນຫາກົກເຄົ້າການກຳເນີດຂອງໂລກ, ຂອງ ມະນຸດ ແລະສັດສາວາສິ່ງທັງຫຼາຍພ້ອມທັງເວົ້າເຖິງການເກີດການຕາຍຕະຫຼອດເຖິງປາກົດ ການຕ່າງໆຂອງທຳມະຊາດ.

3.1. ເນື້ອໃນທີ່ເວົ້າເຖິງການກຳເນີດໂລກ ແລະສັດ

ເທບນິຍາຍຂອງລາວເຮົາໄດ້ເວົ້າເຖິງການກຳເນີດໂລກ (ດິນຟ້າອາກາດ) ດ້ວຍຫຼາຍ ຮູບຫຼາຍແບບທີ່ສຸດ. ໃນເທບນິຍາຍ "ເກີດເປັນນ້ຳເປັນດິນ" ຂອງເຜົ່າໄທແດງໄດ້ອະ ທິ ບາຍວ່າ ແຕ່ກ້ີ ແຕ່ກ່ອນ ໃນໂລກນີ້ຍັງບໍ່ທັນມີຫຍັງໝົດ, ຕໍ່ມາແຖນຈົ່ງໄດ້ລົງມາສ້າງນ້ຳ ແປງດິນຂຶ້ນ. ໃນບົດເລື່ອງກົກເຄົ້າການກຳເນີດດິນລາວ, ຄົນລາວພັດເວົ້າວ່າ ໃນສະໄໝ ກ່ອນເທິງໜ້າໂລກຂອງພວກເຮົາແມ່ນແມ່ນ້ຳທັງໝົດ, ຕໍ່ມາໃນນ້ຳນັ້ນຈົ່ງມີໄມ້ລຳໜຶ່ງໄຫຼມາ ໄມ້ລຳນັ້ນຄ່ອຍເກີດກາຍເປັນດິນ. ບົດເທບນິຍາຍ "ປູ່ເຍີ່ຍ່າເຍີລົງມາເມືອງລຸ່ມ" ໄດ້ອະທິ ບາຍວ່າ ໃນສະໄໝນັ້ນແຜ່ນດິນຍັງບໍ່ທັນມີເທື່ອ, ມີແຕ່ນ້ຳນອງຍາວຢຽດຈົນສຸດສາຍຕາ, ພະຍາແຖນກໍເລີຍເວົ້າຕໍ່ປູ່ເຍີ່ຍ່າເຍີວ່າ: ຢູ່ຕາມທຸກບ່ອນເມື່ອພວກເຈົ້າຍ່າງອອກໄປກໍຈະ ເກີດມີແຜ່ນດິນເກີດຂຶ້ນໂລດ". ພະຍາແຖນໄດ້ຕັດສັ່ງໃຫ້ປູ່ເຍີ່ຍ່າເຍີສ້າງແຜ່ນດິນ ດັ່ງນີ້. ເມື່ອປູ່ເຍີ່ຍ່າເຍີ່ຍ່າງໄປຕາມຟອງນ້ຳແຜ່ນດິນກໍຈະເກີດຂຶ້ນໂລດ... ໃນໜັງສືມີການຂຸນບູ ລົມມີບາງສະບັບຂຽນວ່າ: ແຖນແຕ່ງ, ແຖນຊົ່ງ, ແຖນຄົ້ມ ແລະແຖນເຖືອກ ແຖນທັງສີ່ ຕົນນີ້ ຢູ່ຊັ້ນຟ້າເປັນຜູ້ສ້າງໂລກ, ດູແລສັດສິ່ງ ແລະຄົນ... ເທບນິຍາຍ "ການສ້າງໂລກ" ຂອງເຜົ່າມົ້ງພັດເວົ້າວ່າ ທຳອິດໂລກຂອງເຮົານີ້ຍັງສັບສົນປົນເປກັນຢູ່, ບໍ່ທັນເປັນຟ້າເປັນ ດິນເທື່ອ. ເພື່ອຈັດຕັ້ງສັບຊ້ອນຄົນໃໝ່ໃຫ້ເປັນລະບຽບຮຽບຮ້ອຍແຖນໄດ້ໃຊ້ກຳລັງແຮງຂອງ

ການຫາຍໃຈຂອງຕົນແຕ່ງທ້ອງຟ້າຂຶ້ນກ່ອນ ພ້ອມດ້ວຍຕາເວັນສິບໜ່ວຍ, ດວງເດືອນ ເກົ້າໜ່ວຍ ແລະດວງດາວອື່ນໆ ຢ່າງມາກມາຍກາຍກອງ, ເພື່ອສະກັດກັ້ນບໍ່ໃຫ້ດວງດາວ, ດວງເດືອນເຫຼົ່ານັ້ນຕົກລົງມາດິນແຖນຈຶ່ງໄດ້ເອົາແຜນຜ້າສີຂຽວກັ້ງລັດໄວ້, ຄາວນັ້ນ, ໜ່ວຍໂລກເຮົານີ້ຍັງເປັນດິນຕົມປຸກຊຸ່ມຢູ່. ຍ້ອນມີຕາເວັນສິບໜ່ວຍສ່ອງແສງລົງມາຕະຫຼອດໄລຍະເຈັດປີ, ເຈັດເດືອນ ແລະເຈັດມື້ ຈຶ່ງເຮັດໃຫ້ນ້ຳຢູ່ໜ່ວຍໂລກບົກແຫ້ງໄປ. ດິນດອນເກີດຂຶ້ນ, ກົກໄມ້ໃບຫຍ້າກໍປົ່ງໜໍ່ຈໍ່ແໜງ, ຕໍ່ມາແຖນຈຶ່ງໄດ້ສ້າງສັດສາວະສິ່ງ ແລະອື່ນໆເກີດຂຶ້ນ.

ການທີ່ຊາວບູຮານອະທິບາຍໂລກແບບນີ້ສະແດງເຖິງຄວາມຮັບຮູ້ຍັງຕ່ຳ ແລະຍັງອ່ອນນ້ອຍ, ແຕ່ບໍ່ງົມງວາຍ, ຍ້ອນວ່າຢູ່ໃນການອະທິບາຍນັ້ນມີລັກສະນະວັດຖຸນິຍົມຈະແຈ້ງພໍສົມຄວນ; ຢູ່ບ່ອນວ່າ ຊາວບູຮານໄດ້ອະທິບາຍໂລກນັບແຕ່ບ່ອນບໍ່ທັນມີຫຍັງໝົດ, ຕໍ່ມາກໍມີນ້ຳມີດິນ, ກົກໄມ້ ແລະສັດສາວາສິ່ງອື່ນໆເກີດຂຶ້ນ. ວັດຖຸກຳເນີດຂຶ້ນ ແລະຂະຫຍາຍຕົວໂດຍມີການເໜັ່ງຕີ່ງໃນຕົວມັນເອງ ແລະມີການຜັນປ່ຽນແຕ່ວັດຖຸນີ້ຫາວັດຖຸອື່ນ: "ໃນສະໄໝກ່ອນເທິງໜ້າໂລກເຮົານີ້ ຍັງແມ່ນນ້ຳທັ້ງໝົດ,ແຕ່ຕໍ່ມາໃນນ້ຳຍັງມີໄມ້ລຳໜຶ່ງໄຫຼມາ, ໄມ້ລຳນັ້ນໄດ້ຄ່ອຍກາຍເກີດເປັນດິນ"... ການອະທິບາຍໂລກແບບນີ້ມີລັກສະນະວັດຖຸນິຍົມເຊິ່ງແຕກຕ່າງໃນດ້ານພື້ນຖານກັບການອະທິບາຍແບບຈິດຕະນິຍົມທີ່ຖືວ່າ ພະຜູ້ເປັນເຈົ້າເປັນຜູ້ສ້າງໂລກພ້ອມທັງທຸກສິ່ງທຸກຢ່າງໃນໂລກນີ້.

ມີບາງບົດເທບນິຍາຍເວົ້າເຖິງການສ້າງໂລກຂອງແຖນແບບລອມໆຄື ແຖນເປັນຜູ້ສ້າງໂລກແຖນຈຶ່ງໄດ້ລົງມາສ້າງນ້ຳແປງດິນ, ຫຼືວ່າ ກ່ຳນ້ຳກ່ຳດິນແມ່ນມາຈາກບົວລະພັນທະ... ແລະອື່ນໆ. ແຕ່ວ່າກໍມີເທບນິຍາຍບາງບົດໄດ້ເວົ້າເຖິງການສ້າງໂລກຂອງແຖນດ້ວຍການອອກແຮງງານຄື ຕ້ອງໄດ້ໃຊ້ການເຄື່ອນໄຫວ ຫຼືວ່າໃຊ້ເຫື່ອແຮງແຖນເອງເຊັ່ນປູ່ເຢີຍ່າເຢີຍ່າງໄປຕາມຟອງນ້ຳແຜ່ນດິນກໍຈະເກີດຂຶ້ນໂລດ, ຫຼືຈະແຈ້ງແລະລະອຽດກວ່າ ນັ້ນອີກຄື ການສ້າງໂລກຂອງແຖນໃນເທບນິຍາຍ "ການສ້າງໂລກ" ຂອງເຜົ່າມົ້ງທີ່ໄດ້ກ່າວມາຂ້າງເທິງນັ້ນ. ເຖິງວ່າແຖນມີລິດມີເດດ, ຮູ້ທຸກສິ່ງທຸກຢ່າງແລະສ່ອງເຫັນທຸກອັນທຸກແນວ, ແຕ່ເມື່ອສ້າງໂລກແຖນກໍຍັງໃຊ້ເຫື່ອແຮງໃນການອອກແຮງງານຂອງຕົນ. ແນ່ນອນວ່າເລື່ອງແບບນີ້ພຽງແຕ່ເປັນຈິດສຳນຶກທີ່ສົມທຽບການສ້າງໂລກຂອງແຖນອີງໃສ່ການອອກແຮງງານຂອງຄົນເຮົາເທົ່ານັ້ນ, ແຕ່ມັນກໍສະແດງໃຫ້ເຫັນຄວາມຮັບຮູ້ອັນຖືກຕ້ອງ ແລະກ້າວໜ້າຂອງຄົນສະໄໝກ່ອນທີ່ບໍ່ພຽງແຕ່ຢາກອະທິບາຍໂລກເທົ່ານັ້ນ, ຫາກຍັງມີຄວາມໃຝ່ຝັນຢາກດັດສ້າງໂລກອີກດ້ວຍ. ຊາວບູຮານນອກຈາກອະທິບາຍເຄ້າກ□າເນີດຂອງໂລກແລ້ວ ເຂົາເຈົ້າ ຍັງອະທິບາຍການກຳເນີດຂອງມະນຸດອີກດ້ວຍ.

3.2 . ເນື້ອໃນທີ່ເວົ້າເຖິງການກຳເນີດມະນຸດ ແລະ ຊາດຕົນ

ກົກເຄົ້າການກຳເນີດຂອງມະນຸດກໍແມ່ນບັນຫາໃຫຍ່ອັນໜຶ່ງທີ່ຊາວບູຮານສົນໃຈຊອກ ຮູ້ ແລະອະທິບາຍແບບມີລັກສະນະເອກະພາບກັນວ່າມະນຸດກໍຄືສັດສາວາສິ່ງອື່ນໆ ແມ່ນ ເກີດມາຈາກແຖນເປັນຜູ້ສ້າງໂລກ,ແຖນເປັນຜູ້ປັ້ນແຕ່ງວັດຖຸສິ່ງຂອງ ແລະນັບທັງມະນຸດ ອີກ ດ້ວຍ. ຢູ່ໃນເທບນິຍາຍ "ການສ້າງໂລກ" ຂອງເຜົ່າມົ້ງໄດ້ເວົ້າວ່າແຖນໄດ້ເອົາດິນມາ ປັ້ນເປັນຄົນ. ການອະທິບາຍແບບນີ້ເກີດຈາກຄວາມຄິດຂອງຊາວບູຮານທີ່ວ່າທຸກສິ່ງທຸກ ຢ່າງເກີດຈາກດິນ.ມະນຸດກໍແມ່ນວັດຖຸຊະນິດໜຶ່ງ, ດັ່ງນັ້ນ ມະນຸດກໍເກີດມາຈາກດິນເຊິ່ງ ແມ່ນວັດຖຸທີ່ເປັນບ່ອນເພິ່ງພາອາໄສຂອງມະນຸດ ແລະລ້ຽງມະນຸດ; ແມ່ນແມ່ກຳເນີດຂອງ ສັດສິ່ງ ແລະວັດຖຸອື່ນໆອີກຫຼາຍຢ່າງ. ດັ່ງນັ້ນ ຊາວບູຮານຈຶ່ງຖືວ່າດິນເປັນສິ່ງສັກສິດ ອັນ ໜຶ່ງ.

ນອກຈາກການອະທິບາຍກົກເຄົ້າການກຳເນີດຂອງມະນຸດແລ້ວ, ເທບນິຍາຍ ຂອງລາວເຮົາຍັງອະທິບາຍກົກເຄົ້າການກຳເນີດຂອງຊາດຕົນເອງວ່າ ທຸກຊົນເຜົ່າທີ່ຮ່ວມ ຢູ່ ໃນວົງສາຄະນາຍາດຊາດລາວເຮົານີ້ລ້ວນແຕ່ເກີດມາຈາກນ້ຳເຕົ້າປຸງໜ່ວຍດຽວກັນເຊັ່ນ ເທບນິຍາຍ "ໝາກນ້ຳເຕົ້າປຸງ" ຂອງຊົນເຜົ່າລາວ-ໄຕ, "ນ້ຳຖ້ວມໂລກ" ຂອງເຜົ່າກຶມມຸ "ກົກເຄົ້າການກຳເນີດຂອງຊົນເຜົ່າລະແວ" ແລະອື່ນໆ.

ລະບົບເທບນິຍາຍນ້ຳເຕົ້າປຸງແມ່ນບົດເລື່ອງທີ່ເກົ່າແກ່ທີ່ສຸດຂອງລາວເຮົາ, ມັນແຜ່ ຂະຫຍາຍຢ່າງກ້ວາງຂວາງໃນໝູ່ປະຊາຊົນບັນດາເຜົ່າແຕ່ເໜືອຕະຫຼອດໃຕ້. ແຕ່ວ່າການ ເລົ່າເທບນິຍາຍໝາກນ້ຳເຕົ້າປຸງຂອງປະຊາຊົນບັນດາເຜົ່າຢູ່ທ້ອງຖິ່ນຕ່າງໆນັ້ນ ມີຫຼາຍບັ້ນ ຫຼາຍຕອນ ແລະມີຫຼາຍສະບັບຕ່າງກັນ, ອັນເປັນການສະແດງໃຫ້ເຫັນວ່າບົດເລື່ອງເລົ່ານັ້ນ ເກີດຂຶ້ນໃນໄລຍະເວລາແຕກຕ່າງກັນ, ທັງສ່ອງແສງເຖິງຄວາມຮັບຮູ້, ສ່ອງແສງສັງຄົມ ແລະຈິດສະຫງວນຄວາມຂອງຄົນລາວໃນຍຸກສະໄໝປະຫວັດສາດຕ່າງກັນ.

ບົດເທບນິຍາຍນ້ຳເຕົ້າປຸງສ່ວນຫຼາຍໄດ້ອະທິບາຍເປັນເອກະພາບກັນວ່າທຸກຊົນຊາດ ຊົນເຜົ່າລ້ວນແຕ່ເກີດມາຈາກນ້ຳເຕົ້າປຸງໜ່ວຍດຽວ. ຄວາມຄິດ ແລະວິທີອະທິບາຍແບບນີ້ ເກີດມາຈາກຈິດສຳນຶກ ແລະການຄຳນຶງແບບງ່າຍດາຍຂອງຄົນສະໄໝກ່ອນກ່ຽວກັບສາຍ ພົວພັນແບບພິເສດ ແລະມີຈິງລະຫວ່າງຄົນກັບໝາກນ້ຳເຕົ້າ. ຄວາມຄຶດທີ່ວ່າຄົນເຮົາເກີດ ມາຈາກໝາກໄມ້ນັ້ນ ແມ່ນໝາກຜົນຂອງຄວາມຮັບຮູ້ຂອງຄົນສະໄໝກ່ອນ. ຄວາມຄຶດ ແບບນີ້ບໍ່ສະເພາະແຕ່ມີຢູ່ໃນປະຊາຊົນລາວເຮົາເທົ່ານັ້ນ, ຫາກຍັງເຄີຍມີ ແລະເຄີຍແຜ່ຂະ ຫຍາຍຢ່າງກ້ວາງຂວາງຢູ່ໃນມວນຊົນຫຼາຍຊາດ, ຫຼາຍເຜົ່າຢູ່ຫຼາຍແຫ່ງຫົນໃນໂລກເຮົານີ້. ສະໄໝກ່ອນຊາວບູຮານໄດ້ດຳລົງຊີວິດຕິດພັນກັບທຳມະຊາດມາເປັນເວລາດົນນານທີ່ສຸດ, ດັ່ງນັ້ນ, ເຂົາເຈົ້າຈຶ່ງມີການສັງເກດ ແລະຄຶດຄຳນຶງ, ສົມທຽບລະຫວ່າງຊີວິດຂອງພືດພັນ

ໃນທຳມະຊາດ, ອັນໜາໃຫ້ເກີດມີຄວາມຄິດຄຳນຶງເຖິງການກຳເນີດແບບມະຫັດສະຈັນ. ຄວາມ ຄິດແບບນີ້ເກີດມີຂຶ້ນ ຍ້ອນວ່າ ຄົນບູຮານບໍ່ທັນເຂົ້າໃຈກ່ຽວກັບສາເຫດການກຳເນີດ ຂອງເຂົາເອງ, ອັນພາໃຫ້ເຂົາເຈົ້າຄິດສົມທຽບຢ່າງງ່າຍດາຍລະຫ່ວາງການກຳເນີດ, ການ ຂະຫຍາຍຕົວຂອງມະນຸດກັບການເປັນດອກອອກໝາກຂອງພືດພັນຕ່າງໆ. ດັ່ງນັ້ນຄົນສະ ໄໝກ່ອນຈຶ່ງເຄີຍຖືວ່າໝາກໄມ້ເປັນສັນຍະລັກແຫ່ງການອອກແມ່ແພ່ລູກມີໝາກໄມ້ຫຼາຍຊະ ນິດກາຍເປັນຮູບພາບຂອງແນວຄິດດັ່ງກ່າວ, ໂດຍສະເພາະແມ່ນປະເພດໝາກໄມ້ທີ່ມີແກ່ນ ຫຼາຍເຊັ່ນ ໝາກຫຸ່ງ, ໝາກ, ສາລີ ແລະໝາກນ້ຳເຕົ້າເປັນຕົ້ນ.

ໃນເທບນິຍາຍໝາກນ້ຳເຕົ້າປຸງມີບາງຕອນຂຽນວ່າຢູ່ໃນໝາກນ້ຳເຕົ້າໜ່ວຍນັ້ນໄດ້ມີ ສຽງປາກເວົ້າ, ສຽງຮ້ອງໂຮວົນແຊວຂອງຄົນ. ເມື່ອເອົາເຫຼັກມາຊີ ແລະເອົາສີ່ວມາເຈາະ ເປັນຮູແລ້ວເລີຍມີແມ່ຍິງ, ຜູ້ຊາຍລຸລັ່ງທັ່ງເຫກັນອອກມາຢ່າງຫຼວງຫຼາຍເປັນເວລາສາມວັນ ສາມຄືນຈຶ່ງຄ່ອຍໝົດ... ການເລົ່າແບບນີ້ສະແດງຢ່າງຈະແຈ້ງທີ່ສຸດເຖິງຄວາມຄິດສຳນຶກ ກ່ຽວກັບການກຳເນີດແບບເນື່ອງນິດລຽນຕິດ ແລະໝາກມາຍກາຍກອງຂອງມະນຸດ. ຮູບ ພາບໝາກນ້ຳເຕົ້າປຸງເຊິ່ງເປັນສັນຍະລັກ ເຖິງກິກເຄົ້າການກຳເນີດຂອງມະນຸດນັ້ນໄດ້ຮັບ ການປັ້ນແຕ່ງຂຶ້ນໂດຍຜ່ານຄວາມຮັບຮູ້ ແລະການສົມທຽບຂອງຄົນສະໄໝກ່ອນກ່ຽວກັບສິ່ງ ທີ່ຄ້າຍຄືກັນລະຫວ່າງການກຳເນີດ ແລະຂະຫຍາຍຕົວຂອງໝາກນ້ຳເຕົ້າປຸງກັບການປະສູດ ລູກຂອງຜູ້ເປັນແມ່. ພ້ອມກັນນັ້ນໝາກນ້ຳເຕົ້າເປັນພືດພັນທັນຍາຫານຊະນິດໜຶ່ງທີ່ມີຄຸນຄ່າ ສຳລັບຊີວິດການກິນຢູ່ຂອງຄົນສະໄໝກ່ອນ, ສະນັ້ນ, ເຂົາເຈົ້າອາດຝາກຝັງແນວຄິດຈິດໃຈ ຄວາມເຊື່ອໝັ້ນ ແລະຄວາມມຸ່ງຫ້ວງທັງໝົດຂອງຕົນໄວ້ກັບໝາກນ້ຳເຕົ້າ. ການອະທິ ບາຍ ວ່າ "ທຸກຄົນລ້ວນແຕ່ເກີດມາຈາກໝາກນ້ຳເຕົ້າປຸງໜ່ວຍດຽວ" ນີ້ຍັງມີເນື້ອໃນປະ ຫວັດ ສາດ ແລະທັງມີເນື້ອໃນດ້ານສັງຄົມຢ່າງຈະແຈ້ງ.

ຄວາມຄິດທີ່ວ່າຄົນມາຈາກໝາກນ້ຳເຕົ້າປຸງແມ່ນແນວຄິດຂອງການກຳເນີດແບບທຳ ມະຊາດ ແລະມະຫັດສະຈັນທັງເປັນຮູບພາບທີ່ສວຍງາມ ແລະມີຊີວິດຊີວາທີ່ສຸດ. ຄວາມ ຄິດອັນນີ້ເກີດມາຈາກການພົວພັນ ແລະມີການເລືອກເຟັ້ນດ້ານວັດທະນະທຳລະຫວ່າງຊົນ ເຜົ່າຂອງລາວເຮົາເຊິ່ງຍາມໃດກໍມີຄວາມປາຖະໜາຢາກໃຫ້ມີການພົວພັນຮັກແພງເຊິ່ງ ກັນແລະກັນບົນຈິດໃຈອ້າຍນ້ອງຮ່ວມຊາດດຽວກັນ. ບັນດາຊົນເຜົ່າຂອງລາວຍັງໄດ້ຝາກ ຝັງນ້ຳໃຈຮັກຊາດຮັກບ້ານເກີດເມືອງນອນຂອງຕົນໄວ້ ກັບຮູບພາບໝາກນ້ຳເຕົ້າປຸງໜ່ວຍ ດຽວກັນນັ້ນ.

3.3. ເນື້ອໃນທີ່ເວົ້າເຖິງປາກົດການ ແລະ ການຕໍ່ສູ້ຕ້ານກັບໄພທຳມະຊາດ

ຄຽງຄູ່ກັບການອະທິບາຍກິກເຄົ້າການກຳເນີດຂອງ, ຂອງມະນຸດແລ້ວຊາວບູຮານຍັງ ໄດ້ອະທິບາຍປາກົດການຕ່າງໆຂອງທຳມະຊາດອີກ, ໂດຍສະເພາະແມ່ນສິ່ງທີ່ມີຄວາມໝາຍ

ອັນໃຫຍ່ຫຼວງຕໍ່ການອອກແຮງງານຜະລິດຜົນ ແລະການດຳລົງຊີວິດຂອງເຂົາເຈົ້າອີກເຊັ່ນ ວ່າ ຕາເວັນ, ດວງເດືອນ, ໄພແຫ້ງແລ້ງ, ຝົນຕົກນ້ຳນອງຕ່າງໆ. ຢູ່ໃນໂລກຈັກກະວານ ຕາເວັນ ແລະດວງເດືອນບໍ່ສະເພາະແຕ່ມີຜົນສະທ້ອນອັນໃຫຍ່ຫຼວງຕໍ່ການອອກແຮງງານ ຜະລິດຜົນ ແລະການດຳລົງຊີວິດຂອງຄົນເຮົາເທົ່ານັ້ນມັນຍັງແມ່ນສິ່ງທີ່ຄົນເຮົາສັງເກດ ໄດ້ ງ່າຍ. ດ້ວຍເຫດນັ້ນ, ຊາວບູຮານຈຶ່ງເຄີຍເຊື່ອຖືວ່າຕາເວັນ ແລະດວງເດືອນກໍຄືແຜ່ນ ທໍລະນີເປັນສິ່ງສັກສິດ, ການເຊື່ອຖືອັນນີ້ ຍັງມີຮ່ອງຮອຍເຫຼືອຄ້າງຢູ່ນຳປະຊາຊົນບາງຊົນ ເຜົ່າຂອງລາວເຮົາຕໍ່ຈົນມາເຖິງທຸກວັນນີ້.

ປະຫວັດສາດແຫ່ງການຂະຫຍາຍຕົວຂອງສັງຄົມມະນຸດແມ່ນປະຫວັດສາດແຫ່ງການ ຕໍ່ສູ້ອັນທຸກຍາກລຳບາກ ແລະຍາວນານຕ້ານໄພທຳມະຊາດ, ຕ້ານການກົດຂີ່ຂອງຊົນຊັ້ນ ປົກຄອງຢ່າງບໍ່ຢຸດຢັ້ງຂອງມະນຸດ, ໂລກທຳມະຊາດມີຫລາຍສິ່ງທີ່ໜ້າຢ້ານກົວ ແລະມະຫັດ ສະຈັນເຊິ່ງເຄີຍນາບຂູ່ໂດຍກົງເຖິງຊີວິດອິນຊີ ແລະເຄີຍຄອບຄອງ ແລະໜີບເຕັ່ງຊີວິດ ການເປັນຢູ່ຂອງຊາວບູຮານ. ຍ້ອນແນວນັ້ນມະນຸດເຮົາໄດ້ດຳເນີນການຕໍ່ສູ້ຕ້ານໄພທຳມະ ຊາດຢ່າງຫຍຸ້ງຍາກລຳບາກ ແລະຍືດເຍື້ອຍາວນານດ້ວຍຄວາມເດັດດ່ຽວໜຽວແໜ້ນ, ອົງ ອາດກ້າຫານ, ເສຍສະຫຼະຢ່າງສູງສົ່ງ ແລະມີຄວາມເຊື່ອໝັ້ນຕໍ່ກຳລັງວັງຊາອັນເຂັ້ມແຂງແຮງ ກ້າຂອງຕົນຢູ່ສະເໝີ. (ນັ້ນແມ່ນຮູບພາບຄວາມສຳນຶກຂອງຊາຍສະກັນຜູ້ມີກຳລັງວັງຊາໃນ ລື່ອງ "ການສ້າງໂລກ" ທີ່ໄດ້ຈັບພ້າແບກຂວານເຂົ້າປ່າຕັດໄມ້ມາເຮັດທະນູແລ້ວຍິງໃສ່ຕາ ເວັນ ແລະເດືອນເພື່ອກູ້ເອົາຊີວິດມະນຸດ, ສັດສາວາສິ່ງ ແລະພືດພັນຕ່າງໆໃຫ້ພົ້ນຈາກ ຄວາມຕາຍຍ້ອນໄພແຫ້ງແລ້ງ.) ນັ້ນແມ່ນຮູບພາບຕົວລະຄອນປູ່ເຍີ່ຍ່າເຍີໃນລະບົບເທບນິ ຍາຍ (ປູ່ເຍີ່ຍ່າເຍີ) ຂອງລາວເຮົາອັນເປັນຮູບພາບທີ່ສວຍງາມ ແລະເດັ່ນທີ່ສຸດໃນການຕໍ່ ສູ້ຕ້ານກັບໄພທຳມະຊາດ, ອອກແຮງງານດັດສ້າງທຳມະຊາດ ແລະສ້າງສາບ້ານເມືອງໃນ ສະໄໝກ່ອນປະຊາຊົນບັນດາເຜົ່າໄດ້ຖືເອົາຕົວລະຄອນປູ່ເຍີ່ຍ່າເຍີແມ່ນບັນພະບຸລຸດ, ເປັນປູ່ ຍ່າຕາຍາຍຂອງຕົນເນື່ອງຈາກເຂົາເຈົ້າໄດ້ມີຄຸນງາມຄວາມດີຫຼາຍສຸດຕໍ່ຊາວບ້ານຊາວ ເມືອງ. ດັ່ງນັ້ນ, ຮູບພາບຕົວລະຄອນປູ່ເຍີ່ຍ່າເຍີຈຶ່ງບໍ່ສະເພາະແຕ່ເປັນສິ່ງສັກສິທາງຄວາມ ເຊື່ອຖືໃນຮີດຄອງປະເພນີລາວເທົ່ານັ້ນ, ຫາກຍັງມີຊີວິດຊີວາໃນຄະຕິຈິດປະຈຳວັນຂອງ ປະຊາຊົນລາວບັນດາເຜົ່າຕະຫຼອດມາ.

4. ສິລະປະຂອງເທບນິຍາຍ

ເທບນິຍາຍ ແມ່ນໝາກຜົນໃນການປະດິດແຕ່ງຂອງຊາວບູຮານ ເຊິ່ງສ່ອງແສງເຖິງ ການດຳລົງຊີວິດຂອງຄົນສະໄໝກ່ອນ, ໃນຍຸກສະໄໝປັດຈຸບັນເທບນິຍາຍບໍ່ອາດກຳເນີດ ເກີດຂຶ້ນໄດ້ອີກແລ້ວ. ຢູ່ໃນເທບນິຍາຍມີສິ່ງທີ່ໃກ້ຊິດຕິດແທດກັບແນວຄິດຈິດໃຈຂອງຄົນ ເຮົາໃນທຸກມື້ນີ້ຄືນ້ຳໃຈຕໍ່ສູ້ອັນທໍລະຫົດອົດທົນ ແລະອົງອາດກ້າຫານຂອງບັນພະບຸລຸດເຮົາ

ພ້ອມທັງຄວາມມຸ່ງມາດປາຖະໜາອັນແຮງກ້າທີ່ສູ້ຊົນເພື່ອເອົາຊະນະສັດຕູ ຫຼືສິ່ງທີ່ຊົ່ວຮ້າຍ ມາຕັ້ງແຕ່ບູຮານນະການ.

ເທບນິຍາຍແມ່ນປະເພດເລື່ອງເລົ່າທີ່ຈັບອົກຈັບໃຈຂອງຄົນເຮົາຢູ່ໃນຍຸກສະໄໝ. ອັນ ເນື່ອງມາຈາກຄຸນຄ່າດ້ານສິລະປະອັນສູງສົ່ງ ເຊິ່ງສະແດງອອກດ້ານເນື້ອໃນຄວາມໝາຍທີ່ ມີລັກສະນະສັດຈະທັດ, ຮູບການປະດິດແຕ່ງສິລະປະທີ່ມີລັກສະນະເຫຼືອເຊື່ອ, ເພີ່ນຈິດ ແລະມະຫັດສະຈັນ. ເທບນິຍາຍໄດ້ສ່ອງແສງໃຫ້ເຫັນມານະຈິດ ແລະບັນຍາກາດການ ເຄື່ອນໄຫວດ້ວຍຮູບການສິລະປະແບບພິເສດ, ດູດດື່ມ ແລະຈັບອົກຈັບໃຈຫຼາຍທີ່ສຸດເຊິ່ງ ຄົນເຮົາໃນສະໄໝນີ້ບໍ່ອາດສາມາດລອກແບບໄດ້.

ຈິດສຳນຶກຂອງຊາວບູຮານເຖິງແມ່ນວ່າຍັງອ່ອນນ້ອຍແຕ່ອຸດົມສົມບູນ ແລະມີຊີວິດຊີ ວາທີ່ສຸດ. ເຂົາເຈົ້າສາມາດປະດິດແຕ່ງຮູບພາບທີ່ສວຍງາມ ແລະມະຫັດສະຈັນຂຶ້ນມາໄດ້, ຮູບພາບນ້ຳເຕົ້າປຸງ, ເຄື່ອເຂົາກາດໃນເທບນິຍາຍຂອງລາວເຮົາລ້ວນແຕ່ໄດ້ສ້າງຂຶ້ນດ້ວຍ ຈິດສຳນຶກອັນອຸດົມສົມບູນ ແລະມີລັກສະນະສັງລວມບົນພື້ນຖານການສັງເກດ, ຊອກຮູ້ແລະ ອະທິບາຍປາກົດການທຳມະຊາດຂອງຊາວບູຮານ. ຮູບພາບເຄື່ອເຂົາກາດດົ້ກໜາແພ່ລາມ ປົກຫຸ້ມເມືອງລຸ່ມ ຈົນແດດບໍ່ເຫັນ ຕາເວັນບໍ່ສ່ອງແມ່ນຮູບພາບອັນເປັນສັນຍະລັກໃຫ້ແກ່ປ່າ ດົງພົງໄພອັນຕຶບໜາ ໃນເມືອງລາວສະໄໝກ່ອນເຊິ່ງເປັນໄພທຳມະຊາດອັນໜຶ່ງທີ່ສົ່ງຜົນ ທ້ອນເຖິງກ່າທຳມາຫາກິນຂອງຊາວບູຮານ. ໃນເງື່ອນໄຂປະກອບການຜະລິດຍັງຫຼ້າຫຼັງ ຊາວບູຮານບໍ່ທັນມີຄວາມສາມາດຜາບແພ້ປາກົດການເຫຼົ່ານັ້ນ, ສະນັ້ນ, ຈຶ່ງສຳນຶກ ແລະ ປັ້ນແຕ່ງຮູບພາບຕົວລະຄອນປູ່ເຍີ່ຍ່າເຍີ້ຂຶ້ນມາເປັນບັນພະບຸລຸດຜູ້ເກ່ງກ້າສາມາດ, ຂາມອາ ສາໄປຕັດເຄື່ອເຂົາກາດໃຫ້ຈົນໄດ້, ໜາກນ້ຳ ເຕົ້າທີ່ເ ປັນໜາກໄມ້ທຳມະດາກໍໄດ້ຖືກສຳນຶກ ແລະຍົກຂຶ້ນມາເປັນຮູບພາບອັນເປັນສັນຍະລັກເຖິງຜູ້ເປັນແມ່ຂອງມວນມະນຸດເວົ້າລວມເວົ້າ ສະເພາະຂອງຊາດລາວ. ຈິດສຳນຶກແມ່ນຮູບພາບສິລະປະແລະກໍແມ່ນທັງເນື້ອໃນຂອງເທບ ນິຍາຍ, ທັງແມ່ນປັດໄຈຕັດສິນການກຳເນີດ ແລະຂະຫຍາຍຕົວຂອງເທບນິຍາຍອີກດ້ວຍ

ຄຳຖາມຄົ້ນຄວ້າ

1. ເທບນິຍາຍມີຄວາມໝາຍແນວໃດ ?
2. ເທບນິຍາຍກຳເນີດ ແລະຂະຫຍາຍຕົວຄືແນວໃດ ?
3. ເນື້ອໃນຂອງເທບນິຍາຍເວົ້າເຖິງບັນຫາໃດແດ່? ແຕ່ລະບັນຫາຫານັ້ນເປັນແນວໃດ?
4. ສິລະປະຂອງເທບນິຍາຍເປັນແນວໃດ ?
5. ຈົ່ງອ່ານ, ເຮັດໂຄງຮ່າງ ແລະຂຽນບົດວິເຄາະປູ່ເຍີ ?

6. ຈົ່ງເກັບທ້ອນເລື່ອງຕ່າງໆທີ່ເປັນບົດເທບນິຍາຍຂອງລາວຕາມການເລົ່າຂອງຜູ້ເຖົ້າຜູ້ແກ່ ຫຼືເອກະສານຕ່າງໆຕາມເງື່ອນໄຂ.

ເລື່ອງ: ປູ່ເຍີ

ມື້ໜຶ່ງຍ່າເຍີກຳລັງນັ່ງແນມຂຶ້ນເມືອຫົວພູແດນໄກ. ໃນຂະນະທີ່ລາວນັ່ງຢູ່ຫັ້ນ, ມີກາລະສາດຜູ້ເປັນລູກແລ່ນເຂົ້າມາທາງຫຼັງແລ້ວຖາມວ່າ:

ແມ່ເຮີຍ! ແມ່, ພໍ່ລູກເດ! ດຽວນີ້, ພໍ່ຂອງລູກຢູ່ໃສ, ເປັນຫຍັງໃຜກໍເວົ້າວ່າບັກລູກບໍ່ມີພໍ່ ແມ່ເວົ້າໃຫ້ລູກຟັງແດ່!

ເມື່ອໄດ້ຍິນແນວນັ້ນ, ຍ່າເຍີຈ້ອງເບິ່ງໜ້າລູກດ້ວຍຄວາມເປັນຫ່ວງເປັນໃຍແລ້ວແກວ່ງຫົວ, ດ້ວຍຄວາມເຈັບແຄ້ນແໜ້ນໃຈ ແລະແມ່ຕອບວ່າ:

ພຸ້ນ! ລູກເອີ່ຍ! ພໍ່ຂອງລູກຢູ່ພຸ້ນ...

ແມ່ທັງເວົ້າ ທັງຊີ້ມືໄປທາງຫົວພູແດນໄກທີ່ຕິດກັບຕີນຟ້າກ່ອງ.

ແມ່! ເປັນແນວໃດ, ພໍ່ຂອງລູກຢູ່ຫົວພູນັ້ນບໍ?

ເມື່ອໄດ້ຍິນລູກຖາມຈັ່ງຊັ້ນຍ່າເຍີໄດ້ເລົ່າເລື່ອງທີ່ຝັງໄວ້ໃນໃຈຂອງຕົນໃຫ້ລູກຟັງດ້ວຍຄວາມໂສກເສົ້າວ່າ: "ພໍ່ຂອງລູກຊື່ວ່າປູ່ເຍີ" ແມ່ນີ້ກໍບໍ່ແມ່ນຄົນທຳມະດາ. ພໍ່ແມ່ນີ້ລ້ວນແຕ່ແມ່ນເຊື້ອພະອິນ, ພະພິມທາງເມືອງຟ້າໄດ້ແຕ່ງລົງມາສະເຫວີຍເມືອງລຸ່ມເພື່ອຄຸ້ມຄອງມະນຸດຢູ່ໃນໂລກນີ້. ຕັ້ງແຕ່ຄາວດຶກດຳບັນເຊິ່ງຫ່າງໄກພວກເຮົາເປັນເວລາເຫີງນານແລ້ວມະນຸດໄດ້ດຳລົງຊີວິດຢູ່ໃນຄວາມທຸກຍາກລຳບາກ, ອົດສະບັ້ນສັ່ນໜາວຢູ່ໃຕ້ຮົ່ມຟ້າອັນມືດມົນ, ລົມມີດຕັດມີດແຖພັດເປົ່າຈົນກະທັ່ງເຮັດໃຫ້ເນື້ອກາຍເໝືອນຈະຂາດເປັນບັ້ນ. ມວນມະນຸດໃນເປິງນັ້ນເປືອຍເອີກ, ເປືອຍອ່າງເຕັມແຕ່ຂົນບໍ່ຮູ້ຈັກເຮັດແນວໃດ, ມີແຕ່ນອນດິນ, ກິນຫຍ້າພາຊີວິດຂອງຕົນດຳລົງໄປຄືເຊັ່ນນັ້ນ. ເມື່ອເຫັນຕາເວັນພຸ່ງຂຶ້ນ ແລະແສງແດດສ່ອງລົງມາຈຶ່ງເຮັດໃຫ້ຜູ້ຄົນ, ຕົ້ນໄມ້ໃບຫຍ້າສັດສາວາສິ່ງທັ້ງຫຼາຍຄ່ອຍໆລຸກຕື່ນຂຶ້ນມາ. ແຕ່ເມື່ອຕາເວັນສູນໄປແລ້ວໜ້າດິນກໍເຕັມໄປດ້ວຍຄວາມມືດ ແລະເຢັນກະດ້າງ, ມວນມະນຸດພາກັນສະບັ້ນສັ່ນໜາວ, ຕົ້ນໄມ້ເປືອຍໂຕໂດ່ນໂດ່, ຈຳພວກສັດສາວາສິ່ງທັ້ງຫຼາຍກໍຈົບຫາຍມຸດມອດຕາຍຍ້ອນຄວາມໜາວ. ມວນມະນຸດພາກັນໄປເປັນໝູ່ເພື່ອນຳແສງຕາເວັນ, ເຂົານຳໄປ...ນຳໄປ! ແຕ່ບໍ່ທົນຕໍ່ຄວາມອຶດອຍ, ບໍ່ທົນຕໍ່ຄວາມຂາດເຂີນ ແລະຄວາມຫິວໂຫຍ, ເຂົາກໍລົ້ມຫາຍຕາຍເສຍເປັນຈຳນວນຫຼວງຫຼາຍແຕ່ກໍຍັງໄປບໍ່ເຖິງຕາເວັນ. ເມື່ອເຫັນແນວນັ້ນພໍ່ຂອງລູກຍາມໃດກໍເປັນຫ່ວງ ຄົ້ນຄິດຊອກຫາທິດທາງແກ້ໄຂໃຫ້ມວນມະນຸດພົ້ນຈາກຄວາມທຸກຍາກລຳບາກ, ພໍ່ຂອງລູກໄດ້ອອກເດີນທາງໄປເຖິງຫົວພູແດນໄກທີ່ມີສາຍນ້ຳໂຕນຕາດສຽງດັງສະໜັ່ນ. ອາຍນ້ຳແຜ່ລະອອງຂຶ້ນມາມົວໆເໝືອນດັ່ງກຸ່ມເມກທີ່ປົກຫຸ້ມຈອມພູ. ອາ

ກາດໜາອຶມເຂົ້າຕົນຕົວຂອງຄົນເຮົາຈົນປວດກະດ້ຳງທົ່ວຊີ້ນ,ທົ່ວໜັງເໝືອນດັ່ງມີປາຍເຂັມ ແລະສອນສຸບ. ຢູ່ໃນກາງຕາດທີ່ເຕັມໄປດ້ວຍຮົ່ມເມກໝອກນັ້ນມີຕົ້ນໄມ້ມະນີໂຄດເກີດຂຶ້ນ, ພໍ່ຂອງເຈົ້າໄດ້ເກັບເອົາໝາກໄມ້ນັ້ນມາກິນ. ຍ້ອນໄດ້ກິນໝາກໄມ້ມະນີໂຄດນີ້ພໍ່ຂອງລູກຈຶ່ງ ຮູ້ສຶກວ່າຮ່າງກາຍມີກຳລັງອັນແຮງກ້າ. ແຕ່ນັ້ນມາພໍ່ຂອງລູກກໍໄດ້ໄປທົ່ວທຸກແຫ່ງຫົນ ແລະ ເອົາເຫື່ອແຮງຂອງຕົນຊ່ອຍມວນມະນຸດຕ້ານກັບຄວາມສະບັ້ນສັ່ນໜາວ, ຕ້ານຜີສາງນາງ ຮ້າຍແຕ່ມະນຸດກໍຍັງມີຄວາມທຸກຍາກລຳບາກ; ດັ່ງນັ້ນ, ພໍ່ຂອງລູກຈຶ່ງມີຄວາມໂສກເສົ້າ ໜ່ວງເໜົ່າ ແລະຕັດສິນໃຈຫາວິທີເພື່ອຊ່ອຍມວນມະນຸດໃຫ້ມີຄວາມສຸກສະບາຍ. ນັບແຕ່ ມື້ມາຢູ່ເມືອງລຸ່ມນີ້ ເຖິງວ່າພະອິນພະພົມອອກຄຳສັ່ງຫ້າມຂຶ້ນເມືອງຟ້າກໍຕາມ, ພໍ່ຂອງລູກກໍ ນຳຕົນຂຶ້ນເມືອດ້ວຍການ mauhiem ສຽງໄຟ, ໄດ້ bay ເໜ້ຳະຂຶ້ນໄປສູ່ດວງຕາເວັນເຊິ່ງເປັນເຈົ້າຢູ່ສູງທີ່ມີ ໄຽ່ bong hàng ໄຟອັນມະຫາສານ, ເວລາໃດກໍຮຸ່ງແຈ້ງສະໝີ. ພໍ່ຂອງລູກໄດ້ລັກເອົາໄຟນັ້ນກັບມາຍັດໃສ່ ໃຈໂລກ. ກຸ່ມໄຟເລີຍໄໝ້ລາມໄປທົ່ວໃຈໂລກ ແລະໄໝ້ລົງສູ່ຂອບແຈອັນເລິກລັບ, ເຮັດໃຫ້ ໂລກຂອງເຮົາມີຄວາມອົບອຸ່ນຂຶ້ນ, ເຮັດໃຫ້ສັດສາອາສິ່ງທັ້ງຫຼາຍແຕກແມ່ແພ່ລູກຢ່າງໄວວາ. ນັບແຕ່ມື້ມີໄຟ, ຊີວິດຂອງມວນມະນຸດໄດ້ມີການປ່ຽນແປງໄປຫຼາຍ. ຢູ່ໃນທົ່ວທຸກແຫ່ງຫົນ ສຽງຮ້ອງລຳທຳເພງໄດ້ຟົດຟື້ນໄປທົ່ວໂລກ ເພື່ອສັນລະເສີນຜົນງານ ອັນສະຫງ່າລາສີຂອງ ພໍ່ເຈົ້າ.

ມີມື້ໜຶ່ງ, ພະອິນຢູ່ເມືອງຟ້າໄດ້ສ່ອງສາຍຕາທິບຜ່ານກຸ່ມເມກລົງມາ, ເຫັນບັນດາກົ່ງ ກ້ານດວງດອກຂອງພືກສາສວດທັ້ງຫຼາຍປົ່ງຂຶ້ນທົ່ວປ່າດົງ. ມວນມະນຸດກໍພາກັນເຮັດໄຮ່ ທຳນາບາງພ່ອງກໍເຮັດໄຮ່ເຮັດສວນ ແລະບູລະນະສ້າງສາຫຼາຍເໝືອນດັ່ງຝຸງມົດຝຸງປອກ. ດັ່ງນັ້ນພະອິນຈຶ່ງຮຽກເອົາພໍ່ເຈົ້າໄປໃສ່ໂທດ, ພໍ່ຂອງເຈົ້າຖືກພະອິນຍັດໄຟເຂົ້າທ້ອງ, ໄຟໄໝ້ ພໍ່ເຈົ້າເສຍໄປ. ຄາບ (ສຸກກສິບ) ຂອງພໍ່ເຈົ້າໄດ້ກາຍເປັນພູໄຟມະໄລກັນ ໃນໃຈຂອງພູໄຟ ມະໄລກັນນັ້ນເວລາໃດກໍໄໝ້ເໝືອນດັ່ງວ່າໄຟນັ້ນໄໝ້ລາມດວງໃຈຂອງພໍ່ເຈົ້າເທົ່າທຸກວັນນີ້. ບາງຄັ້ງພູໜ່ວຍນັ້ນໄດ້ພົ່ນໄຟອອກມາບໍ່ຈັກວ່າເທົ່າໃດມື້ເທົ່າໃດຄືນຈຶ່ງເຊົາ.

ເຖິງວ່າພໍ່ຂອງເຈົ້າໄດ້ເສຍໄປແລ້ວກໍຕາມ, ເພິ່ນກໍຍັງເປັນຫ່ວງນຳມວນມະນຸດທີ່ຖືກ ດັບສູນຍ້ອນຄວາມສະບັ້ນສັ່ນໜາວ, ຜູ້ໃດກໍຄິດຮອດຮ້ອງໄຫ້ໄຕ່ຕາມເຖິງບຸນຄຸນພໍ່ເຈົ້າ, ແຕ່ເຮັດແນວໃດກໍເອົາຄືນບໍ່ໄດ້ເພາະຢ້ານລິ ฤ ເດດຂອງພະອິນຢູ່ເມືອງຟ້າ. ນັບແຕ່ມື້ພໍ່ເຈົ້າ ຕາຍໄປ, ແມ່ໄດ້ນຳເຈົ້າເຂົ້າມາລັກລີ້ຢູ່ໃນປ່າເພື່ອຫຼີກເວັ້ນຈາກການປອງຮ້າຍຂອງພະອິນ. ດຽວ ນີ້, ລູກໃຫຍ່ສູງຈູງໜ້າມາແລ້ວ, ລູກຕ້ອງກະທຳຕາມແບບຢ່າງຂອງພໍ່ເຈົ້າຄື ຊ່ວຍເຫຼືອມວນ ມະນຸດໃຫ້ພົ້ນຈາກຄວາມທຸກຍາກລຳບາກເໝືອນກັນກັບພໍ່ເຈົ້າ.

ເລື່ອງ: ໝາກນ້ຳເຕົ້າປຸງ

ເຖົ້າແກ່ບູຮານເຄີຍຖືກັນວ່າ ຄົນລາວເປັນລູກເຕົ້າເຜົ່າແຖນຊຶ່ງເກີດມາຈາກໝາກນ້ຳເຕົ້າໃຫຍ່ໜ່ວຍໜຶ່ງເອີ້ນວ່າ "ໝາກນ້ຳເຕົ້າປຸງ" ໂດຍມີນິທານເກົ່າເລົ່າສືບກັນມາວ່າ: ໃນກາລະເມື່ອກ່ອນພຸ້ນໂລກເຮົານີ້ຍັງເປັນດິນເປັນຫຍ້າ, ເປັນຟ້າເປັນແຖນ, ແຖນຢູ່ເມືອງບົນຄົນຢູ່ເມືອງລຸ່ມ. ລະຫວ່າງຄົນ ແລະແຖນເຄີຍໄປມາຫາສູ່ກັນຢູ່ບໍ່ຂາດ, ໂດຍອາໄສເຄື່ອເຂົາກາດພາດແຕ່ເມືອງລຸ່ມກ່າຍຂຶ້ນເມືອຄຸງເມືອງແຖນອັນມີພະຍາແຖນຫຼວງເປັນເຈົ້າໃຫຍ່ ມີອຳນາດເໜືອຄົນ ແລະແຖນທັ້ງຫຼາຍ. ເມືອງລຸ່ມຂຶ້ນກັບເມືອງແຖນໂດຍແມ່ນພະຍາແຖນລົງມາປົກຄອງ ແລະນຳພາສ້າງສາທຳມາຫາກິນ.

ປາງນັ້ນຍັງມີຂຸນໃຫຍ່ທັ້ງສາມທີ່ພະຍາແຖນໄດ້ສົ່ງລົງມາສ້າງສາເມືອງລຸ່ມ: ຜູ້ໜຶ່ງຊື່ວ່າປູ່ລາງເຊີງ, ຜູ້ໜຶ່ງຊື່ວ່າຂຸນເດັດ, ອີກຜູ້ໜຶ່ງຊື່ວ່າຂຸນຄານ. ພະຍາແຖນຫຼວງໄດ້ສັ່ງວ່າ ຄົນເມືອງລຸ່ມນີ້ກິນເຂົ້າກໍໃຫ້ບອກໃຫ້ໝາຍ ກິນແລ້ວກິນງ່າຍກໍໃຫ້ບອກແຖນ, ເມື່ອໄດ້ກິນອັນໃດດີ ອັນໃດແຊບກໍໃຫ້ແບ່ງສ່ວນສົ່ງໃຫ້ແຖນເປັນຕົ້ນວ່າໄດ້ກິນຊີ້ນກໍໃຫ້ສົ່ງຂາໄດ້ກິນປາ ກໍໃຫ້ສົ່ງຮ້ອຍແກ່ແຖນ, ພໍ່ແຖນຫຼວງຄອງກິນພາເຂົ້າ, ພໍ່ແຖນເຖົ້າຄອງກິນພາງາຍ, ຄາວ ຕໍ່ມາຄົນທັ້ງຫຼາຍໂລດເລີຍບໍ່ຟັງຄວາມແຖນ ກິນເຂົ້າກໍບໍ່ບອກບໍ່ໝາຍ, ກິນແລ້ວ ກິນງາຍ ກໍບໍ່ບອກບໍ່ຄອບ, ໄດ້ກິນຊີ້ນກໍບໍ່ຍອົມສົ່ງຂາ, ໄດ້ກິນປາກໍບໍ່ຍອມສົ່ງຮ້ອຍ. ເຫດນັ້ນ ພະຍາ ແຖນຈຶ່ງບັນດານໃຫ້ນ້ຳຖ້ວມເມືອງລຸ່ມເຮັດໃຫ້ຄົນທັ້ງຫຼາຍໂລດຕາຍໝົດຍັງເຫຼືອແຕ່ຂຸນທັ້ງ ສາມ, ເຂົາເຈົ້າຈຶ່ງໄດ້ພາກັນເອົາໄມ້ຂ່າແຮ້ງ ແປງເປັນແພ ເອົາແປເຮືອນແປງເປັນໄມ້ພາຍ ແລ້ວພາກັນເຂົ້າໄປຢູ່ໃນແພນັ້ນ. ເມື່ອລົມຕີຟອງເພື່ອນ້ຳຈຶ່ງພັດເອົາແພນັ້ນຂຶ້ນຮອດ ເມືອງແຖນ. ເມື່ອພະຍາແຖນເຫັນຂຸນທັ້ງສາມຈຶ່ງຖາມວ່າ "ສູເຈົ້າຂຶ້ນມາຫາຕູ ເຮັດຫຍັງສູເຈົ້າເຫຼົ່າບໍ່ຟັງຄວາມຕູສູຈັກເປັນສັນໃດກໍຢ່າສູແລ" ເມື່ອນັ້ນຂຸນທັ້ງສາມຈຶ່ງເລົ່າເຫດການ ໃນເມືອງລຸ່ມໃຫ້ພະຍາແຖນຟັງທຸກປະການ. ຫຼັງຈາກນັ້ນ, ພະຍາແຖນຈຶ່ງສັ່ງໃຫ້ຂຸນທັ້ງ ສາມໄປພັກຢູ່ທີ່ດອນກາງບຶງແຫ່ງໜຶ່ງໃນເມືອງແຖນຊື່ວ່າ "ດອນບຶງແຖນລໍ" ເປັນການ ຊົ່ວຄາວ.

ເມື່ອນ້ຳບຶກແຫ້ງລົງແລ້ວຂຸນທັ້ງສາມກໍຄິດຮອດເມືອງລຸ່ມຈຶ່ງພາກັນເຂົ້າຫາພະຍາ ແຖນ ແລະເວົ້າວ່າ: "ຕູຂ້ອຍນີ້ຢູ່ເມືອງບົນບໍ່ແກ່ວນ ແລ່ນຢູ່ເມືອງຟ້າບໍ່ເປັນ ຕູຂ້ອຍຂໍຄືນເມືອ ຢູ່ສ້າງເມືອງລຸ່ມກິນປາ ເມືອເຮັດນາຢູ່ເມືອງລຸ່ມກິນເຂົ້າດັ່ງເກົ່າເຫຼົ່າສອງທີເທີ້ນ", ພໍໄດ້ຟັງ ດັ່ງນັ້ນ ພະຍາແຖນກໍເຫັນດີນຳ ແລະແຕ່ງໃຫ້ຂຸນທັ້ງສາມລົງມາສ້າງເມືອງລຸ່ມ ອີກ. ຄາວນີ້, ພະຍາແຖນໄດ້ມອບຄວາຍຕູ້ໃຫ້ໂຕໜຶ່ງເພື່ອໃຊ້ໃນການເຮັດນາ. ພາຍຫຼັງທີ່ ໄດ້ຮັບຄຳສັ່ງຈາກພະຍາແຖນແລ້ວຂຸນທັ້ງສາມກໍພາກັນອອກຈາກດອນແຖນລໍລົງມາເມືອງ ລຸ່ມ. ເມື່ອລົງມາຮອດແລ້ວກໍພ້ອມກັນຖາງປ່າຫຍ້າມີໜູເຮັດນາໃສ່ດິນແຫ່ງໜຶ່ງທີ່ຕັ້ງຢູ່ລຸ່ມ

ເມືອງແຖນນັ້ນ ໂດຍອາໄສຄວາຍຕູ້ທີ່ພະຍາແຖນມອບໃຫ້. ເຂົາເຈົ້າໄດ້ພາກັນໄຖຊ່າວເປັນ ນາ, ດິນແຫ່ງນັ້ນຈຶ່ງມີຊື່ວ່າ "ນານ້ອຍອ້ອຍໜູ" ສືບມາ.

ນານປະມານສາມປີຄວາຍຕູ້ໂຕນັ້ນເລີຍຕາຍ, ເຂົາເຈົ້າໄດ້ປະຊາກຄວາຍນັ້ນໄວ້ທີນາ ນ້ອຍອ່ອຍໜູ. ຕໍ່ມາໄດ້ມີເຄືອໝາກນ້ຳເຕົ້າປ່ຽອອກຈາກຮູດັ່ງຄວາຍແລ້ວເກີດເປັນໝາກ ໃຫຍ່ໜ່ອຍໜຶ່ງທໍ່ກັບຮີບໃສ່ເຂົ້າຮຽກວ່າ "ໝາກນ້ຳເຕົ້າປຸງ" ຢູ່ພາຍໃນໝາກນ້ຳເຕົ້ານັ້ນຊ້ຳ ພັດມີສຽງຄົນເວົ້າຈາຮ້ອງໂຮດັງກ້ອງເປັນອຶກກະທຶກນຶກນອງ. ຂຸນທັງສາມເຫັນດັ່ງນັ້ນກໍມີ ຄວາມປະຫຼາດ ແລະສົນໃຈເປັນຢ່າງຍິ່ງທັນໃດນັ້ນປູ່ລາງເຊີງຈຶ່ງດັ່ງໄຟຂຶ້ນເຜົາເຫຼັກຊີຈົນ ແດງແລ້ວຊີໝາກນ້ຳເຕົ້າປຸງໜ່ອຍປະຫຼາດນັ້ນທັນທີ, ພໍຊີຊອດແລ້ວກໍມີຄົນບຸບຽດກັນອອກ ມາ, ແຕ່ວ່າອອກມາໄດ້ເທື່ອລະເລັກເທື່ອລະນ້ອຍ, ອອກມາດ້ວຍຄວາມລຳບາກ ແລະຊ້ຳ ນານເນື່ອງຈາກຮູນ້ອຍໂພດ. ເມື່ອເຫັນດັ່ງນັ້ນຂຸນຄານຈຶ່ງເອົາສີ່ວໄປເຈາະຕື່ມແປງຮູນັ້ນໃຫ້ ໃຫຍ່ກວ່າເກົ່າ, ເທື່ອນີ້ຄົນທັງຫຼາຍຈຶ່ງອອກມາສະບາຍ, ຫຼຸຫຼັ່ງທັ່ງເທກັນອອກມາທັ້ງຍິງທັ້ງ ຊາຍພ້ອມດ້ວຍສົມບັດເຂົ້າຂອງເງິນທອງ, ງົວຄວາຍຊ້າງມ້າໝູໝາເປັດໄກ່ເປັນອັນມາກ; ຫຼຸ ຫຼັ່ງອອກມາສາມມື້ສາມຄືນຈຶ່ງໝົດ. ເມື່ອອອກໝົດແລ້ວ ຂຸນແຖນທັງສາມຈຶ່ງຈັດແບ່ງຄົນ ເຫຼົ່ານັ້ນອອກເປັນໝູ່ງຽກຊື່ຕ່າງກັນເພື່ອບໍ່ໃຫ້ສັບສົນ.

ຄົນຈຳພວກທີ່ອອກຈາກຮູຊີນັ້ນແມ່ນລາວເທິງ, ປັນອອກເປັນສອງໝູ່ ໝູ່ໜຶ່ງຮຽກວ່າ "ໄທລົ້ມ" (ຊາວລົ້ມ); ໝູ່ໜຶ່ງຮຽກວ່າ "ທວີ" (ຊາວວີ). ສ່ວນທີ່ອອກຕາມຮູສີ່ວນັ້ນ ເປັນ ລາວລຸ່ມ. ປັນອອກເປັນສາມໝູ່ ໝູ່ໜຶ່ງຮຽກວ່າ "ໄທເລີ່ງ" ໝູ່ໜຶ່ງຮຽກວ່າ "ໄທລໍ" ໝູ່ ໜຶ່ງ ຮຽກວ່າ "ໄທຄວາງ".

ເມື່ອຈັດດັ່ງນັ້ນແລ້ວ ປູ່ລາງເຊີງຍັງໄດ້ບອກສອນໃຫ້ຄົນທັງຫຼາຍໃຫ້ຮູ້ຈັກຮັກແພງກັນ ນັບຖືກັນເປັນອ້າຍເປັນນ້ອງ ແລະໃຫ້ຖືເປັນຊາດອັນດຽວກັນ, ຍ້ອນຄົນທັງຫຼາຍເກີດມາ ຈາກໝາກນ້ຳເຕົ້າປຸງໜ່ອຍດຽວກັນກໍເໝືອນອອກມາຈາກທ້ອງແມ່ດຽວກັນ. ຜູ້ອອກກ່ອນ ໃຫ້ຖື ເປັນອ້າຍຫຼືເອື້ອຍ, ຜູ້ອອກລຸນໃຫ້ຖືເປັນນ້ອງຕາມລຳດັບ. ນອກນັ້ນປູ່ລາງເຊີງຍັງ ສອນໃຫ້ຄົນທັງຫຼາຍຮູ້ຈັກທຳມາຫາກິນລ້ຽງຊີບ, ຮູ້ຈັກປຸກແປງຢ້າວເຮືອນ ແລະສ້າງຄອບ ສ້າງຄົວມີຜົວມີເມຍແຕ່ນັ້ນມາ ເຂົາເຈົ້າຈຶ່ງເກີດມີລູກຍິງ, ລູກຊາຍຢ່າງຫຼວງຫຼາຍ. ປູ່ລາງ ເຊີງໄດ້ບອກສອນໃຫ້ລູກຫຼານຮູ້ຈັກຮັກພໍ່ຮັກແມ່, ຮັກປູ່ຮັກຍ່າ, ຮັກຕາຮັກຍາຍເຊື້ອສາຍ ແຫ່ງຕົນ ແລະຮູ້ຈັກຮັກສາມູນມັງທີ່ພໍ່ແມ່ປູ່ຍ່າຕາຍາຍໄດ້ສ້າງສົມໄວ້ໃຫ້.

ຍ້ອນໄດ້ຮັບການອົບຮົມສັ່ງສອນຈາກຂຸນແຖນທັງສາມ ຄົນທັງຫຼາຍຈຶ່ງເຂົ້າລົບນັບຖື ສະແດງຄວາມຮູ້ບຸນຄຸນຂຸນແຖນທັງສາມຢ່າງສູງສົ່ງ ແລະຮຽກເປັນປູ່ເປັນຕານັບແຕ່ນັ້ນ ມາ. ຄົນທັງຫຼາຍໄດ້ແຜ່ຂະຫຍາຍອອກຢ່າງກ້ວາງຂວາງບາງຄາວກໍເຕົ້າໂຮມກັນເຂົ້າເປັນ ເອກະພາບ, ບາງຄາວກໍແຍກກັນອອກເປັນຫຼາຍຈຸຫຼາຍເຫຼົ່າຫຼາຍເຜົ່າຫຼາຍກໍ. ເຖິງຈະຕົກໄປ

ຢູ່ແຫ່ງໃດຄົນເຫຼົ່ານັ້ນກໍຍັງນັບຖືກັນວ່າເປັນອ້າຍເປັນນ້ອງເຊື້ອສາຍດຽວກັນເຊັ່ນ ລາວເທິງ ຖືວ່າເປັນອ້າຍກົກ, ລາວລຸ່ມເປັນນ້ອງກາງ, ລາວສູງເປັນນ້ອງຫຼ້າເຊິ່ງປະຊາຊົນລາວຕາມ ທ້ອງຖິ່ນຕ່າງໆຍັງນັບຖືກັນ, ທ່ຽວໄປມາຫາສູ່ກັນ, ກິນເຂົ້າເຊົ້າເຮືອນນຳກັນໂດຍບໍ່ຄິດຄ່າ ລາຄາໃດໆ, ໂດຍສະເພາະຢ່າງຍິ່ງແມ່ນບ້ານທີ່ຢູ່ໃກ້ຄຽງກັນເມື່ອມີວຽກຂໍອານຊ່ວຍເຫຼືອ ກັນເຮັດ. ເມື່ອມີພິທີຕາມປະເພນີຮີດຄອງເປັນຕົ້ນວ່າແຕ່ງດອງ ຫຼືງານບຸນຕ່າງໆກໍມີການ ປ່າວເຕືອນບອກເລົ່າເຖິງກັນແລ້ວເຕົ້າໂຮມກັນເຮັດ ຈົນກາຍເປັນປະເພນີສືບມາ.

ບົດທີ 2
ພື້ນສືບ

1. ຄວາມໝາຍ ແລະ ລັກສະນະພິເສດຂອງພື້ນສືບ

ຄຳວ່າ "ພື້ນ" ໝາຍເຖິງຕຳນານ, ນິທານ, ໜັງສືເລື່ອງຕ່າງໆດັ່ງວ່າ "ບັດນີ້ຈັກກ່າວ ພື້ນທ້າວໃຫຍ່ເຈືອງທານສົມພານເພັງໄພ່ພົ້ນຍໍຍ້ອງ" (ຮຸ່ງ), ພື້ນແມ່ນປະຫວັດຄວາມເປັນ ມາຂອງຄົນ ແລະປະເທດເມືອງໂຮມເຂົ້າກັບຄຳວ່າ "ສືບ" ຈຶ່ງເປັນພື້ນສືບ.

ພື້ນສືບແມ່ນເລື່ອງເລົ່າພື້ນເມືອງປະເພດໜຶ່ງ ຊຶ່ງມີເນື້ອໃນເວົ້າເຖິງບຸກຄົນ ຫຼືເຫດ ການໃນປະຫວັດສາດ, ເບື້ອງຕົ້ນພື້ນສືບຍັງເປັນບົດເລື່ອງເລົ່າກ່ຽວກັບບຸກຄົນໃດໜຶ່ງ ຫຼື ເຫດການໃດໜຶ່ງທີ່ມີໃນຈຸ້ມເຈື້ອເຊື້ອສາຍຄົນເຮົາເທົ່ານັ້ນ. ຕໍ່ມາບົດເລື່ອງເຫຼົ່ານັ້ນໄດ້ຖືກ ເລົ່າຕໍ່ກັນໄປຢ່າງກວ້າງຂວາງໃນທົ່ວທ້ອງຖິ່ນທົ່ວເຂດ ແລະທົ່ວປະເທດ. ພື້ນສືບໄດ້ກຳ ເນີດ ແລະຂະຫຍາຍຕົວແຮງໃນໄລຍະສືບຕໍ່ຈາກຍຸກສະໄໝຂອງເທບນິຍາຍເມື່ອຄົນເຮົາ ໄດ້ມີສະຕິກ່ຽວກັບຈຸ້ມເຈື້ອເຊື້ອສາຍຂອງຕົນຢ່າງຈະແຈ້ງສົມຄວນແລ້ວ. ມັນເປັນການບັນ ທຶກ ແລະຈື່ຈຳຄົນບັນດາເຫດການໃຫຍ່ໆ ແລະສຳຄັນທີ່ມີລັກສະນະປະຫວັດສາດຂອງ ກຸ່ມຄົນໃດໜຶ່ງ ຫຼືຂົງເຂດໃດໜຶ່ງເຊັ່ນການແຜ່ອຳນາດການປົກຄອງ, ການເຮັດສົງຄາມລະ ຫວ່າງກຸ່ມຄົນນີ້ກັບກຸ່ມຄົນອື່ນເພື່ອຍາດຊິງເຂດນ້ຳແດນດິນ, ເຂດທຳມາຫາກິນຊຶ່ງກັນແລະ ກັນ, ການລີເລີ່ມສ້າງຕັ້ງອານາຈັກ ແລະການກຳເນີດຊາດໃນສະໄໝບູຮານ ແລະອື່ນໆ. ສະນັ້ນ, ພື້ນສືບຈຶ່ງມີຮູບການຢາກຄ້າຍຄືເທບນິຍາຍ, ແຕ່ເນື້ອໃນພັດມີລັກສະນະສັງຄົມ ຢ່າງຈະແຈ້ງ; ເວົ້າຢ່າງໜຶ່ງຮູບການປະດິດແຕ່ງຂອງພື້ນສືບໄດ້ຮັບຜົນສະທ້ອນຈາກເທບ ນິຍາຍ ແລະມີທັງທ່າອ່ຽງຂະຫຍາຍຕົວເພື່ອກາຍມາເປັນນິທານ. ດ້ວຍເຫດນັ້ນ, ໃນໄລຍະ ຜ່ານມາຈຶ່ງມີນັກຄົ້ນຄວ້າຫຼາຍຄົນຍັງຢຸດໆຢ່ອນໆບໍ່ກ້າແຍກພື້ນສືບອອກເປັນເລື່ອງໜຶ່ງຕ່າງ ຫາກ; ບາງຄົນພັດຍັງເອົາພື້ນສືບເຂົ້າລວມກັບເທບນິຍາຍ ແລະຈຳນວນໜຶ່ງອີກພັດຖືເອົາ ພື້ນສືບເປັນນິທານປະເພດໜຶ່ງທີ່ມີເນື້ອໃນປະຫວັດສາດ. ເບິ່ງລວມແລ້ວຄວາມສຳນຶກກ່ຽວ

ກັບພື້ນສືບບໍ່ທັນຈະແຈ້ງ ແລະບໍ່ທັນເປັນເອກະພາບກັນເທື່ອນັບທັງການອີ້ນຊື່ຂອງມັນອີກ ດ້ວຍ. ຕໍ່ມາໂດຍສະເພາະໃນຊຸມປີມໍ່ໆມານີ້ຄວາມວ່າ "ພື້ນສືບ" ໄດ້ກາຍເປັນຄວາມ ສຳນຶກສະເພາະໝາຍເຖິງເລື່ອງເລົ່າພື້ນເມືອງປະເພດໜຶ່ງຕ່າງຫາກ.

ເທບນິຍາຍເຖິງແມ່ນວ່າມີເນື້ອໃນປະຫວັດສາດ ແລະມີລັກສະນະສັດຈະທັດໂດຍມີ ຮູບພາບ, ຮູບປະພັນຕົວລະຄອນຕ່າງໆຕິດພັນກັບຮ່ອງຮອຍປະຫວັດສາດສະໄໝບຮານແຕ່ ກໍບໍ່ທັນສະແດງໃຫ້ເຫັນບຸກຄົນ ແລະເຫດການປະຫວັດສາດອັນລະອຽດຈະແຈ້ງແລະເລິກ ເຊິ່ງເໝືອນດັ່ງຕົວລະຄອນໃນພື້ນສືບ.

ພື້ນສືບກັບນິທານກໍມີການພົວພັນຊຶ່ງກັນແລະກັນ, ແຕ່ກໍມີຄວາມແຕກຕ່າງກັນເປັນ ພື້ນຖານຄືນິທານສ່ວນຫຼາຍກຳເນີດຂຶ້ນໃນສັງຄົມທີ່ມີຊົນຊັ້ນ, ເນື້ອໃນຕົ້ນຕໍຂອງນິທານເຄີຍ ເວົ້າເຖິງການພົວພັນໃນສັງຄົມ, ສ່ວນພື້ນສືບແມ່ນເວົ້າເຖິງບຸກຄົນ ຫຼືເຫດການທີ່ຕິດພັນ ກັບປະຫວັດສາດ. ໃນໄລຍະຜ່ານມາຍັງມີບາງຄົນບໍ່ທັນຈຳແນກໄດ້ຢ່າງຈະແຈ້ງລະຫວ່າງ ພື້ນສືບປະຫວັດສາດກັບນິທານທີ່ອະທິບາຍກ່ຽວກັບກຳເນີດກ່ຽວກັບຮ່ອງຮອຍ ທຳມະຊາດ ແລະສະຖານທີ່ຕ່າງໆເຊັ່ນ ເລື່ອງ "ພູທ້າວພູນາງ", "ພູບາຈຽງພູມະໂລງ" ເຫຼົ່ານີ້ເປັນຕົ້ນ. ຈຸດປະສົງຕົ້ນຕໍຂອງການປະດິດແຕ່ງນິທານປະເພດນີ້ບໍ່ພຽງແຕ່ອະທິບາຍ ກຳເນີດຂອງຮ່ອງຮອຍ ແລະປາກົດການທຳມະຊາດໂດຍສະເພາະເທົ່ານັ້ນ ຫາກຍັງສອຍໃຊ້ການອະທິບາຍນັ້ນເພື່ອເວົ້າເຖິງບັນຫາສັງຄົມເປັນຕົ້ນຕໍ. ອາດເວົ້າໄດ້ວ່າ ນິ ທານປະເພດນີ້ຢູ່ລະຫວ່າງກາງຂອງພື້ນສືບ ແລະນິທານອັດສະຈັນ. ແບບວິທີເລົ່າພື້ນ ສືບ ກໍຕ່າງກັບແບບວິທີເລົ່ານິທານຄືພື້ນສືບແມ່ນເລື່ອງເລົ່າກ່ຽວກັບເຫດການ ຫຼືບຸກຄົນ ປະຫວັດ ສາດ, ສ່ວນນິທານແມ່ນເລື່ອງອະທິບາຍປາກົດການ ແລະຮ່ອງຮອຍຂອງທຳມະ ຊາດ. ການອະທິບາຍໃນນິທານແບບນີ້ມີລັກສະນະເວົ້າໂຍກ ແລະກໍບໍ່ອາດຈະເປັນຄວາມ ຈິງໄດ້. ສະນັ້ນ ພື້ນສືບຈຶ່ງມີຄຸນຄ່າ ຫຼືມີລັກສະນະໜັກມາທາງດ້ານປະຫວັດສາດຈະແຈ້ງ, ສ່ວນນິ ທານທີ່ອະທິບາຍກ່ຽວກັບສະຖານທີ່ທ້ອງຖິ່ນເຫຼົ່ານັ້ນພັດມີລັກສະນະສັງຄົມ ຫຼາຍ ກວ່າ.

ພື້ນສືບໄດ້ກຳເນີດ ແລະຂະຫຍາຍຕົວແຮງໃນສະໄໝກ່ອນທີ່ຄົນເຮົາຈະມີວິຊາປະ ຫວັດສາດອັນແທ້ຈິງ. ເມື່ອຄົນເຮົາບໍ່ທັນມີວິຊາປະຫວັດສາດພື້ນສືບໄດ້ເຮັດໜ້າທີ່ "ຈົດຈຳ" ແລະ "ບັນທຶກ" ບັນດາເຫດການປະຫວັດສາດຂອງແຕ່ລະຈຸ້ມເຈື້ອເຊື້ອສາຍຂອງແຕ່ລະ ເຜົ່າຊົນກໍຄືບັນດາປະຫວັດສາດຂອງບ້ານເມືອງໂດຍທົ່ວໄປ. ເມື່ອມາຮອດສະໄໝຄົນເຮົາ ເລີ່ມມີວິຊາປະຫວັດສາດອັນແທ້ຈິງແລ້ວພື້ນສືບກໍຍັງກຳເນີດ ແລະຂະຫຍາຍຕົວໃນລະດັບ ຕ່າງກັນ, ໂດຍອີງຕາມສະພາບການຈົດກ່າຍຂອງວິຊາປະຫວັດສາດ. ຖ້າວ່າອັນໃດທີ່ປະ ຫວັດສາດຫາກຈົດກ່າຍບັນດາເຫດການປະຫວັດສາດໄດ້ຢ່າງຄົບຖ້ວນຊັດເຈນແລ້ວລັກສະ

ນະຂອງພື້ນສືບກໍຫຼຸດຜ່ອນລົງ; ກົງກັນຂ້າມຖ້າຫາກວ່າເຫດການແລະຕົວລະຄອນໃດທີ່ປະຫວັດສາດເວົ້າບໍ່ແຈ້ງລັກສະນະຂອງພື້ນສືບກໍປາກົດເດັ່ນຂຶ້ນ. ແນ່ນອນວ່າເນື້ອໃນຂອງພື້ນສືບກໍມີການຫັນປ່ຽນໄປຕາມເນື້ອໃນຂອງປະຫວັດສາດ.

ດັ່ງນັ້ນ, ຈຶ່ງອາດເວົ້າໄດ້ວ່າພື້ນ ສືບແມ່ນ**"ປະຫວັດສາດທີ່ບໍ່ເປັນລາຍລັກອັກສອນ"** ແມ່ນປປະຫວັດສາດແບບຈື່ຈຳຕາມ ລັກສະນະຂອງປະຊາຊົນ; ຫຼືເວົ້າອີກຢ່າງໜຶ່ງພື້ນສືບ ແມ່ນເລື່ອງປະຫວັດສາດທີ່ປະຊາຊົນ ເຄີຍເລົ່າສືບຕໍ່ກັນມາແຕ່ເຊັ່ນຄົນນີ້ໄປຫາເຊັ່ນຄົນອື່ນ, ແຕ່ທ້ອງຖິ່ນນີ້ໄປຫາທ້ອງຖິ່ນອື່ນຕົວ ຢ່າງ ຄືພະຍາສີໂຄດຕະບອງ, ພື້ນທ້າວຈັນທະພານິດ, ພື້ນຂຸນບູລົມ, ພື້ນກ່ຽວກັບຂຸນ ເຈືອງເຫຼົ່ານີ້ເປັນຕົ້ນ.

ເຖິງວ່າພື້ນສືບແມ່ນບົດເລື່ອງເລົ່າພື້ນເມືອງທີ່ເຄີຍມີການປ່ຽນແປງໄປຕາມກາລະເທສະ, ເຫດການ ແລະຕົວລະຄອນປະຫວັດສາດຢູ່ໃນພື້ນສືບກໍຍັງມີການຫັນປ່ຽນໄປຕາມທັດສະນະຂອງຄົນຜູ້ປະດິດແຕ່ງ ຫຼືຜູ້ເລົ່າຕໍ່ກັນນຳອີກ.

2. ການກຳເນີດ ແລະ ຂະຫຍາຍຕົວຂອງພື້ນສືບ

ພື້ນສືບລາວເຮົາເຖິງແມ່ນວ່າກຳເນີດ ແລະຂະຫຍາຍຕົວແຮງໃນສະໄໝກ່ອນທີ່ຊາດເຮົາຈະມີວິຊາປະຫວັດສາດອັນແທ້ຈິງກໍຕາມ ແຕ່ພື້ນສືບກໍບໍ່ໄດ້ຢຸດເຊົາການຂະຫຍາຍຕົວ ແຕ່ໃນສະໄໝນັ້ນເໝືອນດັ່ງເທບນິຍາຍ, ກົງກັນຂ້າມພື້ນສືບຍັງຄົງສືບຕໍ່ກຳເນີດ ແລະຂະຫຍາຍຕົວພ້ອມໆກັບວິຊາປະຫວັດສາດ ແລະວັນນະຄະດີພື້ນເມືອງປະເພດອື່ນໆຕໍ່ມາຈົນເຖິງທຸກວັນນີ້. ອີງຕາມເນື້ອໃນ ແລະຈຸດພິເສດທີ່ໄດ້ກ່າວມານີ້ຈຶ່ງອາດແບ່ງການກຳເນີດ ແລະຂະຫຍາຍຕົວຂອງພື້ນສືບລາວອອກເປັນ 2 ໄລຍະຕົ້ນຕໍດັ່ງລຸ່ມນີ້ :

2.1 ໄລຍະກ່ອນສະຕະວັດທີ XIV

ກ່ອນສະຕະວັດທີ **XIV** ຄືນຫຼັງເປັນໄລຍະປະຫວັດສາດອັນແສນຍາວນານ ແລະ ກໍເປັນໄລຍະປະຫວັດສາດສະໄໝດຶກດຳບັນຂອງຊາດລາວເຮົາ. ພື້ນສືບຂອງລາວເຮົາ ໃນໄລຍະນີ້ແມ່ນພື້ນສືບທີ່ມີເນື້ອໃນກົງກັບປະຫວັດສາດຂອງການສ້າງຕັ້ງເມືອງລາວເປັນຕົ້ນຕໍ ພື້ນສືບ "ພະຍາສີໂຄດຕະບອງ", ພື້ນສືບ "ທ້າວຈັນທະພານິດ", ພື້ນສືບ "ກ່ຽວກັບຂຸນເຈືອງ", ພື້ນ "ຂຸນບູລົມ"... ລ້ວນແລ້ວແຕ່ເປັນບົດເລື່ອງເລົ່າກ່ຽວກັບບຸກຄົນຜູ້ເປັນຫົວໜ້າຂອງແຕ່ລະກຸ່ມເຜົ່າຊົນທີ່ປົກຄອງເມືອງບູຮານ ຕ່າງໆຂອງລາວເຮົາໃນສະໄໝກ່ອນນັ້ນ ຄື ເມືອງສີໂຄດຕະບອງ, ເມືອງຈັນທະບູລີ, ເມືອງປະກັນ, ເມືອງຊຽງດົງຊຽງທອງ (ເມືອງຊວາ), ເມືອງຊຽງແສນ... ພ້ອມກັນນັ້ນບົດພື້ນສືບຕ່າງໆດັ່ງກ່າວມານີ້ຍັງໄດ້ເລົ່າເຖິງການກຳເນີດ ແລະການຄົງຕົວຂອງເມືອງບູຮານເລົ່ານັ້ນດ້ວຍຮູບການເຫຼືອເຊື່ອ ແລະມະຫັດສະຈັນທີ່ສຸດ. ໂດຍຜ່ານເນື້ອໃນພື້ນສືບກ່ຽວກັບການກຳເນີດເມືອງບູຮານເຫຼົ່ານັ້ນອາດເຫັນໄດ້ວ່າປະຫວັດສາດຂອງລາວສະໄໝນັ້ນໄດ້ຂະຫຍາຍຕົວຕາມສອງແງ່ ຄືໃນດ້ານໜຶ່ງຊາວບູ

ຮານບັນດາເຜົ່າໄດ້ສ້າງຕັ້ງເມືອງລາວບູຮານຂະໜາດໃຫຍ່ຂຶ້ນກັບທີ່ຫຼາຍແຫ່ງເຊັ່ນ ເມືອງ ສີໂຄດຕະບອງ, ເມືອງຈັນທະບູລີ, ເມືອງຊຽງດົງຊຽງທອງ ແລະແຫ່ງອື່ນໆ...ໃນດ້ານໜຶ່ງ ອີກຊົນເຜົ່າໄທລາວທີ່ຕັ້ງເມືອງຂະໜາດໃຫຍ່ (ອາດເອີ້ນວ່ານະຄອນຫຼວງ) ຂອງຕົນຢູ່ທາງ ພາກເໜືອນັ້ນໄດ້ມີການເຄື່ອນຍ້າຍລົງມາສົມທົບກັບບັນດາຊົນເຜົ່າລາວທີ່ຕັ້ງພູມລຳເນົາກະ ແຈກກະຈາຍຢູ່ຕາມຂົງເຂດພາກໃຕ້ສ້າງຕັ້ງເມືອງໃຫຍ່ຂຶ້ນຫຼາຍແຫ່ງເຊັ່ນເມືອງຊວາຢູ່ເຂດ ຊຽງດົງຊຽງທອງເຊິ່ງໄດ້ຂະຫຍາຍຕົວຈະເລີນຮຸ່ງເຮືອງຈົນກາຍເປັນນະຄອນຫຼວງຂອງອາ ນາຈັກລາວລ້ານຊ້າງຂຶ້ນໃນໄລຍະຕໍ່ມາ. ເຫດການປະຫວັດສາດອັນນີ້ໄດ້ສະແດງອອກຢ່າງ ຈະແຈ້ງສົມຄວນໃນພື້ນສີບຕ່າງໆເຊັ່ນ ພື້ນ "ຂຸນບູລົມ, "ສີໂຄດຕະບອງ", "ທ້າວຈັນທະ ພານິດ" ເຫຼົ່ານີ້ເປັນຕົ້ນ. ມາຮອດສະໄໝຂຸນລໍບັນດາຊົນເຜົ່າໄທລາວໄດ້ເຕົ້າໂຮມກັນເປັນ ປຶກແຜ່ນກ່ອນໜ່ຢູ່ເມືອງຊວາ ແລະຂຸນລໍທີ່ເປັນຜູ້ສືບທອດຂຸນບູລົມກໍ່ຕັ້ງສູນກາງການປົກ ຄອງຢູ່ເມືອງຊວາໃນຄາວນັ້ນ, ນອກຈາກພື້ນຂຸນບູລົມແລ້ວ ອາດຍັງມີພື້ນສີບອື່ນໆຫຼາຍບົດ ອີກກ່ຽວກັບເມືອງຊວາ ແລະຂຸນລໍ. ພື້ນສີບປະຫວັດສາດໃນໄລຍະນີ້ມີການຂະຫຍາຍຕົວ ເປັນບາດກ້າວໃຫຍ່, ນັບທັງການປະກອບສ້າງໂຄງຮ່າງບົດເລື່ອງ ແລະທັງເນື້ອໃນປະຫວັດ ສາດຂອງມັນອີກດ້ວຍ.

ໃນໄລຍະກ່ອນສະຕະວັດທີ **XIV** ນີ້ໄປຄຽງຄູ່ກັບພື້ນສີບທີ່ມີເນື້ອໃນປະຫວັດສາດ ແລ້ວ ຍັງມີພື້ນສີບສະເພາະກ່ຽວກັບປະຫວັດສາດແຫ່ງການສ້າງຕັ້ງບັນດາເມືອງບູຮານອັນ ໃຫຍ່ໆຫຼາຍແຫ່ງອີກເຊັ່ນ ຕຳນານເມືອງຫຼວງພະບາງ, ຕຳນານເມືອງວຽງຈັນ ແລະພື້ນສີບ ກ່ຽວກັບການປະດິດສ້າງວັດທະນະທຳ, ວັດວາອາຮາມ ຄືຕຳນານທາດພະນົມ, ນິທານອຸຮັງ ຄະທາດ ແລະອື່ນໆອີກ.

ເບິ່ງລວມໄປແລ້ວໃນໄລຍະກ່ອນສະຕະວັດທີ **XIV** ພື້ນສີບຂອງລາວເຮົາໄດ້ກຳເນີດ ແລະຂະຫຍາຍຕົວແຮງ, ມີເນື້ອໃນປະຫວັດສາດ ແລະຍັງຮັກສາລັກສະນະເກົ່າແກ່ບູຮານ ຂອງມັນໄວ້ຢ່າງຄົບຖ້ວນ. ການຮັບຜົນສະທ້ອນຈາກແນວຄິດຊົນຊັ້ນປົກຄອງ ແລະແນວ ຄິດສາສະໜາພຸດກໍ່ບໍ່ທັນຈະແຈ້ງ ແລະເລິກເຊິ່ງເທື່ອ. ປະຫວັດສາດຂອງຊາດລາວໃນໄລ ຍະນີ້ ຍັງແມ່ນປະຫວັດສາດທີ່ເລົ່າປາກຕໍ່ປາກໂດຍຜ່ານບົດພື້ນສີບຕ່າງໆເປັນຕົ້ນຕໍ. ດັ່ງ ນັ້ນ, ລະຫວ່າງພື້ນສີບກັບປະຫວັດສາດຈຶ່ງມີລັກສະນະປົນເປໃກ້ຊິດຕິດພັນກັນຫຼາຍທີ່ສຸດ.

2.2 ໄລຍະຫຼັງສະຕະວັດທີ XIV ມານີ້

ພາຍຫຼັງສະຕະວັດທີ XIV ໂດຍສະເພາະແມ່ນຕັ້ງແຕ່ປີ 1353 ເປັນຕົ້ນມາປະຫວັດ ສາດທີ່ຂຽນເປັນລາຍລັກອັກສອນຂອງລາວເຮົາຈຶ່ງເກີດມີຂຶ້ນ. ຢູ່ໃນໄລຍະນີ້ເອງເພື່ອເປັນ ການຟື້ນປະຫວັດສາດຂອງຊາດເຮົາໃນໄລຍະກ່ອນນັ້ນຄືນໃຫ້ເປັນລະບົບຄົບຖ້ວນ, ບັນດາ

ນັກປາດ, ຄູບາອາຈານທັງຫຼາຍຈຶ່ງໄດ້ເກັບກຳເອົາບົດພື້ນສີບຕ່າງໆມາຈັດກ່າຍ ແລະບັນ ທຶກໄວ້ເປັນປຶ້ມເຊັ່ນ ປຶ້ມພິງສະອະດານລາວ, ປຶ້ມໜັງສືນິທນຂຸນບູລົມ...

ສະພາບການດັ່ງກ່າວນີ້ ຍິ່ງເຮັດໃຫ້ພື້ນສີບກັບປະຫວັດສາດປົນເປກັນຕື່ມ, ທັງເຮັດ ໃຫ້ເນື້ອໃນຂອງປະຫວັດສາດຂອງບົດພື້ນສີບມີການຫັນປ່ຽນໄປຕາມທັດສະນະຂອງຜູ້ຂຽນ ຈຸດປະສົງຂອງການຈັດກ່າຍບົດພື້ນສີບຕ່າງໆນັ້ນໄວ້ກໍເພື່ອຍົກສູງຄຸນຄ່າທາງດ້ານປະຫວັດ ສາດຂອງບົດເລື່ອງ. ແຕ່ໃນຕົວຈິງພັດເຮັດໃຫ້ເນື້ອແທ້ ແລະລັກສະນະຂອງພື້ນສີບມີການ ຫັນປ່ຽນ ແລະຫຼຸດຜ່ອນລົງຫຼາຍທີ່ສຸດສະແດງອອກໃນບາງດ້ານ ຄືຜູ້ຂຽນໄດ້ຍົກຍໍຕົວລະ ຄອນໃນພື້ນສີບທຽບເທົ່າກັບຟ້າແຖນທັງຫຼາຍເຮັດໃຫ້ພື້ນສີບມີລັກສະນະສັກສິດ ແລະມະ ຫັດສະຈັນ, ເປັນການຍົກຍໍບົດບາດຂອງເຈົ້າຂຸນມຸນນາຍໃນສັງຄົມໃຫ້ສູງ ແລະມີຄວາມ ສັກສິດເໝືອນດັ່ງຟ້າແຖນ. ເປັນທີ່ຮູ້ກັນດີວ່າຜູ້ທີ່ຂຽນສະໄໝນັ້ນແມ່ນຄູບາອາຈານເປັນຕົ້ນ ຕໍ. ດັ່ງນັ້ນ, ພື້ນສີບນັບທັງເທບນິຍາຍຂອງລາວເຮົາຈຶ່ງໄດ້ຮັບຜົນສະທ້ອນຈາກລະບົບແນວ ຄິດຂອງຊົນຊັ້ນປົກຄອງ ແລະລະບົບແນວຄິດສາສະໜາຢ່າງເລິກເຊິ່ງສົມຄວນ. ຕົວລະ ຄອນພະອິນ, ພະພົມ ຫຼືຜີຍັກຕ່າງໆເຊິ່ງມີກິກເຄົ້າການເຊື່ອຖືມາຈາກສາສະໜາພາມ ແລະ ພຸດທີ່ແຜ່ລາມຢູ່ອິນເດຍກໍໄດ້ແຊກຊຶມເຂົ້າມາໃນພື້ນສີບຂອງລາວເຮົາຢ່າງຫຼວງຫຼາຍທີ່ສຸດ.

ພາຍຫຼັງສະຕະວັດທີ XIV ມານີ້ ແມ່ນໄລຍະປະຫວັດສາດຍາວນານສົມຄວນເຊິ່ງ ອາດແບ່ງອອກເປັນຫຼາຍສະໄໝຕ່າງກັນ. ບົດພື້ນສີບຂອງລາວເຮົາໃນໄລຍະນີ້ ໄດ້ສ່ອງ ແສງເຖິງການປົກປັກຮັກສາ ແລະສ້າງສາລະບອບສັກດິນາແບບລວມສູນ; ສ່ອງແສງການ ປະດິດສ້າງດ້ານສິລະປະວັດທະນະທຳ ຄືຕຳນານພະທາດຫຼວງ. ນອກຈາກນັ້ນ ຍັງມີບົດ ພື້ນສີບທີ່ເວົ້າເຖິງຂະບວນການຕໍ່ສູ້ຕ້ານການຮຸກຮານຂອງເສິກຕ່າງດ້າວ ຊາວຕ່າງແດນ ເຊັ່ນ ການຕໍ່ສູ້ຕ້ານການຮຸກຮານຂອງສັກດິນາພະມ້າ, ສັກດິນາສະຫຍາມ ແລະຈັກກະ ພັດ ຝຣັ່ງຄື "ເຈົ້າລາຊະວົງ", "ຜູ້ມີບຸນ", ເຈົ້າຟ້າປາໃຈ" ເຫຼົ່ານີ້ເປັນຕົ້ນ.

ເຖິງແມ່ນວ່າປະຫວັດສາດ ໄດ້ຈົດຈຳຂະບວນການຕໍ່ສູ້ດັ່ງກ່າວນັ້ນຢ່າງລະອຽດຄົບ ຖ້ວນແລ້ວກໍຕາມ, ແຕ່ປະຊາຊົນລາວຊາວຜູ້ອອກແຮງງານ ກໍຍັງນຳເອົາເຫດການຕ່າງໆ ຂອງຂະບວນການເຫຼົ່ານັ້ນມາເລົ່າສູ່ກັນຟັງດ້ວຍຮູບການພື້ນສີບທີ່ມີຊີວິດຊີວາທີ່ສຸດ. ພື້ນ ສີບໃນໄລຍະນີ້ ມີການຂະຫຍາຍຕົວດ້ວຍຮູບການໃໝ່ ແລະເນື້ອໃນໃໝ່ປະຊາຊົນໄດ້ພັນ ລະນາຜູ້ນຳຂອງຂະບວນການຕໍ່ສູ້ເຫຼົ່ານັ້ນເປັນຜູ້ມີລິດເດດ, ວິເສດວິໂສທີ່ສຸດຄື "ທັງຄົງທັງ ມີມີນເລື່ອມຕາ; ຟັນບໍ່ເຂົ້າຂ້າບໍ່ຕາຍ, ໄປມາທາງໃດກໍບໍ່ມີໃຜຮູ້ເຫັນ..." ນີ້ແມ່ນການສະ ແດງໃຫເຫັນເຖິງຄວາມເຄົາລົບນັບຖື ແລະຍ້ອງຍໍສັນລະເສີນທີ່ປະຊາຊົນມີຕໍ່ບັນດານັກຕໍ່ ສູ້ກູ້ຊາດຜູ້ອົງອາດກ້າຫານທີ່ມີຄຸນງາມຄວາມດີຕໍ່ຊາດຕໍ່ປະຊາຊົນ. ເຖິງແມ່ນວ່າຂະບວນ ການຕໍ່ສູ້ເຫຼົ່ານັ້ນຈະຖືກປາບປາມ ແລະຖືກປາລະໄຊ, ທັງຜູ້ດີເດ່ນໃນຂະບວນການເຫຼົ່ານັ້ນ

ກໍຖືກຈັບກຸມຄຸມຂັງ ແລະຖືກຂ້າຕາຍກໍຕາມ, ແຕ່ພື້ນສິບໄດ້ປັ້ນແຕ່ງໃຫ້ເຂົາເຈົ້າເປັນຜູ້ຍືນຍົງຄົງຕົວ ແລະມີຊີວິດຊີວາຕິດພັນກັບການຕໍ່ສູ້ກູ້ຊາດຂອງປະຊາຊົນເຮົາຢູ່ຕະຫຼອດມາ. ນີ້ແມ່ນການສະແດງເຖິງ ຄວາມມຸ່ງມາດປາຖະໜາຂອງປະຊາຊົນທີ່ຢາກເອົາຊະນະພວກຮຸກຮານຢູ່ຕະຫຼອດມາ, ທັງສະແດງເຖິງນ້ຳໃຈຕໍ່ສູ້ພິລະອາດຫານຂອງເຂົາເຈົ້າທີ່ບໍ່ຍອມຈຳນົນຕໍ່ສັດຕູຕົວໃດໆ, ເຂົາເຈົ້າເຊື່ອໝັ້ນວ່ານັກຕໍ່ສູ້ກູ້ຊາດບໍ່ມີຍາມຕາຍ ແລະການຕໍ່ສູ້ຕ້ອງໄດ້ຮັບໄຊຊະນະຢ່າງແນ່ນອນ.

3. ເນື້ອໃນຂອງພື້ນສິບລາວ

ພື້ນສິບຂອງລາວເຮົາຖ້າສົມທຽບໃສ່ເລື່ອງເລົ່າພື້ນເມືອງອື່ນໆແລ້ວເຫັນວ່າມີໜ້ອຍຢູ່, ແຕ່ເນື້ອໃນຂອງມັນພັດອຸດົມສົມບູນສົມຄວນ. ພື້ນສິບແຕ່ລະບົດຕ່າງກໍມີເນື້ອໃນສ່ອງແສງສັງຮວມກ່ຽວກັບເຫດການສຳຄັນທີ່ເກີດຂຶ້ນຢູ່ໃນບັນດາກຸ່ມເຜົ່າຊົນ ແລະໃນແຕ່ໄລຍະປະຫວັດສາດຂອງລາວເຮົາເຊິ່ງໃນນັ້ນແມ່ນການກຳເນີດ ແລະຄົງຕົວຂອງເມືອງບູຮານຕ່າງໆ, ການສ້າງລັດຂອງສັກດິນາລາວຢູ່ເມືອງຊວາ, ການສ້າງສາພັດທະນາບ້ານເມືອງຂອງລາວ.

ຕຳນານເມືອງບູຮານບາງສະບັບໄດ້ບັນທຶກໄວ້ວ່າກ່ອນທີ່ມີການສ້າງຕັ້ງລັດສັກດິນາລາວເດີມເກີດຢູ່ເມືອງຊວາໂດຍມີຂຸນລໍຜູ້ສິບທອດຂຸນບູລົມເປັນຜູ້ປົກຄອງນັ້ນມອນຊົນລາວບັນດາເຜົ່າໄດ້ພາກັນຕັ້ງຖິ່ນຖານສ້າງບ້ານປຸກເມືອງໃຫຍ່ໆຂຶ້ນຢູ່ຫຼາຍແຫ່ງມາແລ້ວ. ບົດພື້ນສິບ "ພະຍາສີໂຄດຕະບອງ" ໄດ້ສ່ອງແສງເຖິງເຫດການທີ່ເຜົ່າລາວໄດ້ພາກັນຕັ້ງຖິ່ນຖານຢູ່ທາງພາກໃຕ້ ແລະພາກກາງຂອງດິນແດນລາວສະໄໝກ່ອນ. ບົດເລື່ອງໄດ້ຍ້ອງຍໍສັນລະເສີນທ້າວສີໂຄດຕະບອງຊຶ່ງໃນເບື້ອງຕົ້ນເປັນເດັກນ້ອຍທຳ ມະດາ, ຕໍ່ມາເມື່ອໄດ້ກິນເຂົ້າທີ່ມີສີດຳ ແລະໄດ້ມີໄມ້ຄ້ອນຕະບອງອັນເປັນອາວຸດທີ່ມີຄວາມສັກສິດແລ້ວກໍກາຍມາເປັນຄົນທີ່ມີກຳລັງວັງຊາອັນມະຫາສານຢ່າງມະຫັດສະຈັນທີ່ສຸດ. ທ້າວສີໂຄດຕະບອງບໍ່ສະເພາະມີຄວາມສາມາດຊ່ວຍຊາວບ້ານຂົນໄມ້ເປັນຫຼາຍພັນລຳແຕ່ປ່າມາບ້ານໄລຍະເວລາແຕ່ມື້ໜຶ່ງສອງມື້ເທົ່ານັ້ນ, ຫາກຍັງມີຄວາມສາມາດຜາບແພ້ສັດຕູມາຮຸກຮານ. ປົກປັກຮັກສາບ້ານເມືອງ ແລະຄວາມສຸກຂອງປະຊາຊົນອີກດ້ວຍ. ເມື່ອໄດ້ຂຶ້ນເປັນພະຍາປົກຄອງເມືອງແລ້ວທ້າວສີໂຄດຕະບອງ ຍັງໄດ້ຂຶ້ນໄປຊ່ວຍຊາວເມືອງວຽງຈັນປາບໝູ່ຊ້າງສານທີ່ກຳລັງເຂົ້າມາຮາວີບ້ານເມືອງ ແລະທຳລາຍໄຮ່ນາຕາທ້ຽງຢ່າງມີໄຊສະໜ່ຳໜາມ.

ຜ່ານບົດພື້ນສິບ "ພະຍາສີໂຄດຕະບອງ" ອາດເຫັນໄດ້ວ່າເມືອງສີໂຄດຕະບອງເປັນເມືອງໜຶ່ງທີ່ໃຫຍ່ ແລະກຳລັງມີອຳນາດເຂັ້ມແຂງຢູ່ທາງພາກໃຕ້ຂອງແຫຼມອິນດູຈີນໃນຄາວນັ້ນ ແຕ່ວ່າເມືອງສີໂຄດຕະບອງໃນຂະນະທີ່ແຜ່ອຳນາດປົກຄອງຂອງຕົນຂຶ້ນທາງທິດເໜືອນັ້ນກໍໄດ້ພົບພໍ້ກັບການສະກັດກັ້ນ ແລະການໂຈມຕີຈາກເມືອງອື່ນໆເປັນຫຼາຍຄັ້ງມາ ແລ້ວ, ເມືອງວຽງຈັນໃນຄາວນັ້ນຍັງມີອຳນາດອ່ອນນ້ອຍຫຼຸດເມືອງສີໂຄດຕະບອງຫຼາຍເທົ່າ.ພະຍາ

ເມືອງວຽງຈັນເຫັນວ່າ ອຳນາດເມືອງສີໂຄດຕະບອງເປັນສັດຕູຕົວອັນຕະລາຍຂົ່ມຂູ່ເມືອງຂອງຕົນ. ເມືອງວຽງຈັນບໍ່ສາມາດສະກັດກັ້ນການແຜ່ອຳນາດຂອງເມືອງສີໂຄດຕະບອງດ້ວຍກຳລັງແຮງດ້ານອາວຸດ, ດັ່ງນັ້ນ, ຈຶ່ງໃຊ້ກົນອຸບາຍອັນເລິກແລບແນບນຽນທີ່ສຸດເພື່ອເອົາຊະນະອຳນາດຂອງເມືອງສີໂຄດຕະບອງ; ການເສຍຊີວິດຂອງພະຍາສີໂຄຕະບອງໄດ້ສະແດງເຖິງໄລຍະອ່ອນເພຍ ແລະຂຸດໂຊມໃນການແຜ່ອຳນາດຂອງເມືອງສີໂຄດຕະບອງຢູ່ທາງພາກໃຕ້ອິນດູຈີນໃນຄາວນັ້ນ. ການສຳພັນລະຫວ່າງເມືອງສີໂຄດຕະບອງກັບເມືອງວຽງຈັນແມ່ນການສຳພັນແຫ່ງການຂັດແຍ່ງ, ບຽດຢຶດ ແລະຫວັງກືນກິນເຊິ່ງກັນແລະກັນ, ຕາມກົດເກນຂະຫຍາຍຕົວໄລຍະຕົ້ນຂອງສັງຄົມ ສັກດິນາກະແຈກກະຈາຍ.

ບົດພື້ນສິບ ທ້າວຈັນທະພານິດເປັນບົດເລື່ອງໜຶ່ງທີ່ໄດ້ສ່ອງແສງໄລຍະໃໝ່ແຫ່ງການຂະຫຍາຍຕົວຂອງສັງຄົມລາວ. ບົດເລື່ອງມີເນື້ອໃນຍ້ອງຍໍສັນລະເສີນທ້າວຈັນທະພານິດຜູ້ມີບຸນຄຸນຫຼາຍໃນການປະກອບສ່ວນສ້າງເມືອງຊຽງດົງຊຽງທອງ, ໃນໄລຍະການຕັ້ງລັດສັກດິນາເມືອງຊວາຂຶ້ນ. ບົດເລື່ອງນີ້ຍັງສ່ອງແສງເຖິງໄລຍະຂອງສັງຄົມທີ່ລາວເຮົາໄດ້ມີການຂະຫຍາຍຕົວຢູ່ໃນລະດັບສູງສົມຄວນ, ໂດຍສະເພາະແມ່ນໃນເຂດນັບແຕ່ເມືອງວຽງຈັນລົງໄປ, ການຄ້າຂາຍແລກປ່ຽນສິນຄ້າຊຶ່ງກັນ ແລະກັນໄດ້ກາຍເປັນຄວາມຮຽກຮ້ອງຕ້ອງການຂອງສັງຄົມສະໄໝນັ້ນ. ກົງກັນຂ້າມຢູ່ເມືອງຊຽງດົງຊຽງທອງການຂະຫຍາຍຕົວຂອງສັງຄົມພັດຍັງຕ່ຳ.

ບົດພື້ນສິບ "ຈັນທະພານິດ" ບໍ່ສະເພາະແຕ່ມີເນື້ອໃນທາງດ້ານປະຫວັດສາດ ແລະເນື້ອໃນທາງດ້ານສັງຄົມເທົ່ານັ້ນຫາກຍັງມີເນື້ອໃນສ່ອງແສງເຖິງຄວາມສວຍງາມ ແລະຮັ່ງມີທາງຊັບພະຍາກອນຂອງທຳມະຊາດຂອງເມືອງຊຽງດົງຊຽງທອງໃນເມື່ອກ່ອນ, ຊຶ່ງເປັນການດຶງດູດ, ເຕົ້າໂຮມເອົາບັນດາຊົນເຜົ່າ ແລະຈຸ້ມເຈື້ອເຊື້ອສາຍອື່ນໆເຂົ້າມາພ້ອມກັບບັນດາເຜົ່າຊົນເດີມທີ່ຢູ່ຊຽງດົງຊຽງທອງພັດທະນາບ້ານເມືອງຄາວນັ້ນ. ບົດເລື່ອງນີ້ຍັງໄດ້ຍ້ອງຍໍສັນລະເສີນທ້າວຈັນທະພານິດເຊິ່ງເປັນພະຍາຜູ້ທຳອິດໃນພື້ນສິບຂອງລາວເຮົາທີ່ມີບຸນຄຸນຕໍ່ຊາວບ້ານຊາວເມືອງ ແລະມີທັງຜົນງານອັນໃຫຍ່ຫຼວງຄື ໄດ້ປະກອບສ່ວນສ້າງສາເມືອງຊຽງດົງຊຽງທອງ... ນີ້ກໍເປັນພຽງຄວາມມຸ່ງມາດປາດຖະໜາຂອງປະຊາຊົນທີ່ຢູ່ໃນຍຸກສະໄໝຕໍ່ມາພາຍຫຼັງພີ້ເທົ່ານັ້ນ, ເພາະໃນຕົວຈິງແລ້ວເລື່ອງທ້າວຈັນທະພານິດໄດ້ເປັນພະຍາປົກຄອງເມືອງຊຽງດົງຊຽງທອງນັ້ນອາດໄດ້ມາຍ້ອນຄວາມຮຸນແຮງທາງດ້ານກຳລັງອາວຸດ ຫຼື ດ້ວຍກຳລັງທາງດ້ານວັດຖຸສິ່ງຂອງ. ແຕ່ເຖິງຢ່າງໃດກໍຕາມປະຊາຊົນລາວໃນສະ ໄໝກ່ອນໄດ້ເຊື່ອຖືຕົວລະຄອນທ້າວຈັນທະພານິດເໝືອນດັ່ງບັນພະບູລຸດຜູ້ທຳອິດ ທີ່ໄດ້ມີບຸນຄຸນຢ່າງຫຼາຍຕໍ່ຊາວບ້ານຊາວເມືອງ ແລະທັງໄດ້ເປັນຜູ້ທີ່ປະກອບສ່ວນສ້າງສາເມືອງຊຽງດົງຊຽງທອງໃນສະໄໝດຶກດຳບັນອີກດ້ວຍ.

ພື້ນສີບທີ່ມີເນື້ອໃນປະຫວັດສາດແລະທີ່ແຜ່ຂະຫຍາຍກວ້າງຂວາງກວ່າໝູ່ແມ່ນເລື່ອງ ຂຸນບູລົມ. ກ່ອນສະຕະວັດທີ XIV ພື້ນຂຸນບູລົມຍັງເປັນບົດເລື່ອງເລົ່າສືບໆກັນມາເທົ່ານັ້ນ, ໃນສະຕະວັດທີ XIV ພະມະຫາເທບຫຼວງຈຶ່ງໄດ້ຮຽບຮຽງເປັນປຶ້ມຄັ້ງທຳອິດເຊິ່ງພວກເຮົາ ເຄີຍເອີ້ນວ່າ "ໜັງສືນິທານຂຸນບູລົມ". ໜັງສືນິທານຂຸນບູລົມນີ້ໄດ້ຮັບການດັດແປງເປັນ ຫຼາຍຄັ້ງໃນຍຸກສະໄໝຕ່າງກັນ, ດັ່ງນັ້ນ, ຈຶ່ງມີຫຼາຍສະບັບຕ່າງກັນ. ເນື້ອໃນຕົ້ນຕໍຂອງພື້ນ ຂຸບູລົມແມ່ນການສ່ອງແສງເຖິງເຫດການປະຫວັດສາດອັນໃຫຍ່ຫຼວງແຫ່ງການສ້າງຕັ້ງລັດ ສັກດິນາລາວຂຶ້ນ.

ໃນພື້ນສີບດັ່ງກ່າວນັ້ນຂຸນບູລົມນັບແຕ່ເປັນບຸກຄົນມີຈິງໃນປະຫວັດສາດໄດ້ຖືກຍົກຍໍ ຂຶ້ນເປັນຕົວລະຄອນແຖນ ໂດຍຕອນໜຶ່ງໃນບົດເລື່ອງເລົ່າໄວ້ວ່າ: ຂຸນບູລົມເປັນລູກຊາຍ ຂອງພະຍາແຖນຫຼວງຖືກແຕ່ງຕັ້ງໃຫ້ມາປົກຄອງເມືອງລຸ່ມຕາມຄວາມຮຽກຮ້ອງຕ້ອງການ ຂອງຄົນເມືອງລຸ່ມ ແລະແຖນທັງຫຼາຍ. ໃນຂະບວນຂອງຂຸນບູລົມ. ນອກຈາກນາງເອດ ແຄງລູກສາວຂອງແຖນແຕ່ງ, ນາງຍົມພາລາລູກສາວຂອງແຖນຊັ້ງຍັງມີປູ່ເຍີແມ່ຍ່າງ່າມ, ເຖົ້າໄລ່ ແລະແມ່ນົດພ້ອມດ້ວຍແຖນອື່ນໆອີກ.

ຮູບພາບດັ່ງກ່າວນີ້ ໄດ້ສ່ອງແສງເຖິງເຫດການທີ່ພົ້ງສະອະດານລາວເຄີຍໄດ້ບັນ ທຶກ ໄວ້ທີ່ເປັນເຫດການປະຫວັດສະໄໝບູຮານຂອງຊາດລາວບູຮານພວກເຮົາຄືເຫດການທີ່ບັນ ດາເຜົ່າຊົນໄທລາວເຄື່ອນຍ້າຍເມືອງເອກແຕ່ທາງທິດເໜືອ ລົງມາທິດໃຕ້ເຊິ່ງໃນນັ້ນມີຂຸນບູ ລົມເປັນຫົວໜ້ານຳພາທຸກໆຊົນເຜົ່າເຫຼົ່ານີ້ ພ້ອມກັນນັ້ນ ບົດລື່ອງຍັງຊີ້ແຈງລ່ວງໜ້າເຖິງບົດ ບາດເປັນເຈົ້າປົກຄອງຂອງບັນດາເຜົ່າໄທລາວຢູ່ໃນຂົງເຂດໃໝ່ແຫ່ງນີ້. ຮູບພາບຕົວລະ ຄອນຂຸນບູລົມໄດ້ຖືກພັນລະນາເໝືອນດັ່ງເປັນບັນພະບູລຸດຜູ້ຍິ່ງໃຫຍ່ ມີຄວາມຮູ້ ຄວາມສາ ມາດເຫັນກວ້າງມອງໄກ ແລະມີຄວາມເປັນຫ່ວງເປັນໃຍນຳການນຸ່ງຖື, ກິນຢູ່ຂອງຄົນ ເມືອງລຸ່ມ... ໃນຂະບວນຂອງຂຸນບູລົມ, ແຖນຫຼວງໄດ້ເອົາໃຈໃສ່ເປັນພິເສດປະກອບກັບ ບັນດາແຖນທີ່ເປັນນັກວິຊາການໃນທຸກດ້ານໃຫ້ພ້ອມດ້ວຍເຄື່ອງມືຮັບໃຊ້ໃນການອອກແຮງ ງານ, ສັດສາວາສິ່ງ, ແນວປູກຂອງຝັ່ງທຸກຊະນິດ ແລະຊັບສົມບັດເຄື່ອງໃຊ້ຂອງສອຍ ອື່ນໆ ອີກຢ່າງຄົບຖ້ວນ. ນີ້ໄດ້ສະແດງໃຫ້ເຫັນວ່າສະໄໝຕັ້ງນະຄອນຫຼວງຢູ່ເມືອງແຖນ, ລະບອບສັງຄົມ, ເສດຖະກິດ, ວັດທະນະທຳຂອງບັນດາເຜົ່າຊົນໄທລາວອາດມີການຂະ ຫຍາຍຕົວສູງສົມຄວນແລ້ວ.

ບັ້ນສຸດທ້າຍຂອງເລື່ອງໄດ້ເວົ້າເຖິງລູກຊາຍທັ້ງ 7 ຄົນຂອງຂຸນບູລົມທີ່ໄດ້ໄປປົກຄອງ 7ເມືອງຕ່າງກັນ. ມັນໄດ້ສ່ອງແສງເຖິງໄລຍະໃໝ່ທີ່ມອບຊົນບັນດາເຜົ່າລາວໄດ້ມາຕັ້ງເມືອງ ເອກໃສ່ເມືອງຊວາໃນເຂດຊຽງດົງຊຽງທອງ ແລະເມືອງອື່ນໆອີກໃນຂົງເຂດແຫຼມອິນດູ ຈີນ ນີ້ເຊັ່ນ ເມືອງປະກັນ (ຊຽງຂວາງ), ເມືອງຍອນ, ເມືອງຫົງສາວະດີ...

ພົ້ນຂຸນບູລົມເປັນບົດພົ້ນສົບ ທີ່ມີເນື້ອໃນປະຫວັດສາດຢ່າງຈະແຈ້ງ ແລະເລິກເຊິ່ງ ກວ່າເລື່ອງອື່ນໆ. ຂຸນບູລົມເປັນຕົວລະຄອນທີ່ເປັນສັນຍະລັກໃຫ້ແກ່ອົງກະສັດຂອງຊົນຊັ້ນ ສັກດິນາ ແລະຜູ້ຂຽນກໍເປັນນັກປາດທາງສາສະໜາທີ່ຕິດພັນຢ່າງສະໜິດແໜ້ນກັບຊົນຊັ້ນ ສັກດິນາ, ສະນັ້ນ ພົ້ນຂຸບູລົມທີ່ຂຽນໄວ້ກ່ອນໃນສະຕະວັດທີ XIV ນັ້ນ ຈຶ່ງມີລັກສະນະຂອງ ຊົນຊັ້ນສັກດິນາ ແລະມີສີສັນຂອງສາສະໜາພຸດຢ່າງຈະແຈ້ງ.

ໃນສະໄໝບູຮານ ເມື່ອມະນຸດໄດ້ຂະຫຍາຍຕົວກ້າວໄປເຖິງລະບອບສັງຄົມຕາມຈຸ້ມ ເຈື້ອເຊື້ອສາຍ ຫຼືຍັງເປັນແຕ່ລະກຸ່ມຊົນເຜົ່າໃຜມັນ, ສະຕິເປັນເຈົ້າຕົນເອງ ແລະສະຕິກ່ຽວ ກັບຜົນປະໂຫຍດລວມຂອງທັງໝົດຂອງກຸ່ມຊົນເຜົ່າກໍເກີດມີຂຶ້ນ ແລະຂະຫຍາຍໄປນຳເພື່ອ ປົກປັກຮັກສາສິດຜົນປະໂຫຍດລວມດັ່ງກ່າວນັ້ນ ແລະກໍເພື່ອແຜ່ອຳນາດການປົກຄອງຂອງ ຕົນໃຫ້ກວ້າງຂວາງກວ່າເກົ່າ, ລະຫວ່າງກຸ່ມຊົນຕ່າງໆຈຶ່ງເຄີຍມີການປະທະ ແລະສູ້ຮົບຕົບຕີ ຊິ່ງກັນແລະກັນຢູ່ສະເໝີ.

ບົດພົ້ນສົບບາງສະບັບໄດ້ພັນລະນາສົງຄາມອັນດຸເດືອດ, ຂຸ້ງຂາດ ແລະຍືດເຍື້ອ ຍາວນານລະຫວ່າງຂຸນເຈືອງຜູ້ປົກຄອງນະຄອນເງິນຍາງ ເມືອງຊຸງແສນກັບທ້າວແອງກາ ຜູ້ເປັນເຈົ້າຢູ່ເມືອງປະກັນ (ຊຸງຂວາງ), ອັນເນື່ອງມາຈາກການທີ່ທັງສອງຝ່າຍຕ່າງກໍຍາດ ກັນຂໍໂອມເອົານາງງ້ອມລູກສາວຂອງຂຸນເຈືອງ. ໃນສົງຄາມຄັ້ງນີ້ຝ່າຍຂຸນເຈືອງຜູ້ອົງອາດ ສາມາດຍາດເອົາຊະນະໄດ້ໃນເບື້ອງຕົ້ນ, ແຕ່ໃນທີ່ສຸດເລີຍຖືກຝ່າຍແອງກາທີ່ໄດ້ຮັບຄວາມ ຊ່ວຍເຫຼືອຈາກເມືອງອື່ນໆນັ້ນຕ່າວໂຈມຕີຈົນປະລາໄຊໄປ.

ໃນບົດເລື່ອງ "ຕະຍິ່ກຣາມ" ແລະບົດເລື່ອງ "ແກ້ແຄ້ນຂຸນເຈືອງ" ໄດ້ພັນລະນາ ເຖິງການທີ່ຂຸນເຈືອງໄດ້ບັນຊາກອງທັບຂອງຕົນຕໍ່ສູ້ ຕ້ານການໂຈມຕີຂອງຝ່າຍກົງກັນຂ້າມ ເພື່ອປົກປັກຄວາມເປັນເຈົ້າຂົງເຂດຂອງຕົນເອງ. ໃນການຕໍ່ສູ້ນີ້ເຖິງແມ່ນວ່າຂຸນເຈືອງພ້ອມ ດ້ວຍໄພ່ພົນທະຫານຈະຖືກປະລາໄຊກໍຕາມ. ແຕ່ປະຊາຊົນໄດ້ພັນລະນາຂຸນເຈືອງເປັນວິ ລະບູລຸດຜູ້ເກັ່ງກ້າສາມາດ, ອົງອາດກ້າຫານບໍ່ຍອມຈຳນົນຕໍ່ສັດຕູ. ພາຍຫຼັງທີ່ເສຍສະຫຼະ ໄປໃນສະໜາມຮົບແລ້ວ ຜີຂຸນເຈືອງຍັງນຳພາກອງທັບຜີຂອງຕົນໄປຕີພະຍາແຖນຢູ່ເມືອງ ຟ້າຈົນໄດ້ຮັບໄຊຊະນະ. ໃນບົດເລື່ອງເລົ່ານີ້ ຂຸນເຈືອງຍາມໃດກໍສະທ່ຽ່າຜ່າເຜີຍ, ເຊື່ອໝັ້ນ ຕໍ່ກຳລັງແຮງ ແລະຄວາມສາມາດຂອງຕົນ. ບົດເລື່ອງໄດ້ເລົ່າວ່າຂຸນເຈືອງມີ "ຄຸດ" ອັນ ເປັນເຄື່ອງຄ້ຳຂອງຄູນ ແລະດວງດາບອັນສັກສິດທີ່ສຸດ. ທັງສອງຝ່າຍຕໍ່ສູ້ກັນດ້ວຍລິດ ເດດອັນມະຫັດສະຈັນ "ຂຸນເຈືອງພຽງແຕ່ຍົກດາບຂຶ້ນກໍສາມາດເຮັດໃຫ້ສັດຕູຕາຍໄປເປັນ ພັນເປັນໝື່ນຄົນ".

ເພື່ອສະແດງເຖິງນ້ຳໃຈບໍ່ຍອມຈຳນົນຕໍ່ສັດຕູຂອງຂຸນເຈືອງບົດລື່ອງໄດ້ພັນລະນາ ການປະລາໄຊ ແລະການຕາຍຂອງຂຸນເຈືອງດ້ວຍຫຼາຍສາເຫດຕ່າງກັນຄື ຍ້ອນຂຸນເຈືອງ

ເປັນຄົນມັກກິນເຫຼົ້າເມົາຢາ ແລະສະແຫວງຫາແຕ່ຜູ້ແສ້ຜູ້ສາວ, ຍ້ອນໝິ່ນປະໝາດ ແລະ ຖືເບົາຕໍ່ສັດຕູ, ຂາດສະຕິລະວັງຕົວ... ໂດຍສະເພາະຍ້ອນເມຍຂອງຂຸນເຈືອງໄດ້ເອົາສິ້ນ ເກົ່າມາປົກ "ຄຸດ" ຂອງຂຸນເຈືອງ, ເຮັດໃຫ້ຄວາມສັກສິດຂອງມົນເສຍໄປ ແລະຍ້ອນດວງ ດາບທີ່ສັກສິດຂອງຂຸນເຈືອງບໍ່ສາມາດຜາບແພ້ແມ່ຍິງທີ່ພອມຖືພາໄດ້. ໃນທີ່ສຸດເຖິງແມ່ນ ວ່າຂຸນເຈືອງຖືກປະລາໄຊຢູ່ໃນສະໜໍລະພູມເມືອງລຸ່ມແລ້ວກໍຕາມ, ແຕ່ບົດເລື່ອງຍັງພັນລະ ນາຂຸນເຈືອງເປັນຜູ້ມີໄຊຄື ວິນຍານຂອງຂຸນເຈືອງໄດ້ຕີເອົາຊະນະໜະຍາແຖນຢູ່ເມືອງຟ້າ. ຮູບພາບຂອງຂຸນເຈືອງຜູ້ມີໄຊນັ້ນໄດ້ຈາລຶກໄວ້ໃນຄວາມຊົງຈຳອັນເຕັມໄປດ້ວຍຄວາມຮັກ, ຄວາມຫວັງ ແລະຄວາມເຊື່ອໝັ້ນຂອງປະຊາຊົນຕະຫຼອດມາ.

ເນື້ອໃນຂອງບົດພື້ນສິບຍັງສ່ອງແສງເຖິງການປະດິດສ້າງດ້ານວັດທະນະທຳອັນເກົ່າ ແກ່ລ້ຳຄ່ າ ແລະມະຫັດສະຈັນຂອງລາວເຮົາຄື ບົດເລື່ອກ່ຽວກັບປະຫວັດສາດການສ້າງໄຫ ຫີນຢູ່ແຂວງຊຽງຂວາງ, ປະຫວັດການປະດິດສ້າງຄ້ອງບັ້ງ, ຕຳນານກ່ຽວກັບພະບາງ, ຕຳ ນານກ່ຽວກັບພະທາດຫຼວງເຫຼົ້ານີ້ເປັນຕົ້ນ.

ຕົວລະຄອນຂຸນເຈືອງບໍ່ສະເພາະແຕ່ໄດ້ຮັບການຍ້ອງຍໍສັນລະເສີນເໝືອນດັ່ງວິລະບຸ ລຸດຜູ້ອົງອາດກ້າຫານ ແລະບໍ່ຍອມຕໍ່ສັດຕູເທົ່ານັ້ນ, ຫາກຍັງເປັນນັກປະດິດສ້າງດ້ານວັດ ທະນະທຳອັນເກົ່າແກ່ຊາດເຮົາອີກດ້ວຍ. ນັກຄົ້ນຄວ້າວັດຖຸບູຮານທັ້ງຫຼາຍເຄີຍຕີລາຄາ ຢ່າງເປັນເອກະສັນກັນວ່າໄຫຫີນທີ່ເຫັນຢູ່ຊຽງຂວາງໃນປັດຈຸບັນນີ້ ແມ່ນໝາກຜົນແຫ່ງການ ປະດິດສ້າງວັດນະທຳບູຮານທີ່ມີຄຸນຄ່າທາງດ້ານປະຫວັດສາດ ແລະສິລະປະປະຊາຊົນ ໄດ້ ປະດິດແຕ່ງພື້ນສິບຫຼາຍບົດກ່ຽວກັບທີ່ງໄຫຫີນເຫຼົ່ານີ້. ໃນປຶ້ມ "ພິງສະວະດານລາວ" ທ່ານ ມະຫາສີລາ ວິລະວົງ ໄດ້ຂຽນໄວ້ວ່າ: "ຂຸນເຈືອງໄດ້ເມືອງປະກັນແລ້ວຈຶ່ງທຳການສະ ຫຼອງໄຊຢູ່ເມືອງປະກັນເຖິງ 7ເດືອນ, ໃນການສະຫຼອງໄຊຄັ້ງນີ້ຂຸນເຈືອງໄດ້ຈັດໃຫ້ທຳເຫຼົ້າ ໄຫເພື່ອລ້ຽງໄພ່ພົນເປັນອັນມາກ". ຢູ່ໃນບົດເລື່ອງອື່ນຍັງເວົ້າວ່າໄຫຫີນແມ່ນໄຫເຫຼົ້າຂອງ ພວກກຶມມຸກິນດື່ມກັນ ໃນພິທີສົ່ງສະການບັນດາໄພ່ພົນທະຫານທີ່ເສຍຊີວິດໃນສົງຄາມ... ດັ່ງນັ້ນ, ທີ່ງໄຫຫີນຈຶ່ງອາດແມ່ນເຂດປ່າຊ້າຂອງເຜົ່າກຶມມຸໃນສະໄໝກ່ອນ (ສະໄໝເຄື່ອງ ຫີນ). ຄ້ອງບັ້ງກໍແມ່ນເຄື່ອງວັດຖຸບູຮານຊະນິດໜຶ່ງ ທີ່ມີຄຸນຄ່າສູງທາງດ້ານປະຫວັດສາດ, ວັດທະນະທຳ ແລະສິລະປະອີກດ້ວຍ. ມີນັກຄົ້ນຄວ້າຫຼາຍຄົນໄດ້ສັນນິຖານວ່າແມ່ນສີໄມ້ ລາຍມືຂອງເຜົ່າກຶມມຸ. ເມື່ອເວົ້າເຖິງການປະດິດສ້າງຄ້ອງບັ້ງ, ບົດເລື່ອງ "ຕາຍີ່ກຣາມ" ຂອງເຜົ່າກຶມມຸໄດ້ອະທິບາຍວ່າ: ຕະຍີ່ກຣາມຢູ່ເຮືອນເອົານ້ອງໃນຂະນະທີ່ພໍ່ແມ່ພ້ອມດ້ວຍ ໄຫບ້ານໄປເຮັດວຽກ. ລາວຊອກເຫັນກ້ອນຂີ້ສູດທີ່ພໍ່ແມ່ນປະໄວ້ຢູ່ກ້ອງຕຽງເລີຍເອົາມາປັ້ນ ເປັນຄ້ອງບັ້ງ (ຄ້ອງມະໂຫລິລະທຶກ) ແລ້ວຕີຂຶ້ນ. ສຽງກອງດັງກ້ອງສະໜັ່ນຫວັ່ນໄຫວໄປ ເຖິງພໍ່ແມ່ ແລະຊາວບ້ານທີ່ກຳລັງເຮັດວຽກຢູ່ນັ້ນ. ເຂົາເຈົ້າເລີຍຄິດວ່າຢູ່ທາງບ້ານຕ້ອງມີ

ເລື່ອງທີ່ອັນຕະລາຍເກີດຂຶ້ນຈຶ່ງພາກັນຟ້າວແລ່ນມາ. ເມື່ອເຫັນຊາວບ້ານ ແລະພໍ່ແມ່ແລ່ນ ກັບມາຕະຍີ່ກຣານກໍຟ້າວບີບຄ້ອງບັ້ງຂອງຕົນໃຫ້ເປັນກ້ອນຂີ້ສູດໄວ້ຄືເກົ່າ. ຜ່ານຫຼາຍເທື່ອ ແນວນັ້ນມື້ໜຶ່ງຜູ້ເປັນພໍ່ແມ່ເລີຍລັກລີ້ຈອບເບິ່ງ. ເມື່ອເຫັນເຫດການຕົວຈິງແລ້ວເຂົາເຈົ້າຈຶ່ງ ເອົານ້ຳມອກມາຫົດໃສ່ຄ້ອງບັ້ງໜ່ວຍນັ້ນ ໃນທີ່ສຸດຄ້ອງບັ້ງຂີ້ສູດກໍກາຍມາເປັນຄ້ອງບັ້ງແທ້ ແຕ່ນັ້ນມາຄອບຄົວຂອງຕະຍີ່ກຣານກໍເລີຍມີຄ້ອງບັ້ງ.

ໃນປັດຈຸບັນນີ້ຄ້ອງບັ້ງສ່ຳລັບເຜົ່າກຶມມຸບໍ່ສະເພາະເປັນມູນມໍລະດົກທີ່ມີຄຸນຄ່າສູງເທົ່າ ນັ້ນ, ຫາກຍັງຖືເປັນສິ່ງສັກສິດ ແລະສັກກະລະບູຊາອີກດ້ວຍ. ໃນສະໄໝບູຮານຄ້ອງບັ້ງ ມີ ພາລະບົດບາດຫຼາຍຢ່າງຕໍ່ເຜົ່າກຶມມຸເຊັ່ນ ຕີຄ້ອງບັ້ງໃນພິທີສະຫຼອງໄຊ, ໃນມື້ວັນບຸນວັນ ງານຕີຄ້ອງບັ້ງເພື່ອເປັນສັນຍານເຕົ້າໂຮມກຳລັງ, ໃນສຽງຄ້ອງບັ້ງເພື່ອປຸກລະດົມຊຸກຍູ້ນ້ຳ ໃຈສູ້ຮົບ, ນ້ຳໃຈເຊື່ອໝັ້ນຕໍ່ໄຊຊະນະຂອງຕົນ ແລະກໍມີແຕ່ສຽງຄ້ອງບັ້ງສິ່ງດຽວເທົ່ານັ້ນທີ່ ມີຄວາມສາມາດນຳສົ່ງແນວຄິດຈິດໃຈ ແລະຄວາມມຸ່ງມາດປາຖະໜາຂອງຄົນເຮົາໄປໃຫ້ ຜີພໍ່ແມ່, ຜີຟ້າແຖນຮູ້ໄດ້.

ດາບທັງເປັນເຄື່ອງມືຮັບໃຊ້ໃນການອອກແຮງງານ ແລະທັງເປັນອາວຸດທີ່ມີຜົນສັກ ສິດໃນການສູ້ຮົບຂອງຄົນສະໄໝກ່ອນ. ດາບຂອງຂຸນເຈືອງໄດ້ຖືກຍົກຍໍຂຶ້ນເປັນອາວຸດທີ່ມີ ຄວາມສັກສິດທີ່ສຸດຂອງຟ້າຂອງແຖນ. ດວງດາບອັນວິເສດວິໂສນັ້ນໄດ້ຕິດພັນກັບຜົນງານ ແລະເປັນສິ່ງຕັດສິນຊີ້ຂາດເຖິງໄຊຊະນະ ຫຼືຄວາມປະລາໄຊໃນການສູ້ຮົບຂອງຂຸນເຈືອງ. ເມື່ອດາບດວງນັ້ນເສຍຄວາມສັກສິດໄປແລ້ວຂຸນເຈືອງກໍບໍ່ມີລິດເດດໄດ້ອີກຈຶ່ງຈຳຕ້ອງຍອມ ຕາຍຕໍ່ໜ້າສັດຕູ.

ກິດຈະການສ້າງສາວັດວາອາຮາມ ແລະເຈດີໃຫຍ່ໆແຫ່ງຕ່າງໆຂອງປະຊາຊົນເຮົາ ສະໄໝກ່ອນກໍໄດ້ຖືກນຳມາເລົ່າເປັນບົດເລື່ອງທີ່ມີລັກສະນະເຫຼືອເຊື່ອ ແລະມະຫັດສະຈັນ ອັນເປັນໜ້າຈັບໃຈທີ່ສຸດ. ບົດເລື່ອງເລົ່ານີ້ເຖິງວ່າຕິດພັນກັບການເຊື່ອຖືທາງສາສະໜາໂດຍ ສະເພາະແມ່ນສາສະໜາພຸດກໍຕາມ, ແຕ່ມັນກໍໄດ້ສະແດງເຖິງຄວາມຮູ້ຄວາມສາມາດໃນ ການປະດິດສ້າງທາງດ້ານວັດທະນະທຳ, ສິລະປະວັນນະຄະດີອັນເກົ່າແກ່ ແລະລີ້ຊີ້ຂອງ ຊາດເຮົາ

ຄຳຖາມຄົ້ນຄວ້າ

1. ພື້ນສິບແມ່ນເລື່ອງຄືແນວໃດ ? ແລະມັນມີຈຸດພິເສດແຕກຕ່າງກັນກັບເທບນິຍາຍ ແລະນິທານຄືແນວໃດ?
2. ພື້ນສິບມີການກຳເນີດ ແລະ ຂະຫຍາຍຕົວຄືແນວໃດ?

3.ຈົ່ງອ່ານພື້ນສຽບ "ສີໂຄດຕະບອ","ຂຸນເຈືອງ","ຂຸນບູລົມ"ແລະພື້ນສຽບ "ຈັນທະພານິດ " ແລ້ວຂຽນລາຍງານໂດຍຫຍໍ້.

ເລື່ອງ: ທ້າວຈັນທະພານິດ

ດິນແດນລ້ານຊ້າງເປັນດິນແດນທີ່ຮັ່ງມີ ແລະສວຍງາມເຄີຍມີຊື່ລືຊາປາກົດໃນປະຫວັດສາດຂອງລາວເປັນເວລາຊ້ານານ ນະຄອນຫລວງຂອງດິນແດນລ້ານຊ້າງສະໄໝໜຶ່ງເຄີຍມີຊື່ວ່າຊຽງດົງ, ຊຽງທອງອັນເປັນນະຄອນທີ່ອຸດົມສົມບູນດ້ວຍຫຼາຍຄຳ, ຄົນລາວທີ່ເປັນເຈົ້າຂອງກໍເປັນຊາດທີ່ພິລະອາດຫານເຄີຍມີການຕໍ່ສູ້ປົກປັກຮັກສາ ແລະສ້າງບ້ານແປງເຮືອນສືບມາຫລາຍເຊັ່ນຄົນ. ເຄີຍມີເຈົ້າກະສັດສືບລາຊະວົງຕໍ່ກັນມາຫລາຍສະໄໝຈົນມາຮອດສະໄໝຂຸນຊວາ, ຂຸນຍີປາ, ຂຸນວິລີບາ, ຂຸນກັນຮາງ ແລະ ຂຸນລໍເປັນລຳດັບ. ນະຄອນຫລວງແຫ່ງນີ້ຈຶ່ງມີຊື່ວ່າ ເມືອງຊວາລ້ານຊ້າງ.

ກ່ອນສະໄໝຂຸນຊວາພຸ້ນບໍ່ຮູ້ວ່າເທິງນາມປານໃດຍັງມີກະສັດອົງໜຶ່ງຊື່ວ່າ ພະຍາຈັນທະພານິດເປັນຜູ້ມີຊື່ລືຊາວ່າເປັນເຈົ້າແຫ່ງທອງຄຳ, ປົກຄອງບ້ານເມືອງໂດຍສິນທຳ, ນຳເອົາຄວາມຢູ່ເຢັນເປັນສຸກມາສູ່ໄພ່ຟ້າລາສະດອນເປັນເວລາອັນຍາວນານ ໂດຍມີນິທານເລົ່າສືບກັນມາດັ່ງນີ້: "ປາງກ່ອນຍັງມີກະໄທຊາຍ ອົງໜຶ່ງຊື່ວ່າຈັນທາຢູ່ເມືອງວຽງຈັນເປັນຄົນທຳມະດາສາມັນ, ທຳມາຫາກິນດ້ວຍການຂາຍໝູ. ໃນແຕ່ລະມື້ທ້າວເຄີຍຫາບກະຕ່າໝູທ່ຽວໄປຂາຍໃນທີ່ຕ່າງໆ ນອກຈາກຂາຍໃນບໍລິເວນບ້ານແລ້ວ, ຍັງຫາບໄປຂາຍໃນທີ່ຕ່າງໆທີ່ຢູ່ຫ່າງໄກ, ໂດຍອາໄສວັດ ແລະສາລາເປັນບ່ອນພັກຜ່ອນ. ຢູ່ໃນກຸຕິຫລັງໜຶ່ງໂດຍຄວາມເອື້ອເຝື້ອຂອງມະຫາເຖນຕົນໜຶ່ງ. ໃນຄືນນັ້ນເວລາທີ່ຈັນທາພວມນອນຫລັບ, ມະຫາເຖນຊຳພັດໄດ້ຍິນສຽງດົນຕີເສບເພງໄຊດັງສະໜັ່ນນັນເມືອງທີ່ນັ້ນ, ມະຫາເຖນຮູ້ສຶກແປກປະຫລາດໃຈເປັນອັນມາກຈຶ່ງເອົາມືຊຸກກວຍໝູທີ່ຕ້ຽງຢູ່ຂອກຂ້າງຈັນທາຫວັງວ່າຈະປຸກໃຫ້ຈັນທາຕື່ນຂຶ້ນເພື່ອພ້ອມກັນຟັງສຽງດົນຕີອັນມະຫັດສະຈັນນັ້ນ. ເມື່ອທ້າວຈັນທາຖືກປຸກຈັ່ງຊັ້ນກໍສະດຸງຕື່ນຂຶ້ນດ້ວຍຄວາມຝັນອັນແປກປະຫລາດ. ແຕ່ພ້ອມກັນນັ້ນສຽງດົນຕີທີ່ດັງກ້ອງກັງວານຢູ່ຫວ່າງຢ່ານີ້ຊຳໆບໆຫາຍໄປ. ມະຫາເຖນເຫັນ ດັ່ງນັ້ນ, ຈຶ່ງລົ້ມຫົວນອນລົງອີກໂດຍປ່າກເວົ້າປະການໃດ. ສ່ວນຈັນທາເມື່ອຕື່ນຂຶ້ນແລ້ວກໍຮູ້ສຶກສົນໃຈໃນຄວາມຝັນຂອງຕົນເປັນທີ່ສຸດແຕ່ບໍ່ກ້າແກ້ຄວາມຝັນນຳມະຫາເຖນເມືອງຈາກວ່າຄິດຈົ່ງຈຸມມະຫາເຖນ. ເມື່ອຮຸ່ງເຊົ້າ

ມາຫລັງຈາກສວ່າຍໜ້າແລ້ວທ້າວກໍຫາບກວຍພູໄປທ່ຽວຂາຍເຊັ່ນເຄີຍ. ເມື່ອພົບໄຫບ້ານທີ່ຄຸ້ນແກວ່ນກັນທ້າວຈິ່ງແກ້ຄວາມຝັນຂອງຕົນນຳໄຫບ້ານແຕ່ໄຫບ້ານຊຳພັດເວົ້າແຕກຕ່າງກັນໄປຕ່າງໆນານາຍິ່ງເຮັດໃຫ້ທ້າວເກີດຄວາມກັງວົນສົນໃຈໃນຄວາມຝັນຂອງຕົນເອງ. ບາງຄົນກໍເວົ້າວ່າ "ຄົນຜູ້ນ້ອຍຝັນໃຫຍ່ຈັກຂາດຄວາມອັບປີຈັງໄຮ, ບາງຄົນກໍວ່າຝັນດີຈັກເກີດເປັນຮ້າຍ", , ບາງຄົນກໍວ່າຝັນນີ້ບໍ່ເປັນຕາເພິ່ງເຊື່ອລາງເທື່ອຝັນວ່າໄດ້ກອດຊູ້ມີນຕາຂຶ້ນຊຳພັດແມ່ນໝອນ..." ເມື່ອເປັນແນວນັ້ນທ້າວຈັນທາຈິ່ງກັບໄປຫາມະຫາເຖນ ແລະມະຫາເຖນວ່າ: ຂ້າແຕ່ທ່ານອາຈານເອີຍ! ຕູຂ້ານອນຫລັບໄປໃນຄືນນັ້ນໂລດຝັນວ່າຕົນເປັນຜູ້ມີລິດອານຸພາບປາກຄາບດວງຈັນສອງຕົນຢັນພະອາທິດບໍ່ຮູ້ວ່າຈະເປັນນິມິດຮ້າຍດີປະການໃດທ່ານເອີຍ. ເມື່ອໄດ້ຟັງຈັນທາແກ້ຄວາມຝັນແປກປະຫລາດປະກອບດ້ວຍຕົນເອງກໍໄດ້ຍິນສຽງດົນຕີເສບງັນໃນຄືນນັ້ນ ມະຫາເຖນຈິ່ງຄິດຄະນິງວ່າກະໄຫຊາຍຜູ້ນີ້ຈະເກີດເປັນຜູ້ມີບຸນໜັກສັກໃຫຍ່ແທ້ຄິດແລ້ວມະຫາເຖນຈິ່ງກ່າວວ່າ: ດູລາທ່ານເອີຍ! ຄວາມຝັນເຫຼົ່ານີ້ເປັນນິມິດດີ ຝັນປະເສີດອາດຈະເກີດໂຊກໄຊໃນພາຍໜ້າບໍ່ຢ່າສະແລ

ເມື່ອທຳນາຍຄວາມຝັນນັ້ນແລ້ວ ມະຫາເຖນກໍໄດ້ແນະນຳຄຳສອນແກ່ທ້າວດ້ວຍຄວາມຮັກແພງ ແລະເຊື່ອຖືຫລາຍປະການ. ນັບແຕ່ນັ້ນມາກໍໄດ້ປະຕິບັດຕາມຄຳສັ່ງສອນຂອງມະຫາເຖນທຳມາຫາກິນດ້ວຍຄວາມດຸໝັ່ນພາກພຽນ ແລະຊື່ສັດສຸດຈະລິດຈົນກາຍເປັນພໍ່ຄ້າຜູ້ໜຶ່ງທີ່ຄົນທັງຫລາຍເອີ້ນວ່າພໍ່ຄ້າຂາຍພູເຫດວ່າໄດ້ເລີ່ມຕົ້ນຈາກການຂາຍພູເປັນຕົ້ນທຶນ

ຢູ່ຕໍ່ມາ ຈັນທາຈັດຫາເຮືອໄດ້ລຳໜຶ່ງ ແລ້ວກໍຊັກຊວນເອົາຍາດພີ່ນ້ອງ ແລະ ມິດສະຫາຍ ໄດ້ຈຳນວນໜຶ່ງ ພາກັນຖໍ່ເຮືອຈາກວຽງຈັນ ມຸ່ງໜ້າຂຶ້ນເມືອທາງເໜືອ ຕາມການແນະນຳຂອງ ມະຫາເຖນ.

ໃນເວລາທີ່ຖໍ່ເຮືອຕາມລຳຂອງຂຶ້ນໄປຮອດຜາຕັດແກ້ ແລະຜາຕັ້ງໃນນັ້ນໄດ້ປາກົດເຫັນທອງຄຳຕິດປາຍໄມ້ຖໍ່ຂຶ້ນມາເປັນກ້ອນໃຫຍ່, ແຕ່ຍ້ອນການປະຕິບັດຕາມຄຳແນະນຳຂອງມະຫາເຖນຢ່າງເຄັ່ງຄັດເຫັນທອງຄຳຕິດປາຍໄມ້ຖໍ່ຂຶ້ນມາສອງສາມເທື່ອທ້າວຈັນທາກໍບໍ່ເອົາ, ຈົນວ່າພວກບ່າວເຮືອໂອຍຄາງ ແລະຕົບເອິກຕີອາງຈົ່ມວ່າເສຍດາຍເດ! ເສຍດາຍເດ! ໃນຂະນະທີ່ເຫັນທ້າວຈັນທາປ່ອນກ້ອນຄຳລົງໃນນ້ຳ. ເມື່ອໄດ້ຍິນທຸກຄົນຈົ່ມເສຍດາຍທ້າວຈິ່ງກ່າວວ່າ: ພວກເຈົ້າທັງຫລາຍເອີຍ! ຢ່າເສຍດາຍເທີ້ນ! ເຮົາຈັກໄດ້ພາຍພາກໜ້າພຸ້ນຫລາຍກວ່ານີ້ໝື່ນຕໍ່ແສນຕໍ່ທີ່ແທ້ດາຍ. ວ່າແລ້ວກໍພາກັນສືບຕໍ່ຖໍ່ເຮືອຂຶ້ນເມືອເໜືອຊັກໄຊ້ຈົນຮອດດອນແຫ່ງໜຶ່ງຮຽກວ່າ "ດອນຊາຍຄວາຍຮ້າ" ໄປຮອດຫັ້ນກໍເປັນເວລາຄ່ຳ

ພໍດີຈົ່ງພາກັນຈອດເຮືອໄວ້ທ່າແລ້ວພາກັນປຸກຕູບແປງຜາມພັກເຊົາຢູ່ທີ່ດອນນັ້ນ. ຕົ້ນເຊົ້າ ມາໄດ້ເຫັນຊາຍຄົນໜຶ່ງແບກກ້ອນຫີນ ລົງມາທ, ທ້າວຈັນ ທາໄດ້ຖາມວ່າ, ດູລາທ່ານ, ທ່ານ ແບກວັດຖຸສິ່ງນັ້ນມາເຮັດຫຍັງນີ້ນາ? ຊາຍຄົນນັ້ນຕອບວ່າ ຂ້ອຍແບກກ້ອນຫີນສິ່ງນີ້ມາແລກ ປ່ຽນເຄື່ອງຄ້າບາງອັນຂອງທ່ານທັງຫລາຍດາຍ. ເມື່ອໄດ້ຍິນແນວນັ້ນທ້າວຈັນທາຈົ່ງ ກ່າວວ່າ ອັນທ່ານແບກມານັ້ນແມ່ນກອນຄຳແດງ ແພງຄຳ ມາກແທ້ດາຍ

ເມື່ອໄດ້ຍິນແນວນັ້ນ ຊາຍຄົນນັ້ນກໍປ່ຽງລົງຈາກບ່າ, ກ້ອນຫີນລັບມີດຝົນພ້າກໍກາຍ ເປັນກ້ອນຄຳແດງລາຄາແພງມາກມາຍແທ້ດາຍ. ທີ່ພົບເຫັນຕ່າງງຶດງໍ້ອັດສະຈັນຈົ່ງພ້ອມ ກັນ ຈັດຕັ້ງ ພິທີມະໂຫລານທຳການສະຫລອງ 7 ວັນ 7 ຄືນ ຢ່າງຄຶກຄື້ນໃ ນມື້ວັນຖ້ວນ 7 ນັ້ນ. ທ້າວຈັນທາຈົ່ງໄດ້ໃຫ້ຄົນທັງຫລາຍໄປເກັບເອົາກ້ອນຄຳມາກອງໄວ້ເປັນຊັບສົມບັດຂອງບ້ານ ເມືອງ. ນອກຈາກນັ້ນກໍແຈກຢາຍໃຫ້ຄົນທັງຫລາຍຈົນທົ່ວໜ້າ. ເຫດການອັນໜ້າອັດສະຈັນ ນັ້ນເປັນຂ່າວຂ່າລືພີແຜ່ໄປທົ່ວທຸກແຫ່ງຫົນ, ຝູງຄົນທີ່ຢູ່ແດນໄກທະຍອຍກັນເຂົ້າມາເຕົ້າ ໂຮມເປັນອັນມາກ ແລະພ້ອມກັນຍ້ອງຍໍສັນລະເສີນບຸນຄຸນຂອງຈັນທາພໍ່ຄ້າພູເປັນທີ່ຍິ່ງ. ເນື່ອງຈາກວ່າຜູ້ຄົນມາເຕົ້າໂຮມຢູ່ຢ່າງໜາແໜ້ນອັ່ງອໍ ດັ່ງນັ້ນ, ປ່າດົງພົງໄພແຖວນັ້ນຈົ່ງ ຖືກຖາງອອກເພື່ອສ້າງຫໍຜາສາດລາຊະວັງແລະເວລາຂຸດດິນລົງເພື່ອເອົາເສົາຝັງຊ້ຳພັດໄດ້ ພົບແຜ່ນທອງໃນພື້ນແຜ່ນດິນອັນມາກ. ດັ່ງນັ້ນ, ຫໍພະສາດຫລັງນັ້ນຈົ່ງໄດ້ຖືກໃສ່ຊື່ວ່າໂລ ຫະຜາສາດ ຫລືໂຮງຊຸງດົງຊຸງທອງຕາມນິມິດສອງປະການດັ່ງກ່າວ. ເມື່ອສຳເລັດແລ້ວ ຈົ່ງພ້ອມກັນເອົາກ້ອນຄຳມາກໍ່ກອງຢອງກັນຂຶ້ນເປັນລາຊະບັນລັງແລ້ວເຊີນຈັນທາພໍ່ຄ້າຂາຍ ພູຂຶ້ນນັ່ງເທິງກອງຄຳ ແລະທຳລາພິເສັກໃຫ້ເປັນເຈົ້າພະຍາປົກຄອງເມືອງ, ຂະໜານນາມ ວ່າພະຍາຈັນທະພານິດສະຖິດສຸວັນນະພູມທີລີຊ່ໂດຍເປັນນະຄອນຫລວງໃຫຍ່ ແລະສວຍ ງາມອັນມີນາມວ່າຊຸງດົງຊຸງທອງແຕ່ນັ້ນມາ. ເມື່ອໄດ້ຂຶ້ນສະເຫວີຍລາດບ້ານເມືອງແລ້ວ ພະຍາຈັນທະພານິດກໍບໍ່ໄດ້ປະໝາດເມົາມົວຄວາມສຸກສ່ວນຕົວຂອງພະອົງ, ພະອົງໄດ້ຊົງ ນຳພາໄພ່ຟ້າ ປະຊາກອນສ້າງສາບ້ານເມືອງໃຫ້ຮຸ່ງເຮືອງຍິ່ງຂຶ້ນ ຈົນດິນແດນຊຸງທອງຈົ່ງໄດ້ ກາຍເປັນບ້ານຮັ່ງ ເມືອງມີທີ່ອຸດົມສົມບູນໄປດ້ວຍຊັບສິນເງິນຄຳເຂົ້ານ້ຳຊ້ຳປາໄພ່ຟ້າປະຊາ ກອນກໍໄດ້ແຕ່ຄວາມຍິກຍ້ອງ ແລະຢູ່ເຢັນເປັນສຸກເປັນເວລາເທິງນານ. ເມື່ອສັງຂານແຫ່ງ ຕົນເຖົ້າແກ່ແລ້ວພະຍາຈັນທະພານິດຈົ່ງເຫັນວ່າ ຕົນເອງຈະບໍ່ຕັ້ງທ່ຽງຖາວອນຕໍ່ໄປພາຍໜ້າ ບ້ານເມືອງກໍມີການຜັນແປໄປຕາມຍຸກຕາມສະໄໝອາດຈະເກີດໂພຍໄພຕາມທຳມະຊາດ ແລະສົງຄາມ. ຖ້າຫາກບໍ່ມີປົກປັກຮັກສາໄວ້ຊັບສົມບັດເຂົ້າຂອງທີ່ສະສົມໄວ້ເປັນ ທີ່ອັນມາກ ກໍຈັກຖືກຈິບຫາຍສາບສູນໄປ ແລະລູກຫລານຜູ້ສືບເຊື້ອສະກຸນກໍຈັກໄດ້ຮັບຄຳ ອິດຢາກ.

ເມື່ອຄິດດັ່ງນັ້ນແລ້ວ ພະຍາຈັນທະພານິດຈຶ່ງໄດ້ລະດົມໄພ່ພົນຂົນເອົາຊັບສົມບັດ ເຂົ້າຂອງເງິນຄຳນັບເປັນໂກດເປັນແສນເຂົ້າໃສ່ກັນໄວ້ສາງໃຫຍ່ໃນຖ້ຳພູຊວງນ້ອຍ ແລະພູ ຊວງຫລວງແລ້ວກໍແປງຮ່າວຕ່າວຍົນຫ້ຳງຕັນໄວ້ແຈບ ຈາກນັ້ນ ກໍປັ້ນຮູບນິທຍາງຢືນໂສກເສົ້າ ທ່ວມເທົ່ງຢູ່ທີ່ນັ້ນ.

ຫລັງຈາກພະຍາຈັນທະພານິດໄດ້ມ້ຽນຊັບສົມບັດໄວ້ດີ້ແລ້ວ.ຢູ່ຕໍ່ໜ້າພະຍາກໍໝົດອາ ຍຸສັງຂານຂອງຕົນ. ເຖົ້າແກ່ບູຮານເຄີຍກ່າວໄວ້ວ່າ ການທີ່ພະຍາຈັນທະພານິດປັ້ນຮູບນິທ ຍາງຢືນໂສກເສົ້າທ່ວມເທົ່ງໄວ້ຖ້ຳນັ້ນເພື່ອວ່າຈະໃຫ້ຄົນມີປັນຍາສົບທຳສົບຮູ້ຫາເຫັນ ຊັບ ສົມບັດໃນເມື່ອເວລາຜ່ານພົ້ນໄປແລ້ວ. ອີກປະການຈະໃຫ້ຜູ້ມີປັ້ນຍາ 12 ຂໍ້ອັນມີໃນນິທານ ນິທຍາງຊື່ວ່າ ກິຍຸໂຍກ ໃນປາງກ່ອນໃຫ້ສຸລຸລ່ວງໄປເພື່ອໃຫ້ປະໂຫຍດໃນການຕົກແຕ່ງວຸກ ບ້ານການເມືອງ. ແຕ່ວ່າເມື່ອໃດຫາກບໍ່ທັນເຖິງຍຸກສະໄໝ ແລະແກ້ໄຂບັນຫານິທຍາງຍັງ ບໍ່ທັນຕົກແຕກ, ຄົນເຮົາກໍບໍ່ສາມາດເຫັນນິທຍາງທັງ 12 ຂໍ້ເຫັນ ດັ່ງນີ້

1. ນິທຍາງເອີຍ! ເປັນຫຍັງເຈົ້າບໍ່ກອກ ຂ້ອຍບໍ່ກອກ ຍ້ອນປາບໍ່ບ້ອນ
2. ປາເອີ່ຍເຈົ້າເປັນຫຍັງບໍ່ບ້ອນ? ຂ້ອຍບໍ່ບ້ອນຍ້ອນຫຍ້ຳໄຊຣິກ
3. ຫຍ້ຳໄຊເອີ່ຍເປັນຫຍັງຈຶ່ງຣິກ? ຂ້ອຍຣິກຍ້ອນງົວບໍ່ກັດ
4. ງົວເອີ່ຍເປັນຫຍັງບໍ່ກັດ? ຂ້ອຍບໍ່ກັດຍ້ອນເຈົ້າຂອງບໍ່ປ່ອຍ
5. ເຈົ້າຂອງເອີ່ຍເປັນຫຍັງບໍ່ປ່ອຍງົວ? ຍ້ອນຂ້ອຍຍັງແສບທ້ອງຫິວເຂົ້ຳ
6. ທ້ອງເອີ່ຍເປັນຫຍັງຈຶ່ງແສບ? ຂ້ອຍແສບທ້ອງຍ້ອນເຂົ້ຳບໍ່ສຸກ
7. ເຂົ້ຳເອີ່ຍເປັນຫຍັງຈຶ່ງບໍ່ສຸກ? ບໍ່ສຸກແລ້ວຍ້ອນໄຟບໍ່ລຸກ
8. ໄຟເອີ່ຍເປັນຫຍັງບໍ່ລຸກ? ຂ້ອຍບໍ່ລຸກຍ້ອນຟືນຊຸ່ມ
9. ຟືນເອີ່ຍເປັນຫຍງັຈຶ່ງຊຸ່ມ? ຊຸ່ມແທ້ຍ້ອນຝົນຕົກຮຳ
10. ຝົນເອີ່ຍເປັນຫຍັງຈຶ່ງຕົກຮຳ? ຍ້ອນກົບຊຽດຮ້ອງຫລາຍ
11. ກົບຊຽດເອີ່ຍເປັນຫຍັງຈຶ່ງຮ້ອງ? ຮ້ອງແທ້ຍ້ອນງູໄລ່ກັດ
12. ງູເອີ່ຍເປັນຫຍັງຈຶ່ງໄລ່ກັດຊຽດ ???

ບັນຫານິທຍາງ 12 ຂໍ້ນັ້ນເປັນບັນຫາພົວພັນເຊິ່ງກັນ ແລະກັນຢ່າງແໜ້ນແຟ້ນ ແລະ ບັນຫາສຸດທ້າຍໄດ້ແກ່ງູບັນດານັກປາດອາຈາມແຕ່ເກົ່າກ່ອນເຄີຍມີການຄົ້ນຄວ້າ ແລະອະທິ ບາຍກັນມາແລ້ວເປັນອັນມາກແຕ່ບໍ່ສາມາດຈັດການແກ້ໄຂບັນຫານັ້ນໃຫ້ຕົກໄປຢ່າງເປັນຕົວ ຈິງໄດ້ດັ່ງພະຍາຈັນທະພານິດຜູ້ຄິດກວ້າງມອງໄກຈຶ່ງໄດ້ປັ້ນແຕ່ງຮູບນິທຍາງໄວ້ເປັນສັນຍະ ລັກໝາຍໄວ້ເມື່ອໃດຫາກເຖິງຍຸກສະໄໝ ແລະຄົນເຮົາກໍແກ້ໄຂບັນຫານິທຍາງໄດ້ແລ້ວ

ເມື່ອນັ້ນຮູບນິກຍາງກໍປາກົດແກ່ສາຍຕາຄົນທັ້ງຫລາຍແລ້ວຄົນຜູ້ມີສົນທຳ ແລະຄົນມີສະຕິປັນຍາທັ້ງຫລາຍກໍຈະສາມາດຄົ້ນພົບ ແລະນຳເອົາຊັບສົມບັດເຂົ້າຂອງເງິນຄຳທີ່ຈັນທະພາມິດຝັງໄວ້ໃນພື້ນດິນນັ້ນອອກມາຮັບໃຊ້ໃຫ້ເປັນປະໂຫຍດໃນການກໍ່ສ້າງປັບປຸງຊາດໃຫ້ເຂັ້ມແຂງສ້າງແປງບ້ານເມືອງໃຫ້ຮຸ່ງເຮືອງເຫຼືອງງາມສົມຕາມຈິດໃຈຂອງປະຊາຊົນຊົງເປັນຫວ່ງໄຍ ນຳລູຫລານເຫລັນຫລ້ອນຜູ້ສືບເຊື້ອຕະກຸນລາວ.

ເລື່ອງ: ຂຸນບູລົມ

ແຕ່ກີ້ແຕ່ກ່ອນພຸ້ນໃນເມືອງຟ້າຍັງມີແຖນຕົນໜຶ່ງຊື່ວ່າແຖນຟ້າຄົ່ນເປັນພໍ່ຂອງຂຸນບູລົມເຊິ່ງເປັນໃຫຍ່ກວ່າແຖນທັ້ງຫລາຍເຊັ່ນ ແຖນແຕ່ງ, ແຖງຄົນ, ແຖງຊັ່ງ, ແຖນເຖືອກ, ແຖນທັ້ງສີ່ຕົນນີ້ຢູ່ເທິງຊັ້ນຟ້າຕາຈູມເປັນຜູ້ແຕ່ງໂລກເບິ່ງແຍງສັດສາວາສິ່ງ ກຳນົດບາບບຸນຄຸນໂທດ ຄວາມຊົ່ວຊ້າ ຄວາມດີຂອງມະນຸດທັ້ງຫລາຍ . ຍັງມີເທວະດາຊື່ວ່າ ນາງທໍລະນີເປັນເຈົ້າແຜ່ນດິນ ນາງເມກຂະລາຮັກສາແມ່ນ້ຳ ແລະຍັງເປັນຜູ້ຮັກສາພະຍາ. ທ້າວຂຸນທັ້ງຫລາຍຜູ້ກະທຳບາບບຸນ ແລ້ວໄປລາຍງາມແຖນທັ້ງສີ່ເພື່ອໄປໂຈດຖາມ. ຕໍ່ມາກໍມີມັດຕະພົມໄດ້ລົງມາປັກຫລັກເງິນ, ຫລັກຄຳໄວ້ໃນບ່ອນທີ່ຈະຕັ້ງເມືອງໃຫ່ຍ 16 ແຫ່ງ ແລະເມືອງນ້ອຍ 15 ແຫ່ງ ແລ້ວຈຶ່ງໃຫ້ພະພົມຕົນຊື່ວ່າບໍລະເມສວນຮັກສາທິດຕາເວັນອອກ, ພາມາລາຍຮັກສາທິດຕາເວັນຕົກ, ມະໂນສິດຮັກສາທິດເໜືອ ແລະເສລາສິດ ເປັນຜູ້ຮັກສາທິດໃຕ້ ພ້ອມທັ້ງເປັນຜູ້ສອນວິຊາອາຊີບຕະຫລອດເຖິງສິລະປະກຳຕ່າງໆ. ຢູ່ຕໍ່ມາຈຶ່ງມີພະລີສີສອງອ້າຍນ້ອງລົງມາຕັ້ງຫລັກໝາຍໄວ້ຢູ່ເມືອງຊຽງທອງແລ້ວເອີ້ນພະຍານາກ 15 ຕົວລົງມາສັ່ງສອນແລ້ວກໍມອບໝາຍໜ້າທີ່ໃຫ້ເພື່ອຮັກສາບ້ານເມືອງ. ຈາກນັ້ນພະຍາລີສີທັ້ງສອງກໍໄດ້ຮຽກເອົາເທວະດາທັກຕົນມາສັ່ງສອນອີກຄື ປູ່ພິສິດຍ່າພິໄສທີ່ພູຊວງຫລວງ ແລະພູຊ້າງນ້ອຍທັ້ງສອງຜົວເມຍນີ້ມີໜ້າທີ່ຮັກສາທາງທິດຕາເວັນອອກ, ທ້າວຂຸນເຫລືອກັບນາງເກົ້າງ້າວຢູ່ພູແສນເຂົາຄຳໃຫ້ຮັກສາເມືອງຝ່າຍເໜືອດ້ວຟ້າແສດ ແລະນາງພິຈິກໃຫ້ຮັກສາເມືອງຝ່າຍໃຕ້. ແຕ່ນັ້ນ ພະລີສີສອງອ້າຍນ້ອງ ຈຶ່ງໄດ້ໃສ່ຊື່ດິນແດນແຫ່ງນັ້ນເປັນເມືອງຊວາ (ລ້ານຊ້າງ) ແລ້ວກໍໃຫ້ພະລີສີເຝົ້າຢູ່ທີ່ນັ້ນ.

ສ່ວນຜູ້ເປັນອ້າຍກໍກັບຄືນເມືອງຟ້າ ເພື່ອລາຍງານຜົນງານສະພາບການທັ້ງມວນແກ່ແຖນຫລວງ ພ້ອມກັນນັ້ນ ກໍຂໍຮ້ອງໃຫ້ແຖນຫລວງແຕ່ງຕັ້ງຜູ້ທີ່ມີຄວາມເກັ່ງກ້າ ສາມາດ

ພ້ອມດ້ວຍຄຸນສົມບັດອັນດີລົງມາຄອບຄອງເມືອງດັ່ງກ່າວ ແຕ່ນັ້ນແຖນທລວງຈຶ່ງໄດ້ແຕ່ງຂຸນ ບູລົມມາຄອບຄອງເມືອງລຸ່ມພ້ອມທັງມອບລູກສາວຂອງແຖນພົມຊີ້ຍົມມະລາໃຫ້ເປັນເມຍ ທລວງ, ນາງເອດແຄງລູກສາວແຖນຊັ່ງ ໃຫ້ເປັນເມຍນ້ອຍ ພ້ອມທັງມອບເຄື່ອງໃຊ້ສອຍ ຕ່າງໆ ແລະສາວຮັບໃຊ້ຈຳນວນໜຶ່ງ. ໃນການລົງມາເມືອງລຸ່ມນີ້ຍັງມີຂຸນທຳມະລາດ, ຂຸນ ແສງໄປກ່ອນ, ຂຸນອຸ່ນ, ຂຸນຂະລີ ຂີ່ມ້າຕາມຫລັງຊ້າງຂອງຂຸນບູລົມ. ປູ່ເຍີແມ່ຍ່າງ່າມແບກ ຂວານໄປກ່ອນ, ເຖົ້າໄລ່ແມ່ມົດຈັບພ້າແບກຈົກຖືສຽມໄປຕາມຫລັງ ເຖົ້າເຍີແມ່ຍ່າງາມ, ທັງ ສີ່ຄົນນີ້ມີໜ້າທີ່ປາບຜີເຜດ. ຜີຍັກ, ຜີເຊື້ອ, ຜີເມືອງ ກ່ອນຂຸນບູລົມຈະລົງມາຮອດ. ຕໍ່ຈາກ ນັ້ນແຖນຈຶ່ງຊີ້ບອກບ່ອນໃຫ້ແກ່ຂຸນບູລົມວ່າ ໃຫ້ໄປຢູ່ເມືອງນານ້ອຍອ້ອຍໜູຢູ່ທີ່ນັ້ນເປັນ ເວ ລາ 9 ປີ, ຂຸນບູລົມກໍໄດ້ລູກຊາຍ 7 ຄົນ ຄືຂຸນລໍ, ຈຸສົງ, ຂຸນອົນ, ຂຸນເຈັດຈ່ຽງ, (ເປັນລູກເມຍ ທລວງ); ລູກເມຍນ້ອຍມີຂຸນລ້ານ, ຂຸນພວງ ແລະ ຂຸນເຈັດເຈືອງ.

ເມື່ອຢູ່ຮ່ວມກັນຕໍ່ມາ, ຂຸນບູລົມພ້ອມທັງເມຍ 2 ຄົນກໍຈົ່ມທຸກຈົ່ມຍາກໃຫ້ຂຸນສາມ ປ່ເຍີ, ແມ່ຍ່າງ່າມເມື່ອລາຍງານນຳແຖນຟ້າຄືນວ່າເຄືອເຂົາກາດທີ່ເອງດູວ່າດົກໜາແດດບໍ່ ເຫັນຕາເວັນບໍ່ສ່ອງ, ເຄືອໜາກນ້ຳເຕົ້າປຸງສອງໜ່ວຍກໍກ້ຽວຕົ້ນໄຮທີ່ຫົວໜອງ, ແຮງທົກ ແຮງມົດບໍ່ເຫັນຟ້າ ບໍ່ເຫັນເຫັນຝົນ ແດດບໍ່ເຫັນ ຕາເວັນບໍ່ສ່ອງ ເຮັດໃຫ້ເມືອງລຸ່ມມີອາກາດ ໜາວຢ່າງໜັກໜ່ວງ, ເມື່ອແຖນໄດ້ຟັງເຊັ່ນນັ້ນແລ້ວ ແຕ່ງໃຫ້ປູ່ເຍີແມ່ຍ່າງ່າມໄປຕັດເຄືອ ເຂົາກາດ ປ້ຳຕົ້ນໄຮຫລວງ . ເຖົ້າໄລ່ແມ່ມົດໄປປ້ຳຕົ້ນໄຮຫລວງ. ແຖນສົ່ວ ໄປສົ່ວໜາກນ້ຳ ເຕົ້າປຸງໜ່ວຍອ້າຍ, ແຖນຊີມາຊີໜາກນ້ຳເຕົ້າປຸງໜ່ວຍນ້ອງ, ເຮັດໃຫ້ຜູ້ຍິງຜູ້ຊາຍທັງຫລາຍ ຕະຫລອດຮອດສັດສາວາສິ່ງຫລຸຫລັ່ງທັ່ງເທອອກມາ, ຈາກນັ້ນປູ່ເຍີເຖົ້າໄລ່ວ່າ ເມື່ອສູເຈົ້າ ຕັດເຄືອເຂົາກາດ, ປ້ຳຕົ້ນໄຮຫລວງ ແລະຜ່າໜາກນ້ຳເຕົ້າແລ້ວສູຢ່າພາກັນຂຶ້ນເມືອເມືອງ ຟ້າຫາຕູອີກ. ຄັນສູທັງສີ່ຕາຍແລ້ວໄຫເມືອງລຸ່ມໄດ້ກິນອັນໃດກໍໃຫ້ເອີ້ນສູທັງສີ່ມາກິນກ່ອນ.

ນັບແຕ່ນັ້ນມາ, ບ້ານເມືອງຂອງຂຸນບູລົມທີ່ນານ້ອຍອ້ອຍໜູຮູ້ແຈ້ງທຸກປະການ. ປູ່ ເຍີ, ແມ່ຍ່າງ່າມ ເຖົ້າໄລ່, ແມ່ມົດກໍຕາຍໄປເປັນຜີເຊື້ອເມືອງ, ສ່ວນຂຸນບູລົມກໍໄດ້ເລືອກເອົາ ນາງສາວສວຍສົດງົດງາມທີ່ອອກມາຈາກນ້ຳເຕົ້າປຸງໜ່ວຍນັ້ນມາເປັນລູກໃພ້. ພ້ອມດຽວກັນ ນັ້ນຂຸນບູລົມກໍໄດ້ແຕ່ງຕັ້ງ ໃຫ້ລູກຊາຍທັງ 7 ໄປປົກຄອງເມືອງຕ່າງໆຄື

- ຂຸນລໍໃຫ້ໄປປົກຄອງເມືອງລ້ານຊ້າງ
- ຂຸນລ້ານໃຫ້ໄປປົກຄອງເມືອງຫ້ໍວ່ອງ
- ຂຸນສົງໃຫ້ໄປປົກຄອງເມືອງຈຸລະພົນພົມມະທັດ
- ຂຸນຄຳພວງໃຫ້ໄປປົກຄອງເມືອງກຸ່ມກ່າມໂຍນົກ

- ຂຸນອິນໃຫ້ໄປປົກຄອງເມືອງລະໂວ້ໂຍທິຍາ
- ຂຸນເຈັດໃຫ້ໄປປົກຄອງເມືອງຕາເວັນອອກ
- ຂຸນເຈັດຈຸງໃຫ້ໄປປົກຄອງເມືອງມ່ວນ

ກ່ອນຈະປົກຄອງແຫ່ງຕ່າງໆນັ້ນຂຸນບູລົມຜູ້ເປັນພໍ່ໄດ້ໃຫ້ໂອວາດຕັກເຕືອນລູກຊາຍທັງເຈັດ ພ້ອມດ້ວຍລູກໃພ້ກ່ຽວກັບຣີດບ້ານຄອງເມືອງ, ຫລັກການປົກຄອງໄພ່ຟ້າປະຊາກອນໃຫ້ມີນ້ຳໃຈເອື້ອເຟື້ອອາລີເຜື່ອແຜ່ຊ່ວຍເຫລືອເກື້ອກູນຜູ້ທຸກຍາກຕະຫລອດເຖິງຄົນຂໍທານທັງຫລາຍ.

ບົດທີ 3

ນິທານອັດສະຈັນ (ນິທານບູຮານ)

1. ຄວາມໝາຍ ແລະລັກສະນະພິເສດຂອງນິທານອັດສະຈັນ

ຄຳວ່າ "ນິທານ" ໃນພາສາປາລີໝາຍເຖິງເລື່ອງແຕ່ເກົ່າ, ເລື່ອງທີ່ເລົ່າກັນມາ, ນິທານຊາດົກຕ່າງໆ, ນິທານບູຮານຕ່າງໆ, ເຫດການເຊັ່ນ ເກີດເຫດການນິທານແນວໃດເປັນຕົ້ນ, ການຝັງໄວ້, ການບັນຈຸ, ບ່ອນຝັງ, ບ່ອນບັນຈຸ. ສ່ວນຄຳວ່າ "ອັດສະຈັນ" ແມ່ນພາສາສັນສະກິດມີຄວາມໝາຍວ່າ ປະຫຼາດ, ໜ້າງຶດງໍ້ ດັ່ງວ່າ ອັດສະຈັນໃຈໂອ້ເຂົ້າສານຢູ່ໂອຍໍຄໍຕອດໄກ່ (ບັນຫາ) ເມື່ອໂຮມເຂົ້າກັນເປັນ 'ນິທານອັດສະຈັນ".

ນິທານອັດສະຈັນແມ່ນເລື່ອງເລົ່າພື້ນເມືອງປະເພດໜຶ່ງທີ່ມີບົດບາດສຳຄັນເປັນພິເສດຢູ່ໃນວັນນະຄະດີພື້ນເມືອງປະເພດຄຳຮ້ອຍແກ້ວຂອງລາວເຮົາ. ຕົວລະຄອນໃນນິທານອັດສະຈັນແມ່ນຕົວລະຄອນທີ່ປະຊາຊົນປະດິດແຕ່ງຂຶ້ນເພື່ອເປັນຕົວແທນໃຫ້ແກ່ຄົນໃນສັງຄົມ. ຖ້າຫາກວ່າ ເທບນິຍາຍໄດ້ສ່ອງແສງເຖິງຄວາມຮັບຮູ້ຂອງຊາວບູຮານຕໍ່ໂລກທຳມະຊາດ ແລະສັງຄົມແບບເຫຼືອເຊື່ອ, ເພີນຈິດແລະມະຫັດສະຈັນແລ້ວ, ນິທານອັດສະຈັນພັດສ່ອງແສງເຖິງຄວາມຮັບຮູ້ຂອງຄົນເຮົາຕໍ່ບັນຫາຕ່າງໆຂອງສັງຄົມທີ່ຊັບຊ້ອນ ການຕໍ່ສູ້ລະຫວ່າງຄວາມເປັນທຳກັບຄວາມອະທຳໃນສັງຄົມ, ທັດສະນະ ແລະຄວາມມຸ່ງມາດປາຖະໜາຫາຄວາມສຸກຂອງປະຊາຊົນ... ນິທານອັດສະຈັນໄດ້ແກ້ໄຂບັນຫາເຫຼົ່ານັ້ນດ້ວຍຮູບ ການເຫຼືອເຊື່ອເພີນຈິດ ແລະມະຫັດ ສະຈັນ.

ນິທານອັດສະຈັນກັບພື້ນສິບກໍມີອັນແຕກຕ່າງກັນຢ່າງຈະແຈ້ງຄື ພື້ນສິບເປັນບົດເລົ່າເລື່ອງກ່ຽວກັບເຫດການ ແລະຕົວລະຄອນທີ່ຕິດພັນກັບປະຫວັດສາດ, ແຕ່ວ່າການເລົ່ານິທານເສກສັນປັ້ນແຕ່ງຕື່ມ ເຮັດໃຫ້ບັນດາເຫດການ ແລະຕົວລະຄອນເຫຼົ່ານັ້ນມີຊີວິດຊີວາຕາມທັດສະນະຂອງມະຫາຊົນ. ດັ່ງນັ້ນ, ພື້ນສິບຈຶ່ງມີລັກສະນະເຫຼືອເຊື່ອເພີນຈິດ ແລະ

ມະຫັດສະຈັນຄືກັນກັບນິທານອັດສະຈັນ. ບັນຫາສຳຄັນແມ່ນຄວາມເຊື່ອຂອງມະຫາຊົນວ່າ ບົດເລື່ອງນັ້ນຕ້ອງມີຄວາມຈິງຢູ່ໃນປະຫວັດສາດ, ກົງກັນຂ້າມນິທານອັດສະຈັນເຖິງວ່າຈະ ມີເນື້ອໃນສັດຈະທັດຢູ່ແລ້ວກໍຕາມ, ແຕ່ວ່າຄົນເຮົາບໍ່ອາດຈະເຊື່ອວ່າເລື່ອງນັ້ນເປັນຄວາມ ຈິງໄດ້. ມັນພຽງແຕ່ສ່ອງແສງເຖິງຄວາມເປັນຈິງດ້ວຍຮູບພາບສິລະປະວັນນະຄະດີເພື່ອ ເປັນການຊຸກຍູ້ປຸກລະດົມກຳລັງໃຈໃຫ້ແກ່ຄົນເຮົາເທົ່ານັ້ນ.

ນິທານອັດສະຈັນເກີດຂຶ້ນໃນສັງຄົມ ທີ່ເລີ່ມຕົ້ນມີການຜັນແຍກຊົນຊັ້ນ ແລະມີການ ແບ່ງອອກເປັນແຕ່ລະຄອບຄົວ; ຢູ່ໃນສັງຄົມເລີ່ມຕົ້ນເກີດມີຄົນຮັ່ງ ແລະຜູ້ທຸກຍາກ; ມີຜູ້ປົກ ຄອງ ແລະຖືກປົກຄອງ. ເນື້ອໃນຕົ້ນຕໍຂອງນິທານອັດສະຈັນແມ່ນບັນຫາໃຈກາງຂອງສັງ ຄົມທີ່ມີຊົນຊັ້ນຄື ຄວາມຂັດແຍ່ງຂອງສັງຄົມ, ການດຳລົງຊີວິດ, ຄວາມມຸ່ງມາດປາຖະໜາ ຫາຄວາມເປັນທຳ ແລະຄວາມສຸກຂອງປະຊາຊົນຜູ້ຖືກກົດຂີ່ຂູດຮີດ. ສຳລັບການຕໍ່ສູ້ຕ້ານ ໄພທຳມະຊາດ ແລະອະທິບາຍປາກົດການທຳມະຊາດນັ້ນບໍ່ແມ່ນບັນຫາຕົ້ນຕໍຂອງນິທານ ອັດສະຈັນອີກ.

ການປະກອບສ້າງໂຄງຮ່າງຂອງບົດນິທານອັດສະຈັນໜຶ່ງໆເຄີຍໄດ້ຈັດວາງໄປຕາມ ກາລະເທສະແຕ່ຕ່ຳໄປຫາສູງ. ຕົວລະຄອນໃນບົດເລື່ອງໄດ້ຈັດແບ່ງອອກເປັນສອງຝ່າຍ ຢ່າງຈະແຈ້ງຄື ຝ່າຍສິນທຳ ແລະຝ່າຍອະທຳ. ຕົວແທນຂອງຝ່າຍສິນທຳມັກຈະແມ່ນກຳ ພ້າ (ຊາຍ ຫຼືຍິງ) ທີ່ທຸກຍາກຂາດເຂີນ, ແຕ່ຫາກດຸໝັ່ນຂະຫຍັນພຽນໃນການອອກແຮງ ງານ, ມີນ້ຳໃຈຊື່ສັດ, ກວ້າງຂວາງເມດຕານິ ແລະອົງອາດກ້າຫານ. ສຳລັບຕົວແທນຂອງ ຝ່າຍອະທຳນັ້ນມັກຈະແມ່ນພ້ະຍາ ຫຼື ເສນາອຳມາດຊັ້ນສູງທີ່ຮັ່ງມີແຕ່ໂຫດຮ້າຍຄັບແຄບ ຂີ້ຄ້ານໂລບມາກໂລພາ. ເພື່ອແກ້ໄຂຂໍ້ຂັດແຍ່ງທາງສັງຄົມ ແລະຢັ້ງຢືນເຖິງບັນຫາສັດຈະ ທຳຂອງປະຊາຊົນທີ່ວ່າ: "ສິນທຳຕ້ອງຊະນະອະທຳ", ຕົວລະຄອນສອງຝ່າຍນັ້ນຕ້ອງໄດ້ ຕໍ່ສູ້ກັນຫຼາຍຮູບຫຼາຍແບບທີ່ສຸດ ຜົນສຸດທ້າຍຕົວລະຄອນຝ່າຍສິນທຳໄດ້ເອົາຊະນະຕົວລະ ຄອນຝ່າຍອະທຳສະເໝີ.

ນິທານອັດສະຈັນ ໄດ້ຂະຫຍາຍຕົວແຮງໃນສັງຄົມສັກດິນາເຊິ່ງແມ່ນສະໄໝຈະເລີນ ຮຸ່ງເຮືອງຂອງສາສະໜາ. ດັ່ງນັ້ນ, ມັນໄດ້ສົ່ງຜົນສະທ້ອນເຖິງການປະດິດແຕ່ງນິທານຂອງ ລາວເຮົາຢ່າງເລິກເຊິ່ງສົມຄວນ. ຜົນສະທ້ອນຂອງສາສະໜາພຸດທີ່ຖືກພວກສັກນາຜູ້ປົກ ຄອງສວຍໃຊ້ມາແຕ່ເບື້ອງຕົ້ນນັ້ນ ໄດ້ພາໃຫ້ລັກສະນະຕໍ່ສູ້ຂອງນິທານອັດສະຈັນລາວຈຳ ນວນໜຶ່ງລົດໜ້ອຍຖອຍລົງ.

ນິທານທີ່ໄດ້ຮັບຜົນສະທ້ອນຈາກສາສະໜາພຸດນັ້ນ ຄູ່ຕໍ່ສູ້ປໍລະປັກຂອງຕົວລະຄອນ ກຳພ້າເຊິ່ງເປັນຕົວແທນຂອງຝ່າຍສິນທຳ ແລະຝ່າຍປະຊາຊົນຜູ້ອອກແຮງງານນັ້ນບໍ່ແມ່ນ ພະຍາຄືດັ່ງທີ່ເປັນມາ ໃນນິທານອັດສະຈັນສ່ວນຫຼວງຫຼາຍ, ຫາກເປັນພຽງເສນາອຳມາດ

ຊັ້ນສູງໃດໜຶ່ງ ຫຼື ເປັນພຽງແມ່ນ້ຳ ສ່ວນພະຍາເອງຍັງຄົງເປັນຜູ້ມີສິນທຳ, ໜ້າເຄົາລົບຢຳ ເກງ ແລະມີບົດບາດຄືຜູ້ພິພາກສາທີ່ທ່ຽງທຳຜູ້ໜຶ່ງ ດັ່ງໃນເລື່ອງ "ນາງເຕົ່າຄຳ" ເປັນຕົ້ນ; ເມື່ອເອົາຊະນະສັດຕູຂອງຕົນໄດ້ແລ້ວຕົວລະຄອນກຳພ້າກໍບໍ່ໄດ້ຂຶ້ນຄອງເມືອງແທນພະຍາ ຄືຢູ່ໃນນິທານແບບ"ກຳພ້າຜີນ້ອຍ"ອີກ, ຫາກພຽງໄດ້ແຕ່ງຕັ້ງເປັນເສນາອຳມາດຊັ້ນໃດໜຶ່ງ ຂອງພະຍາ ຫຼືຖ້າເປັນນາງກຳພ້າກໍພຽງແຕ່ໄດ້ເປັນມະເຫສີຂອງພະຍາເທົ່ານັ້ນ. ໃນນິທານ ທີ່ມີຜົນສະທ້ອນຂອງສາສະໜາພຸດນີ້ ຍັງມີເລື່ອງວົນຕາຍວົນເກີດຕາມທັດສະນະຂອງ ພຸດທະສາສະໜາອີກດ້ວຍ.

ນິທທານອັດສະຈັນກໍຄືເລື່ອງເລົ່າພື້ນເມືອງປະເພດອື່ນໆ ເວົ້າລວມແມ່ນມີກຳເນີດມາ ຈາກການດຳລົງຊີວິດຕົວຈິງຂອງປະຊາຊົນຜູ້ອອກແຮງງານບັນດາເຜົ່າເຊິ່ງຕິດພັນກັບການ ຕໍ່ສູ້ຕ້ານໄພທຳມະຊາດ ແລະການຕໍ່ສູ້ທາງດ້ານສັງຄົມ. ນິທານອັດສະຈັນທີ່ມີເນື້ອໃນ ສ່ອງແສງເຖິງການຕໍ່ສູ້ຕ້ານໄພທຳມະຊາດ ແລະອະທິບາຍປະກົດການຂອງທຳມະຊາດນັ້ນ ເຄີຍເປັນເລື່ອງມີກຳເນີດມາຈາກເທບນິຍາຍ,' ຕົວລະຄອນເຖິງວ່າແມ່ນຄົນ ແຕ່ມີຮູບຮ່າງ ຜິດປົກກະຕິ ແລະມີການປະພຶດທີ່ເປັນໜ້າງຶດງໍ້ອັດສະຈັນເໝືອນດັ່ງຕົວລະຄອນແຖນ ໃນ ເທບນິຍາຍເຊັ່ນ ທ້າວເຈັດໄຫ, ອ້າຍຕົກຄົກ, ອ້າຍເກົ້າຮຸ່ງເກົ້າຮ່ວງ ແລະຜູ້ອື່ນໆ. ຕ່ຳຈາກ ນັ້ນແມ່ນນິທານໝູນໃຊ້ການອະທິບາຍເຖິງກຳເນີດການກຳເນີດຂອງຮ່ອງຮອຍ, ປາກົດການ ຂອງທຳມະຊາດໃນທ້ອງຖິ່ນຕ່າງໆ ເພື່ອສ່ອງແສງເຖິງບັນຫາສັງຄົມເຊັ່ນ ການຕໍ່ສູ້ເພື່ອລົບ ລ້າງຄວາມອາຄາດບາດໝາງລະຫວ່າງບັນດາເຜົ່າກໍຄືບັນດາກຸ່ມຄົນ ແລະຊັ້ນຄົນຕ່າງໆ, ການຕໍ່ສູ້ຕ້ານຮີດຄອງປະເພນີບາງຢ່າງທີ່ໄຮ້ມະນຸດສະທຳ. ການຕໍ່ສູ້ເພື່ອຄວາມຮັກອັນບໍລິ ສຸດສົດໃສ ແລະອື່ນໆ... ເຊິ່ງສະແດງອອກໃນເລື່ອງ "ພູບາຈ໋ງພູມະໂລ໋ງ", "ວ໋ງກາຜູກ", "ທ້ອຍຕາເຫງົ້າ" ດັ່ງນີ້ເປັນຕົ້ນ. ດັ່ງນັ້ນ, ບົດນິທານທີ່ອະທິບາຍຮ່ອງຮອຍ ແລະປາກົດ ການຂອງທຳມະຊາດຍາມໃດກໍມີຄວາມໝາຍທາງດ້ານສັງຄົມຢ່າງຈະແຈ້ງ.

ການຕໍ່ສູ້ຊົນຊັ້ນ ແລະການດຳລົງຊີວິດປະຈຳວັນຂອງປະຊາຊົນ ແມ່ນເນື້ອໃນຕົ້ນຕໍ ຂອງນິທານອັດສະຈັນ. ເມື່ອສັງຄົມມີການຂະຫຍາຍຕົວໄປເຖິງບ່ອນມີການຜັນແຍກຊົນຊັ້ນ ແລະແບ່ງອອກເປັນຄອບຄົວ, ການພົວພັນໃນຄອບຄົວກໍນັບມື້ນັບສັບສົນຂຶ້ນ, ເນື່ອງຈາກ ຖານະບົດບາດຂອງແຕ່ລະຄົນກໍບໍ່ຄືກັນເຊັ່ນ ລະຫວ່າງຜົວກັບເມຍ, ເມຍນ້ອຍກັບເມຍ ຫຼວງ, ລູກເມຍນ້ອຍກັບລູກເມຍຫ້ວງ... ດັ່ງນັ້ນ, ການພົວພັນໃນຄອບຄົວໜຶ່ງມັກມີລັກ ສະ ນະບໍ່ສະເໝີພາບ, ຂາດຄວາມຍຸຕິທຳ ແລະບາງເທື່ອກໍມີຂໍ້ຂັດແຍ່ງເຖິງຂັ້ນປ່ຽະປັກ. ນິ ທານອັດສະຈັນຈຳນວນຫຼາຍສົມຄວນທີ່ສ່ອງແສງເຖິງສະພາບການດັ່ງກ່າວມານັ້ນ ຢູ່ໃນສັງ ຄົມການພົວພັນຍິ່ງສັບສົນກວ່ານັ້ນອີກ, ມີຄົນຈຳນວນໜ້ອຍໄດ້ກາຍເປັນຄົນຮັ່ງ ແລະມີຖາ ນະໃນສັງຄົມເຂົ້າເປັນຜູ້ກົດຂີ່ຂູດຮີດຄົນຈຳນວນຫຼາຍທີ່ທຸກຍາກຂາດເຂີນອັນພາໃຫ້ເກີດມີຂໍ້

ຂັດແຍ່ງຊົນຊັ້ນທີ່ເປັນປໍລະປັກກັນຂຶ້ນ ໃນສັງຄົມຈົນນໍາໄປເຖິງການຕໍ່ສູ້ຊົນຊັ້ນຢ່າງດຸເດືອດທີ່ສຸດ. ນິທານອັດສະຈັນໄດ້ສ່ອງແສງ ແລະແກ້ບັນຫາເຫຼົ່ານີ້ດ້ວຍວິທີເພີ່ນຈິດ ແລະມະຫັດສະຈັນ.

ນິທານອັດສະຈັນເກີດຂຶ້ນໃນຊ່ວໄລຍະອັນຍາວນານທີ່ສຸດ ແລະເກີດມາຈາກຫຼາຍສາເຫດຕ່າງກັນ. ດັ່ງນັ້ນ, ນິທານອັດສະຈັນຈຶ່ງມີຄວາມສາມາດສ່ອງແສງຕົວຈິງຂອງສັງຄົມຢ່າງຮອບດ້ານຕາມທັດສະນະຂອງປະຊາຊົນ. ຫົວເລື່ອງກໍມີຄວາມອຸດົມສົມບູນ, ເນື້ອໃນກໍມີຫຼາຍບັນຫາ ແລະຫຼາຍສີສັນສົມຄວນ, ດັ່ງນັ້ນ, ການແບ່ງປະເພດນິທານອັດສະຈັນ ຈຶ່ງເປັນບັນຫາຫຍຸ້ງຍາກສັບສົນ ແລະບໍ່ທັນເປັນເອກະພາບກັນເທື່ອ.

2. ເນື້ອໃນນິທານອັດສະຈັນ

ເທບນິຍາຍ ແລະນິທານອັດສະຈັນ ລ້ວນແຕ່ມີເນື້ອໃນສ່ອງແສງເຖິງການຕໍ່ສູ້ຕ້ານໄພທໍາມະຊາດ ແລະອະທິບາຍປາກົດການທໍາມະຊາດ ໃນຈຸດປະສົງ, ວິທີ ແລະລະດັບຕ່າງກັນ, ໄພທໍາມະຊາດທີ່ສະແດງອອກໃນນິທານອັດສະຈັນບໍ່ມີລັກສະນະສັກສິດເປັນໜ້າງຶດງໍ້ຢ້ານກົວຄືໃນເທບນິຍາຍ, ມັນພຽງແຕ່ເປັນສາເຫດ, ເປັນເງື່ອນໄຂ ແລະເປັນພາຫະນະທີ່ມີຄວາມໝາຍຕິດພັນກັບບັນຫາສັງຄົມ ແລະການດໍາລົງຊີວິດຂອງຄົນເຮົາ. ນິທານອັດສະຈັນຄົນເຮົາໄດ້ມີສະຕິເປັນເຈົ້າທໍາມະຊາດ ແລະມີຄວາມສາມາດເອົາຊະນະກັບທໍາມະຊາດໄດ້ຢ່າງຈະແຈ້ງ, ທ້າວຕົ້ກຕົ້ກເມື່ອໃຫຍ່ຂຶ້ນມາໄດ້ມີຄວາມສົນໃຈວ່າເປັນຫຍັງພໍ່ແມ່, ໄທບ້ານ ແລະຕົນເອງຈຶ່ງມີຄວາມທຸກຍາກລໍາບາກ, ອຶດຢາກຂາດເຂີນແນວນີ້ເມື່ອ ຮູ້ໄດ້ກົ້ກປາຍສາເຫດຂອງມັນແລ້ວທ້າວໄດ້ຕັດສິນໃຈເອົາກໍາລັງວັງຊາ ແລະຄວາມສາມາດ ອັນມະຫາສານຂອງຕົນບຸກເບີກຂຸດເກື່ອນພູຜາປ່າດົງອັນຕົບໜາ, ສູງຊັນ ແລະກັນດານໃຫ້ກາຍເປັນທົ່ງໄຮ່ ທົ່ງນາອັນກວ້າງໃຫຍ່ໄພສານ ແລະສ້າງເໝືອງ ປ້ານຝາຍຫຼາຍແຫ່ງເພື່ອເອົານໍ້າເຂົ້າໃສ່ນາ. ນັບແຕ່ນັ້ນມາຊາວບ້ານຊາວເມືອງຈຶ່ງທໍາມາຫາກິນໄດ້ຢ່າງສະດວກສະບາຍ, ຊີວິດການເປັນຢູ່ຂອງພໍ່ແມ່ປະຊາຊົນຈຶ່ງອີ່ມໜໍາສໍາລານ. ພາຍຫຼັງທີ່ໄດ້ສ້າງທົ່ງໄຮ່ທົ່ງນາທາງພາກໃຕ້ ແລະພາກກາງສໍາເລັດລົງແລ້ວທ້າວຕົ້ກຕົ້ກຍັງສືບຕໍ່ຂຶ້ນໄປສ້າງຢູ່ທາງພາກເໜືອອີກ. ໃນຂະນະທີ່ທ້າວກໍາລັງຂຸດພູຜາຢູ່ເຂດຊຽງຂວາງນັ້ນເລີຍຖືກຜີອາຮັກທັກຄໍຕາຍ, ສະນັ້ນ, ຢູ່ຊຽງຂວາງຈຶ່ງຫາກໍເປັນພູພຽງ ແລະແຂວງຕ່າງໆຢູ່ທາງພາກເໜືອຂອງລາວເຮົາຈຶ່ງຍັງເປັນພູຜາປ່າດົງຫຼາຍທີ່ສຸດ ຍ້ອນວ່າທ້າວຕົ້ກຕົ້ກຂຶ້ນໄປສ້າງບໍ່ທັນເຖິງເທື່ອ ບົດເລື່ອງກ່ຽວກັບທ້າວຕົ້ກຕົ້ກຍັງເລົ່າກັນຢ່າງກວ້າງໃນຫຼາຍທ້ອງຖິ່ນຢູ່ທາງພາກເໜືອຂອງລາວເຮົາ, ໂດຍແບ່ງເປັນຫຼາຍເລື່ອງຍ່ອຍຄື "ມີພູຜາແລະທົ່ງພຽງ", "ພູສາມເສົ້າ ແລະພູລູບ", "ອ້າຍເກົ້າຮຸ່ງເກົ້າຮວງ..." ເພື່ອອະທິບາຍພູມຖານຕ່າງໆ ແລະຈຸດພິເສດທາງ

ທຳມະຊາດຂອງແຕ່ລະທ້ອງຖິ່ນ. ບົດເລື່ອງໄດ້ຍ້ອງຍໍສັນລະເສີນນ້ຳໃຈຕໍ່ສູ້ຕ້ານໄພທຳມະຊາດ, ດັດສ້າງທຳມະຊາດ ແລະນ້ຳໃຈດຸໝັ່ນພາກພຽນ ໃນການອອກແຮງງານສ້າງສາບ້ານເມືອງຂອງປະຊາຊົນບັນດາເຜົ່າຂອງລາວເຮົາໃນສະໄໝກ່ອນ. ຮູບພາບຕົວລະຄອນຂອງທ້າວຕຶກຄຶກເປັນຄົນໃຫຍ່ສູງ, ແຂງແຮງ, ເຄື່ອນໄຫວວຽກງານຢ່າງສະຫງ່າຜ່າເຜີຍ, ບໍ່ຮູ້ອິດບໍ່ຮູ້ເມື່ອຍ, ນັ້ນສະແດງເຖິງມູນເຊື້ອໃນການອອກແຮງງານ ແລະກຳລັງແຮງອັນມະຫາສານຂອງປະຊາຊົນເຮົາ, ບົດເລື່ອງທ້າວຕຶກຄຶກເຖິງວ່າມີລັກສະນະເຫຼືອເຊື່ອ, ເພີ້ນຈິດ ແລະມະຫັດສະຈັນທີ່ສຸດ, ແຕ່ກໍບໍ່ແມ່ນການງົມງວາຍໃຝ່ຝັນ, ທ້າວຕຶກຄຶກເອງກໍບໍ່ມີລິດເດດວິເສດວິໂສເໝືອນດັ່ງຕົວລະຄອນທັ້ງຫຼາຍໃນພື້ນສີບ ແລະເທບນິຍາຍ. ທ້າວຕຶກຄຶກອອກແຮງງານ ແລະທຳມາຫາກິນເໝືອນດັ່ງຄົນເຮົາແທ້, ນີ້ແມ່ນລັກສະນະສັດຈະທັດແລະລັກສະນະປະຊາຊົນຂອງບົດເລື່ອງ. ເພາະສະນັ້ນ, ເຖິງແມ່ນວ່າເລື່ອງຈະມີການປັ້ນແຕ່ງດ້ວຍວິທີສັງເຂບ, ເວົ້າໂຍກສູງກໍຕາມ ແຕ່ເລື່ອງທ້າວຕຶກຄຶກກໍຄົງຈັບອັກຈັບໃຈຜູ້ອ່ານຜູ້ຟັງຢູ່ສະເໝີ.

ການຕໍ່ສູ້ຕ້ານໄພທຳມະຊາດໃນເລື່ອງອ້າຍເຈັດໄຫມີລັກສະນະຫຍຸ້ງຍາກສັບສົນແລະທຸລະກັນດານກວ່າໃນເລື່ອງທ້າວຕຶກຄຶກເພາະວ່າ ໄພທຳມະຊາດໃນເລື່ອງອ້າຍເຈັດໄຫໄດ້ຮັບການປັ້ນແຕ່ງຂຶ້ນເປັນເໝືອນດັ່ງກຳລັງອັນໜຶ່ງທີ່ມີລິດມີເດດ, ມີຄວາມສັກສິດເພື່ອກີດກັ້ນເສັ້ນທາງເດີນຂອງທ້າວເຈັດໄຫ ແລະຍັງເປັນການທົດສອບກຳລັງແຮງ, ຄວາມສາມາດແລະນ້ຳໃຈພິລະອາດຫານຂອງທ້າວອີກ. ຕົວຢ່າງ ແມ່ນ້ຳ, ຖ້ຳເຫວ, ອີ່ນາຍຍ່າອ່ອມ, ປູ່ຫຼ້ານ້ຳ ແລະອື່ນໆ.

ປະຊາຊົນເຫັນວ່າການຕໍ່ສູ້ເອົາຊະນະກັບໄພທຳມະຊາດນັ້ນ ບໍ່ແມ່ນເລື່ອງງ່າຍດາຍ ມັນຈະຕ້ອງມີກຳລັງແຮງ, ມີຈິດໃຈເດັດດ່ຽວ ແລະມີຄວາມສາມາດອັນມະຫາສານ. ດັ່ງນັ້ນ ເຖິງແມ່ນວ່າທ້າວເຈັດໄຫຈະເປັນຄົນໃຫຍ່ສູງ, ແຂງແຮງ ແລະມີຄວາມສາມາດແບບເຫຼືອວິໄສທີ່ສຸດຢູ່ແລ້ວກໍຕາມ, ແຕ່ກໍຍັງຕ້ອງການເຖິງໝູ່ເພື່ອນສະຫາຍທີ່ໃຫຍ່ສູງ, ແຂງແຮງ ແລະຕ່າງຄົນຕ່າງມີຄວາມສາມາດອັນວິເສດຕ່າງກັນຄືຊາຍເອົາລີງໂຄຕອກຫຼັກຫຼີ່ຕາງຄ້ອນ, ຊາຍທໍ່ແພຊາວອາໄລ່ຈ້ອນຕາມດົງ, ຊາຍແຮງແບກຄ້ອນໄລ່ຕີລົມ, ຊາຍຫາບຊ້າງ, ຊາຍບ່າຍ (ແບກ) ງົວທັງໂຕ, ຮູ້ງກິນນ້ຳໝົດສາມໜອງ... ເຂົາເຈົ້າລ້ວນແຕ່ແມ່ນຕົວລະຄອນທີ່ເປັນສັນຍະລັກໃຫ້ແກ່ກຳລັງວັງຊາ, ຄວາມສາມາດຄວາມເຊື່ອໝັ້ນ ແລະຄວາມປາຖະ ໜາເອົາຊະນະໄພທຳມະຊາດຂອງປະຊາຊົນຜູ້ອອກແຮງງານ, ບົດເລື່ອງອ້າຍເຈັດໄຫບໍ່ສະເພາະແຕ່ຍ້ອງຍໍສັນລະເສີນນ້ຳໃຈຕໍ່ສູ້ອັນອົງອາດກ້າຫານແ ລະຄວາມສາມາດອັນບໍ່ມີຂອບເຂດຂອງປະຊາຊົນຜູ້ອອກແຮງງານເທົ່ານັ້ນ ຫາກຍັງແມ່ນຄວາມປາຖະໜາຂອງເຂົາເຈົ້າ

ທີ່ຢາກເປັນເຈົ້າທຳມະຊາດໃນສະໄໝກ່ອນ. ການເລົ່າ, ການພັນລະນາຮູບຮ່າງ ແລະ ການເຄື່ອນໄຫວຂອງຕົວລະຄອນເຖິງຈະມີລັກສະນະເວົ້າໂຍກແບບເຫຼືອວິໄສ ແຕ່ກໍມີລັກສະນະສັດຈະທັດໃນການດຳລົງຊີວິດຕົວຈິງຂອງສັງຄົມເຮົາຄື ການຟັນໄມ້, ເຮັດຫຼີ, ຖ່ແພ, ແຂ່ງເຫຼົ້າຕ່າງໆ.

ນິທານອັດສະຈັນຍັງສ່ອງແສງຮູບພາບທິວທັດທຳມະຊາດອັນສວຍສົດງົດງາມ ແລະ ອຸດົມຮັ່ງມີຂອງປະເທດຊາດ, ທ້ອງຖິ່ນ ແລະບ້ານເກີດເມືອງນອນ. ຮູບພາບທຳມະຊາເຫຼົ່ານີ້ແມ່ນຮູບພາບທີ່ແກວ່ນເຄີຍໃກ້ຊິດຕິດພັນກັບການດຳລົງຊີວິດ, ທຳມາຫາກິນຂອງປະຊາຊົນບັນດາເຜົ່າ. ອາດເວົ້າໄດ້ວ່າພາບທຳມະຊາດ, ຈຸດພິເສດຂອງແຕ່ລະທ້ອງຖິ່ນແຕ່ເໜືອເຖິງໃຕ້, ແຕ່ທົ່ງພຽງຂຶ້ນຫາພູດອຍລ້ວນແຕ່ເປັນຮູບພາບທີ່ມີຊີວິດຊີວາ ແລະທັງເປັນໜ້າຈັບໃຈທີ່ສຸດຂອງນິທານອັດສະຈັນ. ຢູ່ໃນເລື່ອງ "ທ້າວພຸດທະແລະນາງກັງຮີ" ໄດ້ມີຕອນພັນລະນາ ແລະອະທິບາຍເຖິງສອງໜ່ວຍພູທີ່ມີຮູບຮ່າງສັນຖານເໝືອນກັບຄົນນອນຫງາຍຢ່າງມະຫັດສະຈັນຢູ່ຝັ່ງຂວາແມ່ນ້ຳຂອງເຊິ່ງໜ້າກັບເມືອງຫຼວງພະບາງທີ່ຄົນເຮົາເຄີຍເອີ້ນຫຍໍ້ໆກັນວ່າ: "ພູທ້າວພູນາງ". ນິທານ "ທ້າວກາຜູກ" ໄດ້ວາດພາບໃຫ້ສຳນຶກເຫັນເມືອງເຊໂປນໃນສະໄໝກ່ອນ ສຳນຶກເຫັນນ້ຳເຊໂປນໄຫຼລົງລະອິດລະອ້ຽວເໝືອນດັ່ງນ້ຳໃຈຕໍ່ສູ້ອັນທຸກຍາກລຳບາກຂອງຊາວເມືອງເຊໂປນ. ຕາມລຳເຊຍັງມີວັງແຫ່ງໜຶ່ງເອີ້ນວ່າ: "ວັງກາຜູກ" ແລະຮູບພາບຜາຫີນແຫ່ງໜຶ່ງ ເຊິ່ງເປັນສັນຍະລັກໃຫ້ແກ່ເສື້ອເຕັຍຂອງທ້າວເອງ. ໃນນິທານ "ໂຄກໝາຫຼົງ" ຜູ້ຟັງຈະສຳນຶກເຫັນທິວທັດທຳມະຊາດທີ່ສວຍງາມ. ໂຄກໝາຫຼົງອາກາດສົດໃສສາຍລົມເຢັນພັດມາວ່ອຍໆກິ່ງໄມ້ໃບຫຍ້າຂຽວງາມຕະຫຼອດປີ. ນິທານ "ທ້ວຍຕາເຫງົ້າ" ໄດ້ພັນລະນາແມ່ນ້ຳຕາເຫງົ້າໄຫຼຜ່ານຕີນພູວົງເໜືອ ແລະພູວົງໃຕ້ເຊິ່ງເປັນແມ່ນ້ຳໃສເຢັນປຽບເໝືອນຄວາມຮັກອັນປອດໃສຂາວສະອາດຂອງທ້າວກຳພ້າກັບລູກສາວຂອງພະຍາ.

ການພັນລະນາ ແລະອະທິບາຍກິ່ກເຄົ້າຮ່ອງຮອຍຂອງທຳມະຊາດໃນນິທານອັດສະຈັນຍາມໃດກໍຕິດພັນກັບບັນຫາສັງຄົມ ແລະພົວພັນແໜ້ນກັບການເຄື່ອນໄຫວວຽກງານຕົວຈິງຂອງຄົນເຮົາ. ເລື່ອງ "ພູທ້າວພູນາງ" ເປັນການກ່າວປະນາມໂທດກຳການກະທຳອັນປາເຖື່ອນຂອງອີ່ນາຍຍັກທີ່ມີຕໍ່ນາງທັງສິບສອງຄົນ ອັນເປັນການກ່າວຟ້ອງຄວາມອະທຳທີ່ປົກຄຸມຢູ່ໃນສັງຄົມໃນໄລຍະນັ້ນ. ບໍ່ພຽງເທົ່ານັ້ນ ບົດເລື່ອງຍັງ ອະທິບາຍເຖິງສະຖານທີ່ຕ່າງໆທີ່ຕິດກັບເຫດການປະຫວັດສາດໃນສະໄໝດຶກດຳບັນຂອງລາວເຮົາ, ດັ່ງນັ້ນ, ຈຶ່ງມີຄົນຖືເອົາບົດເລື່ອງນີ້ ເປັນພື້ນສິບ. ບົດເລື່ອງ "ພູບາຈຽງພູມະໂລງ" ເວົ້າເຖິງຄວາມບໍ່ສະເໝີພາບລະຫວ່າງຄົນກັບຄົນໃນສັງຄົມທີ່ມີຊົນຊັ້ນ. ໃນເລື່ອງ "ທ້ວຍຕາເຫງົ້າ" ຜູ້ຟັງສາ

ມາດສຳນຶກເຫັນຊີວິດອັນທຸກຍາກລຳບາກນັບທັງຈິດໃຈ ແລະຮ່າງກາຍຂອງຄົນທີ່ເປັນຂ້ອຍ ຂ້າຮັບໃຊ້ຊົນຊັ້ນປົກຄອງ.

ດັ່ງນັ້ນ, ຈຶ່ງເວົ້າໄດ້ວ່າເນື້ອໃນຕົ້ນຕໍຂອງນິທານອັດສະຈັນແມ່ນສ່ອງແສງເຖິງຄວາມ ຂັດແຍ່ງໃນສັງຄົມ ແລະການຕໍ່ສູ້ທາງດ້ານສັງຄົມ. ຄວາມຂັດແຍ່ງນີ້ເກີດຂຶ້ນບົນພື້ນຖານ ການຂະຫຍາຍຕົວຂອງສັງຄົມ ແຕ່ລະບອບມາຕາທິປະໄຕ ກ້າວໄປເຖິງລະບອບປົຕາທິປະ ໄຕ ແລະຄົນຮັ່ງເປັນເຈົ້າສັງຄົມ. ໃນໄລຍະຕົ້ນນິທານອັດສະຈັນມີເນື້ອໃນສ່ອງແສງເຖິງ ຄວາມສັບສົນແຫ່ງການຜັນແຍກສິດເປັນເຈົ້າໃນຄອບຄົວ, ເປັນເຈົ້າໃນສັງຄົມ. ໃນນິທານ ອັດສະຈັນຕົວລະຄອນຜູ້ເປັນຜົວ, ເປັນອ້າຍ, ເປັນເອື້ອຍທີ່ມີບົດບາດຕັດສິນສິດເປັນເຈົ້າໃນ ຄອບຄົວໄດ້ມີການຢຽບຢ່ຳສິດທິ ແລະບົດບາດຂອງຜູ້ເປັນເມຍ, ຫຼືຜູ້ເປັນນ້ອງ. ການພົວ ພັນພາຍໃນຄອບຄົວກໍຂາດຄວາມສະເໝີພາບ ແລະຂັດແຍ່ງກັນຈົນບາງຄັ້ງກາຍເປັນການ ພົວພັນທີ່ມີຂໍ້ຂັດແຍ່ງເປັນປໍລະປັກ. ຕົວລະຄອນເບື້ອງໜຶ່ງກາຍເປັນຜູ້ມີສິນທຳ ແລະເບື້ອງ ໜຶ່ງກາຍເປັນຜູ້ອະທຳ. ບົດເລື່ອງ "ນາງປູນາງເປັນ", "ນາງຫຼ້ານາງລຸນ", "ນາງເຕົ່າຄຳ", "ປາບູ່ທອງ", "ອີ່ອີ່ອີ່ໄອ" (ເຜົ່າກຶມມຸ), "ອ້າຍນ້ອງກຳພ້າໜາກຄໍ້ໜາກຮຽງ", "ນົກຫົງຄຳ" ແລະບົດເລື່ອງ "ພີ່ອ້າຍຍາດນ້ອງໃພ້"... ລ້ວນແຕ່ມີເນື້ອໃນສ່ອງແສງເຖິງບັນຫາດັ່ງກ່າວ ຢ່າງຈະແຈ້ງ. ດ້ວຍຮູບການປະດິດແຕ່ງ ແລະຄວາມມຸ່ງມາດປາຖະອັນມີລັກສະນະ ເພີ່ນ ຈິດ, ປະຊາຊົນໄດ້ສະໜັບສະໜູນຕົວລະຄອນຝ່າຍສິນທຳທີ່ໄດ້ລົງໂທດ ແລະເອົາຊະນະ ຕົວລະຄອນຝ່າຍອະທຳ. ບົດເລື່ອງແບບນີ້ໄດ້ແຜ່ຂະຫຍາຍຢ່າງກວ້າງຂວາງໃນໝູ່ປະ ຊາ ຊົນບັນດາເຜົ່າ ແລະໃນບັນດາປະເທດອາຊີຕາເວັນອອກສ່ຽງໃຕ້ນີ້ອີກດ້ວຍ.

ນິທານອັດສະຈັນມີເນື້ອໃນສ່ອງແສງຄວາມຂັດແຍ່ງຊົນຊັ້ນ ແລະຕໍ່ສູ້ຊົນຊັ້ນດ້ວຍ ຫຼາຍຮູບຫຼາຍແບບຕ່າງກັນ. ນິທານອັດສະຈັນໄດ້ພັນລະນາຕົວລະຄອນພະຍາເຊິ່ງເປັນ ຕົວລະຄອນອັນເປັນສັນຍະລັກໃຫ້ແກ່ຊົນຊັ້ນປົກຄອງຜູ້ຮັ່ງມີ, ມີສິດອຳນາດຢູ່ເໜືອຫົວຄົນ ອື່ນຂຶ້ງຂັ້ງມັ່ງມໍ ແລະຮ້າຍກາດ ແຕ່ພັດໂງ່ຈ້າທີ່ສຸດ. ກົງກັນຂ້າມຊາວໄຮ່ນາພັດເປັນຕົວ ລະຄອນທີ່ທຸກຈົນ, ສັດຊື່, ດຸໝັ່ນພາກພຽນ, ຄ່ຽມຄົມ ແລະສະຫຼາດສະຫຼົວ, ອົງອາດກ້າ ຫານ, ຮູ້ຕຸ້ມຕອມ ຮັກແພງຊ່ວຍເຫຼືອເຊິ່ງກັນແລະກັນຢູ່ສະເໝີ.

ຢູ່ໃນລະບອບສັງຄົມສັກດິນາ ອຳນາດການກົດຂີ່ຂູດຮີດຂອງຊົນຊັ້ນສັກດິນາແມ່ນສາ ເຫດຕົ້ນຕໍທີ່ພາໃຫ້ຊາວໄຮ່ນາມີຊີວິດຢູ່ຢ່າງທຸກຍາກລຳບາກ. ພວກເຂົາຍາມໃດກໍຊອກຫາ ທຸກວິທີເພື່ອຂູດເນື້ອເຖືອໜັງປະຊາຊົນຜູ້ອອກແຮງງານ. ການພົວພັນລະຫວ່າງຄົນກັບຄົນ ໃນສັງຄົມນັ້ນເຕັມໄປດ້ວຍຄວາມປໍລະປັກ, ອາຄາດບາດໝາງເຊິ່ງກັນແລະກັນຕາມແບບ "ຄົນເປັນສັດຕູຂອງຄົນ"; "ປາໃຫຍ່ກິນປານ້ອຍ"... ບົດນິທານ "ທ້າວກຳພ້າຜີນ້ອຍ", "ທ້າວ ກຳພ້າງົວທອງ", "ນາງເຕົ່າຄຳ", "ທ້າວບຸນເທິງແລະນາງກາລາເຈົ້າ", "ງົວນ້ອຍ", "ກຳ ພ້າ

ກວາງໝາກຫວາ"ຂອງ(ເຜົ່າກຶມມຸ)...ລ້ວນແຕ່ມີເນື້ອໃນກ່າວປະນາມໂທດກຳຂອງຊົນຊັ້ນກົດຂີ່ ແລະທັງຍ້ອງຍໍສັນລະເສີນນ້ຳໃຈຕໍ່ສູ້ບໍ່ຍອມຈຳນົນຂອງປະຊາຊົນຜູ້ອອກແຮງງານ.

ການຕໍ່ສູ້ຂອງປະຊາຊົນຜູ້ອອກແຮງງານ ຕ້ານການກົດຂີ່ຂູດຮີດຂອງຊົນຊັ້ນປົກຄອງທີ່ສະແດງອອກໃນນິທານອັດສະຈັນນັ້ນລະອິດລະອ້ຽວ, ຍືດເຍື້ອຍາວນານທີ່ສຸດ ແລະສຸດທ້າຍກໍຊະນະຢ່າງສະຫງ່າງາມ. ແນ່ນອນບົນເສັ້ນທາງກ້າວສູ່ໄຊຊະນະ ແລະຄວາມສຸກຂອງເຂົ້າເຈົ້ານັ້ນບາງເທື່ອຕົວລະຄອນເອກເຊິ່ງສ່ວນຫຼາຍ ເປັນທ້າວກຳພ້ານັ້ນ ຍັງຖືກທ່າຮັບຢູ່, ບໍ່ແມ່ນຜູ້ລົງມືໂດຍກົງ, ຕ້ອງໄດ້ຮັບ ການອຸດໜູນຊ່ວຍເຫຼືອຈາກກຳລັງມະຫັດສະຈັນທີ່ບໍ່ເຄີຍມີຢູ່ໃນຊີວິດຕົວຈິງຂອງຄົນເຮົານີ້ເຊັ່ນ ພະລີສີ, ເທວະດາ, ສັດສາວາສິ່ງ ແລະວັດຖຸທີ່ສັກສິດມະຫັດສະຈັນອື່ນໆ. ການຊ່ວຍເຫຼືອຂອງກຳລັງມະຫັດສະຈັນເຫຼົ່ານີ້ເປັນເງື່ອນໄຂ ແລະເປັນຮູບການຕໍ່ສູ້ຂອງທ້າວກຳພ້າຜີນ້ອຍ, ທ້າວກຳພ້າງົວທອງ, ທ້າວບຸນເທິງ ແລະຕົວລະຄອນຜູ້ອື່ນໆ. ນັ້ນເຖິງແມ່ນວ່າຈະຢູ່ໃນລະດັບ, ເງື່ອນໄຂ ແລະສະ ພາບຕ່າງກັນກໍຕາມ ແຕ່ກໍລ້ວນແຕ່ເປັນສັນຍະລັກໃຫ້ແກ່ການຕໍ່ສູ້ອັນເດັດດ່ຽວໝ່ຽວແໜ້ນນຳໄປເຖິງໄຊຊະນະສຸດທ້າຍ.

ຕົວລະຄອນຝ່າຍສິນທຳແນວໃດກໍໄດ້ຮັບໄຊຊະນະ ແລະໄດ້ຮັບການຍ້ອງຍໍສັນລະເສີນ, ສ່ວນຝ່າຍອະທຳນັ້ນ ໃນທີ່ສຸດກໍຖືກປະລາໄຊ ແລະຖືກລົງໂທດຢ່າງເໝາະສົມ. ນີ້ແມ່ນຜົນໄດ້ຮັບ ແລະທັງແມ່ນການມ້ວນທ້າຍໃນນິທານອັດສະຈັນເຊິ່ງສະແດງໃຫ້ເຫັນຢ່າງຈະແຈ້ງເຖິງລັກສະນະຊົນຊັ້ນ ແລະນ້ຳໃຈມະນຸດສະທຳອັນສູງສົ່ງຂອງປະຊາຊົນ. ແຕ່ ທຸກສິ່ງທຸກຢ່າງເຫຼົ່ານັ້ນ ຍັງຢູ່ໃນຂອບເຂດຄວາມໝາຍໃນດ້ານຄຸນສົມບັດ, ສ່ວນຄວາມ ໝາຍດ້ານການເມືອງນັ້ນສະແດງອອກບໍ່ທັນເລິກເຊິ່ງເທື່ອ.

ນິທານອັດສະຈັນມີເນື້ອໃນສ່ອງແສງເຖິງແບບແຜນການດຳລົງຊີວິດ, ວິທີທຳມາຫາກິນ, ຮີດຄອງປະເພນີ, ແນວຄິດຈິດໃຈ ແລະຄວາມມຸ່ງມາດປາດຖະໜາຂອງປະຊາຊົນອີກດ້ວຍ. ການດຳລົງຊີວິດຂອງປະຊາຊົນບັນດາເຜົ່າເຄີຍຕິດພັນເງື່ອນໄຂທຳມະຊາດໃນແຖບຊົນນະບົດສະໄໝກ່ອນເຊັ່ນ ການເຮັດໄຮ່ໄຖນາ, ເຮັດຫຼີ່ເຮັດຕ້ອນ, ໂຫ່ເນື້ອຍິງສັດ... ຕົວລະຄອນກຳພ້າເປັນຄົນທຸກຍາກຂາດເຂີນ, ບາງເທື່ອເປັນຄົນທີ່ມີຮູບໂສມປະນີມພັນຂີ້ຮ້າຍ, ຖືກສັງຄົມໝິ່ນປະໝາດ... ແຕ່ຍ້ອນຄວາມຊື່ສັດດຸໝັ່ນອອກແຮງງານ, ມີຄວາມສາມັກຄີຮັກແພງ ແລະຊ່ວຍເຫຼືອຜູ້ອື່ນໆ. ສຸດທ້າຍຕົວລະຄອນທ້າວກຳພ້າກໍກາຍເປັນຄົນງາມ, ຮັ່ງມີ ຫຼືບາງເທື່ອກໍຍັງມີເມຍງາມອີກດ້ວຍເຊັ່ນ ເລື່ອງ "ທ້າວເຕົ່າ", "ອ້າຍຂີ້ຫູດແສນເປົ່າ", "ທ້າວພູໄຮ", "ກຳພ້າໜາກເດື່ອ", "ກຳພ້າໜາກສ້ານ" ເຫຼົ່ານີ້ເປັນຕົ້ນ.

ໄປຄຽງຄູ່ກັບການດຳລົງຊີວິດທາງດ້ານວັດຖຸ, ນິທານອັດສະຈັນຍັງສ່ອງແສງເຖິງການດຳລົງຊີວິດທາງດ້ານຈິດໃຈຂອງປະຊາຊົນບັນດາເຜົ່າເຊັ່ນ ການເຊື່ອຖືຮີດຄອງປະເພ

ນິ, ການເຮັດບຸນສິນກິນທານ, ທັດສະນະຄຸນສົມບັດ, ຍ້ອງຍໍຄວາມສະຫຼາດພິກໄຫວ, ຄວາມ ມຸ່ງມາດປາຖະໜາ ແລະນ້ຳໃຈສຸທັດນິຍົມຕ່າງໆ. ນອກຈາກນັ້ນບົດເລື່ອງຍັງມີຄວາມໝາຍ ແບບຕິຕຽນເບົາບາງດ້ວຍຈິດໃຈກໍ່ສ້າງຕົວລະຄອນທີ່ມີນິໄສຂີ້ຄ້ານ, ມັກງ່າຍ ຫຼືການປະພຶດ ແບບກົນຈັກ, ດັ່ງນັ້ນ, ໃນນິທານປະເພດນີ້ຈຶ່ງເຄີຍມີສຽງຫົວຕຳນິທີ່ມີລັກສະນະເຍາະເຍີ້ຍ ສຽດສີ, ແຕ່ຫາກບໍ່ເຖິງຂັ້ນເຮັດໃຫ້ມີບັນຍາກາດອັນເຄັ່ງຂຶມ, ໜັກໜ່ວງຂຶ້ນມາ.

ວັນນະຄະດີພື້ນເມືອງ ໄດ້ສ່ອງແສງຈຸດອ່ອນທີ່ຍັງຄ້າງຄາ ໃນສະໄໝກ່ອນນັ້ນຢ່າງ ຈະແຈ້ງ. ນິທານອັດສະຈັນຂອງລາວເຮົາໄດ້ພັນລະນາທ້າວກຳພ້າ ຫຼືບັນດາຕົວ ລະຄອນ ຜູ້ທີ່ຖືກກົດຂີ່ຂູດຮີດອື່ນໆ ເປັນຄືຕົວລະຄອນແຫ່ງອຸດົມການ... ໃນທີ່ສຸດຕົວລະຄອນເຫຼົ່ານີ້ກໍໄດ້ຮັບຄວາມສຸກແບບອຸດົມການຕາມທັດສະນະຂອງປະຊາຊົນໃນສະໄໝນັ້ນຄືຫຼັງຈາກ ທີ່ໄດ້ຮັບໄຊຊະນະແລ້ວກໍເອົາລູກສາວຂອງພະຍາມາເປັນເມຍ ແລະໄດ້ຂຶ້ນເປັນພະຍາຄອງ ເມືອງຄືກັນກັບພະຍາກ່ອນນັ້ນ. ສ່ວນຕົວລະຄອນຜູ້ດີ, ຜູ້ສະຫຼາດອື່ນໆຖ້າບໍ່ໄດ້ເປັນພະຍາ ກໍໄດ້ເປັນຄົນຮັ່ງ, ມີໄຮ່ນາກວ້າງ, ມີງົວຄວາຍຫຼາຍໂຕ... ແນ່ນອນວ່ານີ້ແມ່ນຄວາມປາ ຖະໜາແບບເຫຼືອເຊື່ອ, ເພີ້ນຈິດ ແລະມະຫັດສະຈັນຂອງນິທານອັດສະຈັນເທົ່ານັ້ນ.

ນິທານອັດສະຈັນຂອງລາວເຮົາເຖິງວ່າຈະມີລັກສະນະຊາດ, ລັກສະນະປະຊາຊົນ ເປັນພື້ນຖານຢູ່ແລ້ວ, ແຕ່ກໍຍັງຍອມຮັບເອົາຜົນສະທ້ອນຈາກລະບົບແນວຄິດຂອງສາສະໜາ ພຸດຢ່າງເລິກເຊິ່ງສົມຄວນ ອັນພາໃຫ້ມີລັກສະນະຕໍ່ສູ້ຊົນຊັ້ນຂອງນິທານຫຼາຍໆເລື່ອງຫຼຸດ ຜ່ອນລົງຢ່າງຈະແຈ້ງຄືດັ່ງທີ່ໄດ້ກ່າວມາແລ້ວ. ຢ່າງໃດກໍຕາມເຖິງວ່າສາສະໜາພຸດແພ່ອິດ ພົນຂອງຕົນເຂົ້າມາໃນວັນນະຄະດີພື້ນເມືອງຂອງລາວເຮົາຢ່າງຫຼວງຫຼາຍ ແລະເຮັດໃຫ້ ວັນນະຄະດີພື້ນເມືອງມີລັກສະນະມົວໝອງໄປເລັກນ້ອຍ ແຕ່ມັນກໍເປັນພຽງຮູບນອກ ແລະ ປັດໄຈສຳຮອງເທົ່ານັ້ນ ສ່ວນເນື້ອໃນແທ້ ທີ່ເປັນປັດໄຈພື້ນຖານຍັງແມ່ນລັກສະນະສັດຈະ ທັດ, ລັກສະນະຕໍ່ສູ້ຊົນຊັ້ນຢ່າງຕັ້ງໜ້າ ແລະແມ່ນການສ່ອງແສງເຖິງການດຳລົງຊີວິດຕະ ຫຼອດເຖິງຄວາມມຸ່ງມາດປາຖະໜາຂອງປະຊາຊົນຜູ້ອອກແຮງງານ. ທັດສະນະ ແລະແນວ ຄິດຂອງປະຊາຊົນໄດ້ສະແດງອອກໃນນິທານອັດສະຈັນຢ່າງເລິກແລບແນບນຸ່ມ, ສັບສົນ ແລະມີຫຼາຍຮູບຫຼາຍແບບທີ່ສຸດ, ດັ່ງນັ້ນ,ຢາກຕີລາຄາເນື້ອໃນນິທານອັດສະຈັນໄດ້ຊັດເຈນ ຈະຕ້ອງວິເຄາະໄຈ້ແຍກຢ່າງເລິກເຊິ່ງເຖິງຖອງ, ຈຸດດີຈຸດອ່ອນໃນດ້ານແນວຄິດ,ທັດສະນະ ຂອງປະຊາຊົນ ຕະຫຼອດເຖິງການຮັບເອົາຜົນສະທ້ອນຈາກແນວຄິດຂອງຊົນຊັ້ນສັກດິນາ ແລະແນວຄິດຂອງສາສະໜາພຸດອີກດ້ວຍ.ແຕ່ມີຈຸດດີຫຼາຍຢ່າງເປັນພື້ນຖານຢູ່. ແນວຄິດ ພື້ນຖານຂອງປະຊາຊົນທີ່ສະແດງອອກໃນນິທານອັດສະຈັນນັ້ນ ມີລັກສະນະຕໍ່ສູ້ຊົນຊັ້ນຢ່າງ ຈະແຈ້ງ ແລະມີທ່າອ່ຽງກ້າວໜ້າຄື ຢາກປົດປ່ອຍຕົນເອງ ເຊິ່ງມັນເປັນການສອດຄ່ອງກັບ ສັດຈະທຳຂອງຍຸກສະໄໝ.

3. ສິລະປະນິທານອັດສະຈັນ

ນິທານອັດສະຈັນ ແມ່ນເລື່ອງເລົ່າພື້ນເມືອງປະເພດໜຶ່ງທີ່ມີລັກສະນະພິເສດຂອງມັນ ທັງດ້ານເນື້ອໃນ ແລະດ້ານຮູບການ. ເພື່ອຕອບສະໜອງກັບການເລົ່າປາກເປົ່າ ແລະຈື່ຈຳ ໄດ້ງ່າຍນັ້ນນິທານອັດສະຈັນໄດ້ມີໂຄງປະກອບສ້າງຕາມທາງຊື່. ບົດເລື່ອງໄດ້ສ້າງຂຶ້ນຕາມ ກາລະເທສະຂອງມັນ, ໝາຍຄວາມວ່າປາກົດການໃດເກີດມີຂຶ້ນກ່ອນກໍເລົ່າກ່ອນ, ປາກົດ ການໃດເກີດມີຂຶ້ນຕາມຫຼັງກໍເລົ່າຕາມຫຼັງ.

ຕົວລະຄອນເອກເປັນຕົວຕັ້ງຕົວຕີເຮັດໃຫ້ບົດເລື່ອງຂະຫຍາຍຕົວແຕ່ບັ້ນນີ້ໄປຫາບັ້ນ ນັ້ນຢ່າງເກາະກ່າຍກັນຄັກແນ່. ແນ່ນອນວ່າໄປຄຽງ ຄູ່ກັບບັນຫາໃຈກາງ, ບັນຫາໃຫຍ່ຂອງ ບົດເລື່ອງແລ້ວຍັງມີຫຼາຍບັນຫານ້ອຍອ້ອມຂ້າງ,ແຕ່ມັນກໍຂະຫຍາຍຕົວໃນໄລຍະທີ່ສັ້ນໆ ທີ່ສຸດແລ້ວກໍກ້າວເຂົ້າສູ່ບັນຫາໃຈກາງຄືເກົ່າ. ການສ້າງເລື່ອງຂອງນິທານອັດສະຈັນຕາມ ທາງຊື່ແບບນີ້ມີຜົນດີໃນການຈື່ຈຳ,ເພາະວ່າມັກຈະກະທັດຮັດ, ງ່າຍດາຍແຕ່ກໍມີຂໍ້ຈຳກັດຢູ່ ບາງອັນເຊັ່ນ ເມື່ອຢາກເນັ້ນໜັກບັນຫາໃດໜຶ່ງດ້ານ ເນື້ອໃນຄວາມໝາຍຂອງບົດເລື່ອງ ກໍ ບໍ່ໄດ້ດີ, ບາງຄັ້ງຄາວກໍເຮັດໃຫ້ບົດເລື່ອງຈືດຈາງອີກ ດ້ວຍ.

ການພັນລະນາໃນນິທານມີລັກສະນະລວມໆບໍ່ລະອຽດ. ນິທານສ່ວນຫຼາຍຈະຂຶ້ນຕົ້ນ ດ້ວຍຄຳ "ແຕ່ກີ້ແຕ່ກ່ອນ" ເຊັ່ນ ແຕ່ກີ້ແຕ່ກ່ອນຢູ່ບ້ານໜຶ່ງ ຍັງມີທ້າວກຳພ້າທຸກຍາກຂາດ ເຂີນ. ມີນິທານອັດສະຈັນຫຼາຍບົດຍັງມີຊື່ຂອງຕົວລະຄອນ ແຕ່ຊື່ນັ້ນກໍມີລັກສະນະລວມໆ ຕາມຈຸດພິເສດ, ຄວາມສາມາດຊັ້ນຕ່ຳແໜ່ງ ແລະເຄີຍມີການປ່ຽນແປງ ເລື້ອຍໆ. ການ ພັນລະນາທິວທັດທຳມະຊາດໃນນິທານອັດສະຈັນບໍ່ມີຈຸດປະສົງເພື່ອສະແດງຄວາມປະເອີບ ໃຈຂອງຄົນເຮົາຕໍ່ຮູບພາບທຳມະຊາດເຫຼົ່ານັ້ນ; ຫາກພຽງແຕ່ຮັບໃຊ້ການຂະຫຍາຍ ຕົວ ຂອງບັ້ນ ແລະກະທູ້ຂອງບົດເລື່ອງເທົ່ານັ້ນ; ການພັນລະນາທຳມະຊາດກໍມີການຫັນປ່ຽນ ຕາມຜູ້ເລົ່າເລື່ອງ. ການພັນລະນາຕົວລະຄອນກໍມີລັກສະນະງ່າຍດາຍ ແລະບໍ່ລະອຽດ, ສ່ວນຫຼາຍກໍພັນລະນາແຕ່ບາງລັກສະນະ ແລະຈຸດພິເສດລວມໆຂອງຮູບຮ່າງທາງນອກ, ບໍ່ ຄ່ອຍໄດ້ພັນລະນາເຂົ້າເລິກທາງແນວຄິດຈິດໃຈຂອງຕົວລະຄອນ. ກົງກັນຂ້າມໃນນິທານ ອັດສະຈັນເພິ່ນພັດເອົາໃຈໃສ່ພັນລະນາເຖິງການກະທຳຂອງຕົວລະຄອນຫຼາຍກວ່າ, ເອົາ ການກະທຳນັ້ນເພື່ອວັດແທກເຖິງແນວຄິດຈິດໃຈໂດຍບໍ່ຈຳເປັນເວົ້າຍືດຍາວ. ຍ້ອນນິທານ ອັດສະຈັດແມ່ນປະເພດເລົ່າເລື່ອງ, ສະນັ້ນ, ການພັນລະນາຄົນ, ພັນລະນາພາບກໍລ້ອມ ແຕ່ມີລັກສະນະລວມໆແທດເໝາະກັບການເລົ່າປາກເປົ່າ, ເຮັດໃຫ້ບົດເລື່ອງສັ້ນເຂົ້າ, ກະທັດ ຮັດໜັກແໜ້ນ, ເລົ່າໄດ້ງ່າຍ ແລະຈື່ຈຳໄດ້ໄວ.

ລ້ານ

Thang ส่ง

ເພື່ອສ່ອງແສງເຖິງຂໍ້ຂັດແຍ່ງໃນຊີວິດຂອງຄົນເຮົາ, ສ່ອງແສງເຖິງປາກົດການຕ່າງໆ ທີ່ເກີດຂຶ້ນຈາກການປະທະຂອງແຕ່ລະຊັ້ນຄົນຢູ່ໃນສັງຄົມ, ນິທານອັດສະຈັນເຄີຍໄດ້ຍົກ ສະພາບທີ່ມີລັກສະນະກົງກັນຂ້າມກັນຂຶ້ນມາສົມທຽບເຊັ່ນ ການຈັດວາງຕົວລະຄອນໃນນິ ທານອັດສະຈັນແບ່ງອອກເປັນສອງຝ່າຍຢ່າງຈະແຈ້ງ. ການຍົກສະພາບທີ່ກົງກັນຂ້າມກັນ ຂຶ້ນມານັ້ນເຮັດໃຫ້ຜູ້ຟັງສຳນຶກເຖິງທາດແທ້ຂອງຕົວລະຄອນແຕ່ລະຝ່າຍຢ່າງເລິກເຊິ່ງ. ຮູບ ການສິລະປະແບບນີ້ ຂອງນິທານອັດສະຈັນໄດ້ຮັບໃຊ້ເນື້ອໃນຂອງບົດເລື່ອງຢ່າງຕັ້ງໜ້າ ເພາະມັນເປັນການຈຳແນກສິນທຳກັບອະທຳ, ຈຳແນກມິດກັບສັດຕູຢ່າງຈະແຈ້ງ.

ການ<u>ເວົ້າໂຍກ</u> ntaùa ແລະໃຊ້ຈິດສຳນຶກແມ່ນຮູບການໜຶ່ງໃນການປະດິດແຕ່ງນິທານອັດ ສະຈັນເຊັ່ນ ເລື່ອງ "ທ້າວເຈັດໄຫ", "ອ້າຍຕຶກຄຶກ"... ໄດ້ປະດິດແຕ່ງຂຶ້ນດ້ວຍການໃຊ້ຈິດ ສຳນຶກ ແລະເວົ້າເວົ້າໂຍກໃນລະດັບສູງທີ່ສຸດ. "ທ້າວເຈັດໄຫຫາກໍເກີດອອກມາຈາກທ້ອງ ແມ່ກໍກິນເຂົ້າໝົດເຈັດໄຫຈຶ່ງຄ່ອຍອິ່ມ" ແລະມີຄວາມສາມາດແບກເອົາກົກໄມ້ໃຫຍ່ນັບທ້ຽ ກົ່ງທ້ຽງ່ຳມາບ້ານຢ່າງສະບາຍ... ທ້າວຕຶກຄຶກຍິ່ງມະຫັດສະຈັນກວ່ານັ້ນອີກ, ທ້າວເປັນຕົວ ລະຄອນທີ່ຢູ່ເໜືອຄວາມສຳນຶກຂອງຄົນເຮົາ. ໃນນິທານເລື່ອງອື່ນໆກໍເວົ້າເຖິງ ພະລັງສິ, ສັດ ສິ່ງ ແລະວັດຖຸສິ່ງຂອງທີ່ຢາກຮູ້, ຮູ້ເວົ້າ ແລະມີ<u>ລິດເດດ</u>ພິເສດ, ໄດ້ຊ່ວຍ ໃຫ້ທ້າວກຳພ້າຕໍ່ສູ້ ເອົາຊະນະກັບພະຍາ. <u>ລັກສະນະເຫຼືອເຊື່ອ ແລະມະຫັດສະຈັນແມ່ນຮູບການຕົ້ນຕໍ ແລະ ຕິດພັນກັບເນື້ອໃນເພີ່ນຈິດຂອງປະເພດນິທານອັດສະຈັນ</u>. ປະຊາຊົນໄດ້ໃຊ້ຈິດສຳນຶກຂອງ ຕົນປະດິດແຕ່ງຮູບພາບ, ຮູບປະພັນແບບເຫຼືອເຊື່ອເຫຼົ່ານີ້ຂຶ້ນມາກໍເພື່ອແກ້ໄຂບັນຫາເຊິ່ງໃນ ຊີວິດບໍ່ທັນເຮັດໄດ້ຕາມຄວາມມຸ່ງມາດປາຖະໜາຂອງປະຊາຊົນເທື່ອ. ເປັນຈັ່ງໆ

ຮູບການລົ້ມຄົນໃນນິທານອັດສະຈັນມີຄຸນປະໂຫຍດ ແລະຜົນໄດ້ຮັບຕ່າງກັນ. ການ ທີ່ລົ້ມໄປລົ້ມມາບັນຫາດຽວກັນນັ້ນມີຜົນດີໃນການຍົກເນື້ອໃນແນວຄິດຂອງບົດເລື່ອງໃຫ້ສູງ ຂຶ້ນຕື່ມ. ການລົ້ມໄປລົ້ມມາ ຫຼືວ່ຽນຕາຍວ່ຽນເກີດນັ້ນດ້ານໜຶ່ງກໍເປັນການໄດ້ຮັບຜົນສະ ທ້ອນມາຈາກແນວຄິດຂອງສາສະໜາພຸດຢ່າງຈະແຈ້ງ, ແຕ່ໃນດ້ານໜຶ່ງອີກພັດໄດ້ສະແດງ ເຖິງນ້ຳໃຈຕໍ່ສູ້ອັນເດັດດ່ຽວໜຽວແໜ້ນ ແລະຄວາມມຸ່ງມາດປາຖະໜາຂອງປະຊາຊົນອີກ ດ້ວຍ. ບາງເທື່ອການເວົ້າເກີດມີສຽງຫົວຂຶ້ນ, ສຽງຫົວອັນນີ້ຕົ້ນຕໍກໍແມ່ນປະກອບສ່ວນສ້າງ ບັນຍາກາດມ່ວນຊື່ນຂຶ້ນໃນບົດເລື່ອງ ແລະໃນບາງກໍລະນີມັນກໍພົວພັນໂດຍກົງເຖິງເນື້ອ ໃນແນວຄິດຂອງບົດເລື່ອງອີກ.

ນິທານອັດສະຈັນ ມີບົດບາດສຳຄັນໃນວັນນະຄະດີພື້ນເມືອງປະເພດຄຳຮ້ອຍແກ້ວ ຂອງລາວເຮົາ, ມັນກຳເນີດ ແລະຂະຫຍາຍຕົວຕະຫຼອດຊົ່ວໄລຍະອັນຍາວນານໃນລະບອບ ສັງຄົມທີ່ມີຊົນຊັ້ນ. ດັ່ງນັ້ນ, ມັນຈຶ່ງບໍ່ປາສະຈາກຂໍ້ຈຳກັດບາງຢ່າງເຊິ່ງຈະຕ້ອງໄດ້ຕຳນິວິ ຈານ ແລະຕ້ອງມີການເລືອກເຟັ້ນໃນການຄົ້ນຄວ້າ, ສຶດສອນ ແລະຮ່ຳຮຽນ. ລັກສະນະ

ເຫຼືອເຊື່ອ ແລະມະຫັດສະຈັນໃນນິທານປະເພດນີ້ມີພື້ນຖານມາຈາກການສຶບທອດມູນ ເຊື້ອ ມະຫັດສະຈັນໃນເທບນິຍາຍ. ນິທານບາງເລື່ອງມີສີສັນຂອງສາສະໜາ, ມີຄຸນຄ່າດ້ານ ເນື້ອ ໃນຄວາມໝາຍ ແລະຮູບການປະດິດແຕ່ງອັນມີລັກສະນະຊາດອັນໜັກແໜ້ນເປັນພິ ເສດ ຂອງນິທານພື້ນເມືອງລາວ.

ເລື່ອງ: ກຳພ້າຜີນ້ອຍ

ໃນປາງກ່ອນທີ່ເມືອງອິນທະປັດຖະນະຄອນ ຍັງມີເດັກນ້ອຍຊາຍຄົນໜຶ່ງພໍອາຍຸໄດ້ ເຈັດປີພໍ່ແມ່ໂຄດວ້ຽງຕາຍໝົດ. ທ້າວຕ້ອງໄດ້ທ່ຽວຂໍທານກິນ. ມື້ໜຶ່ງກວານບ້ານໄດ້ວາງ ແຜນໃຫ້ທ້າວໄປເຮັດນາຢູ່ບ່ອນເຂັດຂວາງຫວັງໃຫ້ທ້າວຕາຍ, ໂດຍເວົ້າຍົວະວ່າທີ່ນັ້ນເປັນ ບ່ອນອຸດົມສົມບູນຫຼາຍ. ທ້າວຈຶ່ງຕອບວ່າ :

ຖ້າແມ່ນຄວາມເມດຕາຂອງລູງແລ້ວ ຫຼານກໍຖືວ່າເປັນບຸນຄຸນຢ່າງລົ້ນເຫຼືອແທ້ ແຫຼວ້ລູງເອີຍ. ເຫັນວ່າທ້າວຕົກລົງດັ່ງນັ້ນ ກວານບ້ານຈຶ່ງຫາພ້າມີດຈົກສຽມທີ່ໃຊ້ການບໍ່ໄດ້ ແລ້ວ ມອບໃຫ້ທ້າວ, ຮຸ່ງຂຶ້ນວັນໃໝ່ຈຶ່ງພາໄປຊີ້ບອກບ່ອນໃຫ້. ກ່າວເຖິງຜີຫຍ່າງ່າມ, ເມື່ອ ເຫັນທ້າວມາຢູ່ຫັ້ນກໍຄິດວ່າຈະກິນ ແຕ່ກໍກິນບໍ່ໄດ້ຍ້ອນເທວະດາແປດອົງຮັກສາຢູ່. ເທວະ ດາຍັງ ສັ່ງສອນຜີຫຍ່າງ່າມໃຫ້ເບິ່ງແຍງຮັກສາທ້າວ, ຜີຫຍ່າງ່າມກໍຮັບປາກທຸກຢ່າງ.

ຢູ່ຕໍ່ມາເມື່ອທ້າວກຳພ້າລົງມືຖາງໄຮ່, ບັນດາຜີທັງຫຼາຍກໍມາຊ່ອຍຈົນໄດ້ໄຮ່ຜືນໜາ ນາຜືນກວ້າງ. ພໍເຖິງເດືອນສິບເຂົ້າກໍມານເຕັມໄຮ່ນາປາກໍມາອັ່ງຕ້ອນ, ທ້າວກຳພ້າໄດ້ໄປ ໃສ່ສ້ອນ ແລະໄຊ, ແຕ່ໄປຢາມມື້ໃດກໍເຫັນແຕ່ຮອຍຄົນມາລັກຢາມກ່ອນ, ທ້າວຈຶ່ງໄປເລົ່າ ທຸກຕໍ່ຜີຫຍ່າງ່າມ. ຜີຫຍ່າງ່າມໄດ້ຫຼີກຜົມໃຫ້ທ້າວເສັ້ນໜຶ່ງເພື່ອເຮັດສາຍແຮ້ວ. ພໍວັນຮຸ່ງຂຶ້ນ ຈຶ່ງໄປຢາມເຫັນຜີນ້ອຍຕິດບ້ວງຢູ່, ຜີນ້ອຍໄດ້ຂໍຊີວິດໄວ້ ແລະຂານອາສາຮັບໃຊ້ທ້າວ ຕະຫຼອດໄປ. ຕໍ່ໆມາແຮ້ວກໍຖືກເຫງັນມອນ, ເສືອ, ຊ້າງນ້ຳ, ຮຸ້ງແລະນາກອີກ. ຈຳພວກສັດ ເລົ່ານີ້ກໍຂໍຊີວິດໄວ້ນຳທ້າວຄືກັນ ແລະຂໍຮັບໃຊ້ຕະຫຼອດການ.

ຕໍ່ມາອີກ ເມື່ອເຂົ້າສຸກເຫຼືອງພະຍາຊ້າງພ້ອມດ້ວຍຝູງໄດ້ກິນເຂົ້າຈຶ່ງພາກັນມາກິນ ທັ່ງຢຽບຢ່ຳເສຍຫາຍບາງສ່ວນ, ທ້າວຈຶ່ງເອົາແຮ້ວໄປໃສ່ໄວ້ອີກ. ພະຍາຊ້າງໄດ້ຖືກແຮ້ວ ຂອງທ້າວ, ທ້າວວ່າຊີ້ຊ້າແຕ່ຊ້າງກໍໄດ້ຂໍຊີວິດໄວ້ ແລະຍັງໄດ້ມອບງາທັງສອງໃຫ້ໂດຍ ບອກວ່າ: ທ້າວເອີຍ! ເພື່ອຕອບບຸນແທນຄຸນເຈົ້າຂ້ອຍຂໍມອບງາທັງສອງນີ້ໃຫ້ຖ້າຕ້ອງການ ເຂົ້າຂອງວັດຖຸເງິນຄຳໃຫ້ປາຖະໜາເອົາຈາກງາກ້ຳຊ້າຍນີ້, ສ່ວນງາຂ້າງຂວາໃຫ້ປ້ອງຂ້າງ ນອນແລ້ວລູກຈະມີຄວາມອົບອຸ່ນດອກ, ແຕ່ກ່ອນຈະເອົາງານີ້ໄດ້ໃຫ້ໄປເອົາແມ່ຍ່າງ່າມມາ ຕັດເອົາ.

ທ້າວກໍໄດ້ເຮັດຕາມຄຳແນະນຳພໍໄດ້ແລ້ວ ຈຶ່ງນຳເອົາໆຄູ່ນັ້ນເມືອໄວ້ແລ້ວກໍອອກໄປເຮັດວຽກຕາມເຄີຍ.

ກ່າວເຖິງສະພາບທາງຕູບນ້ອຍທຸກເທື່ອທີ່ທ້າວກັບມາແຕ່ວຽກພໍຂຶ້ນເມືອຕູບກໍເຫັນພາເຂົ້າຕັ້ງໄວ້ຖ້າຢ່າງຄົບຖ້ວນ. ຍ້ອນຄວາມຫິວທ້າວນຶກວ່າຊີກິນໂລດ, ແຕ່ຜີນ້ອຍ ໄດ້ຫ້າມໄວ້ກ່ອນເພາະມັນເປັນເລື່ອງທີ່ແປກປະຫຼາດທີ່ສຸດ, ເພື່ອໃຫ້ຫາຍສົງໄສ ມື້ໜຶ່ງທ້າວຈຶ່ງຈອບເບິ່ງ, ໂດຍທຳທ່າຊວນຜີນ້ອຍໄປວຽກຄືເກົ່າ. ຂະນະທີ່ຈອບຢູ່ນັ້ນ ໄດ້ເຫັນນາງສາວງາມທີ່ສຸດຜູ້ໜຶ່ງຄານອອກຈາກງາຊ້າງນາງໄດ້ປັດກວາດມ້ຽນເຮືອນ ພໍເສັດແລ້ວກໍແຕ່ງພາເຂົ້າໄວ້ຈາກນັ້ນ, ຈຶ່ງເຂົ້າໄປຢູ່ໃນງາຄືເກົ່າ, ເມື່ອເຫັນແນວນັ້ນທ້າວຈຶ່ງມີຄວາມດີໃຈທີ່ສຸດ. ມື້ລຸນມາພາຍຫຼັງທີ່ໄດ້ປຶກສາກັບຜີນ້ອຍແລ້ວ ທ້າວກໍທຳທ່າຊວນຜີນ້ອຍໄປໄຮ່ແລ້ວກໍຈອບເບິ່ງອີກ. ພໍນາງອອກມາເຫັນວ່າໄດ້ໂອກາດຈຶ່ງແລ່ນເຂົ້າໄປຕັນປາກງາໄວ້ຈາກນັ້ນກໍຖາມກົ້ກປາຍສາເຫດນາງຈຶ່ງຕອບວ່າ :

ນ້ອງນີ້ຄາດແຕ່ຟ້າຫົວຮ່ອມຮຽງໜອນ ຄາດໄດ້ເປັນຄູ່ຊອນມິ່ງຂວັນຂອງອ້າຍ ຈຶ່ງໄດ້ຈອນມາຜ້າຍເຊົາເຮືອນທຽມພ່າງນ້ອງນີ້ເຊື້ອລູກຊ້າງງາລ້ຳເລີດຄຸນນັ້ນແລ້ວ. ເມື່ອຊັກໄລ່ໄຕ່ຖາມກັນເປັນທີ່ເຂົ້າໃຈແລ້ວ ທັງສອງຈຶ່ງຕົກລົງຮ່ວມຊີວິດນຳກັນຕໍ່ໄປ.

ກ່າວເຖິງຊາວເມືອງ ເມື່ອບໍ່ເຫັນທ້າວເຂົ້າມາຂໍເຂົ້າເປັນເວລາດົນນານຄິດວ່າ ທ້າວຕາຍແລ້ວຈຶ່ງພາກັນໄປຈອບເບິ່ງເຫັນວ່າທ້າວກຳພ້າໄດ້ເມຍງາມທີ່ສຸດ, ເຂົ້າກໍເຕັມເລົ້າເຕັມເຍຍ, ເຄື່ອງປູກຂອງຝັ່ງກໍເຕັມໄຮ່ເຕັມສວນ, ກວ້າງສຸດສາຍຕາບໍ່ອຶດຢາກສັ່ງຈັກແນວ, ຂ່າວນັ້ນຈຶ່ງຂ່າລືໄປຮອດພະຍາ, ພະຍາຍັງບໍ່ເຊື່ອວ່າຈະເປັນໄປໄດ້ເພື່ອ ໃຫ້ແນ່ໃຈຈຶ່ງໃຫ້ອາມາດຜູ້ໃກ້ຊິດໄປຕິດຕາມເບິ່ງເຫັນວ່າ ເປັນຄວາມຈິງຈຶ່ງກັບມາລາຍງານອີກ. ພໍຮູ້ ດັ່ງນັ້ນ, ພະຍາຈຶ່ງສັ່ງໃຫ້ຮ້ອງເອົາທ້າວກຳພ້າມາພົບ, ເມື່ອທ້າວມາແລ້ວພະຍາຈຶ່ງຊູ່ວ່າ:

ບັກກຳພ້າ ຈຸດປະສົງທີ່ກູເອີ້ນມຶງມາມື້ນີ້ກໍມີຢູ່ວ່າ ມຶງເປັນກຳພ້າກຳພອຍບໍ່ສົມຄວນເລີຍທີ່ມຶງຈະມີເມຍງາມແນວນັ້ນເພື່ອບໍ່ໃຫ້ມີຄວາມຮຸນແຮງກູຈຶ່ງຂໍເວົ້າກັບມຶງໂດຍດີວ່າ: "ເມຍມຶງນັ້ນຍົກໃຫ້ກູສາມັນຈຶ່ງຊິສົມກັບພະຍາມະຫາກະສັດຄືກູ" ເວົ້າສຸດກໍສົ່ງສຽງຫົວທ້າທາຍແບບຜູ້ມີອຳນາດ ດັ່ງ ຮ່ຳ ຮ່ຳ... ຮ່ຳ ອອກມາ. ຝ່າຍທ້າວເມື່ອໄດ້ ຍິນວ່າ "ເອົາເມຍມຶງມາໃຫ້ກູ" ນ້ຳຕາແຫ່ງຄວາມຄຽດແຄ້ນກໍຄ່ອຍໆໄຫຼຊຶມອອກຈາກເບົ້າຕາທັງສອງ ແລະໄດ້ເວົ້າວ່າ :

"ເຫດໃດພໍ່ພະຍາຊ່າງວ່າແນວບໍ່ແມ່ນຄອງແທ້ ຂ້ານ້ອຍກຳພ້າກຳພອຍຢູ່ ແຕ່ລູກເມຍຂ້ານ້ອຍກໍຮັກຄືແກ່ນຕາ, ຄັນເອົາວັດຖຸສິ່ງຂອງເງິນຄຳ, ເສື້ອຜ້າແຜ່ນແພແນວໃດແນວອື່ນກໍຍັງໄຄແດ່ ອັນນີ້ຈັ່ງໃດພັດຊິມາວ່າໃຫ້ຂ້ານ້ອຍຍົກເມຍໃຫ້ຈັ່ງຊີ້. ແນວໃດຂ້ານ້ອຍກໍບໍ່ໃຫ້ໄດ້ດອກ".

ເມື່ອພະຍາໄດ້ຟັງເຫດຜົນຂອງທ້າວກຳພ້າຫຼາຍຢ່າງຫຼາຍແນວກໍໄດ້ຢຸດນິ້ງຊົ່ວໄລຍະໜຶ່ງເພື່ອຄົ້ນຄວ້າຄິດຫາວິທີການທີ່ແນບນຽນກວ່ານັ້ນ, ໃນທັນໃດພະຍາຈຶ່ງກັບປ່ຽນບັນຍາກາດໃໝ່ວ່າ :

"ເອົາ! ຄັນຈັ່ງຊັ້ນ ເຮົາມາພະນັນຕີໄກ່ກັນ, ຖ້າໄກ່ນິ້ງແພ້ ກູຈະຍົກເມືອງໃຫ້ນິ້ງເຄິ່ງໜຶ່ງໂລດ, ແຕ່ຖ້າໄກ່ກູແພ້ ນິ້ງຕ້ອງຍົກເມຍນິ້ງໃຫ້ກູ, ວ່າຈັ່ງໃດແລ້ວກຳພ້າວິທີນີ້ເປັນທຳແລ້ວແມ່ນບໍ່? "ພະຍາໄດ້ເວົ້າຂຶ້ນດ້ວຍສຽງຫົວສະອົກສະອ້ອຍຢ່າງທ້າທາຍແບບເຊື່ອໝັ້ນຂອງຕົນເອງ.

ໄດ້ຍິນຄຳວ່າ "ພະນັນ" ພ້ອມທັງກະຕິກາ, ຊາຍກຳພ້າກໍຈົນປັນຍາ ເພາະໄກ່ຕົວໜຶ່ງກໍບໍ່ມີເຮັດແນວໃດຈຶ່ງຈະຫາໄກ່ມາຕີເອົາຊະນະໄກ່ພະຍາໄດ້ ແລະການທີ່ຕົນຈະປະຕິເສດກັບພະຍາກໍຢູ່ໃນວົງຈຳກັດຮັດແຄບທີ່ສຸດ ເຂົາຈຳຕ້ອງກົ້ມໜ້າຟາຍນ້ຳຕາເອົາຄວາມລະທົນຂົມຂື່ນທັງໝົດມຸ່ງໜ້າສູ່ກະຕູບນ້ອຍ ແລະເມຍຂວັນ. ພໍເມຍເຫັນທ້າວໂສກເສົ້າເຊັ່ນນັ້ນກໍຈຶ່ງຖາມສາເຫດ. ທ້າວຈຶ່ງເລົ່າຄວາມເປັນໄປທັງໝົດສູ່ເມຍຟັງ, ເມຍຈຶ່ງບອກວ່າ:

"ອ້າຍກຳພ້າເອີຍ! ອ້າຍບໍ່ຕ້ອງໂສກເສົ້າເສຍໃຈຫຍັງເລີຍຄັນຈັ່ງຊັ້ນໃຫ້ອ້າຍ ໄປຮ້ອງຫາເຫງັນມອນຕົວຖືກແຮ້ວມື້ນັ້ນ ແລ້ວເລົ່າເຫດການຕ່າງໆໃຫ້ຟັງ, ລາວກໍຈະມີວິທີຊ່ວຍອ້າຍດອກ".

ທ້າວໄດ້ຍິນເມຍເວົ້າດັ່ງນັ້ນກໍເບົາໃຈລົງແດ່,ຈາກນັ້ນກໍໄປຮ້ອງຫາເຫງັນມອນ, ເຫງັນມອນຈຶ່ງຂານອາສາແປງເພດເປັນໄກ່ ພໍຮຸ່ງເຊົ້າຊາຍກຳພ້າກໍອຸ້ມໄກ່ເຂົ້າເມືອງ, ພໍໄດ້ເວລາການຕີໄກ່ກໍເລີ່ມຕົ້ນ. ພະຍາທີ່ເບິ່ງຢູ່ກໍມີຄວາມດີໃຈຫົວສະອົກສະອ້ອຍ ແລ້ວກໍເວົ້າວ່າ:

"ບັກກຳພ້າເອີຍຈັ່ງແມ່ນນິ້ງໂງ່ນໍ, ກູຂໍເມຍນິ້ງດີໆ ນິ້ງຍັງບ່ຍອມໃຫ້ພັດຍັງບໍ່ທໍ່ເສຍທັງເມຍທັງໄກ່ຊັ້ນບໍ?" ເວົ້າແລ້ວກໍຕົບແຂ່ງຕົບຂາ. ໄກ່ຕີກັນໄປເລື້ອຍໆ, ພວກອຳມາດທີ່ຢູ່ໃກ້ຊິດກໍເວົ້າເປັນສຽງດຽວກັນວ່າ "ໄກ່ທ້າວກຳພ້າຊິຕາຍແລ້ວ", ແຕ່ເວົ້າບໍ່ທັນສຸດສຽງໄກ່ທ້າວກຳພ້າກໍໂດດເຂົ້າໄປເຕະໄກ່ພະຍາຈົນຄໍຫັກຕາຍກັບບ່ອນ, ພ້ອມໆກັບສຽງຕົບມືພໍ ຜ້າຂອງປະຊາຊົນຜູ້ຊົມ. ພະຍາກໍມີຄວາມອັບອາຍຂາຍໜ້າ ແລະໂກດແຄ້ນທີ່ສຸດ. ເມື່ອໄກ່ຕົນບໍ່ແພ້ ແທນທີ່ຈະຍົກເມືອງໃຫ້ທ້າວຕາມກະຕິກາ, ຊ້ຳພັດຍັງຫຼົບລີ້ນປີ້ນຄວາມຢ່າງໜ້າເລືອດທີ່ສຸດ ໂດຍບອກໃຫ້ທ້າວເອົາຄວາຍມາຊົນກັນອີກໃນມື້ອື່ນ, ທ້າວກໍຈຶ່ງກົ້ມໜ້າກັບເມືອດ້ວຍຄວາມຄຽດແຄ້ນທີ່ສຸດແລ້ວກໍເລົ່າເຫດການຕ່າງໆໃຫ້ເມຍຟັງອີກ, ເມຍກໍແນະນຳໃຫ້ໄປຮ້ອງຫາເສືອ, ເສືອໄດ້ແປງເພດເປັນຄວາຍແລ້ວທ້າວຈຶ່ງນຳເຂົ້າເມືອຊົນກັບຄວາຍພະຍາ, ຄວາຍພະຍາກໍຕາຍອີກ, ແຕ່ພະຍາກໍຍັງບໍ່ຍອມສັ່ງໃຫ້ເອົາຊ້າງມາຊົນອີກ, ຊ້າງພະຍາກໍຕາຍເພາະຊ້າງຂອງຊາຍກຳພ້າແມ່ນຊ້າງນ້ຳແປງເພດ.

ເມື່ອໄກ່, ຄວາຍ ແລະຊ້າງຕາຍ, ພະຍາກໍຍັງບ່ຍອມຍັງຊູຊີເອົາເມຍທ້າວໃຫ້ໄດ້ ແລ້ວຈຶ່ງເວົ້າກັບທ້າວວ່າ :

ບັກກຳພ້າ ດຽວນີ້, ມຶງມີໂທດກຳຫຼາຍແລ້ວ, ຍ້ອນມຶງນີ້ເອງ ໄກ່, ຄວາຍ ແລະ ຊ້າງພະທີ່ນັ່ງຂອງກູຈຶ່ງຕາຍ ເພື່ອປະກັນເອົາຊີວິດມຶງໄວ້ມຶງຕ້ອງກິນຊີ້ນສັດທັງສາມຢ່າງນີ້ ໃຫ້ໝົດໃນມື້ດຽວບໍ່ດັ່ງນັ້ນຈະຖືກຕັດຄໍ !

ທ້າວໄດ້ຍິນດັ່ງນັ້ນ, ກໍສຸດທີ່ຄຽດແຄ້ນ ແຕ່ກໍເປັນສິ່ງທີ່ເຫຼືອວິໄສທີ່ຈະຕອບໂຕ້ທວງຄືນຕໍ່ຜູ້ມີອຳນາດບາດໃຫຍ່ໄຮ້ມະນຸດສະທຳ, ທ້າວຈຳຕ້ອງເມືອ ແລ້ວກໍເປີກສາກັບເມຍ ເຖິງມື້ໃໝ່ຈຶ່ງເອີ້ນເອົາຮຸ້ງມາ, ພາຍຫຼັງທີ່ໄດ້ວາງແຜນການລະອຽດ ແລະຕົກລົງຈົນເປັນ ທີ່ ເຂົ້າໃຈກັບຮຸ້ງແລ້ວທ້າວກໍເຂົ້າໄປໃນວັງກ່ອນ, ພໍເຖິງເວລາພະຍາຮຸ້ງພ້ອມດ້ວຍບໍລິວານຈຶ່ງ ພາກັນເລື່ອມຕາລົງມາກິນຊີ້ນນັ້ນຈົນໝົດ ແລ້ວກໍບິນກັບຄືນ.

ເມື່ອພະຍາເຫັນວ່າທ້າວກຳພ້າກິນຊີ້ນໝົດ ກໍຍັງສືບຕໍ່ຫຼົບລີ້ນປົ້ນຄວາມບ່ຍອມປະຕິ ບັດຕາມກະຕິກາທີ່ວາງໄວ້ ຊ້ຳບໍ່ພໍຍັງບັງຄັບໃຫ້ທ້າວຫາເຮືອມາຊ່ວງກັນອີກ ໂດຍນຳເອົາ ຈິດໃຈກະຕິກາອັນເກົ່າ, ທ້າວກໍຈຳໃຈຮັບປາກແລ້ວນຳເມືອເປີກສາກັບເມຍ, ພໍຮຸ່ງເຊົ້າມາ ທ້າວຈຶ່ງເອີ້ນເອົານາກ, ນາກໄດ້ແປງໂຕເປັນເຮືອໄປຊ່ວງກັບພະຍາໂດຍແມ່ນທ້າວກຳພ້າຜ ດຽວເປັນສີພາຍ. ເຖິງຈະອອກເທື່ອເທແຮງສຸມໝົດຈິດໝົດໃຈເຮືອຂອງພະຍາຍັງເອົາຊະ ນະເຮືອຂອງທ້າວພ້າບໍ່ໄດ້ສຸດທ້າຍກໍຫຼີ້ມພະຍາເລີຍຕາຍໄປ; ເມື່ອຕາຍໄປແລ້ວກໍຍັງໄດ້ ເກີດເປັນແຖນອີກ, ແຕ່ຍ້ອນຈິດວິນຍານທີ່ເຕັມໄປດ້ວຍຄວາມອະທຳ, ອາຄາດພະຍາບາດ ແລະອິດສາບັງບຽດຢາກໄດ້ເມຍທ້າວກຳພ້າພະຍາແຖນກໍຍັງສືບຕໍ່ລົງມາຕໍ່ສູ້ກັບທ້າວກຳພ້າ ອີກ. ສູ້ໄປສູ້ມາສຸດທ້າຍກໍເລີຍຖືກບ້ວງຂອງທ້າວກຳພ້າ, ທ້າວກໍໄດ້ປ່ອຍຕົວໄປ, ແທນທີ່ ພະຍາຈະຍອມເມື່ອຂຶ້ນໄປແລ້ວກໍຍັງເອີ້ນສັດທຸກຈຳພວກມາໂຮມກັນອີກ ແລ້ວກໍຖາມສັດ ແຕ່ລະຊະນິດວ່າ:

"ບັນດາສັດນ້ອຍໃຫຍ່ທັງຫຼາຍ ພວກເຈົ້າມີໃຜແດ່ທີ່ສາມາດລົງນຳເອົາຂວັນເມຍ ບັກກຳພ້າຢູ່ເມືອງລຸ່ມມາໃຫ້ກູໄດ້ ?"

ໄດ້ມີສັດສີ່ຈຳພວກຂານອາສາຄື ແມງງອດ, ງູເຫົ່າ, ນົກເຄົ້າ ແລະບ່າງລົ້ວ. ເມື່ອ ຮັບປາກແລ້ວກໍໄດ້ວາງໜ້າທີ່ ແລະແຜນການຢ່າງລະອຽດ. ເວລາປະຊຸມແບ່ງປັນໜ້າທີ່ ກັນນັ້ນ ຜີນ້ອຍກໍໄດ້ຈອບຟັງ ແລະຮູ້ແຜນການລະອຽດແລ້ວຈຶ່ງຮີບກັບລົງມາບອກເອ້ຍ ໃພ້ວ່າ:

"ແຕ່ນີ້ຕໍ່ໄປເອ້ຍບໍ່ຕ້ອງລຸກໜ້ຶງເຂົ້າ, ທຸກສິ່ງຢ່າງນ້ອງຈະຮັບພາລະຈົນກວ່າທຸກ ຢ່າງຈະຮຽບຮ້ອຍເອງ". ພໍຕື່ນເຊົ້າມາຜີນ້ອຍກໍລຸກແຕ່ເດິກ ແລ້ວກໍຈັດການຂ້າແມງງອດທີ່ ລີ້ຢູ່ໂດ້ນຟືນ, ງູເຫົ່າທີ່ລີ້ຢູ່ໝໍ້ໜ້ຶງ ແລະນົກເຄົ້າທີ່ຈັບຢູ່ປາຍຊານເປັນລຳດັບມື້ມາ.

ເປັນອັນວ່າສັດທັງສາມໄດ້ຕາຍໝົດຍັງແຕ່ບ່າງລົ້ວທີ່ສາມາດຮ້ອງເອົາຂວັນນາງຂຶ້ນ ໃຫ້ພະຍາແຖນໄດ້, ແຕ່ຍ້ອນຄວາມພະຍາຍາມອັນສະຫຼາດຄ່ອງແຄ່ວຂອງຜີນ້ອຍ, ຜີນ້ອຍ ຈຶ່ງໄດ້ວາງແຜນຫຼອກບ່າງລົ້ວ ໂດຍເອົາໄມ້ມາສານເຮັດຂ້ອງໃຫ້ບ່າງລົ້ວເຫັນ, ບ່າງລົ້ວ ສົນໃຈກໍຈຶ່ງຖາມວ່າ:

ສ່ຽວ! ແມ່ນໂຕເຮັດຫຍັງຄືມາຂະໜຸກຂະໜຸຍແທ້ ?

ໂອຍ! ສ່ຽວເອີຍ! ເຮົາວ່າຊິສານອູ່. ຜີນ້ອຍຕອບ

ອູ່ຫຍັງ ຄືມາເຮັດແນວນີ້ ? ບ່າງຖາມ

ອູ່ຂ້າງບ່ອງ. ຜີນ້ອຍຕອບ

ພໍສານສຳເລັດ ຜີນ້ອຍຈຶ່ງເວົ້າວ່າ :

ສ່ຽວ! ເຮົາຂໍເພິ່ງໂຕເຂົ້າຢັນຂ້ອງທາງໃນໃຫ້ເຮົາແດ່ວ່າ "ມັນຊິແໜ້ນໜາດີຢູ່ບໍ ?"

ໄດ້ ! ບ່າງຕອບດ້ວຍຄວາມຍິນດີ

ພໍວ່າແລ້ວ, ດ້ວຍຄວາມຮູ້ເທົ່າບໍ່ເຖິງການ ບ່າງຈຶ່ງເຂົ້າໄປ, ເມື່ອຜີນ້ອຍໄດ້ໂອກາດ ຈຶ່ງອັດທັນທີ ແລ້ວຈຶ່ງຂູ່ວ່າ :

" ມື້ນີ້ ຄືມື້ສຸດທ້າຍຂອງມຶ່ງແລ້ວ ກູຈະຂ້າມຶ່ງດຽວນີ້ໂລດ, ຖ້າມຶ່ງຢ້ານຕາຍ ມຶ່ງ ຕ້ອງຮຽກເອົາຂວັນເອ້ຍໃພ້ກູມາ ".

ຍ້ອນຄວາມຕົກໃຈ ແລະຢ້ານຕາຍ ບ່າງຈຶ່ງຮຽກເອົາຂວັນນາງງາຄືນມາ, ພໍນາງ ຄືນ ແລ້ວ, ຜີນ້ອຍຍັງລໍ້ຕັດລີ້ນບ່າງອີກໂດຍຖາມວ່າ :

ໂທສ່ຽວ! ສຽງຮ້ອງຂອງໂຕຈັ່ງແມ່ນເຂັດເນາະ, ໂຕພໍບອກເຮົາໄດ້ບໍວ່າມັນເຂັດ ຍ້ອນຫຍັງ?

ໂອ ! ກໍເຂັດຍ້ອນປາຍລີ້ນເຮົານີ້ຕໍ. ບ່າງຕອບດ້ວຍຄວາມທະນົງຕົວ

ໂອ ! ຄັນຈັ່ງຊັ້ນ ເຮົາຂໍເບິ່ງແດ່ເດ່ຊິໄດ້ບໍ ? ຜີນ້ອຍຖາມຈ້ຳເຂົ້າ

ໄດ້ ! ວ່າແລ້ວບ່າງກໍແລບລີ້ນອອກມາໃຫ້ຜີນ້ອຍເບິ່ງ ຜີນ້ອຍຈຶ່ງຮີບຕັດປາຍ ລີ້ນທັນທີ, ພາຍຫຼັງທີ່ຕັດແລ້ວ, ເພື່ອຄວາມແນ່ໃຈ ຜີນ້ອຍຍັງບອກໃຫ້ບ່າງຮ້ອງທົດລອງ ອີກ ແຕ່ກໍບໍ່ມີລິດເດດອີຫຍັງໝົດ.

ຫຼັງຈາກ ທ້າວພະຍາຕາຍໄປແລ້ວ ຊາວເມືອງເຫັນວ່າທ້າວກຳພ້າເປັນຄົນທີ່ມີຄວາມ ສາມາດຈຶ່ງພ້ອມກັນຍົກທ້າວຂຶ້ນນັ່ງເມືອງຕໍ່ໄປ.

ຫອບ : ໄຜ

ບົດທີ 4

ນິທານຊອນຫົວ (ນິທານຕະຫຼົກ)

1. ຄວາມໝາຍ ແລະ ລັກສະນະພິເສດຂອງນິທານຊອນຫົວ

ຄຳວ່າ "ຕະຫຼົກ" ເປັນຄຳກຳມະ ມີຄວາມໝາຍວ່າ ເຮັດໃຫ້ຢາກຫົວ; ນິທານຊອນຫົວ ຫຼື ນິທານຕະຫຼົກກໍແມ່ນເລື່ອງເລົ່າພື້ນເມືອງປະເພດໜຶ່ງທີ່ມີລັກສະນະພິເສດເຊິ່ງ ພາໃຫ້ເກີດມີສຽງຫົວ. ໃນຈັນນະຄະດີພື້ນເມືອງປະເທດໃດໜຶ່ງກໍລ້ວນແຕ່ມີປະເພດເລື່ອງສັ້ນອັນມີລັກສະນະພິເສດທີ່ພາໃຫ້ເກີດມີສຽງຫົວນີ້. ບົດເລື່ອງເຫຼົ່ານີ້ເກີດມາຈາກການດຳລົງຊີວິດ, ການອອກແຮງງານ ແລະການຕໍ່ສູ້ສັງຄົມຂອງປະຊາຊົນຜູ້ອອກແຮງງານ. ຈຸດພິເສດຕົ້ນຕໍຂອງເລື່ອງພື້ນເມືອງປະເພດນີ້ ແມ່ນໃຊ້ສຽງຫົວເປັນພາຫະນະທັງການປະດິດແຕ່ງ ແລະປັນທັງຈຸດປະສົງຂອງບົດເລື່ອງ. ດັ່ງນັ້ນ, ຄົນທັງຫຼາຍຈຶ່ງເຄີຍເອີ້ນນິທານປະເພດນີ້ ວ່າ: ນິທານຊອນຫົວ ຫຼື ນິທານປະຈຳວັນ. ນິທານຊອນຫົວກ່ອນອື່ນໝົດ ມີບົດບາດພາໃຫ້ເກີດມີສຽງຫົວ. ສຽງຫົວນັ້ນ ອາດຈະມີລັກສະນະຢອກໄຍ່ມ່ວນຊື່ນ ຫຼື ອາດເປັນການເຍາະເຍີ້ຍສຽດສີ; ອາດຈະເປັນການກ່າວປະນາມໂຈມຕີ ຫຼື ໂຄ່ນລົ້ມໂດຍກົງ.

"ຫົວແມ່ນກິລິຍາອັນໜຶ່ງຂອງຄົນເຮົາ". ຄົນເຮົາຫົວຍ້ອນມີຫຼາຍສາເຫດຕ່າງກັນ, ເວົ້າລວມແລ້ວ ສຽງຫົວມີ2ປະເພດຄື ສຽງຫົວທີ່ມີລັກສະນະສະລິລະ ແລະສຽງຫົວທີ່ ມີລັກສະນະຈິດຕະສາດ. ສຽງຫົວທີ່ມີລັກສະນະສະລິລະແມ່ນສຽງຫົວທີ່ເກີດຂຶ້ນຕາມທຳມະຊາດ ແລະພາໃຫ້ຄົນເຮົາຮູ້ສຶກສະບາຍກາຍ, ສະບາຍໃຈໄປຍ້ອນ. ໃນກໍລະນີນີ້ ສຽງຫົວມີຄວາມໝາຍໄປໃນທາງດີ ຫຼື ຢູ່ທາງບວກສະເໝີ. ນອກຈາກສຽງຫົວທີ່ມີລັກສະນະສະລິລະນີ້ແລ້ວ, ຍັງມີສຽງຫົວທີ່ມີລັກສະນະຈິດຕະອີກດ້ວຍ. ສຽງຫົວຈິດຕະແມ່ນສຽງຫົວດ້ວຍສະຕິປັນຍາ ເຊິ່ງຍາມໃດກໍຕິດພັນກັບຈຸດປະສົງໃດໜຶ່ງຢ່າງຄັກແນ່. ສຽງຫົວລັກສະນະຈິດຕະນີ້ຈະເກີດຂຶ້ນເມື່ອມີສະພາບ ແລະການກະທຳໃດໜຶ່ງເກີດຂຶ້ນຢ່າງບັງເອີນ, ຜິດປົກກະຕິ,ບໍ່ຖືກຕ້ອງກັບກົດເກນ ແລະຄວາມຊິນເຄີຍຕົວຈິງເຊິ່ງເປັນການ "ບາດໜູບາດຕາ" ແບບເປັນໜ້າຢາກຫົວ. ຫຼືເວົ້າອີກຢ່າງໜຶ່ງສຽງຫົວຈິດຕະນີ້ແມ່ນໝາກຜົນອັນເນື່ອງມາຈາກຄວາມບໍ່ສອດຄ່ອງ ແລະບໍ່ເໝາະສົມກັນລະຫວ່າງຮູບນອກ ແລະເນື້ອແທ້ຂອງເຫດການໃດໜຶ່ງ... ສຽງຫົວໃນກໍລະນີນີ້ມີຄວາມໝາຍປະຕິເສດທາງລົບ ແລະກໍມີລັກສະນະສັງຄົມຢ່າງຈະແຈ້ງ.

ສຽງຫົວໃນນິທານຊອນຫົວມີຫຼາຍລະດັບ ແລະມີຫຼາຍຈຸດປະສົງຕ່າງກັນ. ກ່ອນອື່ນໝົດປະຊາຊົນໃຊ້ສຽງຫົວເພື່ອຕຳນິຕິຕຽນແນວຄິດ ແລະການກະທຳທີ່ຜິດພາດ, ສິ່ງທີ່ຕ່ຳຊ້າຊ້າຫຼ້າຫຼັງໃນຮີດຄອງປະເພນີ ຕະຫຼອດເຖິງແບບແຜນການດຳລົງຊີວິດຂອງປະຊາຊົນຜູ້ອອກແຮງງານ. ລະດັບສູງກວ່ານັ້ນອີກ ກໍຄືປະຊາຊົນໃຊ້ສຽງຫົວເພື່ອສຽດສີໂຈມຕີການ

ກົດຂີ່ຂູດຮີດຂອງຊົນຊັ້ນປົກຄອງພ້ອມທັງບໍລິວານຊັ້ນຈຳຂອງມັນ; ກ່າວປະນາມລະບອບສັງຄົມທີ່ມີຊົນຊັ້ນ ແລະຂາດຄວາມຍຸຕິທຳໃນທຸກດ້ານ.

→ ນິທານຊອນຫົວມີກຳເນີດມາຈາກການດຳລົງຊີວິດປະຈຳວັນຂອງປະຊາຊົນ ແລະມັນຂະຫຍາຍຕົວແຮງໃນໄລຍະທ້າຍຂອງລະບອບສັງຄົມສັກດິນາ ເຊິ່ງເປັນລະບອບສັງຄົມທີ່ເປື່ອຍເຍື່ອຍເນົ່າເໝັນ ແລະເຕັມໄປດ້ວຍຄວາມຂັດແຍ່ງທີ່ເປັນປໍລະປັກ. ປະຊາຊົນໄດ້ໃຊ້ສຽງຫົວຂອງຕົນເພື່ອກ່າວປະນາມຢ່າງແຂງແຮງ,ປະກອບສ່ວນຊຸກດັນ ໃຫ້ລະບອບສັງຄົມທີ່ເກົ່າແກ່ຫຼ້າຫຼັງນັ້ນໄປເຖິງບ່ອນຊຸດໂຊມ ແລະພັງທະລາຍລົງຢ່າງໄວວາທີ່ສຸດ. ດ້ວຍເຫດນັ້ນນິທານຊອນຫົວ ຈຶ່ງມີລັກສະນະຕໍ່ສູ້ສູງ ແລະມີລັກສະນະປະຊາຊົນຢ່າງເລິກເຊິ່ງ.

ນິທານຊອນຫົວສ່ວນຫຼາຍ ມັກຈະເປັນບົດເລື່ອງສັ້ນ, ການປະກອບສ້າງບົດເລື່ອງ ມີລັກສະນະກະທັດຮັດໜັກແໜ້ນ; ຕົວລະຄອນມີໜ້ອຍ ແລະເຄີຍມີການຂັດແຍ່ງກັນ ທາງດ້ານແນວຄິດນິໄສ, ການປະພຶດ ແລະທັງການປາກເວົ້າອີກດ້ວຍ. ຈາກການຂັດແຍ່ງທີ່ມີລັກສະນະກົງກັນຂ້າມກັນນັ້ນ ນິທານຊອນຫົວເຄີຍມີການແກ້ໄຂບັນຫາແບບບັງເອີນດ້ວຍໄຊຊະນະຂອງຕົວລະຄອນຝ່າຍເປັນທຳເຊິ່ງພາໃຫ້ເກີດມີສຽງຫົວເຍາະເຍີ້ຍ, ສຸດສີຕົວລະຄອນຝ່າຍອະທັ ອັນເປັນການດູດດຶງຈິດໃຈຜູ້ອ່ານ, ຜູ້ຟັງຢູ່ສະເໝີ.

ຈຸດພິເສດທີ່ໄດ້ກ່າວມາຂ້າງເທິງນັ້ນ ໄດ້ພາໃຫ້ນິທານຊອນຫົວມີຄຸນຄ່າສູງໃນການສຶກສາ ແລະການຕໍ່ສູ້ໃນສັງຄົມ, ນິທານຊອນຫົວຂອງລາວເຮົາອຸດົມສົມບູນສົມຄວນ, ໃນນັ້ນມີທັງບົດເລື່ອງທີ່ ມີລັກສະນະຄົບຖ້ວນ ແລະສຸດກົກສຸດປາຍ; ມີທັງບົດເລື່ອງທີ່ຂາດບັ້ນຂາດຕອນ ແລະກະແຈກກະຈາຍເຊິ່ງເກີດຂຶ້ນໃນຊີວິດປະຈຳວັນອັນມີຫຼາຍຮູບ ຫຼາຍສີຂອງປະຊາຊົນ. ສຽງຫົວໃນບົດເລື່ອງທີ່ເວົ້າເຖິງຊີວິດປະຈຳວັນນັ້ນມີຄວາມໝາຍ ແບບຕິຕຽນ, ກ່ຳສ້າງແບບເບົາບາງ, ຕ່າງຝ່າຍຕ່າງເພິ່ງພໍໃຈ ແລະເບີກບານມ່ວນຊື່ນເຊັ່ນ ວ່າເລື່ອງ "ສີ່ໜອກ" ນອກຈາກນັ້ນຍັງມີບົດເລື່ອງຍາວເຊິ່ງມີການປະກອບສ້າງສັບສົນມີ ການຕິຕຽນສຸດສີຢ່າງເລິກເຊິ່ງທີ່ສຸດເຊັ່ນ ເລື່ອງ "ສົມບໍ່ຄິດ", ເລື່ອງ "ທ້າວໂປ້" ພິເສດ ແມ່ນເລື່ອງຊຽງໜ້ຽງອັນປະກອບດ້ວຍເລື່ອງຊອນຫົວຫຼາຍໆ ເລື່ອງທີ່ເວົ້າເຖິງການກະທຳ ຕ່າງໆຂອງຕົວລະຄອນດຽວກັນຄື ທ້າວຊຽງໜ້ຽງ... ບົດເລື່ອງໄດ້ຮັບການເຜີຍແຜ່ຢ່າງ ກວ້າງຂວາງໃນໝູ່ມະຫາຊົນ. ອາດເວົ້າໄດ້ວ່າຜູ້ເຖົ້າຜູ້ແກ່, ຜູ້ໜຸ່ມຜູ້ນ້ອຍຕ່າງກໍມັກເລົ່າ ມັກຟັງເລື່ອງຊຽງໜ້ຽງທີ່ເຄີຍເລົ່າສືບຕໍ່ກັນມາໂດຍບໍ່ຮູ້ສຸດເປັນຈັກເທື່ອ. ປະຊາຊົນມີຄວາມນິຍົມຊົມຊອບ ແລະຖະນຸຖະໜອມບົດເລື່ອງນີ້ຢູ່ສະເໝີມາເພາະມັນໄດ້ເປັນອາວຸດອັນ ແຫຼມຄົມອັນໜຶ່ງທີ່ເຂົາເຈົ້າໃຊ້ໃນການຕໍ່ສູ້ຕ້ານລະບອບສັກດິນາ. ອິດທິພົນຂອງເລື່ອງ ຊຽງ ໜ້ຽງແຜ່ຂະຫຍາຍກວ້າງຂວາງໃນໝູ່ມະຫາຊົນ ຈົນເຖິງຂັ້ນພວກສັກດິນາຜູ້ປົກຄອງບໍ່ອາດຈະເມີນເສີຍຕໍ່ໄປໄດ້ອີກ. ເຂົາເຈົ້າໄດ້ຮີບໂຮມເອົາເລື່ອງຊຽງໜ້ຽງມາດັດແປງໃຫ້ສອດຄ່ອງກັບສີດີ

ຜົນປະໂຫຍດຂອງເຂົາແລ້ວນຳມາຂຽນໄວ້ເປັນໜັງສືຜູກ. ໃນໜັງສືຜູກເລື່ອງຊຸງໜ້ຽງນີ້ ສຸງຫົວໂຈມຕີແບບປໍລະປັກໄດ້ຫຼຸດຜ່ອນລົງມາເປັນສຸງຫົວຕໍ່ສູ້ແບບສຸງດສີ ເຊິ່ງໃນທີ່ສຸດ ເລີຍຫັນປ່ຽນມາເປັນສຸງຫົວໂຄ່ນລົ້ມຊຸງໜ້ຽງເອງ. ໃນຕອນທ້າຍສະບັບຂຽນນັ້ນ ທ້າວ ຊຸງໜ້ຽງໄດ້ຖືກນຳໄປປ່ອຍໄວ້ໃນດອນເປົ່າປ່ຽວແຫ່ງໜຶ່ງ, ຈົນຈຳຕ້ອງໄດ້ຍອມຮັບວ່າຕົນ ເອງຜິດພາດໃນການຕໍ່ສູ້ຜ່ານມາ ແລະຂໍ "ກັບເນື້ອກັບຕົວ" ມາເປັນຄົນດີຕາມແບບສັງຄົມ ສັກດິນາ, ອັນພາໃຫ້ເກີດມີສຸງຫົວແບບ "ຫຍໍ້ຫຍັນ", ແບບ "ໂລ່ງອົກໂລ່ງ ໃຈ" ແລະແບບ "ອິດຸກູນາສາໂທ" ຂອງຊົນຊັ້ນປົກຄອງ.

ນອກຈາກເລື່ອງຊຸງໜ້ຽງແລ້ວ, ປະຊາຊົນບັນດາເຜົ່າທ້ອງຖິ່ນຕ່າງໆ ຍັງມີເລື່ອງ ອື່ນໆອີກ ທີ່ຄ້າຍຄືກັນນີ້ເຊັ່ນ "ຕາຈາງປຣາງ" ຂອງເຜົ່າກຶມມຸ, ຢູ່ແຂວງຊຽງຂວາງນິຍົມ ກັນເລົ່າເລື່ອງ "ຊຽງໂພດ", ຢູ່ແຂວງຈຳປາສັກພັດມີເລື່ອງ "ລຽງດາວ" ແລະ ອື່ນໆ.

2. ເນື້ອໃນ ແລະ ການແບ່ງປະເພດນິທານຊອນຫົວ

ອີງຕາມຈຸດພິເສດ ແລະລັກສະນະທີ່ກ່າວມາຂ້າງເທິງນັ້ນ ອາດແບ່ງນິທານຊອນຫົວ ອອກເປັນສອງປະເພດດັ່ງນີ້:

2.1 ນິທານຊອນຫົວມີລັກສະນະຕັກເຕືອນ

ບົດເລື່ອງເຫຼົ່ານີ້ ມີຄວາມໝາຍຢອກໄຍມ່ວນຊື່ນທຳມະດາ, ດັ່ງນັ້ນສຸງຫົວຈຶ່ທີລັກ ສະນະຕະຫຼົກມ່ວນຊື່ນເປັນຕົ້ນ. ຕົວລະຄອນເອກສ່ວນຫຼາຍແມ່ນປະຊາຊົນຜູ້ອອກແຮງ ງານ. ປະຊາຊົນໄດ້ໃຊ້ສຸງຫົວຢອກໄຍຊື່ນພ້ອມກັນນັ້ນກໍເພື່ອຕັກເຕືອນໃຫ້ຫຼີກເວັ້ນຈາກ ການປະພຶດທີ່ມີລັກສະນະກົນຈັກຕາຍຕົວ, ຂາດການຕຶກຕອງໃນວຽກງານກໍຄືການດຳລົງ ຊີວິດປະຈຳວັນ. ບົດເລື່ອງ"ສີ່ໜອກ" ພັນລະນາເຖິງການປະພຶດ ແລະຄຳເວົ້າທີ່ຜິດພາດ ຂອງບັນດາຕົວລະຄອນທີ່ຫູໜວກ. ຄວາມໝາຍຢູ່ບ່ອນນີ້ບໍ່ທັນມີຄວາມໝາຍຕີຕຽນຢ່າງ ເລິກເຊິ່ງ. ເລື່ອງ "ຜີເຮືອນດິບ" ໄດ້ຕີຕຽນຄວາມພາໂລໂງ່ຈ້າຂອງພວກຊາວໜຸ່ມທີ່ມັກໄປ ລົ້ມສາວ, ມາຮອດເລື່ອງ "ສອງສ່ຽວໄປລັກໄກ່" ສຸງຫົວເກີດຂຶ້ນເພື່ອຕີຕຽນການປະພຶດ ອັນມີຂໍ້ຂັດແຍ່ງລະຫວ່າງຄວາມສາມາດກັບການປະພຶດຕົວຈິງຂອງສອງສ່ຽວຜູ້ໜຶ່ງຫູໜວກ ຜູ້ໜຶ່ງຕາບອດພາກັນໄປລັກໄກ່. ສຸງຫົວຢອກໄຍໃນທີ່ນີ້ມີຄວາມໝາຍຕັກເຕືອນແບບ ເບົາບາງ ແລະສະແດງອອກແຈ້ງທີ່ສຸດໃນບົດເລື່ອງ "ຕາບອດຄຳຊ້າງ" ບົດເລື່ອງນີ້ ມີ ຈຸດປະສົງເຍາະເຍີ້ຍຄົນຈຳນວນໜຶ່ງ ທີ່ມັກຖືໂຕວ່າຕົນເອງຮູ້ກວ່າໝູ່, ແຕ່ຕົວຈິງແລ້ວ ພັດ ເປັນພຽງຄົນທຳມະດາສາມັນຄືຜູ້ອື່ນໆ. ຄົນເຮົາສາມາດຮູ້ໄດ້ແຕ່ພາກສ່ວນໃດໜຶ່ງຂອງ ຊີວິດຕົວຈິງອັນກວ້າງໃຫຍ່ໄພ ສານທີ່ເຄີຍພົບພໍ້ມາເທົ່ານັ້ນ. ຄຳທີ່ເຂົາຍົກມານັ້ນມີ ລັກສະນະໃນຕົວ. ດ້ານດຽວກໍບໍ່ຮອບຄອບຖີ່ຖ້ວນໄດ້. ບົດເລື່ອງ "ຕາບອດຄຳຊ້າງ" ນີ້ ເປັນບົດເລື່ອງສັ້ນ, ເຂົ້າໃຈງ່າຍ, ແຕ່ກໍມີຄວາມໝາຍດ້ານພຶດຕິກຳຕົວຈິງຢ່າງເລິກເຊິ່ງສົມ

ຄວນ ຍິ່ງກວ່ານັ້ນ ບົດເລື່ອງຍັງມີຄວາມໝາຍດ້ານສັດຈະທຳຄືກັນກັບນິທານສັດ. ໃນການ ດຳ ລົງຊີວິດກໍຄືໃນວຽກງານຕ້ອຈິງຕ້ອງມີລັກສະນະຮອບດ້ານຈຶ່ງຫຼີກເວັ້ນຂໍ້ຜິດພາດ, ຂາດ ຕົກ ບົກພ່ອງໄດ້.

ໃນມວນຊົນຊາວໄຮ່ນາສະໄໝກ່ອນ ບາງຄັ້ງຄາວກໍມີການປະພຶດທີ່ຜິດປົກກະຕິ ອັນ ມີລັກສະນະສະເງີ້ສະງະແບບກົນຈັກຕາຍຕົວ ຫຼືເປັນການປະພຶດແບບແປກປະຫຼາດຈົນ ເປັນ ຕາຢາກຫ້ວເຊິ່ງປະຊາຊົນເຫັນວ່າຕ້ອງຕັກເຕືອນບອກສອນ, ບາງເທື່ອກໍຕ້ອງຕິຕຽນ ສຽດສີເບົາບາງແບບເປັນກັນເອງ, ດັ່ງໃນເລື່ອງ "ຜົວເມຍໃໝ່", "ຊອກເມຍ", "ສອງ ສ່ຽວ ໄປຄ້າ", "ຜົວເມຍຫຼັກ" ເຫຼົ່ານັ້ນເປັນຕົ້ນ.

ເວົ້າລວມແລ້ວນິທານຊວນຫົວປະເພດຢອກໄຍນີ້ ເປັນບົດເລື່ອງທີ່ສັ້ນ, ກະທັດຮັດ ງ່າຍດາຍແຕ່ອຸດົມສົມບູນທີ່ສຸດ. ບົດເລື່ອງເຫຼົ່ານີ້ເກີດມາຈາກຊີວິດຕົວຈິງຂອງປະຊາຊົນຜູ້ ອອກແຮງງານ. ສຽງຫົວບັນດາບົດເລື່ອງນີ້ມີລັກສະນະຕະຫຼົກເພື່ອເປັນການຢອກໄຍມ່ວນ ຊື່ນທຳມະດາ ແຕ່ກໍເລີ່ມມີຄວາມໝາຍຕິຕຽນສັ່ງສອນແບບກ່ຳສ້າງ ແລະເຫັນອົກເຫັນໃຈ ເຊິ່ງກັນແລະກັນຂອງປະຊາຊົນຜູ້ອອກແຮງງານ.

2.2 ນິທານຊວນຫົວປະເພດສຽດສີ

ນິທານຊວນຫົວປະເພດສຽດສີ ມີຄວາມໝາຍເຍາະເຍີ້ຍ, ຕິຕຽນ, ສຽດສີ ແລະຕໍ່ສູ້ ຢ່າງຈະແຈ້ງ. ຕົວລະຄອນທີ່ເປັນເປົ້າໝາຍສຽງຫົວໃນທີ່ນີ້ ສ່ວນຫຼາຍແມ່ນຊົນຊັ້ນທີ່ແຍກ ຕົວອອກຈາກການອອກແຮງງານດ້ວຍຕົນມືເຊັ່ນ ພໍ່ຄ້າຊາວຂາຍ, ຄູບາອາຈານ ຫຼື ຜູ້ມີ ອຳນາດບາດໃຫຍ່ໃນບ້ານ ແລະທ້ອງຖິ່ນຕ່າງໆ. ແນວຄິດແລະການກະທຳຂອງຕົວລະ ຄອນເຫຼົ່ານີ້ ມີອັນຜິດພາດກັບຮີດຄອງປະເພນີ, ຜິດຈາກທັດສະນະຄຸນສົມບັດຂອງປະ ຊາ ຊົນຜູ້ອອກແຮງງານຄື ນິໄສຂີ້ຖີ, ຄວາມໂລບມາກໂລພາ, ການຕົວະຍົວະຫຼອກລວງ, ລັກ ໂລບ, ຫຼີ້ນຊູ້ພານສາວ, ອວດອົ່ງທະນົງຕົວ ແລະບັນຫາອື່ນໆອີກ. ນິທານຊວນຫົວປະ ເພດນີ້ເກີດຂຶ້ນ ແລະຂະຫຍາຍຕົວແຮງໃນເງື່ອນໄຂທີ່ສັງຄົມໄດ້ມີການຂະຫຍາຍຕົວຈົນ ພາໃຫ້ການພົວພັນໃນສັງຄົມມີລັກສະນະສັບສົນ, ຂາດຄວາມເສລີພາບ, ຄົນຈຳນວນໜຶ່ງ ມີ ຊີວິດຢູ່ດ້ວຍການຄິດໄລ່ຫາກິນບົນນ້ຳເທື່ອນ້ຳໄຄຂອງຄົນອື່ນ. ນີ້ແມ່ນປາກົດການໃໝ່ໃນ ສັງຄົມທີ່ມີຄົນຂູດຮີດຄົນ. ມັນກົງກັນຂ້າມກັບແບບແຜນການດຳລົງຊີວິດທີ່ຈົບງາມຂອງປະ ຊາຊົນຜູ້ອອກແຮງງານ. ດັ່ງນັ້ນ, ປະຊາຊົນຕ້ອງໃຊ້ສຽງຫົວເພື່ອຕິຕຽນສຽດສີ ແລະຕໍ່ສູ້ ປາກົດການເຫຼົ່ານີ້ຢ່າງສຸດຂີດ. ບົດເລື່ອງ "ສ່ຽວຫຼັກສ່ຽວແຫຼມ" ຕິຕຽນແນວຄິດອວດອົ່ງ ທະນົງຕົວ. ເລື່ອງ "ເມຍຫຼີ້ນຊູ້ຈາກຜົວ" ຕິຕຽນການປະພຶດນອກໃຈຜົວເຊິ່ງຜິດກັບທັດສະ ນະທົ່ວໄປຂອງສັງຄົມ. ບົດເລື່ອງ "ເພີ່ນກະດັດໂຕກະດ້ຳ" ມີຄວາມໝາຍຕໍ່ສູ້ກັບຄົນຈ□າ

ນອນໜຶ່ງທີ່ເຄີຍຕົວະຍົວະຫຼອກລວງຄົນອື່ນ, ມີນິໄສຂີ້ຖີ່ ແລະເຫັນແກ່ລາຍໄດ້ຕົນເອງ. ພ້ອມທັງມີການປອມແປງເພື່ອຫວັງລາບຫວັງລອຍຢູ່ສະເໝີ.

ເມື່ອສາສະໜາພຸດໄດ້ແຜ່ຂະຫຍາຍເຂົ້າມາລາວ, ຊັ້ນນັກບວກ, ຄູບາອາຈານຜູ້ເປັນຂົວຕໍ່ລະຫວ່າງພະພຸດທະເຈົ້າກັບປະຊາຊົນໄດ້ນຳເອົາ "ສິນທຳ" ຈາກພຸດທະສາດສະໜາມາເຜີຍແຜ່ໃຫ້ໝູ່ມະຫາຊົນຢ່າງກວ້າງຂວາງ ແລະເລິກເຊິ່ງທີ່ສຸດ. ດັ່ງນັ້ນ, ປະຊາຊົນຈຶ່ງເຄົາລົບນັບຖືພະສົງສະມະເນນຢູ່ສະເໝີ. ແຕ່ກົງກັນຂ້າມກັບຖານະບົດບາດອັນສູງສົ່ງດັ່ງກ່າວນັ້ນພັດມີພະສົງສາະເນນຈຳນວນໜຶ່ງເຮັດຜິດຕໍ່ຫຼັກ"ສິນທຳ" ແລະທັດສະນະຄຸນສົມບັດກໍຄືແບບແຜນການດຳລົງຊີວິດອັນເຂັ້ມງວດ ແລະປອດໃສຂອງນັກບວດທີ່ແທ້ຈິງ. ຄົນພວກນີ້ບໍ່ສົມກັບຄວາມໄວ້ໃຈຂອງປະຊາຊົນ. ມີພະສົງບາງອົງພັດເປັນຄົນໂລບມາກໂລພາເຫັນແກ່ເງິນແກ່ຄຳ, ບາງອົງພັດເຫັນແກ່ເຄື່ອງຢູ່ຂອງກິນ, ບາງອົງພັດເປັນຜູ້ຂີ້ຖີ່ຂີ້ກະຕັ່ງ ຫຼືເປັນຄົນໂມໂຫໂທສະ ແລະຍິ່ງກວ່ານັ້ນຍັງມີບາງອົງລັກລອບຫຼິ້ນຊູ້ພານສາວອີກດ້ວຍ. ນີ້ແມ່ນປາກົດການທີ່ມີລັກສະນະຫຍໍ້ທໍ້, ເຊື່ອມເສຍໃນຖັນແຖວນັກບວດ, ຄູບາອາຈານອັນພາໃຫ້ພວກເພິ່ນເປັນເປົ້າໝາຍຂອງນິທານຊອນຫົວ, ດັ່ງໃນເລື່ອງ "ຍາພໍ່ສາລາໂມກ", "ຍາພໍ່ໂລບມາກ" ແລະບົດອື່ນໆອີກ. ບົດເລື່ອງຕ່າງໆທີ່ໄດ້ຍົກມານີ້ມີໂຄງສ້າງແກ່ນທັດຮັດໜັກແໜ້ນ, ມີທັງຂໍ້ຂັດແຍ່ງ ອັນສົມເຫດສົມຜົນ ແລະສາມາດສະແດງໃຫ້ເຫັນຢ່າງຈະແຈ້ງເຖິງຄຸນສົມບັດອັນປອມແປງ ແລະເສຍສິນຂອງຄູບາອາຈານຈຳນວນໜຶ່ງ. ບົດເລື່ອງແບບນີ້ມີຈຳນວນບໍ່ຫຼາຍປານໃດ, ແຕ່ມັນກໍມີຄວາມໝາຍອັນສຳຄັນດ້ານສັງຄົມ ແລະມີຄຸນຄ່າສູງດ້ານການຕໍ່ສູ້ແນວຄິດໃນໝູ່ມະຫາຊົນທົ່ວໄປ. ບົດເລື່ອງເລົ່ານີ້ໄດ້ສະແດງໃຫ້ເຫັນວ່າປະຊາຊົນຜູ້ອອກແຮງງານມີຄວາມຮັບຮູ້ຢ່າງເລິກເຊິ່ງຕໍ່ສາດສະໜາພຸດ, ຮູ້ຈຳແນກໄດ້ວ່າອັນໃດແມ່ນສິນທຳອັນແທ້ຈິງທີ່ຄູບາອາຈານຢຶດຖື ແລະອັນໃດແມ່ນສິນທຳແບບປອມແປງ. ສະນັ້ນ, ປະຊາຊົນບໍ່ສະເພາະແຕ່ໄດ້ຕຳນິວິຈານໃນນິທານຊວເທົ່ານັ້ນ, ຫາກຍັງໄດ້ແຕ່ງເປັນຄຳສຸພາສິດສຸງດສີ່ຕໍ່ພວກຄູບາທີ່ເສຍສິນເສຍວິໄນວ່າ:

"ຢາກຮັ່ງໃຫ້ລ້ຽງງົວຂາຍ ຢາກຈົບຫາຍໃຫ້ເອົາເຈົ້າຫົວມາລ້ຽງ"

ຄຳສຸພາສິດທີ່ກ່າວມາຂ້າງເທິງນີ້ ແມ່ນສະຕິວິຈານຂອງປະຊາຊົນຕໍ່ຄວາມເປັນຈິງອັນມີລັກສະນະຫຍໍ້ທໍ້ຂອງສາສະໜາພຸດ. ຢູ່ໃນກໍລະນີແບບນີ້ປະຊາຊົນໄດ້ປະສານສົມທົບລະຫວ່າງນິທານຊອນຫົວທີ່ມີເນື້ອໃນຕິຕຽນກັບຮູບການປະດິດແຕ່ງພື້ນເມືອງອື່ນໆ ເພື່ອຮັບການຕໍ່ສູ້ດ້ານແນວຄິດໃນລະດັບສູງສົມຄວນ. ສະນັ້ນ, ໃນການດຳລົງຊີວິດປະຈຳວັນຖ້າຮູ້ໝູນໃຊ້ນິທານຊອນຫົວຢ່າງຖືກຕ້ອງມັນກໍອາດຈະກາຍເປັນອາວຸດຊະນິດໜຶ່ງທີ່ມີຄຸນຄ່າສູງໃນການຕໍ່ທາງສັງຄົມ.

ນິທານຊອນຫົວຍັງມີເນື້ອໃນສ່ອງແສງເຖິງການຕໍ່ສູ້ຂອງປະຊາຊົນ ຜູ້ອອກແຮງງານ ຕ້ານຊົນຊັ້ນປົກຄອງ, ໂດຍສະເພາະແມ່ນຊົນຊັ້ນສັກດິນາ. ເປົ້າໝາຍສຸດສີໂຈມຕີຂອງນິທານປະເພດນີ້ຕົ້ນຕໍ ແມ່ນພວກເຈົ້າຂຸນມຸນນາຍໃນອຳນາດການປົກຄອງຂອງລະບອບສັກດິນາ, ເຊິ່ງມີຕົວລະຄອນພະຍາເປັນຕົວແທນ. ນິທານຊອນຫົວທີ່ມີເນື້ອໃນຕໍ່ສູ້ຕ້ານຊົນຊັ້ນປົກຄອງນີ້ ສ່ວນຫຼາຍແມ່ນບົດເລື່ອງຍາວ, ມີຫຼາຍບັ້ນ, ຫຼາຍຕອນ ແລະເວົ້າເຖິງຫຼາຍບັນຫາທີ່ເກີດຂຶ້ນຢູ່ອ້ອມແອ້ມຕົວລະຄອນເອກຜູ້ດຸງວເຊັ່ນ ລະບົບນິທານຊຸງໜ້ຽງພື້ນເມືອງ, ລະບົບເລື່ອງທ້າວຊຸງໂພດ, ບົດເລື່ອງກ່ຽວກັບລູງດາວ, ທ້າວໂປ້, ທ້າວສົມບໍ່ຄິດ ແລະ ຕາຍຈາງບຣາງເຫຼົ່ານີ້ເປັນຕົ້ນ. ຕົວລະຄອນເອກຜູ້ເປັນເຈົ້າການໂຈມຕີ ແລະເອົາຊະນະກັບລະຄອນພະຍາໃນບົດເລື່ອງເຫຼົ່ານີ້ ມີແຫຼ່ງກຳເນີດມາຈາກຊົນຊັ້ນຜູ້ອອກແຮງງານ ຄື ຊາວໄຮ່ນາທີ່ມີການພົວພັນເຖິງອາຊີບຄ້າຂາຍບາງເລັກໜ້ອຍ ແລະຕໍ່ມາໄດ້ບອດຢູ່ຕາມວັດວາ ແລະໄດ້ຮ່ຳຮຽນໃນຊີວິດຕົວຈິງເອງຈົນກາຍເປັນຜູ້ຮຽນຮູ້ຢູ່ຕາມຊົນນະບົດແລະທ້ອງຖິ່ນຕ່າງໆເຊັ່ນ ລູງດາວ, ທ້າວສົມບໍ່ຄິດ, ທ້າວໂປ້, ທ້າວຊຸງໂພດ, ຊຸງໜ້ຽງເຫຼົ່ານີ້ເປັນຕົ້ນ. ບົດເລື່ອງໄດ້ພັນລະນາຕົວລະຄອນເຫຼົ່ານີ້ ຕາມແຕ່ລະໄລຍະຢ່າງລະອຽດລະອໍ ແລະຈະແຈ້ງສົມຄວນເຊັ່ນ ແຕ່ຄາວຍັງນ້ອຍເຂົາເຈົ້າເປັນເດັກທີ່ກຳເນີດຈາກຄອບຄົວຜູ້ອອກແຮງງານ, ຫາກມີຄວາມຂີ້ດີ້, ສະຫຼອກກ້ອກ ແລະຄວາມມີຄວາມສະຫຼາດເປັນພິເສດຕ່າງຈາກເດັກນ້ອຍຜູ້ອື່ນໆ. ຄວາມຂີ້ດີ້ສະຫຼອກກ້ອກ ແລະການປະພຶດທີ່ເຕັມໄປດ້ວຍສະຕິປັນຍາຂອງເຂົາເຈົ້ານັ້ນໃນເບື້ອງຕົ້ນຍັງສະແດງອອກໃນຂອບເຂດຄອບຄົວຂອງຕົນເອງເທົ່ານັ້ນ ເຊັ່ນວ່າ ຕົວະພໍ່ແມ່, ຕົວະພໍ່ປູ່ແມ່ຍ່າ... ຕໍ່ມາຂອບເຂດການເຄື່ອນໄຫວຂອງເຂົາເຈົ້າໄດ້ລາມອອກໄປຢ່າງກວ້າງຂວາງໄປທົ່ວບ້ານທົ່ວເມືອງເຕີບໃຫຍ່ຂຶ້ນມາບັນດາຕົວລະຄອນເຫຼົ່ານີ້ກໍຍິ່ງອ່ອນປ່ຽນທອກການຕໍ່ສູ້ດ້ວຍສະຕິປັນຍາຂອງຕົນໃສ່ຊົນຊັ້ນປົກຄອງແລະລະບອບສັກດິນາໂດຍກົງ. ມາຮອດໄລຍະນີ້ສ່ຽງຫົວໄດ້ຄວາມໝາຍຕໍ່ສູ້, ໂຈມຕີຢ່າງຈະແຈ້ງ ແລະເລິກເຊິ່ງທີ່ສຸດ. ຕົວແທນຂອງລະບອບສັງຄົມສັກດິນາ ແລະຊົນຊັ້ນປົກຄອງຄື ພວກເຈົ້າຂຸນມຸນນາຍ, ເສນາອຳມາດຕະຫຼອດເຖິງພະຍາເອງເຊິ່ງມີລັກສະນະເດັ່ງຂົ່ມ ແລະສັກສິດຢູ່ນັ້ນກໍກາຍເປັນເປົ້າໝາຍໂຈມຕີ, ກ່າວປະນາມຂອງນິທານຊອນຫົວ; ຍິ່ງກວ່ານັ້ນຕົວລະຄອນເຈົ້າຊີວິດຜູ້ສູງກວ່າພະຍາໃດໆ ແລະເປັນເຫດໃຫ້ພະຍາແຖມຢູ່ບົນໜ້າດິນນີ້ ກໍຖືກນຳມາເຍາະເຍີ້ຍຄື ກັນກັບຕົວລະຄອນອື່ນໆ.

ການສັນແປຂອງຕອນ ແລະບັ້ນຕ່າງໆໃນເລື່ອງຊອນຫົວ ໄດ້ສະແດງໃຫ້ເຫັນ ນິໄສໃຈຄໍ ແລະຄວາມສະຫຼາດຫຼັກແຫຼມຂຍຽງຕົວລະຄອນ. ໃນຫົວ ແລະມັນສະໝອງຂອງເຂົາເຈົ້າເຄີຍຄິດຫາກົນອຸບາຍ ແລະຍຸດທະວິທີຕ່າງໆເພື່ອຕອບໂຕ້ ແລະເອົາຊະນະຢ່າງທັນການກັບສະພາບການອັນທຸລະກັນດານຫຍຸ້ງຍາກສັບສົນທີ່ຝ່າຍກົງກັນຂ້າມຕັ້ງຂຶ້ນມາ. ໃນ

ການຕໍ່ສູ້ເຊິ່ງໜ້າກັບພະຍານັ້ນຕົວລະຄອນຊຸງໜຸ້ງ ແລະຕົວລະຄອນອື່ນໆ ເຊິ່ງເປັນສັນຍະລັກຕົວແທນໃຫ້ແກ່ປະຊາຊົນຜູ້ອອກແຮງງານໄດ້ກ້າວຂຶ້ນຈາກບ່ອນຍັງຖືກທ່າຮັບ ແລະທ່າປະລາໄຊໄປເຖິງບ່ອນເປັນເຈົ້າການບຸກໂຈມຕີ ແລະກາຍເປັນຜູ້ຊະນະໃນບັ້ນສຸດທ້າຍ. ກົງກັນຂ້າມຕົວລະຄອນພະຍາຜູ້ເປັນຕົວແທນສັນຍະລັກໃຫ້ແກ່ຊົນຊັ້ນປົກຄອງ, ຊົນຊັ້ນສັກດິນານັ້ນພັດສະແດງຕົນເປັນຄົນໂງ່ຈ້າ,ອັບປັນຍາ ແລະຖືກຊຸງໜຸ້ງຈຳໃຊ້ ແລະບັນຊາຢູ່ສະເໝີບໍ່ຕ່າງຫຍັງກັບຫຸ່ນ. ການປັ້ນແຕ່ງຕົວລະຄອນສອງຝ່າຍທີ່ມີນິໄສ ແລະການປະພຶດຂັດແຍ່ງ ແລະກົງກັນຂ້າມກັນເຊິ່ງບໍ່ເຄີຍເກີດມີໃນຊີວິດຕົວຈິງດັ່ງໄດ້ກ່າວມານັ້ນ ໄດ້ກາຍເປັນສາເຫດອັນໜຶ່ງທີ່ພາໃຫ້ເກີດມີສຽງຫົວອັນເພິ່ງພໍໃຈສຳລັບຜູ້ຟັງ. ໃນຕົວຈິງແລ້ວອາດເປັນເລື່ອງເຫຼືອເຊື່ອທີ່ວ່າພະຍາຜູ້ໜຶ່ງພັດໂງ່ຈ້າເຖິງຂັ້ນຖືກຊຸງໜຸ້ງຕົ້ມໃຫ້ອອກໄປນັ່ງແຂ່ງຝົນ ຖືກຕົວະໃຫ້ລົງໜອງໃນຍາມໜາວ ຫຼືຖືກຫຼອກໃຫ້ກິນຮອດຂີ້ແຮ້ງ. ແຕ່ຄວາມສາມາດແຕ່ງຂອງປະຊາຊົນຜູ້ອອກແຮງງານໄດ້ເຮັດໃຫ້ຕົວລະຄອນຜູ້ມີສິດອຳນາດເຄັ່ງຂຶມໃນສັງຄົມຄືພະຍານັ້ນກັບກາຍມາເປັນເຄື່ອງຫຼີ້ນ, ເປັນຕົວລະຄອນຕະຫຼົກຢ່າງສົມເຫດສົມຜົນຈົນກາຍເປັນເປົ້າໝາຍຂອງສຽງຫົວສຸດສີທີ່ມີລັກສະນະໂຈມຕີ ແລະປະຕິເສດໃນນິທານຊອນຫົວ.

ໃນດ້ານໂຄງຮ່າງຂອງບົດເລື່ອງຊອນຫົວທີ່ມີຄວາມໝາຍຕິຕຽນແບບກໍ່ສ້າງ, ຕັກເຕືອນກັນນັ້ນ ເຄີຍເປັນບົດເລື່ອງສັ້ນ, ເປັນບັ້ນເປັນຕອນຢ່າງຈະແຈ້ງ ແລະມີລັກສະນະເອກະລາດລະຫວ່າງບົດເລື່ອງນີ້ກັບບົດເລື່ອງອື່ນ. ສ່ວນນິທານຊອນຫົວທີ່ມີຄວາມໝາຍສຽດສີ, ຕໍ່ສູ້ຊົນຊັ້ນປົກຄອງນັ້ນ ເຄີຍເປັນບົດເລື່ອງຍາວ, ເຊິ່ງປະກອບດ້ວຍຫຼາຍບົດເລື່ອງເປັນລະບົບເກາະກ່າຍກັນອ້ອມການເຄື່ອນໄຫວຂອງຕົວລະຄອນເອກຜູ້ດຽວ. ລະບົບນິທານຊອນຫົວແບບນີ້ເຄີຍມີຢູ່ຫຼາຍປະເທດໃກ້ຄຽງເຊັ່ນ ຢູ່ຫວຽດນາມມີລະບົບເລື່ອງ "ຈ້າງກວ໋ງ" ຢູ່ກຳປູເຈຍມີລະບົບບົດເລື່ອງ "ທະເມນໃຈ" ຢູ່ໄທມີລະບົບເລື່ອງ "ສີທະນົນໄຊ"... ນີ້ຄົງແມ່ນໝາກຜົນ ແລະຈຸດພິເສດການພົວພັນດ້ານວັດທະນະທຳທີ່ເຄີຍມີມາຢູ່ໃນຂົງເຂດນີ້.

ການແຜ່ຂະຫຍາຍຂອງບົດເລື່ອງດ້ວຍຮູບການເລົ່າປາກຕໍ່ປາກແຕ່ທ້ອງຖິ່ນນີ້ ຫາທ້ອງຖິ່ນອື່ນ, ແຕ່ເຜົ່ານີ້ໄປຫາເຜົ່າອື່ນໆໄດ້ເຮັດໃຫ້ນິທານຊອນຫົວຂອງລາວເຮົາອຸດົມຮັ່ງມີ ແລະຫຼາຍຮູບຫຼາຍສີຂຶ້ນຕື່ມອີກ. ນອກຈາກລະບົບນິທານຊຸງໜຸ້ງທີ່ແຜ່ລາມໄປໃນທົ່ວປະເທດແລ້ວແຕ່ລະທ້ອງຖິ່ນ ແຕ່ລະເຜົ່າຍັງມີລະບົບເລື່ອງສະເພາະອັນອຸດົມສົມບູນ ແລະມີຊີວິດຊີວາທີ່ສຸດຂອງຕົນຄື ດັ່ງບົດເລື່ອງທີ່ໄດ້ກ່າວມາແລ້ວ. ແນ່ນອນວ່າເປົ້າໝາຍ ແລະລະດັບໂຈມຕີຂອງບັນດາບົດເລື່ອງເຫຼົ່ານີ້ ອາດມີອັນແຕກຕ່າງກັນບາງເລັກນ້ອຍ ເຊັ່ນ ເລື່ອງ "ຊຸງໂພດ" ແມ່ນພໍ່ຄ້າຊາວຂາຍເປັນຕົ້ນຕໍ. ແຕ່ລະບົບເລື່ອງເຫຼົ່ານີ້ ກໍມີລັກສະນະ

ລວມອັນດຽວກັນຄື ໃຊ້ສຽງຫົວເປັນພາຫະນະຕໍ່ສູ້ຕ້ານຊົນຊັ້ນປົກຄອງ ແລະຊົນຊັ້ນອື່ນໆ ທີ່ເປັນສັດຕູຂອງປະຊາຊົນຜູ້ອອກແຮງງານ.

ນິທານຊອນຫົວເວົ້າສະເພາະ ແລະການປະດິດແຕ່ງພື້ນເມືອງຂອງລາວເຮົາ ເວົ້າທົ່ວໄປບໍ່ສະເພາະແຕ່ມີການພົວພັນສົ່ງຜົນສະທ້ອນເຊິ່ງກັນແລະກັນລະຫວ່າງເຜົ່າຂອງລາວເຮົາ ເທົ່ານັ້ນ, ຫາກຍັງມີການພົວພັນສົ່ງຜົນສະທ້ອນອັນມີລັກສະນະສາກົນອີກດ້ວຍ, ໂດຍສະເພາະແມ່ນການພົວພັນສົ່ງຜົນສະທ້ອນເຊິ່ງກັນແລະກັນລະຫວ່າງບັນດາຊາດອ້າຍນ້ອງໃນແຫຼມອິນດູຈີນນີ້.

ນິທານຊອນຫົວເປັນພາກສ່ວນໜຶ່ງທີ່ອຸດົມສົມບູນ ໃນຄັງສາງວັນນະຄະດີພື້ນເມືອງຂອງປະຊາຊົນລາວບັນດາເຜົ່າ. ແຕ່ເປັນໜ້າເສຍດາຍໃນໄລຍະຜ່ານມານີ້ຍັງບໍ່ທັນມີການຈັດຕັ້ງເກັບກຳທ້ອນໂຮມເອົານິທານຊອນຫົວຢູ່ຕາມທ້ອງຖິ່ນຕ່າງໆຢ່າງເປັນລະບົບດີເທື່ອ.

ນິທານຊອນຫົວມີເນື້ອໃນແນວຄິດອັນຕັ້ງໜ້າດີ; ມັນແມ່ນກະບອກສຽງທີ່ມີປະສິດທິພາບປະກອບສ່ວນເຂົ້າໃນການຕໍ່ສູ້ຊົນຊັ້ນປົກຄອງ ແລະຊົນຊັ້ນກົດຂີ່ຂູດຮີດອື່ນໆ, ທັງເປັນຄຳຕຳນິຕິຕຽນ, ສັ່ງສອນໃຫ້ປະຊາຊົນຜູ້ອອກແຮງງານມີສະຕິຫຼີກເວັ້ນແນວຄິດ ແລະການປະພຶດທີ່ຜິດຫາດເພື່ອປົກປັກຮັກມູນເຊື້ອດ້ານແນວຄິດ, ທັດສະນະຄຸນສົມບັດອັນດີງາມຂອງປະຊາຊົນຜູ້ອອກແຮງງານບັນດາເຜົ່າລາວເຮົາ.

ໃນພາລະກິດປະຕິວັດສັງຄົມນິຍົມຂອງປະເທດເຮົາໃນທຸກວັນນີ້, ນິທານຊອນຫົວຍັງມີຄຸນຄ່າທີ່ແທດເໝາະກັບຍຸກສະໄໝຢູ່. ນິທານຊອນຫົວແບບໂຈມຕີຍັງຄົງສືບຕໍ່ປຸກລະດົມປະຊາຊົນລາວທຸກຖ້ອນໜ້າໃຫ້ເພີ່ມທະວີຄວາມຄຽດແຄ້ນຕໍ່ລະບອບສັກດິນາເຄິ່ງເມືອງຂຶ້ນທີ່ຖືກການປະຕິວັດໂຄ່ນລົ້ມລົງໄປແລ້ວນັ້ນ, ພ້ອມທັງເສີມຂະຫຍາຍນ້ຳໃຈຮັກຊາດ, ຮັກລະບອບໃໝ່ອັນທີ່ປາສະຈາກຄົນຂູດຮີດຄົນ. ສ່ວນນິທານຊອນຫົວແບບຕັກເຕືອນກໍ່ສ້າງ ກໍຍິ່ງມີບົດບາດສຳຄັນກວ່າເກົ່າ ໂດຍປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການຕໍ່ສູ້ລຶບລ້າງຮ່ອງຮອຍເສດເຫຼືອຂອງແນວຄິດ ແລະການກະທຳອັນຫຍໍ້ທໍ້ຫຼ້າຫຼັງແບບເກົ່າເຊິ່ງລະບອບສັງຄົມສັກດິນາເຄິ່ງເມືອງຂຶ້ນປະໄວ້ເພື່ອສ້າງແນວຄິດໃໝ່, ສ້າງແບບແຜນການດຳລົງຊີວິດໃໝ່ຂອງຄົນລາວໃນສັງຄົມໃໝ່.

ເລື່ອງ: ຕາບອດຄຳຊ້າງ

ແຕ່ບາງກ່ອນຍັງມີຊາຍຕາບອດຫົກຄົນ. ມື້ໜຶ່ງບັງເອີນພວກເຂົາໄດ້ມາພົບກັນຢູ່ທີ່ກ້ອງຮົ່ມໄມ້ແຫ່ງໜຶ່ງ, ເມື່ອໄດ້ໂອ້ລົມສົນທະນາກັນແລ້ວຕ່າງກໍຮູ້ວ່າເປັນຄົນຕາບອດ, ເຂົາຈຶ່ງຕົກລົງເປັນສ່ຽວກັນ. ຂະນະທີ່ລົມກັນຢູ່ກ້ອງຮົ່ມໄມ້ນັ້ນພໍດີນາຍຄວານຊ້າງໄດ້ເອົາຊ້າງຜ່ານໄປແລ້ວຈຶ່ງເອີ້ນຖາມວ່າ:

" ແມ່ນພວກເຈົ້າ ລົມກັນເລື່ອງໃດນໍ ຄືຟົດຟີ່ນີ່ນັນແທ້ ? "

ໂອຍ! ລົມໄປຕາມປະສາຄົນຕາບອດຊັ້ນແລ້ວ, ຊິໄປໃສນໍນັ້ນນໍ? ພວກເຂົາ ເຈົ້າ ໄດ້ຖາມຂຶ້ນພ້ອມໆກັນ.

ເອົາຊ້າງໄປລ້ຽງຢູ່ໃກ້ໆນີ້ໜາ. ຄວານຊ້າງຕອບ

ພໍໄດ້ຍິນວ່າ "ຊ້າງ" ຄົນຕາບອດເຫຼົ່ານັ້ນເຫັນວ່າໄດ້ໂອກາດຈິ່ງມີຄົນໜຶ່ງກ່າວຂຶ້ນທັນ ທີວ່າ: ໝູ່ເອີຍ! ພວກເຮົາພາກັນໄປເບິ່ງຊ້າງເນາະ, ໄດ້ຍິນແຕ່ຄົນອື່ນເຂົາວ່າຊ້າງໆ, ແຕ່ ຈັກວ່າຊ້າງມັນມີຮູບຮ່າງສັນຖານແນວໃດເຮົາກໍບໍ່ຮູ້. ເພື່ອບໍ່ໃຫ້ໃຜຕໍ່ວ່າໄດ້ເຮົາຕ້ອງພາກັນ ໄປເບິ່ງໃຫ້ຮູ້ເຫັນປະຈັກແຈ້ງດ້ວຍຕົນເອງເທາະ. ເມື່ອໄປເຖິງແລ້ວພວກເຂົາກໍພາກັນຂໍອະ ນຸຍາດຈາກຄວານຊ້າງ, ດ້ວຍຄວາມເຫັນ ໃຈຄວານຊ້າງຈິ່ງບອກໃຫ້ຊ້າງໝອບລົງ ເພື່ອໃຫ້ ຄົນຕາບອດເຫຼົ່ານັ້ນໄດ້ຄຳເບິ່ງແລ້ວກໍເວົ້າ ທັງຄິດຢາກຫົວຢູ່ໃນໃຈວ່າ: "ເອົາ! ພວກເຈົ້າຈົ່ງ ເບິ່ງຕາມໃຈຊອບເທາະ, ຊິລູບຊິຄຳເບິ່ງແນວໃດກໍສຸດແລ້ວແຕ່ໃຈ".

ຈາກນັ້ນ ຄົນຕາບອດທັງທັງຫົກຈິ່ງພາກັນເຂົ້າໄປຫາຊ້າງ ແລະຕ່າງກໍລູບຄຳເບິ່ງ. ຂະນະທີ່ລູບຄຳຢູ່ນັ້ນ ໃຜກໍມີຄວາມຕື່ນເຕັ້ນ ແລະດີໃຈເພາະແຕ່ເກີດມາກໍມີເທື່ອດຽວນີ້ທີ່ ຕົນໄດ້ພົບຊ້າງຈົນເຖິງຂັ້ນໄດ້ລູບຄຳເບິ່ງຄັກແນ່. ເມື່ອລູບເບິ່ງຈົນເປັນທີ່ແຈ້ບໃຈຂອງໃຜ ລາວແລ້ວ, ເຂົາເຈົ້າຈິ່ງພາກັນສະແດງຄວາມຂອບໃຈນຳຄວານຊ້າງແລ້ວກໍໜີໄປ, ພໍຮອດ ຕົ້ນໄຮໃຫຍ່ແຄມບ້ານຄົນຕາບອດທັງຫົກຈິ່ງພາກັນແວ່ເຂົ້າໄປເຊົາຮົ່ມ, ຂະນະທີ່ພັກເຊົາຢູ່ ນັ້ນຜູ້ໜຶ່ງໄດ້ເວົ້າຕາມຄວາມຮູ້ສຶກ ແລະຄວາມເຂົ້າໃຈຂອງຕົນອອກມາກ່ອນໝູ່ວ່າ: ບົ້າ ເນາະໝູ່! ຊາຄຳຄົນຊ່າລືວ່າ: ຊ້າງໆເຮົາກະດຽວວ່າສັດໃຫຍ່ສັດໂຕເອົາແທ້, ເອົາວ່າ, ຕັ້ງ ທີ່ແທ້ຊ້າງມັນໂລດໂຕນ້ອຍໆນີ້ໜຶ່ງ ແລະຮູບຮ່າງລັກສະນະຂອງມັນກໍບໍ່ຕ່າງຫຍັງກັບວີພໍ່ຕູ້ ເຮົາຢູ່ເຮືອນຫັ້ນ, ຕ່າງແຕ່ວ່າມັນພັດມີຂົນເທົ່ານັ້ນດອກ. ພໍໝູ່ໄດ້ຟັງເຊັ່ນນັ້ນໃຜກໍຕົກຕະລຶງ ແລະສົ່ງສຽງຫົວອອກມາໂຄບໆ, ຄິດວ່າໜໍນີ້ມັນເອົາຄວາມໃສມາເວົ້າ ຫຼືມັນເປັນບ້າໄປແລ້ວ ຊັ້ນບໍ. ທັນໃດນັ້ນຈິ່ງມີຜູ້ໜຶ່ງເວົ້າເວົ້າຂອນຂຶ້ນວ່າ:

"ມຶງພັດເບິ່ງຊ້າງແນວໃດ ຈັ່ງຊິວ່າຊ້າງຄືກັບວີພໍ່ຕູ້ມຶງເກົ໊າະ". ພໍເວົ້າຮອດນີ້ໝູ່ກໍ ຫົວຂຶ້ນອີກແລ້ວລາວຈິ່ງເວົ້າຕໍ່ວ່າ: "ມຶງຢ່າໄດ້ເວົ້າໄປໃສອີກເດີ, ຄົນອື່ນໄດ້ຍິນເຂົາຊິຫົວ ຂວັນມຶງຕາຍແລ້ວ. ໃຜຊິວ່າຊ້າງຄືວີຊ້າງມັນກໍຄືກັນກັບສາກມອງຊັ້ນຕະຫວາ" ຄົນທີ່ຄຳ ຖືກໆເວົ້າຂຶ້ນ.

"ໂຍ້ວ! ຕາມກູຟັງມານີ້ ສູສອງຄົນເວົ້ານັ້ນ ມັນລະບໍ່ມີໃຜຖືກໄດ່ນິ, ດ້ວຍເຫດໃດ ຈິ່ງວ່າຊ້າງຄື ວີຄືສາກມອງທົ່ວທົບທົ່ວແດນແນວນັ້ນ, ຊ້າງມັນກໍຄືສູບທີ່ເຂົາໃຊ້ຕີມິດຕີພ້າ ນັ້ນຕະຫວາ" ຄົນທີ່ຄຳຖືກຂາເວົ້າຂຶ້ນ.

"ໂອ໊ຍ! ກໍຈັ່ງແມ່ນສູນໍໆ, ແຮ່ງຟັງຫຼາຍຄົນເວົ້າກໍແຮ່ງໄປກັນໃຫຍ່, ກູມາຢາກຫ໊ອ ແທ້ເດແມ່ນສູເອົາຄວາມໃສມາເວົ້ານໍ ຈັ່ງໃດຈັ່ງຊິວ່າຊ້າງຄືວີ, ຄືສາກມອງ, ຄືສູບແນວນັ້ນ, ຊ້າງມັນກໍຄືຟອຍນັ້ນຕ໊ວ, ແນວທີ່ໃຊ້ກວາດເຮືອນຢູ່ສູ່ມື້ສູກໍຍັງບໍ່ຮູ້ຊັ້ນບໍ່" ຄົນທີ່ຄຳຖືກຫາງ ເວົ້າຂຶ້ນ.

"ອັນຟອຍກວາດເຮືອນໃຜຈັ່ງຊິບໍ່ຮູ້, ແຕ່ມັນຜິດຢູ່ບ່ອນວ່າຊ້າງຄືກັບຟອຍ, ແມ່ນສູ ເບິ່ງຊ້າງແນວໃດ ຈຶ່ງພາກັນເຂົ້າໃຈຜິດພາດແນວນັ້ນແທ້, ເບິ່ງຊ້າງແຕ່ເຊົ້າຮອດງາຍລູບໆ ຄຳໆຈົນອິດ ຈົນເມື່ອຍບາດແລ້ວພັດມາເວົ້າໄປທາງອື່ນ, ຊ້າງມັນກໍຄື ກັບປີ້ງໂຕບັກໃຫຍ່ນີ້ ຊັ້ນຕ໊ວ" ຄົນທີ່ຄຳຖືກງວງເວົ້າຂຶ້ນດ້ວຍຄວາມໝັ້ນໃຈ.

"ໂອ່ຍ! ຈັ່ງແມ່ນຫຼາຍຄົນກໍຫຼາຍປາກແທ້ນໍ, ເຖິງສູຊິຖ່ຽງກັນຈົນປາກຫ້ຽນກໍບໍ່ມີ ໃຜຖືກຈັກຄົນດອກ, ຂະຫຍອນວ່າຊິບໍ່ເຫັນຊ້າງຈັກເທື່ອຈົນເຖິງຂັ້ນໄດ້ຈັບໄດ້ບາຍປານນັ້ນ ສູກໍຍັງເຂົ້າໃຈຜິດພາດເນາະ, ຊ້າງມັນບໍ່ແມ່ນສັດນ້ອຍໆດັ່ງທີ່ສູເຂົ້າໃຈດອກ, ມັນແມ່ນສັດ ໃຫຍ່ຮູບຮ່າງມັນກໍຄືຝາເຮືອນນັ້ນແລ້ວທີ່ຕ່າງຈາກຝາເຮືອນກໍທ່ໍວ່າມັນມີຂົນຫັ້ນດອກ "ຄົນທີ່ ຄຳຖືກຊ້າງ" ເວົ້າຂຶ້ນ. ທັ້ງຫົກຄົນນັ້ນ ຕ່າງຝ່າຍຕ່າງກໍຜິດພາດຍ້ອນວ່າການສັງເກດປັນຫາ ຂອງເຂົາບໍ່ຄົບຖ້ວນ.

ເລື່ອງ: ຊຸງໜ້ຽງ
(ຕອນການຖືກຫ໊ວເຮືອນ)

ມື້ໜຶ່ງຈະເຖິງຜ້ຽນຊຸງໜ້ຽງສົ່ງສານມະຫາດເລັກ ຈຶ່ງນຳເອົາບັ້ງເວນໄປແຂວນໄວ້ ຫ໊ວເຮືອນຊຸງໜ້ຽງ ແລ້ວບອກວ່າ :

"ຊຸງເອີຍ! ມື້ອື່ນເຊົ້າການຖືກຫ໊ວເຮືອນເຈົ້າເດີ" ສັ່ງແລ້ວມະຫາດເລັກກໍກັບ. ຕາມທຳມະດາເມື່ອຜູ້ໃດຈະຖືກສົ່ງສານມະຫາດເລັກຕ້ອງນຳເອົາບັ້ງເວນໄປແຂວນທີ່ຫ໊ວ ເຮືອນຂອງຜູ້ນັ້ນ ແລະຖືກັນວ່າແມ່ນການຖືກຫ໊ວເຮືອນ. ຕື່ນເຊົ້າມື້ໃໝ່ມາເຈົ້າຂອງເຮືອນ ຈຶ່ງຖືບັ້ງນັ້ນເຂົ້າໄປໃນວັງເພື່ອຮັບເອົາສານ ຫຼືຄຳສັ່ງທີ່ຈະສົ່ງ ຫຼືບອກຕໍ່ໄປ.

ຊຸງໜ້ຽງຮູ້ແລ້ວວ່າການຖືກຫ໊ວເຮືອນຕົນຕື່ນເຊົ້າມາແທນທີ່ຈະນຳບັ້ງເວນນັ້ນໄປຮັບ ເອົາສານໃນວັງຫຼວງແຕ່ຊຸງບໍ່ໄດ້ເຮັດດັ່ງນັ້ນ, ໄດ້ໄມ້ທ່ໍແລ້ວກໍຂຶ້ນຫຼັງຄາເຮືອນຖໍ່ຫຼີ້ນຢູ່ສະ ບາຍ. ຝ່າຍພະຍາກໍຄອຍຖ້າຈະມອບສານໃຫ້, ແຕ່ຄອຍແລ້ວຄອຍອີກຈົນເສັດ ສວາຍ ກໍບໍ່ ເຫັນໃຜໄປຮັບ, ຈຶ່ງຖາມມະຫາດເລັກວ່າ :

" ມື້ນີ້ການຖືກຫ໊ວເຮືອນໃຜ? ບໍ່ເຫັນມີໃຜມາຮັບສານ "

" ຖືກຫ໊ວເຮືອນອ້າຍຊຸງຂ້ານ້ອຍ" ມະຫາດເລັກຕອບ.

"ມັນບໍ່ເຫັນມາຮັບວຸ້ກ,ໄປເບິ່ງທີ່ເຮືອນມັນດຸ,ມັນເຮັດອີຫຍັງຢູ່ປານນີ້ບໍ່ມາຮ້ອງກ".

ມະຫາດເລັກຈຶ່ງຮີບໄປເຮືອນຊຸງໜ້ຽງກໍໄດ້ພົບຊຸງໜ້ຽງພອມທໍ່ເຮືອນຢູ່ຈຶ່ງທ້ວງວ່າ:

"ໂຍ້ຊຸງ! ກະດຸງວ່ານານຖືກຫົວເຮືອນເຈົ້າ, ເປັນຫຍັງບໍ່ໄປຮັບວຸງກ, ພະຍາ ຖ້າຢູ່ທັງຮ້າຍອີກດ້ວຍ, ໃຫ້ຊຸງໄປຫາເພິ່ນດຸງວນີ້".

"ກໍເພາະນານຖືກຫົວເຮືອນນັ້ນແລ້ວ ຈຶ່ງໄດ້ທໍ່ເຮືອນຢູ່ເຊັ່ນນີ້, ແຕ່ເຮືອນຫານາບໍ່ ໄປບໍ່ມາຫາງໃດ" ຊຸງຕອບແລ້ວກໍຮີບລົງຈາກຫຼັງຄາເຮືອນໄປເຝົ້າພະຍາ, ພໍໄປເຖິງພະ ຍາກໍຮ້າຍໃຫ້ຊຸງວ່າ :

ແມ່ນມຶງເຮັດອີຫຍັງຢູ່ເສັດສວາຍກໍບໍ່ມາ, ກະດຸງວ່ານານຖືກຫົວເຮືອນມຶງ, ມຶງ ກໍ ຮູ້ຢູ່ແລ້ວບໍ່ແມ່ນບໍ ?"

"ກໍເພາະນານຖືກຫົວເຮືອນນັ້ນແລ້ວຂ້ານ້ອຍຈຶ່ງໄດ້ຊ້າ, ເພາະຂ້ານ້ອຍຕ້ອງໄດ້ຂຶ້ນ ຖໍ່ເຮືອນມາ, ແຕ່ມັນກໍບໍ່ຍອມມາ, ສຸດແລ້ວແຕ່ພະຍາຈະໂຜດທ້ອນ" ຊຸງໄດ້ຕອບພະຍາ ຢ່າງຫຼີ້ນໜ່ຽມ.

ເມື່ອພະຍາຈົນຕໍ່ຄາລົມຊຸງຈຶ່ງຫັນໄປສັ່ງວ່າ :

"ເອົາສານນີ້ໄປສົ່ງໃຫ້ເຖິງມືເຂົາ ແລະມື້ອື່ນໃຫ້ມຶງມາຫາກູກ່ອນໄກ່, ຖ້າມຶງຫຼົບ ຫຼີກຄໍມຶງຈະຂາດ, ມຶງເຂົ້າໃຈແລ້ວເນາະ ?"

"ໂດຍຂ້ານ້ອຍ" ຊຸງຕອບພ້ອມທັງຮັບສານໄປສົ່ງຕາມບ່ອນຕ່າງໆ, ພ້ວຸງກຽບ ຮ້ອຍແລ້ວກໍກັບເມືອເຮືອນ.

ພໍຮຸ່ງຂຶ້ນວັນໃໝ່ ແທນທີ່ຊຸງຈະຮີບເຂົ້າໄປເຝົ້າຕາມຄຳສັ່ງ, ຊຸງກໍເຮັດໃຈເຢັນເສີຍ ຢູ່, ສວາຍມໍ່ຊິທ່ຽງຈຶ່ງຈູງໄກ່ໄປຫາພະຍາ, ພໍໄປຮອດແລ້ວກໍຈູງໄກ່ເຂົ້າໄປເຝົ້າພະຍາ, ພະ ຍາດຸງດຈຶ່ງຕໍ່ວ່າຊຸງຢ່າງບໍ່ຈົ່ງບໍ່ຢອມວ່າ:

"ກະດຸງວ່ານູບອກໃຫ້ມຶງມາກ່ອນໄກ່, ຫູມຶງບໍ່ໄດ້ຍິນແມ່ນບໍ,ເຫດໃດມຶງມາສວາຍ ແທ້, ມຶງນີ້ຊ່າງເປັນຄົນມືນທຶນແທ້ເນາະ".

"ຍ້ອນໃຫ້ມາກ່ອນໄກ່ນັ້ນແລ້ວ ຈຶ່ງເສັດສວາຍງ່າຍແກ່ເຊັ່ນນີ້, ຈູງໄກ່ມາຫັ້ນໜາ ມັນບໍ່ແມ່ນງ່າຍມັນທັງດິ້ນທັງຟົດໄດ້ລານໄດ້ແກ່ມາຈຶ່ງໄດ້ມາຮອດໄວປານນີ້, ລຳພັງແຕ່ຊິ ຍ່າງອອກກ່ອນຈູງມັນມາຫັ້ນເຄິ່ງມື້ກໍຄືຊິບໍ່ຮອດຊ້ຳຕິ ".

ພະຍາຄິດວ່າ ເມື່ອຟັງໄປກໍຄືແມ່ນຄວາມມັນ, ຫຼັງຈາກນັ້ນພະຍາຈຶ່ງເອີ້ນເສນາ ແລະ ບ່າວໄພ່ລາສະດອນມາໂຮມແລ້ວຈຶ່ງເວົ້າວ່າ:

"ມື້ອື່ນໃຫ້ຜູ້ທີ່ຖືກເກນມານີ້ ກຸມຫ້າງຫາເຂົ້າຖົງເຂົ້າໄຖ່ໃຫ້ພຸງພໍເພາະຊິໄດ້ພາ ກັນອອກໄປເຮັດທາງຢູ່ນອກເມືອງ, ສະນັ້ນ, ມື້ອື່ນໃຫ້ມາເຕົ້າໂຮມກັນຢູ່ທີ່ນີ້, ຊຸງໜ້ຽງກໍ

ຕ້ອງໄປ ແລະເອົາມອບວຸງກນີ້ໃຫ້ໂຕເປັນຫົວໜ້າຈົນກວ່າວຸງກນີ້ຈະສຳເລັດ, ພໍບອກລາຍ ລະອຽດຈົນເປັນທີ່ຊາບທົ່ວກັນແລ້ວກໍເລີກລາກັບສູ່ເຮືອນຂອງໃຜລາວ.

ຝ່າຍຊຸງໜຸ່ງ ເມື່ອກັບເຖິງເຮືອນແລ້ວກໍຮີບໄປຕັດໄມ້ໄຜ່ມາຈັກຕອກເພື່ອສານກວຍ ໃຫຍ່. ຕອນກາງຄືນຊຸງໄດ້ຈັບເອົາໄກ່ຜູ້ໂຈ້ນໂຕໜຶ່ງມາຫຼົກຂົນທັງເປັນໃຫ້ຮຽບຮ້ອຍແລ້ວ ເອົາຫາງໃບຕອງໄປຕົ້ມໃຫ້ໝາດແລ້ວນຳເອົາມາຫໍ່. ຕື່ນເຊົ້າມື້ໃໝ່ມາເມື່ອເຫັນຊຸງມາຊ້າ ຜິດປົກກະຕິ, ພະຍາຈົ່ງສັ່ງໃຫ້ຄົນໄປນຳ, ແຕ່ຊຸງອ້າງວ່າກວຍຍັງບໍ່ແລ້ວ, ເມື່ອສານກວຍ ແລ້ວຊຸງກໍພາໝູ່ອອກໄປ, ແຕ່ຍ້ອນກວຍໃຫຍ່ການເດີນທາງຈົ່ງຊັກຊ້າ, ພວກໝູ່ຢູ່ຂ້າງຫຼັງ ຕ່າງກໍຮ້ອງດ່າຕຳນິຕະພຶດຕະພີແຊວໆ, ຊຸງກໍເຮັດຄືດັ່ງບໍ່ໄດ້ຍິນມີແຕ່ຄອນກວຍຍ່າງໂຊເຊ ໄປ. ເມື່ອຂະບວນເດີນທາງໄປຮອດບ່ອນແລ້ວກໍພໍດີຕາເວັນທ່ຽງຊຸງຈົ່ງໄດ້ພາໝູ່ກິນເຂົ້າ ງາຍ ແລະຕ່າງຄົນກໍເອົາຫໍ່ເຂົ້າອອກມາຊຸມກັນ, ຊຸງກໍໄດ້ຍື່ນໝົກໄກ່ຂອງຕົນໃຫ້ໝູ່, ພໍໝູ່ ໄຂໝົກໄກ່ອອກໄກ່ໂອກໂຈ້ນກໍປຸບປັບຂຶ້ນແລ້ວແລ່ນເຂົ້າປ່າຈ້ອຍ, ເປັນເຫດໃຫ້ໝູ່ທີ່ນັ່ງ ອ້ອມວົງຢູ່ນັ້ນຕົກຕະລຶງ. ເມື່ອເປັນດັ່ງນັ້ນ ຊຸງກໍເວົ້າຂຶ້ນວ່າ:

"ໂອຍຕາຍແລ້ວ ສັງມາເປັນແນວນີ້, ໄກ່ນັ້ນກໍໄດ້ຟັກຈົ້ນມຸ່ນ ແລະປະກອບເຄື່ອງ ດິບດີແລ້ວຈົ່ງເອົາໝົກໜຶ່ງຈົ້ນສຸກ, ແຕ່ສັງມາມີຊີວິດຂຶ້ນແລ່ນໜີໄປຈົ້ນໄດ້, ແນວບໍ່ເຄີຍພໍ້ ກໍ ໄດ້ພໍ້ ບໍ່ເຄີຍເຫັນກໍໄດ້ເຫັນ, ມັນຊິເປັນເຄາະເຂັນເຫດຮ້າຍທາງບ້ານເຮືອນກໍບໍ່ຮູ້, ເຮົາສັງມາ ຫວັ່ນວິຕົກແທ້, ໝູ່ທັງຫຼາຍຊິເຫັນເປັນແນວໃດ? "

ພວກໝູ່ໃຜໆກໍເຫັນເຫດການປະຈັກແຈ້ງ ຈົ່ງບອກໃຫ້ຊຸງກັບບ້ານ.

ບົດທີ 5
ນິທານສັດ

1. ຄວາມໝາຍ ແລະ ລັກສະນະພິເສດຂອງນິທານສັດ

ຄຳວ່າ "ສັດ" ໃນພາສາບາລີໝາຍເຖິງສິ່ງທີ່ມີຈິດວິນຍານເໜັງຕີງໄປມາໄດ້ໝາຍເອົາ ມະນຸດ ແລະສັດເດລະສານເມື່ອໂຮມຄຳ "ນິທານ" ຈົ່ງເປັນ "ນິທານສັດ".

ນິທານສັດແມ່ນເລື່ອງເລົ່າພື້ນເມືອງປະເພດໜຶ່ງ ທີ່ພັນລະນາເຖິງສັດ ແລະຊີວິດ ຂອງສັດ. ນິທານສັດມີລັກສະນະແຕກຕ່າງຈາກເລື່ອງເລົ່າພື້ນເມືອງປະເພດອື່ນໆ ທາງ ດ້ານການປະກອບສ້າງບົດເລື່ອງ ແລະຕົວລະຄອນ; ເພາະວ່ານິທານສັດຖືເອົາສັດເປັນຕົວ ລະຄອນຕົ້ນຕໍຂອງເລື່ອງ ແລະເລົ່າເລື່ອງສັດເພື່ອມາປຽບທຽບກັບຄົນ.

ເມື່ອເວົ້າເຖິງນິທານສັດ ຄົນລາວບາງຄົນເຄີຍເຂົ້າໃຈວ່າ ແມ່ນບັນດາບົດເລື່ອງທີ່ ແອ້ມໃນໜັງສືຕັນໄຕ ຫຼືບັນດາບົດເລື່ອງປະກອບໃນໜັງສືສຸງວສະຫວາດເທົ່ານັ້ນ. ໃນຕົວ

ຈິງແລ້ວນິທານສັດທີ່ມີລັກສະນະພື້ນເມືອງອັນເກົ່າແກ່ ຂອງປະຊາຊົນບັນດາເຜົ່າກໍມີຢູ່ຢ່າງ ຫຼວງຫຼາຍທີ່ສຸດ. ແຕ່ຍ້ອນຄົນທົ່ວໄປຍັງບໍ່ທັນຮູ້ຄຸນຄ່າ ແລະຄວາມສຳຄັນຂອງມັນ, ບາງ ຄົນຍັງຖືວ່າເປັນບົດເລື່ອງເລົ່າສຳລັບເດັກນ້ອຍເທົ່ານັ້ນຈຶ່ງບໍ່ໄດ້ເອົາໃຈໃສ່ເກັບກຳມາເຜີຍ ແຜ່ສູ່ກັນຟັງເທົ່າທີ່ຄວນ.

ນິທານສັດສ່ວນຫຼາຍແມ່ນບົດເລື່ອງທີ່ສັ້ນ ເຊິ່ງປາກົດການຕ່າງໆທີ່ສ້າງຂຶ້ນດ້ວຍຈິດ ສຶກນຶກນັ້ນມີທັງບັນຫາສັດຈະທຳ, ທັດສະນະຄຸນສົມບັດ ແລະບົດຮຽນທີ່ຄົນເຮົາເຄີຍໃຊ້ກັນ ມາ. ດ້ວຍເຫດນັ້ນການປະກອບສ້າງຂອງບົດເລື່ອງຍາມໃດກໍໄດ້ແບ່ງອອກເປັນສອງພາກ ສ່ວນຢ່າງຈະແຈ້ງ. ຈຸດປະສົງຕົ້ນຕໍຂອງນິທານສັດແບບນີ້ ແມ່ນສຶກສາຄວາມຮູ້ກ່ຽວກັບສັດ ໃຫ້ເດັກຍ້ອຍ. ແຕ່ເມື່ອມາຮອດສະໄໝສັງຄົມມີຊົນຊັ້ນນິທານສັດໄດ້ຮັບການຂະຫຍາຍຕົວ ຢ່າງແຂງແຮງທີ່ສຸດຕາມຄວາມຕ້ອງການຂອງສັງຄົມໃນຄາວນັ້ນເຊັ່ນ ດ້ານໜຶ່ງຊົນຊັ້ນທີ່ ຖືກກົດຂີ່ເຫັນວ່ານິທານສັດນີ້ມີຜົນດີໃຫ້ແກ່ການຕໍ່ສູ້ຊົນຊັ້ນເຂົາເຈົ້າຈຶ່ງປະດິດແຕ່ງນິທານ ສັດເພື່ອເປັນອາວຸດຊະນິດໜຶ່ງທີ່ແຫຼມຄົມໃຊ້ໃນການບຸກໂຈມຕີຊົນຊັ້ນປົກຄອງ. ດ້ານໜຶ່ງ ອີກພວກສາສະໜາ ເຊິ່ງເປັນເຄື່ອງມືຂອງຊົນຊັ້ນປົກຄອງນັ້ນກໍໄດ້ສວຍໃຊ້ນິທານສັດນີ້ເຂົ້າ ຮັບໃຊ້ການເຜີຍແຜ່ບັນດາຫຼັກສິນທຳຂອງຕົນໃນໝູ່ມະຫາຊົນ. ສະນັ້ນໃນສະໄໝກ່ອນພຸ້ນ ຈຶ່ງມີຫຼາຍປະເທດໄດ້ມີນັກປະພັນນິທານສັດທີ່ລືຊື່ໄປທົ່ວໂລກຄື ເອຊົບ (ຄົນເກຣັກ), ແຟ ເດຣິ (ຄົນອີຕາລີ), ລາຟົງແຕນ (ຄົນຝຣັ່ງ), ຊານຕີກົບເຊດຣິນ (ຄົນລັດເຊຍ).

ບັນດານັກປະພັນ, ນັກການເມືອງສະໄໝກ່ອນກໍເຄີຍໃຊ້ນິທານສັດເພື່ອສະແດງເຖິງ ແນວຄິດ ແລະທັດສະນະຂອງຕົນຢູ່ສະເໝີ, ເພາະນິທານສັດມີຄວາມສາມາດນຳເອົາແນວ ຄິດນາມທຳຂອງຄົນເຮົາໄປເຜີຍແຜ່ແລ້ວເຮັດໃຫ້ຄົນເຮົາຮັບຮູ້ບັນຫາເຫຼົ່ານັ້ນໄດ້ຢ່າງງ່າຍດາຍ.

ນິທານສັດມີກຳເນີດມາຈາກການອອກແຮງງານ ແລະການດຳລົງຊີວິດຂອງຄົນເຮົາ ແຕ່ສະໄໝບູຮານ, ແຕ່ນິທານສັດຂະຫຍາຍຕົວໃນເງື່ອນໄຂທີ່ຄວາມຄົ້ນຄິດຂອງຄົນເຮົາມີ ການຂະຫຍາຍຕົວສູ່ລະດັບສູງສົມຄວນແລ້ວຮູ້ຈຳແນກປະກົດການ ແລະແນວຄິດນາມທຳ. ພວກເຮົາຮູ້ກັນດີວ່າ ຊາວບູຮານດຳລົງຊີວິດຕິດພັນກັບທຳມະຊາດຍິ່ງກວ່ານັ້ນເຂົາເຈົ້າຍັງ ຖືຕົນເອງກັບທຳມະຊາດແມ່ນອັນໜຶ່ງອັນດຽວກັນ. ສາເຫດນີ້ເກີດມາຈາກອຸປະກອນການ ຜະລິດຍັງຫຼ້າຫຼັງ, ວິທະຍາສາດຍັງຕ່ຳ, ຜົນຂອງການຜະລິດຍັງໜ້ອຍທີ່ສຸດ, ເພາະເຫດນັ້ນ ຄົນເຮົາຈຶ່ງໃຊ້ທັງໝົດອິນຊີທັງຫ້າຂອງຕົນ ເພື່ອຮັບໃຊ້ການທຳມາຫາກິນໃນແຕ່ລະວັນຕະ ຫຼອດເຖິງຈຸດພິເສດ, ລັກສະນະ, ຄວາມຊິນເຄີຍ, ສຽງຮ້ອງ ແລະການເຄື່ອນໄຫວຂອງສັດ ແຕ່ລະປະເພດຢ່າງລະອຽດລະອໍທີ່ສຸດ. ມີແຕ່ເຮັດແນວນີ້ຄົນເຮົາຈຶ່ງຈະໄລ່ຈັບມັນໄດ້ງ່າຍ ແລະປ້ອງກັນຕົວໄດ້ງ່າຍ. ໃນຂະນະນັ້ນ ຄົນເຮົາພັດຍັງບໍ່ທັນມີສະຕິຕໍ່ຕົນເອງຢ່າງຈະ ແຈ້ງ, ບໍ່ທັນຮູ້ຈຳແນກຕົນເອງກັບສັດສິ່ງ ແລະປະກົດການຂອງທຳມະຊາດໄດ້ເທື່ອ.

ສະນັ້ນ, ຄົນເຮົາຈຶ່ງຄິດ ແລະເຊື່ອວ່າວັດຖຸທຸກຢ່າງລ້ວນແຕ່ມີວິນຍານ, ຮູ້ຄິດ ແລະມີພາສາ ຄຳເວົ້າຄືກັນກັບຄົນເຮົາ. ເຂົາເຈົ້າໃຊ້ຈິດສຳນຶກຂອງຕົນປັ້ນແຕ່ງບົດເລື່ອງຕ່າງໆກ່ຽວກັບ ສັດ. ເມື່ອປັ້ນແຕ່ງບົດເລື່ອງຕ່າງໆເຫຼົ່ານັ້ນຂຶ້ນມາ ຄົນເຮົາພັດຄິດວ່າເລື່ອງຂອງສັດກໍຄື ເລື່ອງຂອງຄົນ, ດັ່ງນັ້ນ, ຈຶ່ງໄດ້ເອົາຈຸດພິເສດ, ລັກສະນະ ແລະແນວຄິດຂອງຕົນເອງຕິດ ໃສ່ໃຫ້ສັດສາວາສິ່ງເຫຼົ່ານັ້ນ. ແນ່ນອນວ່ານິທານສັດຢູ່ໃນໄລຍະນີ້ຍັງຢູ່ໃນລະດັບຕ່ຳ, ພຽງ ແຕ່ເປັນບົດເລື່ອງເລົ່າກ່ຽວກັບສັດຕ່າງໆສູ່ກັນຟັງເທົ່ານັ້ນ, ບົດເລື່ອງອາດບໍ່ທັນມີເນື້ອ ໃນ ທາງດ້ານສັງຄົມເທື່ອ. ຕໍ່ມາເມື່ອຄວາມຄົ້ນຄິດຂອງຄົນເຮົາໄດ້ຂະຫຍາຍຕົວສູ່ລະດັບສູງ ສົມຄວນແລ້ວ ຈຶ່ງຮູ້ ຈັກເອົາເລື່ອງຂອງສັດມາສົມທຽບໃສ່ເລື່ອງຂອງຄົນ, ຮູ້ຈັກປັ້ນແຕ່ງຕົວ ລະຄອນສັດມາເປັນ ສັນຍະລັກໃຫ້ຄົນແຕ່ລະປະເພດໃນສັງຄົມ. ອັນພາໃຫ້ນິທານສັດ ຂະຫຍາຍຕົວກາຍເປັນນິ ທານທີ່ມີເນື້ອໃນທາງສັງຄົມຢ່າງຈະແຈ້ງ. ຄົນເຮົາໄດ້ຮູ້ຈັກໃຊ້ ຈິດສຳນຶກຂອງຕົນປັ້ນແຕ່ງ ບົດເລື່ອງທີ່ມີມູນຄວາມຈິງມາຮັບໃຊ້ເນື້ອໃນຄວາມໝາຍທີ່ມີ ລັກສະນະນາມທຳ ອັນເປັນຈຸດ ປະສົງຕົ້ນຕໍຂອງບົດເລື່ອງ.

ນິທານສັດເປັນບົດເລື່ອງທີ່ບໍ່ມີນາມຜູ້ແຕ່ງ ຫຼືເປັນບົດເລື່ອງພື້ນເມືອງທີ່ເລົ່າປາກຕໍ່ ປາກກໍ່ລ້ວນແຕ່ສ້າງຂຶ້ນດ້ວຍຈິດສຳນຶກທັງມວນ. ການໃຊ້ຈິດສຳນຶກໃນນິທານສັດກໍຕ່າງ ກັນກັບການໃຊ້ຈິດສຳນຶກໃນນິທານອັດສະຈັນ ແລະເທບນິຍາຍ. ຈິດສຳນຶກໃນນິທານສັດ ຕ້ອງຢູ່ໃຕ້ການຊີ້ນຳຢ່າງເຂັ້ມງວດຈາກຈິດປັນຍາຂອງຄົນເຮົາ. ດັ່ງນັ້ນ, ນິທານສັດເຖິງແມ່ນ ວ່າມີລັກສະນະເຫຼືອເຊື່ອທີ່ສຸດ ແຕ່ພັດບໍ່ເຖິງລະດັບມະຫັດສະຈັນຄືເທບນິຍາຍ ແລະນິທານ ມະຫັດສະຈັນເທື່ອ. ບັນດາເທດການ ແລະຕົວລະຄອນໃນນິທານສັດພຽງແຕ່ເປັນພາຫະ ນະຮັບໃຊ້ໃຫ້ເນື້ອໃນ ແລະຄວາມໝາຍອັນມີລັກສະນະນາມທຳເທົ່ານັ້ນ. ພາຍຫຼັງທີ່ໄດ້ ອ່ານ ແລະໄດ້ຟັງນິທານສັດແລ້ວຄົນເຮົາກໍຮູ້ໂລດວ່າ ບົດເລື່ອງນັ້ນ ບໍ່ມີມູນຄວາມຈິງ ແຕ່ ບົດເລື່ອງຈະມີຄວາມຈິງ ຫຼືບໍ່ນັ້ນກໍບໍ່ມີຜົນສະທ້ອນຫຍັງເລີຍເຖິງຈຸດປະສົງຂອງເລື່ອງ. ເພາະການໃຊ້ຈິດສຳນຶກໃນນິທານສັດພຽງແຕ່ຊ່ວຍໃຫ້ຄົນເຮົາເຜີຍແຜ່ຄວາມຄິດນາມທຳທີ່ ແທ້ງແລ້ງຂອງຕົນນັ້ນອອກຢ່າງຫຼົ່ນໄຫຼມີຊີວິດຊີວາ ແລະແນບນຽນຕື່ມເທົ່ານັ້ນ. ສະນັ້ນ ການໃຊ້ຈິດສຳນຶກໃນນິທານສັດຈຶ່ງມີລັກສະນະເສລີ ແລະກວ້າງຂວາງກວ່າໃນນິທານປະ ເພດອື່ນໆ, ແຕ່ກໍຕ້ອງຮັບໃຊ້ຈຸດປະສົງອັນແນ່ນອນໃດໜຶ່ງ ແລະກໍຕ້ອງຢູ່ໃຕ້ການຊີ້ນຳອັນ ເຂັ້ມງວດຂອງຈິດປັນຍາຂອງຄົນເຮົາ.

ສະເພາະຢູ່ລາວເຮົາ ນິທານສັດກໍອຸດົມຮັ່ງມີສົມຄວນ ເຊິ່ງລວມທັງນິທານສັດພື້ນ ເມືອງທີ່ເລົ່າປາກຕໍ່ປາກຂອງປະຊາຊົນຊາວຜູ້ອອກແຮງງານບັນດາເຜົ່າ ແລະນິທານສັດ ທີ່ ໄດ້ປະດິດແຕ່ງດ້ວຍການຂຽນຄື ບັນດາບົດເລື່ອງໃນໜັງສືນາງຕັນໄຕ ແລະບັນດາບົດ ເລື່ອງໃນໜັງສືສຸວະສະຫວາດ.

ນິທານສັດພື້ນເມືອງຂອງປະຊາຊົນລາວບັນດາເຜົ່ານັ້ນອຸດົມສົມບູນ ແລະມີເນື້ອໃນດີທີ່ສຸດຕາມແນວຄິດຂອງປະຊາຊົນຜູ້ອອກແຮງງານອັນແທ້ຈິງ, ແຕ່ຍ້ອນຂາດການເກັບກຳທ້ອນໂຮມມັນໄວ້, ສະນັ້ນ, ມັນຈຶ່ງບໍ່ໄດ້ຮັບການຟື້ນຟູ ແລະແຜ່ຂະຫຍາຍຢ່າງກວ້າງຂວາງສົມຄວນປັດຈຸບັນນີ້ຈຳນວນໜຶ່ງທີ່ໄດ້ເກັນກຳໄດ້ນັ້ນຍັງບໍ່ທັນຫຼາຍປານໃດ, ແຕ່ກໍພິສູດໃຫ້ເຫັນໄດ້ວ່າ ນິທານສັດພື້ນເມືອງລາວເຮົາສ່ວນຫຼາຍນອກຈາກອະທິບາຍເຖິງຈຸດພິເສດ, ລັກສະນະຂອງສັດແລ້ວຍັງມີຄວາມໝາຍທາງດ້ານສັງຄົມອີກ ເຊັ່ນ ການພົວພັນລະຫວ່າງເພື່ອນມິດ, ທັດສະນະຕໍ່ການອອກແຮງງານ ຫຼືເວົ້າເຖິງແນວຄິດສອງດ້ານຂອງ ຄົນຈຳນວນໜຶ່ງຢູ່ໃນສັງຄົມ, ດັ່ງທີ່ສະແດງອອກໃນເລື່ອງ "ນົກເຄົ້າຕາເຫຼືອງ", "ນົກເຄົ້າແມວກັບຟານ", "ນົກທົ່ອຫົວຫາງອກ" ແລະອື່ນໆອີກ.

ຖ້າສົມທຽບກັບເລື່ອງເລົ່າພື້ນເມືອງປະເພດອື່ນໆ ນິທານສັດໄດ້ຮັບການເອົາໃຈໃສ່ພິເສດຈາກນັກຄົ້ນຄວ້າສະໄໝກ່ອນທັງນີ້ກໍເນື່ອງຈາກນິທານສັດມີຄວາມແທດເໝາະກັບການນຳເອົາບັນດາຊົນຊັ້ນສັກດິນາໄປເຜີຍແຜ່ໃນໝູ່ມະຫາຊົນ. ນີ້ກໍແມ່ນເຫດຜົນອັນໜຶ່ງທີ່ພາໃຫ້ນິທານສັດຂອງລາວເຮົາມີລັກສະນະສາສະໜາພຸດຢ່າງຈະແຈ້ງ ແລະເລິກເຊິ່ງສົມຄວນ

2. ເນື້ອໃນນິທານສັດ

ນິທານສັດຂອງຊາດໃດກໍຄືກັນ ເຖິງແມ່ວ່ານັກປະພັນມີຄວາມພະຍາຍາມສັງເກດເລືອກເຟັ້ນ ແລະປັ້ນແຕ່ງບັນດາເຫດການຕ່າງໆໃຫ້ແທດເໝາະກັບຈຸດພິເສດທາງແນວຄິດແລະການກະທຳຂອງຊາດຕົນກໍຕາມ, ແຕ່ຍ້ອນນິທານສັດເປັນບົດເລື່ອງທາງຈິດປັນຍາ, ດັ່ງນັ້ນ ນິທານສັດທຸກໆຊາດຈຶ່ງມີແນວຄິດຕົ້ນຕໍລວມຄວາມຄືກັນເຊັ່ນສະຕິປັນຍາ, ຄວາມຮູ້ຄວາມສະຫຼາດ, ບົດຮຽນເພື່ອສຶກສາໃຫ້ຄົນເຮົາມີແນວຄິດ ແລະການກະທຳທີ່ຖືກຕ້ອງຕາມທັດສະນະທົ່ວໄປຂອງສັງຄົມ ແລະໃນບາງເລື່ອງກໍມີເນື້ອໃນຕໍ່ສູ້ຊົນຊັ້ນ.

ການເອົາເລື່ອງສັດມາເວົ້າເລື່ອງຄົນແມ່ນການປັ້ນແຕ່ງທີ່ສະຫຼາດຫຼັກແຫຼມທີ່ສຸດຂອງປະຊາຊົນຜູ້ອອກແຮງງານ ຫຼືເວົ້າອີກຢ່າງໜຶ່ງກໍຄືຄວາມສະຫຼາດຂອງປະຊາຊົນໄດ້ສະແດງອອກໃນນິທານສັດຢ່າງຈະແຈ້ງ ແລະເດັ່ນທີ່ສຸດ, ທັງມີຫຼາຍຮູບຫຼາຍແບບທີ່ສຸດ. ສິ່ງທີ່ພວກເຮົາເຫັນໄດ້ງ່າຍ ແລະເຫັນໄດ້ໄວກວ່າໝູ່ຂອງນິທານສັດ ແມ່ນຄວາມຮູ້ທາງທຳມະຊາດ, ໂດຍສະເພາະແມ່ນການສັງເກດເຫັນບັນດາຈຸດພິເສດ, ລັກສະນະ, ຮູບຮ່າງ, ສີສັນ, ສຽງຮ້ອງ, ຄວາມຊິນເຄີຍຂອງສັດແຕ່ລະປະເພດ. ເລື່ອງ "ນົກຖົ່ວຫົວຫາງອກ" ໄດ້ເລົ່າຢ່າງຈັບໃຈທີ່ສຸດວ່າ: ໃນຂະນະທີ່ນົກຫັ້ງຫຼາຍກຳລັງປູກຕົ້ນໄມ້ເຊິ່ງຈະເປັນບ່ອນພັກພາອາໄສຂອງນົກຕາມຄຳສັ່ງຂອງພະຍາອິນນັ້ນ ນົກແຕແຕວແວ້ດພັດມ້ວເມົ່ານຳແຕ່ສຽງຮ້ອງອັນອ່ອນຊ້ອນຂອງຕົນ ແລະນົກຖົ່ວພັດມ້ວເມົ່ານຳແຕ່ບິນໄປຫຼິ້ນເມື່ອພະອິນຮູ້ຈັກແນວນັ້ນຈຶ່ງລົງໂທດ. ໂດຍຫ້າມເດັດຂາດບໍ່ໃຫ້ນົກແຕແຕວແວ້ດຈັບຕົ້ນໄມ້, ໃຫ້ຫາກິນ ແລະເຮັດຮັງຢູ່

ຕາມໜ້າດິນ. ຮອດຍາມນອນກໍໃຫ້ນອນຫງາຍ ແລະຍົກສອງຂາຂຶ້ນຄ້ຳຟ້າ. ພ້ອມກັນນັ້ນກໍ ໄດ້ສັ່ງຕັດໃຫ້ນົກຖົ່ວບິນໄປໜ້າຈົນຫົວຫງອກແຕ່ບໍ່ທັນເຫັນຂອບຟ້າຢູ່ບ່ອນໃດ. ເລື່ອງ"ຊ້າງ ແລະເຜີ້ງໂກນ" ອະທິບາຍກ່ຽວກັບງວງ ແລະຄວາມສາມາດດູດນ້ຳຂອງງວງຊ້າງ ແລະ ເປັນຫຍັງແມງເຜີ້ງ (ແມງດັ່ນ) ຈຶ່ງມັກເຮັດຮັງຢູ່ໂກນໄມ້. ເລື່ອງ "ງົວແລະມ້າ" ອະທິ ບາຍສຽງຮ້ອງຂອງງົວເປັນຫຍັງຈຶ່ງຕ່າງກັບສຽງມ້າ. ເລື່ອງ "ນົກເຄົ້າແມວແລະຟານ" ອະ ທິບາຍເປັນຫຍັງນົກເຄົ້າແມວຈຶ່ງມີຫົວມົນ ແລະຟານຈຶ່ງມີຕາແທ້ແລະຕາປອມ... ແນ່ນອນ ເລື່ອງເລົ່າກ່ຽວກັບສັດແບບນີ້ ນອກຈາກຄວາມຮູ້ກ່ຽວກັບຈຸດພິເສດທຳມະຊາດຂອງສັດ ເຫຼົ່ານັ້ນແລ້ວຍັງມີຄວາມໝາຍຕິຽນນິໄສຂີ້ຄ້ານ, ຮູ້ແຕ່ຫຼີ້ນ ແລະນອນ, ຕັກເຕືອນ "ບໍ່ ຄວນເຊື່ອໃຈຄົນຈະຈົນໃຈໂຕ", ພ້ອມກັນນັ້ນຍັງຍ້ອງຍໍສັນລະເສີນຄວາມສາມັກຄີຊ່ວຍເຫຼືອ ເຊິ່ງກັນແລະກັນລະຫວ່າງຄົນດ້ວຍກັນໃນສັງຄົມ. ແຕ່ເນື້ອໃນຕົ້ນຕໍຂອງບົດເລື່ອງແບບນີ້ ຍັງແມ່ນການສຶກສາຄວາມຮູ້ກ່ຽວກັບສັດ.

ເນື້ອໃນອຸດົມສົມບູນກວ່າໝູ່ຂອງນິທານສັດແມ່ນບົດຮຽນຄຳສັ່ງສອນສຳລັບຄົນເຮົາ. ຜ່ານການດຳລົງຊີວິດຕົວຈິງປະຊາຊົນໄດ້ເອົາໃຈໃສ່ສັງເກດທຸກປະກົດການທີ່ເກີດຂຶ້ນໃນ ສັງຄົມກໍຄືໃນທຳມະຊາດແລ້ວເຂົາເຈົ້າມີການເລືອກເຟັ້ນ, ຖ່າຍທອດ ແລະສະຫຼຸບມາເປັນ ບົດຮຽນທີ່ມີລັກສະນະສັດຈະທຳ ແລະປັດຊະຍາ. ນິທານສັດຫຼາຍເລື່ອງໄດ້ເວົ້າເຖິງບົດ ຮຽນເຊິ່ງເປັນບັນຫານ້ອຍແຕ່ຫາກມີຄວາມສຳຄັນ ແລະຈຳເປັນໃນການດຳລົງຊີວິດ: ແບບ ແຜນການດຳລົງຊີວິດ, ການພົວພັນລະຫວ່າງເພື່ອນມິດ ແລະບັນດາທັດສະນະຄຸນສົມບັດ ຕ່າງໆ. ບົດເລື່ອງ "ເຕົ່າແລະທ່ານ" ໄດ້ເຕືອນໃຫ້ຮູ້ຈັກຟັງໝູ່ບອກສອນບໍ່ຄວນຄິດ ແລະ ກະທຳຕາມລຳພັງໃຈຂອງຕົນເອງ. ເລື່ອງ "ເຈົ້າຊີວິດກັບນົກແກ້ວ", "ໝາແລະເຈົ້າເຮືອນ" ເປັນຄະຕິເຕືອນໃຈສຳລັບຄົນໃຈຮ້ອນໂມໂຫວ່າ: ກ່ອນເຮົາຈະເຮັດຫຍັງຕ້ອງມີການຕຶກ ຕອງຄິດທຳ ແລະພິຈາລະນາຢ່າງຄັກແນ່ເສຍກ່ອນ.

ບົດຮຽນທີ່ໄດ້ຍົກຂຶ້ນມາໃນນິທານສັດ ມີທັງບົດຮຽນທີ່ດີໃຫ້ພວກເຮົາໄດ້ຮຽນເອົາ ພ້ອມກັນນັ້ນກໍມີທັງປາກົດການທີ່ຜິດພາດເພື່ອເຕືອນໃຫ້ມີສະຕິຫຼີກເວັ້ນຢູ່ສະເໝີ. ບົດເລື່ອງ "ກະຕ່າຍແລະຫອຍ", "ລີງແລະແມງກາບກອງ" ຕິຽນແນຄິດອວດອົ່ງທະນົງຕົວໝິ່ນປະ ໝາດຜູ້ອື່ນ. ໃນບົດເລື່ອງ "ລີງກັບນົກຈອກຟ້າ" ໃຫ້ເຫັນວ່ານົກຈອກຟ້າເປັນຕົວລະຄອນ ສັນຍະລັກໃຫ້ແກ່ຄົນດຸໝັ່ນ, ມີຫົວຄິດປັນຍາຫາກຸ້ມຕົນເອງທັງຮູ້ເປັນຫ່ວງໃຍຕໍ່ຄວາມທຸກ ຄວາມສຸກຂອງຄົນອື່ນ. ນົກຈອກຟ້າເຫັນລີງນັ່ງແຂ່ງຝົນໜາວຈົນສັ່ນທົດໆເລີຍເກີດຄວາມ ສົງສານແລ້ວເວົ້າກັບລີງຕົວນັ້ນວ່າ: ລີງໃຫຍ່ມີມືມີຕີນຄືມະນຸດເປັນຫຍັງຈຶ່ງບໍ່ເຮັດເຮືອນ ນ້ອຍຢູ່ເພື່ອບັງລົມບັງຝົນ. ລີງເສຍໜ້າດຳໜ້າຂົມ ແລະເກີດໃຈໂມໂຫຂຶ້ນຈຶ່ງປີນຂຶ້ນກົກໄມ້ ໄປຈັບເອົາຮັງນົກຈອກມາຍ່ອງຖິ້ມ. ການຕັກເຕືອນຂອງນົກຈອກຟ້າຕໍ່ລີງນັ້ນເປັນການກະ

ທຳທີ່ດີ, ແຕ່ບໍ່ຖືກເປົ້າໝາຍ ແລະໂອກາດບໍ່ເໝາະສົມ. ການເຕືອນຄົນຫຍາບຊ້າຫາ ຄວາມນັ້ນຕ້ອງມີວິທີການເລິກແລບແລະນີ້ມນວນທີ່ສຸດຖ້າບໍ່ດັ່ງນັ້ນຈະມີຜົນເສຍຫາຍອີກຊ້ຳ

ເລື່ອງ"ນົກຍາງກັບຈອນຟອນ", "ຮຸ້ງເຖົ້າກັບແມວ" ມີຈຸດປະສົງກ່າວເຕືອນການ ກະທຳອັນຂາດສະຕິຂອງນົກຍາງ ແລະຈອນຟອນກັບງູລ້ວນແຕ່ເປັນສັດຕູກັນ.

ບັນຫາທັດສະນະຄຸສົມບັດ ແລະແບບແຜນການດຳລົງຊີວິດເປັນບັນຫາສຳຄັນເຊິ່ງ ປະຊາຊົນເຮົາໄດ້ເອົາໃຈໃສ່ຍົກຂຶ້ນມາໃນນິທານສັດ. ທັງນີ້ກໍເພື່ອແນໃສ່ສຶກສາອົບຮົມແນວ ຄິດຂອງຄົນ. ນິທານສັດນັບວ່າເປັນຢາວິເສດສຳລັບປົວພະຍາດດ້ານແນວຄິດຈິດໃຈ ແລະ ການກະທຳຕ່າງໆຂອງຄົນເຮົາ. ມັນເປັນຄະຕິເຕືອນໃຈຢູ່ສະເໝີວ່າ: ຢູ່ໃນການດຳລົງຊີ ວິດຕົວຈິງນັ້ນຄວນເຮັດແຕ່ສິ່ງທີ່ຖືກຕ້ອງຕາມທັດສະນະຄຸນສົມບັດ ແລະຫຼີກເວັ້ນທຸກການ ກະທຳທີ່ຜິດພາດ. ບັນດາບົດເລື່ອງ "ສັດສີ່ຕີນ", "ຄົນຕຶກເບັດແລະກາ", "ເສືອແລະ ແມວ", "ເສືອກັບນົກໄສ່ຄຳ" ໄດ້ຕຳນິວິຈານການກະທຳອັນຊົ່ວຊ້າ, ຕັນຫາໂລພາ, ຕົວະ ຍົວະຫຼອກລວງຫຼືລືມບຸນຄຸນຂອງຄົນອື່ນ... ໄປຄຽງຄູ່ກັບຕົວລະຄອນເຊິ່ງເປັນຕົວແທນໃຫ້ ແກ່ຝ່າຍອະທຳນັ້ນ ຍັງມີຕົວລະຄອນທີ່ເປັນຕົວແທນໃຫ້ແກ່ຝ່າຍສົມທຳທີ່ມີນ້ຳໃຈເອື້ອອາລີ ຮັກແພງໝູ່ເພື່ອນ, ສັດຊື່ຈົງໃຈຕໍ່ໝູ່ຄູ່, ຍາມໃດກໍກຽມພ້ອມຊ່ວຍເຫຼືອຜູ່ອື່ນຢ່າງບໍ່ມີເງື່ອນໄຂ. ຕົວລະຄອນເຫຼົ່ານີ້ນັບວ່າເປັນແບບຢ່າງ ແລະມີນ້ຳໃຈມະນຸດສະທຳສູງສົ່ງແທ້. ບົດເລື່ອງ "ຈອນພອນສະຫາວຕົວ" ຕິຕຽນແນວຄິດໂລບມາກໂລພາ, ອວດອົ່ງທະນົງຕົວ ແລະຂາດ ສະຕິລະວັງຕົວ, ຜົນສຸດທ້າຍກໍນຳເອົາຕົນເອງໄປເຖິງບ່ອນຕາຍ.

ນິທານ "ຜົວເມຍນົກຈອກ" ເຖິງແມ່ນນິທານສັດ ແຕ່ກໍມີເນື້ອໃນຄວາມໝາຍກ່ຽວ ກັບຊີວິດຕົວຈິງ ແລະແນວິດຈິດໃຈຂອງຄົນເຮົາຢ່າງເລິກເຊິ່ງ. ບົດເລື່ອງນີ້ບໍ່ສະເພາະແຕ່ ເປັນເລື່ອງເລົ່າສູ່ກັນຟັງເທົ່ານັ້ນ, ຫາກຍັງເຮັດໃຫ້ຄົນເຮົາສະເທືອນໃຈຈົນນຳເອົາມາແຕ່ງ ເປັນກອນຂັບລຳຕອບໂຕ້ລະຫວ່າງບ່າວສາວ. ເລື່ອງນີ້ບໍ່ສະເພາະແຕ່ເປັນເລື່ອງເລົ່າສູ່ກັນ ຟັງເທົ່ານັ້ນ, ຫາກຍັງເປັນຄຳສອນຄຳເຕືອນສຳຫຼັບຜູ້ຊາຍໃນການປະພຶດຕໍ່ລູກຕໍ່ເມຍອີກ ດ້ວຍ. ບົດເລື່ອງຍັງມີຄຸນຄ່າສ່ອງແສງຕົວຈິງ ໃນການພົວພັນລະຫວ່າງຜົວກັບເມຍໃນ ສັງຄົມເກົ່າ ນອກຈາກຕົວຜູ້ທີ່ເປັນສັນຍະລັກໃຫ້ແກ່ຜູ້ຊາຍນັ້ນຮັກສາສັດຈະຂອງຕົນຕໍ່ແມ່ ຍິງບໍ່ໄດ້ຄຳປາກເປັນແນວໜຶ່ງແຕ່ການກະທຳພັດເປັນແນວໜຶ່ງ, ຍາມທຳມະດາຄຳໜຶ່ງ ກໍ ວ່າຮັກສອງຄຳກໍວ່າແພງ ແລະສັນຍາວ່າຈະພ້ອມກັນເປັນ-ຕາຍ, ບາດພົບພໍ້ອັນຕະລາຍ ພັດເຫັນແກ່ຊີວິດຕົນເອງຜູ້ດຽວ, ປິບໜີປະລູກປະເມຍຕາຍຄາຢູ່ກັບຮັ້ງ. ບົດເລື່ອງມີຄວາມ ໝາຍກ່າວປະນາມແນວຄິດ ແລະການກະທຳທີ່ເຫັນແກ່ຕົວ, ຂາດສັດຈະ ແລະຂາດນ້ຳໃຈ ບໍລິສຸດຜຸດຜ່ອງຕໍ່ລູກຕໍ່ເມຍ.

ທັດສະນະຂອງປະຊາຊົນຕໍ່ບັນຫາດັ່ງກ່າວນີ້ຈະແຈ້ງທີ່ສຸດຄືສັນລະເສີນຍ້ອງຍໍຄວາມຮັກທີ່ບໍລິສຸດ ແລະຕຳນິວິຈາມກ່າວປະນາມແນວຄິດ ແລະການກະທຳທີ່ຕ່ຳຕ້ອຍຖ່ອຍຮ້າຍ, ຂາດຄວາມບໍລິສຸດ, ຂາດຄວາມຊື່ສັດໃນຄວາມຮັກເຊິ່ງຜູ້ຊາຍເຄີຍມີຕໍ່ແມ່ຍິງໃນສັງຄົມສັກດິນາທີ່ຂາດຄວາມສະເໝີພາບລະຫວ່າງຍິງຊາຍໂດຍຖືວ່າແມ່ຍິງເປັນເພດທີ່ຕ່ຳຕ້ອຍ.

ໃນສັງຄົມທີ່ມີຊົນຊັ້ນ ນິທານສັດໄດ້ກາຍເປັນອາວຸດຂະນິດໜຶ່ງທີ່ແຫຼມຄົມໃນການຕໍ່ສູ້ຊົນຊັ້ນ, ເນື້ອໃນການຕໍ່ສູ້ຊົນຊັ້ນເປັນເນື້ອໃນສຳຄັນ ແລະເຫັນໄດ້ງ່າຍໃນນິທານສັດ. ຢູ່ໃນສັງຄົມທີ່ "ດາບຢູ່ເໜືອຄໍຢູ່ໃຕ້" ນັ້ນປະຊາຊົນບໍ່ມີຫົນທາງໃດອື່ນນອກຈາກເສັ້ນທາງຕໍ່ສູ້. ແຕ່ວ່າຈະຕໍ່ສູ້ແນວໃດເພື່ອບໍ່ໃຫ້ສັດຕູລົງໂທດໄດ້ ແລະເພື່ອໃຫ້ຮັກສາກຳລັງຂອງຕົນໄວ້ໄດ້ ນັ້ນແມ່ນເລື່ອງທີ່ຂຶ້ນກັບຍຸດທະວິທີ. ການເອົາອັນນະຄະດີ, ໂດຍສະເພາະແມ່ນນິທານສັດມາເປັນອາວຸດຕໍ່ສູ້ຊົນຊັ້ນນັ້ນ ແມ່ນວິທີອັນເລີກແລບແນບນຸ່ມຂອງປະຊາຊົນຜູ້ອອກແຮງງານ. ນິທານສັດສ່ອງແສງເຖິງການຕໍ່ສູ້ຊົນຊັ້ນດ້ວຍຫຼາຍຮູບຫຼາຍແບບຕ່າງກັນ: ນັບແຕ່ທ່າທີຕະຫຼອດຮອດສຽງຫົວເຍາະເຍີ້ຍສຸດສີ,ບາງເທື່ອກໍເປັນຄຳກ່າວເຕືອນ, ປະຈານໜ້າເພື່ອລົງໂທດໂດຍກົງ. ເລື່ອງ"ເສືອເຖົ້າຈຳສິນ", "ແມວເຖົ້າໄປບວດ" ເວົ້າເຖິງການຕົວະຍົວະຫຼອກລວງ, ເອົາຮູບການປິດບັງທາດແທ້ ແລະການປະຕິບັດສິນທຳແບບປອມແປງຂອງຊົນຊັ້ນປົກຄອງ. ບົດເລື່ອງຍັງເຕືອນຜູ້ຟັງບໍ່ໃຫ້ຫຼົງເຊື່ອ ແລະຄວນມີສະຕິລະວັງຕົວຕໍ່ສັດຕູຢູ່ສະເໝີ. ເພາະສັດຕູຍາມໃດກໍ "ມືຖືສາກປາກຖືສິນ", "ປາກເປັນທຳຫົວໃຈເປັນຍັກ". ວິທີຕໍ່ສູ້ຊົນຊັ້ນດ້ວຍວິທີສົມທຽບທາງອ້ອມ, ເອົາເລື່ອງສັດມາເວົ້າເລື່ອງຂອງຄົນແມ່ນຈຸດເດັ່ນສະເພາະຂອງນິທານສັດ. ມີແຕ່ຮູບການແບບນີ້ທີ່ຊ່ວຍໃຫ້ຊົນຊັ້ນຜູ້ອອກແຮງງານສາມາດຫຼີກເວັ້ນການລົງໂທດຂອງສັດຕູ ແລະຮັກສາກຳລັງຂອງຕົນໄວ້ໄດ້. ບົດເລື່ອງ "ໄກ່ແລະເຫງັນ", "ຊ້າງແລະນົກໄສ່", "ການົກບິ້ງ", "ຄຸດແລະເຕົ່າ" ຍ້ອງຍໍຄວາມສະຫຼາດສະຫຼຽວ, ຮູ້ສາມັກຄີຮັກແພງ ແລະຮູ້ເຕົ້າໂຮມກຳລັງເພື່ອຕໍ່ສູ້ສັດຕູ. ເຖິງຈະເປັນສັດນ້ອຍແຕ່ເມື່ອມີຄວາມສະຫຼາດ, ມີພຶກໄຫວ ແລະສາມັກຄີກັນດີກໍຈະກາຍເປັນກຳລັງແຂງແຮງສາມາດຕໍ່ສູ້ເອົາຊະນະສັດຕູໂຕຮ້າຍກາດໄດ້.

ເນື້ອໃນທີ່ມີລັກສະນະຊົນຊັ້ນຂອງນິທານສັດໄດ້ຢັ້ງຢືນເຖິງສັດຈະທຳຕ້ອງຊະນະອະທຳຢູ່ສະເໝີ. ຄຸດ, ການ, ເສືອ, ຊ້າງ... ລ້ວນແຕ່ແມ່ນສັດໃຫຍ່, ຮ້າຍກາດ, ມີກຳລັງແຮງເຊິ່ງເປັນຕົວແທນ ຫຼືສັນຍະລັກໃຫ້ແກ່ຊົນຊັ້ນປົກຄອງ, ແຕ່ຍ້ອນບໍ່ມີສິນທຳສຸດທ້າຍກໍຈະຕ້ອງປະລາໄຊໃຫ້ແກ່ສັດນ້ອຍເຊິ່ງເປັນຕົວແທນ ຫຼືສັນຍະລັກໃຫ້ປະຊາຊົນຜູ້ທີ່ຖືກກົດຂີ່ຂູດຮີດ. ນີ້ແມ່ນການສະແດງເຖິງນ້ຳໃຈມະນຸດສະທຳອັນສູງສົ່ງຂອງຜູ້ແຕ່ງ ແລະທັງແມ່ນນ້ຳໃຈສຸທັດນິຍົມຂອງປະຊາຊົນຜູ້ອອກແຮງງານ; ມັນເປັນສິ່ງຊຸກຍູ້, ປຸກລະດົມກຳລັງໃຈຕໍ່ສູ້ຂອງປະຊາຊົນຢູ່ສະເໝີ.ນ້ຳໃຈສຸທັດນິຍົມຂອງະຊາຊົນທີ່ສະແດງອອກ ໃນນິທານສັດກໍຄື

ໃນເລື່ອງເລົ່າພື້ນເມືອງປະເພດອື່ນໆ ນັ້ນໄດ້ກາຍເປັນພື້ນຖານໃຫ້ແກ່ນ້ຳໃຈສຸທັດນິຍົມປະຕິວັດຂອງປະຊາຊົນເຮົາໃນທຸກວັນນີ້.

ນິທານສັດຍັງມີເນື້ອໃນເຍາະເຍີ້ຍສຸງດສີສາສະໜາພຸດທີ່ເປັນເຄື່ອງມືອັນສັກສິດຂອງຊົນຊັ້ນສັກດິນາໃນສະໄໝກ່ອນຕະຫຼອດເຖິງການເຊື່ອຖືຮີດຄອງປະເພນີອັນຫຼ້າຫຼັງເພື່ອມາຕ້ວະຍ້ວະເບື່ອເມົາປະຊາຊົນຜູ້ອອກແຮງງານ. ນິທານສັດແມ່ນຮູບການປະດິດແຕ່ງພື້ນເມືອງທີ່ມີລັກສະນະພິເສດຂອງປະຊາຊົນຜູ້ ອອກແຮງງານ, ໂດຍມີຈຸດປະສົງຖ່າຍທອດຄວາມຮູ້, ຕັກເຕືອນບອກສອນກ່ຽວກັບທັດສະນະການດຳລົງຊີວິດ ແລະຄຸນສົມບັດ. ຍິ່ງກວ່ານັ້ນ ນິທານສັດຍັງເປັນອາວຸດທີ່ແຫຼມຄົມ ເພື່ອຮັບໃຊ້ການຕໍ່ສູ້ຊົນຊັ້ນ. ໄປຄຽງຄູ່ກັບຈຸດດີທີ່ເວົ້າມານີ້ ນິທານສັດຍັງມີຈຸດອ່ອນທີ່ຄ້າງຄາຢູ່. ນິທານສັດຫຼາຍບົດໄດ້ຍ້ອງຍໍຊົນຊັ້ນປົກຄອງ. ໂດຍສະເພາະແມ່ເຈົ້າຊີວິດວ່າແມ່ນ ຜູ້ສະຫຼາດ, ມີນ້ຳໃຈມະນຸດສະທຳອັນສູງສົ່ງ, ຮູ້ຈັກເອື້ອອາລີ ຮັກແພງຊ່ວຍເຫຼືອຜູ້ອື່ນເໝືອນກັບເປັນບັນພະບຸລຸດຜູ້ເສຍສະຫຼະສິດຜົນປະໂຫຍດທັງຊີວິດ ແລະເລືອດເນື້ອຂອງຕົນເພື່ອຊີວິດ ແລະຄວາມສຸກຂອງຄົນອື່ນ. ຄືໃນເລື່ອງ "ເຈົ້າຊີວິດແລະນົກແຂກແກ້ວ"...ຈຸດອ່ອນ ທີ່ເປັນອັນຕະລາຍກວ່າໝູ່ໃນນິທານສັດແມ່ນແນວຄິດຫຍໍ້ທໍ້ ແລະງົມງວາຍບາງອັນຂອງສາສະໜາທີ່ແຊກຊຶມເຂົ້າມາໃນເລື່ອງຕ່າງໆ. ນິທານສັດຈຳນວນບໍ່ໜ້ອຍ, ພວກຊົນຊັ້ນປົກຄອງໃນສັງຄົມສັກດິນາໄດ້ພະຍາຍາມເສກສັນປັ້ນແຕ່ງເລື່ອງຕ່າງໆເພື່ອສັນລະເສີນ ແລະພິສູດຢັ້ງຢືນເຖິງຫຼັກສິນທຳຂອງສາສະໜາພຸດ, ຍ້ອງຍໍນ້ຳໃຈມະນຸດສະທຳແບບລອມໆນ້ຳໃຈເມດຕາກະລຸນາ ແລະສົ່ງສານມະນຸດທ່ວໄປເຊັ່ນ "ຄວາມຊ່ວຍເຫຼືອຄົນທີ່ປະສົບໄພເຊິ່ງໜ້າຫຼ່າເຂົ້າມາຫາເຖິງແມ່ນຈະເປັນສັດຕູກໍຕາມ, ອັນວ່າຕົ້ນພຶກສາກໍຍັງຍອມໃຫ້ຄົນຜູ້ມາຂໍຊົ້ນຮົ່ມເງົາຂອງຕົນ". ນິທານສັດຫຼາຍບົດໄດ້ເວົ້າເຖິງຊາຕາກຳຂອງຄົນເຮົາ. ຕາມທັດສະນະຂອງສາສະໜາ ແລະຊົນຊັ້ນສັກດິນາແລ້ວ ຄົນເຮົາມີຊີວິດຢູ່ ຫຼືຕາຍໄປນັ້ນ ແມ່ນຂຶ້ນກັບຊາຕາກຳຂອງແຕ່ລະຄົນໂດຍແມ່ນພະອິນພະພົມເປັນຜູ້ກຳນົດຈົດຈຳໄວ້. ບັນຫານີ້ສະແດງອອກແຈ້ງທີ່ສຸດໃນບົດເລື່ອງ "ປາສາມໂຕ". ປາທັງສາມໂຕໄດ້ຊາບວ່າອີກບໍ່ ດົນກໍຈະມີຄົນມາສະນ້ຳອອກຈາກໜອງ, ອັນຈະເປັນອັນຕະລາຍແກ່ຊີວິດ, ດັ່ງນັ້ນ ປາທັງ ສາມຈຶ່ງມາປຶກສາຫາລືກັນໂຕໜຶ່ງເວົ້າວ່າ: ຄວນພາກັນໜີໄປກ່ອນ. ໂຕມີສອງວ່າ: ເມື່ອໃດ ມີປາກົດການແລ້ວຈຶ່ງຫາວິທີຫຼົບຕ້ວ, ໂຕທີສາມວ່າ: ບໍ່ຄວນຫາວິທີຫຼົບຫຼີກຖ້າຊາຕາກຳມາ ຮອດແລ້ວກໍຕ້ອງຍອມຕາຍ. ເມື່ອປຶກສາກັນແລ້ວປາໂຕທີໜຶ່ງກໍໜີອອກຈາກໜອງແຫ່ງນັ້ນ ກ່ອນ. ໂຕທີສອງຖືກຄົນຈັບຖິ້ມຂຶ້ນບົກແຕ່ຫາວິທີດີ້ນລົງນ້ຳແລ້ວປົບໜີໄປ. ສ່ວນໂຕທີ ສາມຍອມຢູ່ເກົ່າໃຫ້ຊາວບ້ານຈັບໄປກິນ.

ການເຊື່ອຖື "ບຸນ" ແລະ "ບາບ" ຂອງສາສະໜາກໍແມ່ນບັນຫາໜຶ່ງທີ່ສະແດງອອກຢ່າງຈະແຈ້ງໃນນິທານສັດ. ຕາມທັດສະນະຂອງສາສະໜາເມື່ອມີບຸນຕາຍໄປແລ້ວກໍຈະໄດ້

ຂຶ້ນສະຫວັນ, ສ່ວນຜູ້ບາບ ເມື່ອຕາຍໄປຈະຕົກລົງໜ້ນາຮົກ. ບົດເລື່ອງ "ນາຍພານກັບ ລີງ ແມ່", "ສັດສີ່ໂຕຕົກສ້າງ" ໄດ້ຢັ້ງຢືນບັນຫານີ້ຄືກັນ. ຍັງມີບາງບົດເລື່ອງທີ່ໃສ່ຮ້າຍປ້າຍ ສີ ແລະໝິ່ນປະໝາດປະຊາຊົນຜູ້ອອກແຮງງານເຊັ່ນ "ຊ່າງຕັດຜົມຂີ້ໂງ່", "ໝູກາມັກກິນ ອາຫານເປື້ອນ".

ຈຸດພິເສດຕ່າງໆຂອງນິທານສັດ ໄດ້ຮຽກຮ້ອງໃຫ້ທຸກຄົນບໍ່ສະເພາະແຕ່ຮູ້ໄຈ້ແຍກຈຸດ ດີອັນເປັນຜົນປະໂຫຍດແກ່ປະຊາຊົນຜູ້ອອກແຮງງານເທົ່ານັ້ນ, ຫາກຍັງຮູ້ໄຈ້ແຍກຈຸດອ່ອນ ທີ່ຍັງຄ້າງຄາຂອງມັນອີກດ້ວຍ. ນີ້ແມ່ນບັນຫາສຳຄັນທີ່ຂາດບໍ່ໄດ້ໃນການຄົ້ນຄວ້າຕີລາຄາ ກ່ຽວກັບນິທານສັດ.

ລວມຄວາມແລ້ວ: ເນື້ອໃນກ່ຽວກັບນິທານສັດມີຄຸນຄ່າທາງດ້ານຄວາມຮູ້, ບົດຮຽນ ແລະໃນການສຶກສາຫຼາຍກວ່າໝູ່ໃນດ້ານຄວາມເປັນຈິງ. ນີ້ທັງແມ່ນຈຸດພິເສດດ້ານເນື້ອໃນ ຂອງນິທານສັດ ແລະທັງແມ່ນການແຕກຕ່າງລະຫວ່າງເນື້ອໃນຂອງນິທານສັດກັບເນື້ອໃນ ຂອງນິທານອັດສະຈັນ.

3. ສິລະປະຂອງນິທານສັດ

ໃນການປະດິດແຕ່ງນິທານສັດ ເພື່ອຕອບສະໜອງຈຸດພິເສດດ້ານເນື້ອໃນ ແລະ ຄວາມໝາຍ ທີ່ມີລັກສະນະນາມທຳນັ້ນ, ຄົນເຮົາໄດ້ໝູນໃຊ້ສິລະປະຫຼາຍຢ່າງເຊັ່ນ ໃຊ້ວິທີ ສົມທຽບໂດຍທາງອ້ອມ, ໃຊ້ຈິດສຳນຶກຖືສັດເປັນຄືຄົນ ແລະໃຊ້ສຽງຫ້ວເຍາະເຍີ້ຍ; ໂຄງ ຮ່າງຂອງເລື່ອງສັ້ນກະທັດຮັດງ່າຍດາຍທັງນີ້ກໍເພື່ອເລົ່າໄດ້ງ່າຍ ແລະຈື່ຈຳໄດ້ໄວ. ສ້າງ ຄວາມມ່ວນຊື່ນຈັບອົກຈັບໃຈແກ້ຜູ້ອ່ານຜູ້ຟັງທັງຫຼາຍ.

ຈຸດປະສົງຕົ້ນຕໍຂອງນິທານສັດແມ່ນຖ່າຍທອດຄວາມຮູ້ ແລະບົດຮຽນອັນເປັນຄະຕິ ເຕືອນໃຈໃຫ້ແກ່ທຸກຄົນ. ການສຶກສາຄົ້ນຄວ້າວິທີສົມທຽບ ໂດຍທາງອ້ອມແບບເລົ່າເລື່ອງ ສັດອີ່ງໃສ່ຈຸດພິເສດຂອງສັດແຕ່ລະປະເພດ ເພື່ອສ້າງຕົວລະຄອນອັນເປັນສັນຍະລັກໃຫ້ ແກ່ກຸ່ມຄົນໃດໜຶ່ງໃນສັງຄົມ. ຢາກເຮັດໄດ້ແນວນີ້ ນັກແຕ່ງນິທານສັດຕ້ອງມີການສັງເກດ ຊອກຮູ້ກ່ຽວກັບຄວາມຊິນເຄີຍ, ຈຸດພິເສດ ແລະລັກສະນະຂອງສັດແຕ່ລະປະເພດທີ່ຈະເອົາ ມາສົມທຽບໃສ່ກຸ່ມຄົນ ຫຼື ຊັ້ນຄົນໃດໜຶ່ງໃນສັງຄົມ. ແຕ່ລະຊາດແຕ່ລະເຜົ່າຕ່າງກໍມີທັດ ສະນະຕ່າງຫາກຂອງຕົນໃນການສັງເກດ ແລະກຳນົດລັກສະນະສະເພາະຂອງສັດແຕ່ລະ ປະເພດ. ປະຊາຊົນລາວເຄີຍຖືວ່າຕົວຈອນຟອນເປັນຕົວແທນຂອງນິໄສວ່ອງໄວ ແຕ່ຫາກ ຈອງຫອງ; ກະຕ່າຍເປັນຕົວແທນຂອງນິໄສສະຫຼາດ, ວ່ອງໄວແຕ່ມັກສະເງີ້ເຜີຕົວ; ເປັນຕົວ ແທນຂອງຄວາມຮຸນແຮງ, ຮ້າກາດແຕ່ຫາກໂງ່ຈ້າ; ລີງເປັນຕົວແທນຂອງຄວາມວ່ອງໄວ ແຕ່ຫາກຫຍາບຊ້າ ແລະອື່ນໆ.

ການປະດິດແຕ່ງນິທານສັດ ຍັງໝູນໃຊ້ຈິດສຳນຶກຫຼາຍທີ່ສຸດ, ອັນເຮັດໃຫ້ຄວາມ ຮັບຮູ້ດ້ານສະຕິອິນຊີຂອງຄົນເຮົາເລິກເຊິ່ງຕື່ມອີກ. ແຕ່ຍ້ອນຈິດສຳນຶກໃນນິທານສັດໜຽງ ແຕ່ເປັນພາຫະນະຮັບໃຊ້ໃຫ້ຈຸດປະສົງຂອງບົດເລື່ອງ, ສະນັ້ນ, ຈິດສຳນຶກໃນນິທານສັດເຖິງ ວ່າໄດ້ໝູນໃຊ້ຢ່າງກວ້າງຂວາງ ແຕ່ກໍຍອມຢູ່ໃຕ້ເງື່ອນໄຂຊີ້ນຳຢ່າງເຂັ້ມງວດຂອງຈິດປັນຍາ ບໍ່ສາມາດຂະຫຍາຍເຖິງບ່ອນມະຫັດສະຈັນຄື ນິທານອັດສະຈັນໄດ້.

ລັກສະນະລະຄອນກໍແມ່ນຮູບການສິລະປະອັນໜຶ່ງອີກຂອງນິທານສັດ. ສະນັ້ນ, ຈຶ່ງ ອາດເວົ້າໄດ້ວ່າ ນິທານສັດບົດໜຶ່ງກໍປຽບເໝືອນກັບລະຄອນສັ້ນເລື່ອງໜຶ່ງ. ຢູ່ໃນລະຄອນ ສັດເຄີຍມີຂໍ້ຂັດແຍ່ງເກີດຂຶ້ນລະຫວ່າງສະພາບ, ປາກົດການ ແລະນິໄສຂອງຕົວລະຄອນ ດ້ວຍກັນ. ການດຳເນີນເລື່ອງໃນນິທານສັດມີລັກສະນະງ່າຍດາຍ ແຕ່ເຄີຍມີການຫັນປ່ຽນ ຢ່າງບັງເອີນ (ກະທັນຫັນ) ທີ່ພາໃຫ້ເກີດມີຂໍ້ຂັດແຍ່ງຂຶ້ນ. ລັກສະນະລະຄອນໃນນິທານ ສັດເປັນປັດໃຈພາໃຫ້ເພີ່ມຄວາມຈັບອົກຈັບໃຈສຳລັບຜູ້ອ່ານຜູ້ຟັງ ແລະການແກ້ຂອດຂັດ ແຍ່ງແຕ່ລະຄັ້ງຈະເຮັດໃຫ້ມີສຽງຫົວເຍາະເຍີ້ຍສຸດສີເກີດຂຶ້ນໃນນິທານສັດ. ດັ່ງທີ່ເຫັນໄດ້ ໃນເລື່ອງ "ນົກອິນຊີແລະນົກເຄົ້າແມວ", "ແມວເຖົ້າຈຳສິນ", "ການິນບົ້ງ", "ເສືອແລະ ຊາວນາ" ແລະອື່ນໆ.

ຈຸດພິເສດອັນໜຶ່ງອີກໃນສິລະປະການແຕ່ງນິທານສັດລາວເຮົາແມ່ນການທ້ອນທ້າຍ ດ້ວຍຄຳສຸພາສິດທີ່ມີລັກສະນະກາບກອນອັນເຮັດໃຫ້ນິທານສັດຂອງລາວເຮົາມີຄວາມໝ າຍສຶກສາແບບນີ້ມນວນ ແລະເລິກເຊິ່ງຍິ່ງຂຶ້ນ.

ນິທານສັດ ແມ່ນເລື່ອງເລົ່າທົ່ວໄປຂອງທຸກໆຊາດ, ນິທານສັດຕ່າງກັບນິທານມະ ຫັດ ສະຈັນຢູ່ບ່ອນວ່າມັນບໍ່ພັນລະນາ ແລະສ່ອງແສງລົງເລິກເຖິງຊີວິດການເປັນຢູ່ຂອງປະ ຊາ ຊົນຊາດໃດຊາດໜຶ່ງ, ດັ່ງນັ້ນ, ເຖິງວ່າລັກສະນະຊາດສະແດງອອກສ່ວນໃດສ່ວນໜຶ່ງໃນວິທີ ສົມທຽບ, ໃນລັກສະນະກາບກອນ ແລະໃນການກຳນົດລັກສະນະຂອງສັດຕ່າງໆ, ແຕ່ ເບິ່ງລວມແລ້ວນິທານສັດຍັງມີລັກສະນະລວມທົ່ວໄປຢ່າງຫຼວງຫຼາຍ. ມາເຖິງປັດຈຸບັນນີ້ ນິທານສັດຫຼາຍເລື່ອງທີ່ຍັງບໍ່ຮູ້ວ່າເປັນເລື່ອງຊາດໃດແທ້. ນິທານສັດເປັນແຫຼ່ແຫ່ງຄວາມຮູ້ ຂອງປະຊາຊົນ, ສ່ອງແສງເຖິງການຕໍ່ສູ້ເພື່ອສິດຜົນປະໂຫຍດ ແລະທີ່ຕັ້ງໃນສັງຄົມຂອງ ປະຊາຊົນ, ສ່ອງແສງເຖິງຄວາມກ້າວໜ້າອັນບໍ່ຢຸດຢັ້ງຂອງຈິດປັນຍາ ການຮັບຮູ້ໂລກ ແລະ ຮັບຮູ້ສັງຄົມ.

ໃນປັດຈຸບັນນີ້ເຖິງແມ່ນວ່ານິທານສັດບໍ່ຂະຫຍາຍຕົວແຮງປານໃດແລ້ວກໍຕາມ, ແຕ່ ມັນກໍຍັງມີຄຸນປະໂຫຍດຢ່າງຫຼວງຫຼາຍ ແລະຍັງເປັນສິ່ງຈຳເປັນທີ່ສຸດໃນການສຶກສາອົບ ຮົມຄົນຮຸ່ນໃໝ່ໃຫ້ກາຍເປັນຄົນສັງຄົມນິຍົມ. ຢູ່ໃນບັນດາປະເທດທີ່ມີເງື່ອນໄຂສະດວກ ເພີ່ນໄດ້ເກັບກຳທ້ອນໂຮມເອົານິທານສັດມາພິມເປັນປຶ້ມອ່ານປະກອບຮູບພາບ, ບາງເລື່ອງກໍ

ເອົາມາສ້າງເປັນຮູບເງົາກະຕຸ່ນ ຫຼືເປັນລະຄອນກ້ອມເພື່ອສຶກສາຜູ້ອ່ານຜູ້ຊົມທັງຫຼາຍ, ໂດຍ ສະເພາະຢ່າງຍິ່ງແມ່ນເດັກນ້ອຍ.

ເລື່ອງ: ອ້າຍຟານເປັນໄຂ້

ແຕ່ກີ້ແຕ່ກ່ອນ ຍັງມີຟານໂຕໜຶ່ງປ່ວຍໄຂ້ມາໄດ້ສາມເດືອນ ເມື່ອດີຂຶ້ນມາກໍຄິດຢາກ ກິນສົ້ມເອົາແທ້ເອົາວ່າ. ແຕ່ຍ້ອນຍັງອິດເມື່ອຍຈິ່ງໄປຊອກກິນສົ້ມບໍ່ໄດ້, ອ້າຍຟານໄດ້ ແຕ່ ຮ້ອງຢາກກິນສົ້ມເດ! ຢາກກິນສົ້ມເດ! ຢູ່ບໍ່ແລ້ວ, ບໍ່ເຊົາ, ອ້າຍນົກເຄົ້າຢູ່ໃກ້ເກີດລັກໄລ່ຫູ ທັ້ງຢາກຮ້າຍ ຈິ່ງຫາວິທີເຮັດໃສ່ອ້າຍຟານ.

ພໍຄິດໄດ້ກໍບິນໄປຫາອ້າຍຟານແລ້ວຖາມວ່າ: ແມ່ນເຈົ້າຮ້ອງ, ເຈົ້າຄາງຫຍັງຈົນໝົດ ມື້, ໝົດເວັນ, ຄັນວ່າຢາກສົ້ມກໍໄປຊອກກິນທະແມ! ມີແຕ່ຮ້ອງຢູ່ປານໃດຊິອີ່ມ! ຄັນຢາກ ແທ້ ໃຫ້ເຊົາຮ້ອງສາຂ້ອຍຈະຊ່ວຍ. ເຈົ້າຖ້າຂ້ອຍຢູ່ນີ້ເດີ! ຂ້ອຍຈະບິນໄປຊອກ ເມື່ອເຫັນ ຫາກຊິຮ້ອງຂຶ້ນແລ້ວໃຫ້ເຈົ້າແລ່ນໄປຫາໂລດ. ເວົ້າແລ້ວນົກເຄົ້າກໍບິນໄປ.

ບໍ່ພໍຄາວນົກເຄົ້າກໍຮ້ອງຂຶ້ນວ່າ: ເກັບກອກໆອ້າຍຟານໄດ້ຍິນກໍຟ້າວແລ່ນໄປຫາພໍ ເຫັນຟານມາຮອດ, ນົກເຄົ້າກໍປ່ຽນສຽງຮ້ອງວ່າ: ຫອກຊຸກຫອກປັກ, ຫອກຊັກຫອກແທງ! ຕັ້ງສອງສາມຮູດ. ຟານໄດ້ຍິນດັ່ງນັ້ນຄິດວ່າຕົນຖືກນົກເຄົ້າລໍ້ມາໃຫ້ຄົນເອົາຫອກປັກ, ຫອກ ແທງຄິດພໍ້ແນວນັ້ນກໍຫອບໜີຢ່າງບໍ່ຮູ້ທີບ.

ອ້າຍຟານປົບຕາຍໄປຕາມໄປກໍເຖິງໄຮ່ບ່ອນໜຶ່ງ ຈິ່ງແລ່ນຂ້ອງເອົາເຄືອໝາກໂຕນ, ເຄືອຂາດໝາກໂຕ່ນກີ້ງທັບກົກໝາກງາ, ໝາກງາຫຼົ່ນຖືກຕາໄກ່ປ່າ, ໄກ່ປ່າເຂ່ຍຮັ່ງມົດລົ້ນ, ມົດລົ້ນປົ້ນຕອດສາຍບືງູຂຽວ, ງູກ້ຽວຄໍກະຮອກ, ກະຮອກກັດຂ້ອນໝາກຕູມ, ໝາກຕູມ ຫຼົ່ນ ໃສ່ອ້າຍຮົ່ງໂຮດໄປຕຳໃສ່ອ້າຍຮົ່ງຮວາຍ ອ້າຍຮົ່ງຮວາຍຕົ່ນຈົນໄຂ້ສາມປີກໍບໍ່ເຊົາ, ຄາວ ເມື່ອເຊົາຮ່ອມແຮ່ມກໍລຸກຂຶ້ນມາສົບທາວເບິ່ງເລື່ອງລາວຂອງໝາກຕູມ.

ອ້າຍຮົ່ງຮວາຍກັບອ້າຍຮົ່ງໂຮດໄດ້ໄປຟ້ອງຮ້ອງຄວາມຂອງໝາກຕູມຕໍ່ພະຍາແຖນ. ພະຍາແຖນໄດ້ຮຽກໝາກຕູມໃຫ້ໄປຊ້ອງໜ້າເພື່ອເວົ້າຄວາມກັນ. ເມື່ອໝາກຕູມຖືກຕູ່ຫາ ວ່າເປັນຜູ້ກໍ່ເລື່ອງໝາກຕູມກໍປະຕິເສດພ້ອມທັ້ງອ້າງວ່າກະຮອກກັດເຄືອ ຂອງຕົນ. ຈາກນັ້ນ ທະນາຍຄວາມກໍຮຽກກະຮອກມາສົບສວນ, ຝ່າຍກະຮອກກໍອ້າງວ່າຍ້ອນງູມາກ້ຽວຄໍຈົນຕາ ເຫຼືອກຕາແມນ, ບາດຊິຕາຍມາທັນກັດຫຍັງກໍກັດ ທັງບໍ່ຮູ້ວ່າຕົນກັດຖືກຂວັ້ນໝາກຕູມຊ້ຳ, ເມື່ອຮູ້ເຊັ່ນນັ້ນ ພະຍາແຖນກໍເອີ້ນອ້າຍງູມາ, ອ້າຍງູກໍລາຍງານຄະດີຕາມເລື່ອງວ່າ ຍ້ອນ ມົດມາກັດແຫ້ນໄສ້ບືຂອງຕົນ, ມັນແສບຈ່ຶ້ຽງເຂົ້າມາກໍເຖືອຣະເຖືອຣາມຢາກໃຫ້ມົດຫຼຸດ ອອກ, ບາດແລ້ວຫຼອນໄປກ້ຽວຖືກຄໍກະຮອກຍາມໃດບໍ່ຮູ້ເມື່ອຊ້ຳ. ຝ່າຍພະຍາແຖນກໍຮຽກ

ມົດລີ້ນມາ, ອ້າຍມົດລີ້ນໄດ້ອ້າງວ່າ ຍ້ອນໄກ່ເຂ່ຍຮັ້ງ, ເມື່ອຮຽກໄກ່ມາໄກ່ກໍຖີ້ມໂທດໃສ່ ໝ ໆກໆວ່າເປັນຜູ້ຫຼິ້ນເຂົ້າຕາ. ພະຍາແຖນໄດ້ ສືບແບບນີ້ ຈົນໄປເຖິງອ້າຍນົກເຄົ້າ.

ພະຍາແຖນໄດ້ຮຽກຕົວນົກເຄົ້າມາສືບສວນ. ເມື່ອຖືກຮ້ອງຟ້ອງເລື່ອງທີ່ເປັນມາອ້າຍນົກເຄົ້າກໍບໍ່ມີບ່ອນຕູ່ຫາທັງໄດ້ຮັບຄວາມວ່າຕົນໄດ້ເຮັດຮ້າຍໃສ່ອ້າຍຟານຢ່າງມີເຈຕະນາແທ້. ຈາກນັ້ນພະຍາແຖນໄດ້ໃຫ້ພວກທີ່ກ່ຽວຂ້ອງເລື່ອງລາວທັງໝົດນັບແຕ່ອ້າຍຟານຈົນເຖິງອ້າຍຮົ້ງຮວາຍ, ພ້ອມກັນຕັດສິນລົງໂທດນົກເຄົ້າ.

ຍ້ອນເຫດການດັ່ງນີ້ແມ່ນເຫດການກໍ່ການຮ້າຍສ້າງຄວາມກະທົບກະເທືອນຢ່າງຕໍ່ເນື່ອງໃຫ້ແກ່ຝູງສັດ ດັ່ງນັ້ນ, ໂທດກຳຂອງນົກເຄົ້າຈຶ່ງຖືວ່າເປັນໂທດໜັກ, ສະນັ້ນ, ການທຳໂທດຈຶ່ງກຳນົດສາມ ຢ່າງດ້ວຍກັນ:

ອັນທີໜຶ່ງ: ເອົາຂີ້ໝີ້ນ ມາຕຳໂພະຕາທັງສອງເບື້ອງຂອງນົກເຄົ້າ.

ອັນທີສອງ: ບິດຫົວນົກເຄົ້າໃຫ້ປິ່ນໄປມາໄດ້ຮອບໜຶ່ງ.

ອັນທີສາມ: ບັງຄັບໃຫ້ນົກເຄົ້າຮັບເອົາການຮ້ອງຕາມສຽງເກັບກອກໆ! ຫອກຊຸກ ຫອກປັກຫອກຊັກຫອກແທງນັ້ນໃຫ້ເປັນສຽງຮ້ອງປະຈຳຕົວຕະຫຼອດໄປ.

ນັບແຕ່ຖືກທຳໂທດມາ ນົກເຄົ້າກໍ່ຕາເຫຼືອງທັງສອງເບື້ອງຈົນເທົ່າທຸກວັນນີ້. ດັ່ງນັ້ນ ນົກເຄົ້າກໍຈຶ່ງ ຢູ່ແບບບໍ່ມີເພື່ອນຝູງ, ທ່າທີສີໜ້າຍາມໃດກໍເສົ້າໂສກຢູ່ຕະຫຼອດມາ.

ເລື່ອງ: ຊ້າງກັບນົກຈອກຟ້າ

ທີ່ປ່າໄຜ່ແຫ່ງໜຶ່ງໄດ້ມີນົກຈອກຟ້າຜົວເມຍຄູ່ໜຶ່ງເຮັດຮັງໃສ່. ຄັ້ງນັ້ນມີຊ້າງສານໂຕໜຶ່ງພວມຕົ້ມມັນຊອກຫາກິນມາທາງນັ້ນ. ນາງນົກຈອກຢ້ານຊ້າງດຶງຮຽວໄຜ່ທີ່ຮັງຂອງຕົນຢູ່ຈຶ່ງອ້ອນວອນຊ້າງວ່າ:

"ເຈົ້າກູຜູ້ປະເສີດ ທີ່ນີ້ເປັນບ່ອນອາໄສຢູ່ຂອງພວກຂ້ານ້ອຍ ແລະເວລານີ້ລູກຂອງຂ້ານ້ອຍກໍຍັງອ່ອນນ້ອຍບິນບໍ່ທັນໄດ້, ຂໍທານນຳເຈົ້າກູຢ່າໄດ້ດຶງຮຽວໄຜ່ນີ້ທ້ອນ, ກະລຸນາຫຼີກໄປທາງອື່ນສາ".

ຊ້າງໄດ້ຍິນນາງນົກຈອກເວົ້າເຊັ່ນ ນັ້ນກໍອວດສາຫາວ່າຕົນມີກຳລັງຕອບນາງນົກຈອກດ້ວຍລັກສະນະຂົ່ມຂູ່ແບບຜູ້ມີອຳນາດວ່າ:

"ບ໊ະ! ອີ່ນາງນົກນ້ອຍເຫດໃດມຶ່ງຈຶ່ງມາເຮັດຮັງກີດຂວາງຢູ່ບ່ອນຫາກິນຂອງກູ, ທີ່ປ່າແຫ່ງນີ້ແມ່ນເຂດແດນຂອງກູໝົດ, ໃຜຈະມາສະແດງຄວາມໃຫຍ່ໂຕຢູ່ບ່ອນຫາກິນຂອງກູແມ່ນບໍ່ໄດ້ເດັດຂາດ" ວ່າແລ້ວກໍເອົາງວງດຶງຮຽວໄຜ່ບ່ອນທີ່ນົກເຮັດຮັງໃສ່ນັ້ນມາຍ່ຳຍີ ຢຽບລູກອ່ອນຂອງນາງແປກັບດິນ ແລ້ວກໍໜີໄປ.

ນາງນົກມີຄວາມໂສກເສົ້າເສຍໃຈເປັນອັນມາກ ຈຶ່ງໜ່ຽວອອນຕໍ່ນົກຕົວຜົວວ່າ:

"ເຮັດຈັ່ງໃດເຮົາຈຶ່ງສາມາດແກ້ແຄ້ນສັດໂຫດຮ້າຍຕົວໃຫຍ່ນີ້ໄດ້". ນົກຕົວຜົວເຫັນເມຍທຸກໂສກເຊັ່ນນັ້ນຈຶ່ງພາກັນໄປເປີກສານຳສ່ຽວກາ, ເລົ່າເຫດການກ່ຽວກັບຄວາມໂຫດຮ້າຍຂອງຊ້າງໃຫ້ກາຟັງຈົນຕະຫຼອດ, ກາຈຶ່ງເວົ້າອອຍໃຈຜົວເມຍນົກຈອກແລະແນະນຳວ່າ:

"ຄວນຫາທາງຕໍ່ສູ້ສັດຕູນັ້ນ, ເຮົາເອງກໍຈະຊ່ວຍສຸດຄວາມສາມາດ" ວ່າແລ້ວກໍແນະນຳໃຫ້ໄປຫາສ່ຽວກົບອີກ.

ເມື່ອໄປເຖິງກົບ ພວກເຂົາກໍເລົ່າສາເຫດໃຫ້ກົບຟັງພ້ອມທັງຂໍໃຫ້ສ່ຽວກົບຊ່ວຍເຫຼືອ. ເມື່ອກົບໄດ້ຟັງເຊັ່ນນັ້ນກໍມີຄວາມເຫັນໃຈຄູ່ຜົວເມຍນົກຈອກຟ້າເປັນອັນມາກແລ້ວຈຶ່ງເວົ້າໃຫ້ກຳລັງໃຈວ່າ :

" ສ່ຽວເອີຍ! ຊ້າງຕົວນັ້ນມັນອວດສະຫາວອ້າງຕົວວ່າເປັນສັດໃຫຍ່ ແລະມີກຳລັງຫຼາຍ, ໃຜບໍ່ອາດຕໍ່ສູ້ມັນໄດ້, ມັນຈຶ່ງມັກຂົ່ມເຫັງຜູ້ມີກຳລັງນ້ອຍ, ທີ່ແທ້ນັ້ນຜູ້ມີກຳລັງນ້ອຍ ຫຼືບໍ່ມີກຳລັງກໍຕາມແຕ່ມີຜະຫຍາປັນຍາທີ່ສ້ຽມແຫຼມ, ມີກົນອຸບາຍທີ່ສະຫຼາດກໍສາມາດເອົາຊະນະຜູ້ມີກຳລັງໄດ້ ດັ່ງດຽວກັບເຕົ່າເອົາຊະນະຄຸດໄດ້ນັ້ນແລ". ກົບກໍເລົ່າເລື່ອງເຕົ່າກັບຄຸດແຂ່ງຂັນກັນໃຫ້ນົກຈອກຟັງແລະກົບຍັງເວົ້າຕໍ່ໄປອີກວ່າ: "ພວກເຮົາຄວນພ້ອມພຽງກັນຄິດຫາອຸບາຍກຳຈັດຊ້າງຕົວນັ້ນໃຫ້ໄດ້ເພາະເພິ່ນວ່າ: ຄວາມສາມັກຄີໂຮມກຳລັງກັນຂອງສິ່ງເລັກນ້ອຍກໍສາມາດເຮັດໃຫ້ວຽກງານທຸກຢ່າງຕ້ອງສຳເລັດຜົນຕາມປະສົງຄືກັບຫຍ້າ, ທີ່ຝັ້ນກັນເປັນເຊືອກກໍສາມາດຜູກຊ້າງສານທີ່ມີກຳລັງແຮງໄດ້, ອັນກຳລັງແຮງລວມໝູ່ບໍ່ມີແນວໃດຈະທຳລາຍໄດ້ດອກສ່ຽວເອີຍ".

ຫຼັງຈາກນັ້ນ, ນົກຈອກ, ກາ ແລະກົບຈຶ່ງພາກັນໄປຫາແມງວັນຂຽວອີກເມື່ອໄປເຖິງກໍເລົ່າເລື່ອງທຸກຢ່າງສູ່ແມງວັນຂຽວຟັງ, ແມງວັນຂຽວຈຶ່ງເວົ້າວ່າ :

"ດີແລ້ວສ່ຽວເອີຍ! ຖ້າພວກເຮົາພ້ອມພຽງກັນກໍຕ້ອງຜາບແພ້ຊ້າງຕົວນັ້ນໄດ້ແທ້, ແຕ່ເຮົາຕ້ອງມີອຸບາຍທີ່ສະຫຼາດຈຶ່ງຈະປາສະຈາກຄວາມວິບັດເສຍຫາຍໄດ້". ແລ້ວແມງວັນຂຽວ ຈຶ່ງຊັກນິທານນົກຍາງເຖົ້າມີອຸບາຍແຕ່ຂາດຄວາມສະຫຼາດບໍ່ຄິດເຖິງແງ່ເສຍຫາຍຈຶ່ງຖືກຈອນຟອນກິນລູກ ແລະໄດ້ເວົ້າຕໍ່ໄປອີກວ່າ: "ພວກເຮົາຕ້ອງຄິດຫາອຸບາຍທີ່ແນບນຽນປາສະຈາກຄວາມເສຍຫາຍ". ຄັນແລ້ວຈຶ່ງຊວນເອົາໝູ່ທັງໝົດໄປຫານົກຫອນຂວານ (ນົກຕອດຝຸ່ນ) ເລົ່າເຫດການທຸກຢ່າງໃຫ້ຟັງນົກຫອນຂວານຈຶ່ງເວົ້າວ່າ:

"ພວກເພື່ອນມາຂໍຄວາມຊ່ວຍເຫຼືອເທື່ອນີ້ເຮົາບໍ່ຂຶ້ນ, ແຕ່ເຮົາເຄີຍໄດ້ຍິນບູຮານວ່າຜູ້ໃດປະສົບໄພມັກແລ່ນຫາຜູ້ອື່ນຊ່ວຍ ໂດຍຍອມເຮັດທຸກຢ່າງຂໍແຕ່ໃຫ້ພົ້ນໄພ, ຄັນພົ້ນໄພແລ້ວສ່ວນຫຼາຍບໍ່ເຮັດຕາມສັນຍາ". ວ່າແລ້ວນົກຫອນຂວານຈຶ່ງຊັກນິທານເລື່ອງນົກສົບແຫຼມເອົາດູກກວາງອອກຈາກຫວ່າງແຂ້ວເສືອໂດຍເສືອສັນຍາວ່າ: ຈະເບິ່ງແຍງຊ່ວຍເຫຼືອແຕ່ແລ້ວບໍ່ໄດ້ເຮັດຕາມສັນຍາ.

ເມື່ອສັດເຫຼົ່ານັ້ນປຶກສາຕົກລົງກັນແລ້ວກໍໄປຈັດການກັບຊ້າງຕາມເວລາທີ່ໄດ້ນັດໝາຍກັນໄວ້; ໃຫ້ກາກັບນົກຫອນຂວານ ແລະນົກຈອກໄປລອບສັບຕອດຕາຊ້າງໃນເວລາມັນນອນຫຼັບ, ຕາຊ້າງເປັນບາດແລ້ວໃຫ້ແມງວັນຂຸງວໄປໄຂ່ໃສ່. ເມື່ອຕາຊ້າງບອດເພາະໜອນເຈາະແລ້ວຈຶ່ງພາກັນໄປບອກສ່ຽວກົບ, ສ່ຽວກົບພາບໍລິວານໄປຮ້ອງຢູ່ປາກເຫວ, ຊ້າງສານອິດຫຍ້າ ແລະນ້ຳມາຫຼາຍວັນ, ຄັນໄດ້ຍິນສຽງກົບຮ້ອງເຂົ້າໃຈວ່າມີໜອງນ້ຳຢູ່ທາງສຽງນັ້ນ ຈຶ່ງຍ່າງຊັດເຊງົ່ມໆວາໄປທີ່ປາກເຫວເລີກ ແລ້ວພະລາດຕົກເຫວຕາຍ.